ພຣະວິນັຍປິຜົກ

ເຫຼັ້ມ ໑

ມຫາວິກັງຄ໌ ປຖົມກາຄ

ຂໍນອບນ້ອມແດ່ພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທສເຈົ້າພຣະອົງຄ໌ນັ້ນ

ເວຣັລຊກັຕຫ໌

ເຣື່ອງເວຣັລຊພຣາຫ໌ມຕ໌

[໑] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຣະພຸທສເຈົ້າປະທັບຢູ່ ໓ ຄວງໄມ້ສະເດົາທີ່ນເຣຣຸຍັກษ໌ສິງສຖິຕ ເຂຕເມືອງເວຣັລຊາ ພ້ອມດ້ວຍກິກษຸສົງฆ໌ໝູ່ໃຫຍ່ປະມາຕ ໕໐໐ ອົງຄ໌ ເວຣັລຊພຣາຫ໌ມຕ໌ໄດ້ສດັບຂ່າວຄັດແນ່ວ່າ ທ່ານຜູ້ຈເຣີຍ ພຣະສມຕະໂຄດົມສາກຍບຸຕຣ໌ ຊຶ່ງຜນວຊຈາກສາກຍຕະກູລປະທັບຢູ່ ໓ ບໍຣິເວຕຕົ້ນໄມ້ສະເດົາທີ່ນເຣຣຸຍັກษ໌ສິງສຖິຕ ເຂຕເມືອງເວຣັລຊາ ພ້ອມດ້ວຍກິກษຸສົງฆ໌ໝູ່ໃຫຍ່ປະມາຕ ໕໐໐ ອົງຄ໌ ກໍແລພຣະກິຕຕິສັພທ໌ອັນງາມຂອງທ່ານພຣະໂຄດົມພຣະອົງຄ໌ນັ້ນ ຂຈຣໄປແລ້ວຢ່າງນີ້ວ່າ ພຣະຜູ້ມີພຣະກາຄອົງຄ໌ນັ້ນ ຊຶ່ງເປັນພຣະອຣຫັນຕ໌**ແມ້ເພາະເຫຕຸນີ້** ຊຶ່ງຕຣັສຮູ້ເອງໂດຍຊອບ **ແມ້ເພາະເຫຕຸນີ້** ຊຶ່ງບັຣລຸວິຊຊາແລະຈຣຕະ**ແມ້ເພາະເຫຕຸນີ້** ສເດັຈໄປດີ**ແມ້ເພາະເຫຕຸນີ້** ຊຶ່ງຮູ້ໂລກ**ແມ້ເພາະເຫຕຸນີ້** ຊຶ່ງເປັນສາຣຖີຝຶກບຸຣຸษທີ່ຄວຣຝຶກບໍ່ມີຜູ້ອື່ນຍິ່ງກວ່າ**ແມ້ເພາະເຫຕຸນີ້** ຊຶ່ງເປັນສາສດາຂອງເທພແລະມນຸษຍ໌ທັ້ງຫລາຍ**ແມ້ເພາະເຫຕຸນີ້** ຊຶ່ງເປັນພຸທສະ**ແມ້ເພາະເຫຕຸນີ້** ຊຶ່ງເປັນພຣະຜູ້ມີພຣະກາຄ**ແມ້ເພາະເຫຕຸນີ້** ພຣະອົງຄ໌ຊຶ່ງທຳໂລກນີ້ພ້ອມທັ້ງເທວໂລກ ມາຣໂລກ ພຣົຫ໌ມໂລກໃຫ້ແຈ້ງຊັດດ້ວຍພຣະປັญญາອັນຍິ່ງຂອງພຣະອົງຄ໌ເອງ ແລ້ວຊຶ່ງສອນໝູ່ສັຕວ໌ ພ້ອມທັ້ງສມຕະພຣາຫ໌ມຕ໌ເທພແລະມນຸษຍ໌ ໃຫ້ຮູ້ ຊຶ່ງສະແດງສັມມ໌ງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ຊຶ່ງປະກາສພຣົຫ໌ມຈັຣຍ໌ພ້ອມທັ້ງອັຖທັ້ງພຍັญຊນະຄົບບໍຣິບູຣນ໌ບໍຣິສຸທສິ໌ ອີກຢ່າງ ການເຫັນພຣະອຣຫັນຕ໌ທັ້ງຫລາຍເຫັນປານນັ້ນ ເປັນຄວາມດີ.

ເວຣັລຊພຣາຫ໌ມນ໌ກ່າວຕູ່ພຣະພຸທສເຈົ້າ

[໔] ຫລັງຈາກນັ້ນ ເວຣັລຊພຣາຫ໌ມນ໌ໄດ້ໄປໃນພຸທສສຳນັກ ພໍເຖິງແລ້ວໄດ້ທູລປຼາສຣັຍກັບພຣະຜູ້ມີພຣະກາຄ ພໍຜ່ານກາຣທູລປຼາສຣັຍພໍໃຫ້ເປັນທີ່ບັນເທີງເປັນທີ່ຣະລຶກເຖິງກັນໄປແລ້ວ ຈຶ່ງນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ເວຣັລຊພຣາຫ໌ມນ໌ນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງແລ້ວ ໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ທ່ານພຣະໂຄດົມ ຂ້າພເຈົ້າໄດ້ຮູ້ມາວ່າ ພຣະສມຓະໂຄດົມ ບໍ່ໄຫວ້ ບໍ່ລຸກຮັບພວກພຣາຫ໌ມນ໌ຜູ້ແກ່ຜູ້ເຖົ້າ ຜູ້ໃຫຍ່ ຜູ້ລ່ວງກາລ ຜ່ານວັຍມາໂດຍລຳດັບ ຫຼືບໍ່ເຊື້ອເຊີລດ້ວຍອາສນະ ຂໍ້ທີ່ຂ້າພເຈົ້າຮູ້ມານີ້ນັ້ນເປັນເຊັ່ນນັ້ນຈິງ ອັນກາຣທີ່ທ່ານພຣະໂຄດົມບໍ່ໄຫວ້ ບໍ່ລຸກຮັບພວກພຣາຫ໌ມນ໌ຜູ້ແກ່ ຜູ້ເຖົ້າ ຜູ້ໃຫຍ່ ຜູ້ລ່ວງກາລ ຜ່ານວັຍມາໂດຍລຳດັບ ຫຼືບໍ່ເຊື້ອເຊີລດ້ວຍອາສນະນີ້ນັ້ນ ບໍ່ສົມຄວຣເລີຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາພຣາຫ໌ມຓ໌ໃນໂລກ ທັ້ງເທວໂລກ ມາຣໂລກ ພຣົຫ໌ມໂລກ ໃນຫມູ່ສັຕວ໌ ພ້ອມທັ້ງສມຓະ ພຣາຫ໌ມຓ໌ເທພ ແລະມນຸບຍ໌ ເຮົາບໍ່ເລັງເຫັນບຸຄຄົລທີ່ເຮົາຄວຣໄຫວ້ ຄວຣລຸກຮັບຫຼືຄວຣເຊື້ອເຊີລດ້ວຍອາສນະ ເພາະວ່າ ຕຖາຄົຕຫາກໄຫວ້ ຫາກລຸກຮັບ ຫຼືຫາກເຊື້ອເຊີລບຸຄຄົລໃດດ້ວຍອາສນະ ແມ້ຫົວຂອງບຸຄຄົລນັ້ນກໍຈະຂາດຕົກໄປ.

ວ. ທ່ານພຣະໂຄດົມມີປົກຕິບໍ່ໄຍດີ.

ກ. ແມ່ນແທ້ ພຣາຫ໌ມຓ໌ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຓະໂຄດົມມີປົກຕິບໍ່ໄຍດີດັ່ງນີ້ ຊື່ວ່າກ່າວຖືກ ເພາະຄວາມໄຍດີໃນຮູປ ສຽງ ກິ່ນ ຣົສ ໂຜຕຖັຕພະ ເຫລົ່ານັ້ນ ຕຖາຄົຕລະໄດ້ແລ້ວ ຕັດຮາກຂາດແລ້ວ ເຮັດໃຫ້ເປັນເຫມືອນຕາລຍອດດ້ວນ ເຮັດບໍ່ໃຫ້ມີໃນກາຍຫລັງ ມີບໍ່ເກີດອີກຕໍ່ໄປເປັນທັມມດາ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຓະໂຄດົມມີປົກຕິບໍ່ໄຍດີ ດັ່ງນີ້ຊື່ວ່າກ່າວຖືກ ແຕ່ບໍ່ແມ່ນເຫຕຸທີ່ທ່ານມຸ່ງກ່າວ.

ວ. ທ່ານພຣະໂຄດົມບໍ່ມີສົມບັຕິ.

ກ. ແມ່ນແທ້ ພຣາຫ໌ມຓ໌ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຓະໂຄດົມບໍ່ມີສົມບັຕິ ດັ່ງນີ້ຊື່ວ່າກ່າວຖືກ ເພາະສົມບັຕິ ຄື ຮູປ ສຽງ ກິ່ນ ຣົສ ໂຜຕຖັຕພະ ເຫລົ່ານັ້ນ ຕຖາຄົຕລະໄດ້ແລ້ວຕັດຮາກຂາດແລ້ວ ເຮັດໃຫ້ເປັນເຫມືອນຕາລຍອດດ້ວນ ເຮັດບໍ່ໃຫ້ມີໃນກາຍຫລັງ ມີບໍ່ເກີດອີກຕໍ່ໄປເປັນທັມມດາ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຓະໂຄດົມບໍ່ມີສົມບັຕິ ດັ່ງນີ້ ຊື່ວ່າກ່າວຖືກ ແຕ່ບໍ່ແມ່ນເຫຕຸທີ່ທ່ານມຸ່ງກ່າວ.

ວ. ທ່ານພຣະໂຄດົມກ່າວກາຣບໍ່ເຮັດ.

ກ. ແມ່ນແທ້ ພຣາຫ໌ມຓ໌ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຓະໂຄດົມກ່າວກາຣບໍ່ເຮັດດັ່ງນີ້ ຊື່ວ່າກ່າວຖືກ ເພາະເຮົາກ່າວກາຣບໍ່ເຮັດກາຍທຸຈຣິຕ ວຈີທຸຈຣິຕ ມໂນທຸຈຣິຕ ເຮົາກ່າວກາຣ

ບໍ່ເຮັດສິ່ງທີ່ເປັນບາປອກຸສົລຫລາຍຢ່າງ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມກ່າວການ ບໍ່ເຮັດ ດັ່ງນີ້ ຊື່ວ່າກ່າວຖືກ ແຕ່ບໍ່ແມ່ນເຫຕຸທີ່ທ່ານມຸ່ງກ່າວ.

ວ. ທ່ານພຣະໂຄດົມກ່າວຄວາມຂາດສູນ.

ກ. ແມ່ນແທ້ ພຣາຫ໌ມຕ໌ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມກ່າວຄວາມຂາດສູນ ດັ່ງນີ້ ຊື່ວ່າກ່າວຖືກ ເພາະເຮົາກ່າວຄວາມຂາດສູນແຫ່ງ ຣາຄະ ໂທສະ ໂມຫະ ເຮົາກ່າວຄວາມ ຂາດສູນແຫ່ງສະພາພທີ່ເປັນບາປອກຸສົລຫລາຍຢ່າງ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມ ກ່າວຄວາມຂາດສູນ ດັ່ງນີ້ ຊື່ວ່າກ່າວຖືກ ແຕ່ບໍ່ແມ່ນເຫຕຸທີ່ທ່ານມຸ່ງກ່າວ.

ວ. ທ່ານພຣະໂຄດົມຊ່າງບໍ່ມັກ.

ກ. ແມ່ນແທ້ ພຣາຫ໌ມຕ໌ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມຊ່າງບໍ່ມັກ ດັ່ງນີ້ ຊື່ວ່າກ່າວຖືກ ເພາະເຮົາບໍ່ມັກກາຍທຸຈຣິຕ ວຈີທຸຈຣິຕ ມໂນທຸຈຣິຕ ເຮົາບໍ່ມັກຄວາມເຖິງພ້ອມແຫ່ງ ສະພາພທີ່ເປັນບາປອກຸສົລຫລາຍຢ່າງ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມຊ່າງບໍ່ມັກ ດັ່ງນີ້ ຊື່ວ່າກ່າວຖືກ ແຕ່ບໍ່ແມ່ນເຫຕຸທີ່ທ່ານມຸ່ງກ່າວ.

ວ. ທ່ານພຣະໂຄດົມຊ່າງກຳຈັດ.

ກ. ແມ່ນແທ້ ພຣາຫ໌ມຕ໌ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມຊ່າງກຳຈັດ ດັ່ງນີ້ ຊື່ວ່າກ່າວຖືກ ເພາະເຮົາສະແດງສັມມ໌ເພື່ອກຳຈັດ ຣາຄະ ໂທສະ ໂມຫະ ສະແດງສັມມ໌ເພື່ອກຳຈັດສະພາພ ທີ່ເປັນບາປອກຸສົລຫລາຍຢ່າງນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມຊ່າງກຳຈັດ ດັ່ງນີ້ ຊື່ວ່າ ກ່າວຖືກ ແຕ່ບໍ່ແມ່ນເຫຕຸທີ່ທ່ານມຸ່ງກ່າວ.

ວ. ທ່ານພຣະໂຄດົມຊ່າງເຜົາຜລານ.

ກ. ແມ່ນແທ້ ພຣາຫ໌ມຕ໌ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມຊ່າງເຜົາຜລານ ດັ່ງນີ້ ຊື່ວ່າກ່າວຖືກ ເພາະເຮົາກ່າວສັມມ໌ທີ່ເປັນບາປອກຸສົລ ຄື ກາຍທຸຈຣິຕ ວຈີທຸຈຣິຕ ມໂນທຸຈຣິຕ ວ່າ ເປັນສັມມ໌ທີ່ຄວຣເຜົາຜລານ ສັມມ໌ທີ່ເປັນບາປອກຸສົລຊຶ່ງຄວຣເຜົາຜລານ ອັນຜູ້ໃດລະໄດ້ແລ້ວ ຕັດຮາກ ຂາດແລ້ວ ເຮັດໃຫ້ເປັນເໝືອນຕາລຍອດດ້ວນ ເຮັດບໍ່ໃຫ້ມີໃນພາຍຫລັງ ມີບໍ່ເກີດອີກຕໍ່ໄປເປັນສັມມດາ ເຮົາກ່າວຜູ້ນັ້ນວ່າເປັນຄົນຊ່າງເຜົາຜລານ ພຣາຫ໌ມຕ໌ສັມມ໌ທັ້ງຫລາຍທີ່ເປັນບາປອກຸສົລ ຊຶ່ງຄວຣເຜົາຜລານ ຕຖາຄົຕລະໄດ້ແລ້ວ ຕັດຮາກຂາດແລ້ວ ເຮັດໃຫ້ເປັນເໝືອນຕາລຍອດດ້ວນ ເຮັດບໍ່ໃຫ້ມີໃນພາຍຫລັງ ມີບໍ່ເກີດອີກຕໍ່ໄປເປັນສັມມດາ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມຊ່າງເຜົາຜລານ ດັ່ງນີ້ ຊື່ວ່າກ່າວຖືກ ແຕ່ບໍ່ແມ່ນເຫຕຸທີ່ທ່ານມຸ່ງກ່າວ.

ວ. ທ່ານພຣະໂຄດົມບໍ່ຜຸດເກີດ.

ກ. ແມ່ນແທ້ ພຣາຫ໌ມຕ໌ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມບໍ່ຜຸດເກີດ ດັ່ງນີ້ ຊື່ວ່າກ່າວຖືກ ເພາະການນອນໃນຄັຣພ໌ຕໍ່ໄປ ການເກີດໃນກົພໃໝ່ ອັນຜູ້ໃດລະໄດ້ແລ້ວ ຕັດຮາກຂາດແລ້ວ ເຮັດໃຫ້ເປັນເໝືອນຕາລຍອດດ້ວນ ເຮັດບໍ່ໃຫ້ມີໃນກາຍຫລັງ ມີບໍ່ເກີດອີກຕໍ່ໄປເປັນທັມມດາ ເຮົາກ່າວຜູ້ນັ້ນວ່າເປັນຄົນບໍ່ຜຸດເກີດ ພຣາຫ໌ມຕ໌ການນອນໃນຄັຣພ໌ຕໍ່ໄປ ການເກີດໃນກົພໃໝ່ ຕຖາຄົຕລະໄດ້ແລ້ວ ຕັດຮາກຂາດແລ້ວ ເຮັດໃຫ້ເປັນເໝືອນຕາລຍອດດ້ວນ ເຮັດບໍ່ໃຫ້ມີໃນກາຍຫລັງ ມີບໍ່ເກີດອີກຕໍ່ໄປເປັນທັມມດາ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະໂຄດົມບໍ່ຜຸດເກີດ ດັ່ງນີ້ ຊື່ວ່າກ່າວຖືກ ແຕ່ບໍ່ແມ່ນເຫຕຸທີ່ທ່ານມຸ່ງກ່າວ.

ຊົງອຸປມາດ້ວຍລູກໄກ່

[໓] ດູຣາພຣາຫ໌ມຕ໌ປຽບເໝືອນໜ່ວຍໄຂ່ ໘ ໜ່ວຍ ໑໐ ໜ່ວຍ ຫຼື ໑໘ ໜ່ວຍ ໜ່ວຍໄຂ່ເຫລົ່ານັ້ນ ອັນແມ່ໄກ່ຄວຣຟັກດີແລ້ວ ອົບດີແລ້ວ ຟັກດີແລ້ວ ບັຣດາລູກໄກ່ເຫລົ່ານັ້ນ ລູກໄກ່ຕົວໃດທຳລາຍກະເປາະໄຂ່ ດ້ວຍປາຍເລັບຕີນ ຫຼືດ້ວຍຈະງອຍປາກ ອອກມາໄດ້ໂດຍສວັສດີກ່ອນກວ່າເຂົາ ລູກໄກ່ຕົວນັ້ນຄວຣເອີ້ນວ່າຈະໃດ ຈະເອີ້ນວ່າອ້າຍຫຼືນ້ອງ.

ວ. ທ່ານພຣະໂຄດົມ ຄວຣເອີ້ນວ່າອ້າຍ ເພາະມັນແກ່ກວ່າເຂົາ.

ຊົງສະແດງຊານ ໔ ແລະວິຊຊາ ໓

ກ. ເຮົາກໍເໝືອນຢ່າງນັ້ນແລ ພຣາຫ໌ມຕ໌ເມື່ອປະຊາຊົນຜູ້ຕົກຢູ່ໃນອວິຊຊາ ເກີດໃນໜ່ວຍອັນກະເປາະໄຂ່ຫຸ້ມຫໍ່ໄວ້ ຜູ້ດຽວເທົ່ານັ້ນໃນໂລກ ໄດ້ທຳລາຍກະເປາະໄຂ່ ຄື ອວິຊຊາ ແລ້ວໄດ້ຕຣັສຮູ້ພຣະສັມມາສັມໂພທິຍານອັນຍອດຍຽ່ມ ເຮົານັ້ນເປັນຜູ້ຈເຣີຍທີ່ສຸດ ປະເສີກທີ່ສຸດຂອງໂລກ ເພາະຄວາມພຽຣຂອງເຮົາທີ່ປາຣົກແລ້ວແລ ບໍ່ທໍ່ທ້ອນ ສຕິດຳຣົງມັ່ນບໍ່ຟັ່ນເຟືອນ ກາຍສງົບ ບໍ່ກະສັບກະສ່າຍ ຈິຕຕັ້ງມັ່ນ ມີອາຣົມນ໌ເປັນນຶ່ງ.

ປຖົມຊານ

ເຮົານັ້ນແລ ສງັດແລ້ວຈາກກາມ ສງັດແລ້ວຈາກອກຸສົລທັມມ໌ ໄດ້ບັຣລຸປຖົມຊານ ມີວິຕົກມີວິຈາຣ ມີປີຕິແລະສຸຂຊຶ່ງເກີດແຕ່ວິເວກຢູ່.

ທຸຕິຍຊານ

ເຮົາໄດ້ບັຣລຸທຸຕິຍຊານ ມີຄວາມຜ່ອງໃສແຫ່ງຈິຕ ໃນ ກາຍໃນ ເປັນທັມມ໌ເອກຜຸດຂຶ້ນ ບໍ່ມີວິຕົກບໍ່ມີວິຈາຣ ເພາະວິຕົກ ວິຈາຣ ສງົບໄປ ມີປີຕິແລະສຸຂຊຶ່ງເກີດແຕ່ສມາທິຢູ່.

ຕະຕິຍຊານ

ເຮົາມີອຸເບກຂາຢູ່ ມີສຕິ ມີສັມປຊັລຍະ ແລະສເວີຍສຸຂດ້ວຍນາມກາຍ ເພາະປີຕິສິ້ນໄປ ໄດ້ບັຣລຸຕະຕິຍຊານ ທີ່ພຣະອຣິຍະທັ້ງຫລາຍສັຣເສີລວ່າ ເປັນຜູ້ມີອຸເບກຂາ ມີສຕິ ມີສຸຂຢູ່ ດັ່ງນີ້ ຢູ່.

ຈຕຸຕຖຊານ

ເຮົາໄດ້ບັຣລຸຈຕຸຕຖຊານ ບໍ່ມີທຸກຂ໌ບໍ່ມີສຸຂ ເພາະລະສຸຂລະທຸກຂ໌ແລະດັບໂສມນັສ ໂທມນັສກ່ອນໆ ມີອຸເບກຂາເປັນເຫຕຸໃຫ້ສຕິບໍຣິສຸທທິ໌ຢູ່.

ບຸພເພນິວາສານຸສສຕິຍາຓ

ເຮົານັ້ນ ເມື່ອຈິຕເປັນສມາធិ ບໍຣິສຸທທິ໌ ຜຸດຜ່ອງ ບໍ່ມີກິເລສ ປຼາສຈາກອຸປກິເລສອ່ອນ ຄວຣແກ່ການງານ ຕັ້ງມັ່ນ ບໍ່ຫວັ່ນໄຫວ ຢ່າງນີ້ແລ້ວ ໄດ້ນ້ອມຈິຕໄປເພື່ອບຸພເພນິວາສານຸສສຕິຍາຓ ເຮົານັ້ນຍ່ອມຣະລຶກຊາຕິກ່ອນໄດ້ຫຼວງຫຼາຍ ຄືຣະລຶກຊາຕິໄດ້ນຶ່ງຊາຕິແດ່ ສອງຊາຕິແດ່ ສາມຊາຕິແດ່ ສີ່ຊາຕິແດ່ ຫ້າຊາຕິແດ່ ສິບຊາຕິແດ່ ຊາວຊາຕິແດ່ ສາມສິບຊາຕິແດ່ ສີ່ສິບຊາຕິແດ່ ຫ້າສິບຊາຕິແດ່ ຮ້ອຍຊາຕິແດ່ ພັນຊາຕິແດ່ ແສນຊາຕິແດ່ ຕລອດສັງວັຕຕກັລປ໌ຫຼວງຫຼາຍແດ່ ຕລອດວິວັຕຕກັລປ໌ຫຼວງຫຼາຍແດ່ ຕລອດສັງວັຕຕວິວັຕຕກັລປ໌ຫຼວງຫຼາຍແດ່ ວ່າໃນກົພນັ້ນເຮົາໄດ້ມີຊື່ຢ່າງນັ້ນ ມີໂຄຕຣ໌ຢ່າງນັ້ນ ມີຜິວພັຣຓຢ່າງນັ້ນ ມີອາຫາຣຢ່າງນັ້ນ ສເວີຍສຸຂທຸກຂ໌ຢ່າງນັ້ນໆ ມີກຳຫນົດອາຍຸພຽງເທົ່ານັ້ນ ພໍຈຸຕິຈາກກົພນັ້ນແລ້ວ ໄດ້ໄປເກີດໃນກົພນັ້ນ ແມ້ໃນກົພນັ້ນນັ້ນ ເຮົາກໍໄດ້ມີຊື່ຢ່າງນັ້ນ ມີໂຄຕຣ໌ຢ່າງນັ້ນ ມີຜິວພັຣຓຢ່າງນັ້ນ ມີອາຫາຣຢ່າງນັ້ນ ສເວີຍສຸຂທຸກຂ໌ຢ່າງນັ້ນໆ ມີກຳຫນົດອາຍຸພຽງເທົ່ານັ້ນ ພໍຈຸຕິຈາກກົພນັ້ນນັ້ນແລ້ວ ໄດ້ມາເກີດໃນກົພນີ້ ເຮົາຍ່ອມຣະລຶກເຖິງຊາຕິກ່ອນໄດ້ເປັນອັນມາກ ພ້ອມທັ້ງອຸເທສ ພ້ອມທັ້ງອາການ ດ້ວຍປະການນີ້ ພຣາຫ໌ມຓ໌ວິຊຊາທີ່ນຶ່ງນີ່ແລ ເຮົາໄດ້ບັຣລຸແລ້ວໃນປຖົມຍາມແຫ່ງຣາຕຣີ ອວິຊຊາ ເຮົາກຳຈັດໄດ້ແລ້ວ ວິຊຊາເກີດແກ່ເຮົາແລ້ວ ຄວາມມືດເຮົາກຳຈັດໄດ້ແລ້ວ ແສງສວ່າງເກີດແກ່ເຮົາແລ້ວ ເຫມືອນທີ່ເກີດແກ່ບຸຄຄົລຜູ້ບໍ່ປະມາທ ມີຄວາມພຽຣເຜົາກິເລສ ສົ່ງຈິຕໄປແລ້ວຢູ່ດັ່ງນັ້ນ ຄວາມແຫກອອກເທື່ອທີ່ນຶ່ງຂອງເຮົານີ້ແລ ໄດ້ເປັນເຫມືອນການທຳລາຍອອກຈາກກະເປາະໄຂ່ແຫ່ງລູກໄກ່ດັ່ງນັ້ນ.

ຈຸຕູປປາຕຍາຓ

ເຮົານັ້ນ ເມື່ອຈິຕເປັນສມາធិ ບໍຣິສຸທທິ໌ ຜຸດຜ່ອງ ບໍ່ມີກິເລສ ປຼາສຈາກອຸປກິເລສອ່ອນ ຄວຣແກ່ການງານ ຕັ້ງມັ່ນ ບໍ່ຫວັ່ນໄຫວ ຢ່າງນີ້ແລ້ວ ໄດ້ນ້ອມຈິຕໄປເພື່ອຍາຓເຄື່ອງຮູ້ຈຸຕິແລະອຸປບັຕິ

ຂອງສັຕວ໌ທັ້ງຫລາຍ ເຮົານັ້ນຍ່ອມເລັງເຫັນໝູ່ສັຕວ໌ຜູ້ກຳລັງຈຸຕິ ກຳລັງອຸປບັຕິ ບໍ່ດີ ປະຫີຕ ມີຜິວພັຣຕດີ ມີຜິວພັຣຕບໍ່ງາມ ໄດ້ດີ ຕົກຍາກ ດ້ວຍທິພຍຈັກษຸອັນບໍຣິສຸທธິ໌ລ່ວງຈັກษຸຂອງມນຸษย໌ ຍ່ອມຮູ້ຊັດຊຶ່ງໝູ່ສັຕວ໌ຜູ້ເຂົ້າເຖິງຕາມກັມມ໌ວ່າ ໝູ່ສັຕວ໌ຜູ້ເກີດເປັນຢູ່ເຫລົ່ານີ້ ປະກອບດ້ວຍກາຍທຸຈຣິຕ ວຈີທຸຈຣິຕ ມໂນທຸຈຣິຕ ຕິຕຽນພຣະອຣິຍເຈົ້າ ເປັນມິຈฉາທິຕถິ ຍຶດຖືການກະທຳດ້ວຍອຳນາຈມິຈฉາທິຕถິ ໝູ່ສັຕວ໌ຜູ້ເກີດເປັນຢູ່ເຫລົ່ານັ້ນ ເບື້ອງໜ້າແຕ່ແຕກກາຍຕາຍໄປ ເຂົ້າເຖິງອບາຍ ທຸຄຕິ ວິນິບາຕ ນຣົກ ຫຼືວ່າໝູ່ສັຕວ໌ຜູ້ເກີດເປັນຢູ່ເຫລົ່ານີ້ ປະກອບດ້ວຍກາຍສຸຈຣິຕ ວຈີສຸຈຣິຕ ມໂນສຸຈຣິຕ ບໍ່ຕິຕຽນພຣະອຣິຍເຈົ້າ ເປັນສັມມາທິຕถິ ຍຶດຖືການກະທຳດ້ວຍອຳນາຈສັມມາທິຕถິ ໝູ່ສັຕວ໌ຜູ້ເກີດເປັນຢູ່ເຫລົ່ານັ້ນ ເບື້ອງໜ້າແຕ່ແຕກກາຍຕາຍໄປ ເຂົ້າເຖິງສຸຄຕິໂລກສວັຣຄ໌ ເຮົາຍ່ອມເລັງເຫັນໝູ່ສັຕວ໌ຜູ້ກຳລັງຈຸຕິ ກຳລັງອຸປບັຕິ ບໍ່ດີ ປະຫີຕ ມີຜິວພັຣຕດີ ມີຜິວພັຣຕບໍ່ງາມ ໄດ້ດີ ຕົກຍາກ ດ້ວຍທິພຍຈັກษຸອັນບໍຣິສຸທธິ໌ລ່ວງຈັກษຸຂອງມນຸษย໌ ຍ່ອມຮູ້ຊັດຊຶ່ງໝູ່ສັຕວ໌ຜູ້ເຂົ້າເຖິງຕາມກັມມ໌ດ້ວຍປະການດັ່ງນີ້ ພຣາຫ໌ມຕ໌ວິຊຊາທີ່ສອງນີ້ແລ ເຮົາໄດ້ບັຣລຸແລ້ວໃນມັຊฌິມຍາມແຫ່ງຣາຕຣີ ອວິຊຊາ ເຮົາກຳຈັດໄດ້ແລ້ວ ວິຊຊາເກີດແກ່ເຮົາແລ້ວ ຄວາມມືດເຮົາກຳຈັດໄດ້ແລ້ວ ແສງສວ່າງເກີດແກ່ເຮົາແລ້ວ ເໝືອນທີ່ເກີດແກ່ບຸຄຄົລຜູ້ບໍ່ປະມາທ ມີຄວາມພຽຣເພົາກິເລສ ສົ່ງຈິຕໄປແລ້ວຢູ່ດັ່ງນັ້ນ ຄວາມແຫກອອກເທື່ອທີ່ສອງຂອງເຮົານີ້ແລ ໄດ້ເປັນເໝືອນການທຳລາຍອອກຈາກກະເປາະໜ່ວຍແຫ່ງລູກໄກ່ ດັ່ງນັ້ນ.

ອາສວັກຂຍຍາຕ

ເຮົານັ້ນ ເມື່ອຈິຕເປັນສມາธิ ບໍຣິສຸທธิ໌ຜຸດຜ່ອງ ບໍ່ມີກິເລສ ປຣາສຈາກອຸປກິເລສອ່ອນ ຄວຣແກ່ການງານ ຕັ້ງມັ່ນ ບໍ່ຫວັ່ນໄຫວ ຢ່າງນີ້ແລ້ວ ໄດ້ນ້ອມຈິຕໄປເພື່ອອາສວັກຂຍຍາຕ ເຮົານັ້ນໄດ້ຮູ້ຊັດຕາມເປັນຈິງວ່າ ນີ້ທຸກຂ໌ ໄດ້ຮູ້ຊັດຕາມເປັນຈິງວ່າ ນີ້ເຫຕຸໃຫ້ເກີດທຸກຂ໌ ໄດ້ຮູ້ຊັດຕາມເປັນຈິງວ່າ ນີ້ຄວາມດັບທຸກຂ໌ ໄດ້ຮູ້ຊັດຕາມເປັນຈິງວ່າ ນີ້ຂໍ້ປຜິບັຕິໃຫ້ເຖິງຄວາມດັບທຸກຂ໌ ໄດ້ຮູ້ຊັດຕາມເປັນຈິງວ່າ ເຫລົ່ານີ້ອາສວະ ໄດ້ຮູ້ຊັດຕາມເປັນຈິງວ່າ ນີ້ເຫຕຸໃຫ້ເກີດອາສວະ ໄດ້ຮູ້ຊັດຕາມເປັນຈິງວ່າ ນີ້ຄວາມດັບອາສວະ ໄດ້ຮູ້ຊັດຕາມເປັນຈິງວ່າ ນີ້ຂໍ້ປຜິບັຕິໃຫ້ເຖິງຄວາມດັບອາສວະ ເມື່ອເຮົານັ້ນຮູ້ຢູ່ຢ່າງນີ້ ເຫັນຢູ່ຢ່າງນີ້ ຈິຕໄດ້ຫລຸດພົ້ນແລ້ວແມ້ຈາກກາມາສວະ ໄດ້ຫລຸດພົ້ນແລ້ວແມ້ຈາກກວາສວະ ໄດ້ຫລຸດພົ້ນແລ້ວແມ້ຈາກອວິຊຊາສວະ ເມື່ອຈິຕຫລຸດພົ້ນແລ້ວ ໄດ້ມີຍາຕຫຍັ່ງຮູ້ວ່າຫລຸດພົ້ນແລ້ວ ໄດ້ຮູ້ດ້ວຍປັญญາອັນຍິ່ງວ່າ ຊາຕິສິ້ນແລ້ວ ພຣົຫ໌ມຈັຣຍ໌ຢູ່ຈົບແລ້ວ ກິຈທີ່ຄວຣເຮັດໄດ້ທຳສຳເຣັຈແລ້ວ ກິຈອື່ນອີກເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີ ພຣາຫ໌ມຕ໌ວິຊຊາທີ່ສາມນີ້ແລ ເຮົາໄດ້ບັຣລຸແລ້ວໃນປັຈฉิມຍາມແຫ່ງຣາຕຣີ ອວິຊຊາ ເຮົາກຳຈັດໄດ້ແລ້ວ ວິຊຊາເກີດແກ່ເຮົາແລ້ວ ຄວາມມືດເຮົາກຳຈັດໄດ້ແລ້ວ ແສງສວ່າງເກີດແກ່ເຮົາແລ້ວ ເໝືອນທີ່ເກີດແກ່ບຸຄຄົລຜູ້ບໍ່ປະມາທ ມີຄວາມພຽຣເພົາກິເລສສົ່ງຈິຕໄປແລ້ວຢູ່ ດັ່ງນັ້ນ ຄວາມແຫກອອກເທື່ອທີ່ສາມຂອງເຮົານີ້ແລ ໄດ້ເປັນເໝືອນການທຳລາຍອອກຈາກກະເປາະໄຂ່ແຫ່ງລູກໄກ່ ດັ່ງນັ້ນ.

ເວຣັລຊພຣາຫ໌ມນ໌ສະແດງຕົນເປັນອຸບາສົກ

[໔] ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ເວຣັລຊພຣາຫ໌ມນໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ ທ່ານພຣະໂຄດົມເປັນຜູ້ຈເຣີນທີ່ສຸດ ທ່ານພຣະໂຄດົມເປັນຜູ້ປະເສີຖທີ່ສຸດ ຂ້າແຕ່ທ່ານພຣະໂຄດົມ ພາພິຕຂອງພຣະອົງຄ໌ແຈ່ມແຈ້ງຫຼາຍ ພາພິຕຂອງພຣະອົງຄ໌ມ່ວນຫຼາຍ ພຣະອົງຄ໌ຊົງປະກາສສັມມ໌ໂດຍອເນກປຣິຍາຍຢ່າງນີ້ ປຽບເຫມືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫຼືສ່ອງປະທີປໃນທີ່ມືດດ້ວຍຕັ້ງໃຈວ່າ ຄົນມີຈັກຂຸຈັກເຫັນຮູປດັ່ງນີ້ ຂ້າພເຈົ້ານີ້ຂໍເຖີງທ່ານພຣະໂຄດົມ ພຣະສັມມ໌ ແລະພຣະສົງຄ໌ວ່າເປັນສຣຕະ ຂໍພຣະອົງຄ໌ຈົ່ງຊົງຈຳຂ້າພເຈົ້າວ່າເປັນອຸບາສົກຜູ້ເຖີງສຣຕະ ຕລອດຊີວິຕ ຈຳເດີມແຕ່ວັນນີ້ເປັນຕົ້ນໄປ ແລະຂໍພຣະອົງຄ໌ພ້ອມດ້ວຍພິກຂຸສົງຄ໌ຈົ່ງຊົງຮັບອາຣາສນາຢູ່ຈຳພັຣສາ ທີ່ເມືອງເວຣັລຊາຂອງຂ້າພເຈົ້າເທີ້ນ.

ພຣະຜູ້ມີພຣະພາຄຊົງຮັບອາຣາສນາດ້ວຍພຣະອາພາຣດຸສນີ ພໍເວຣັລຊພຣາຫ໌ມນ໌ຮູ້ການຮັບອາຣາສນາຂອງພຣະຜູ້ມີພຣະພາຄແລ້ວ ໄດ້ລຸກຈາກທີ່ນັ່ງຖວາຍບັງຄົມພຣະຜູ້ມີພຣະພາຄ ທຳປະທັກສິຕຫລີກໄປ.

ເມືອງເວຣັລຊາເກີດທຸພພິກຂພັຍ

[໕] ກໍໂດຍສມັຍນັ້ນແລ ເມືອງເວຣັລຊາ ມີພິກສາຫາຣນ້ອຍ ປະຊາຊົນຫາລ້ຽງຊີພຝືດເຄືອງ ມີກະດູກຄົນຕາຍຂາວເຫຼື່ອນ ຕ້ອງມີສລາກຊື້ອາຫາຣ ພິກຂຸສົງຄ໌ຈະຍັງອັຕພາພໃຫ້ເປັນໄປດ້ວຍການຖືບາຕຣ໌ສແວງຫາ ກໍເຮັດບໍ່ໄດ້ງ່າຍ ຄັ້ງນັ້ນພວກພໍ່ຄ້າມ້າຊາວອຸຕຣາປຖະ ມີມ້າປະມາຕ ໕໐໐ ໂຕ ໄດ້ເຂົ້າພັກແຮມຕລອດຣະດູຝົນໃນເມືອງເວຣັລຊາ ພວກເຂົາໄດ້ຕົກແຕ່ງຂ້າວແດງສຳຫຼັບພິກຂຸອົງຄ໌ລະແລ່ງໄວ້ທີ່ຄອກມ້າ ເວລາເຊົ້າພິກຂຸທັ້ງຫລາຍຫົ່ມອັນຕຣວາສົກແລ້ວ ຖືບາຕຣ໌ຈີວຣເຂົ້າໄປບິຕຫບາຕໃນເມືອງເວຣັລຊາ ເມື່ອບໍ່ໄດ້ບິຕຫບາຕ ຈຶ່ງທ່ຽວໄປບິຕຫບາຕທີ່ຄອກມ້າ ຮັບຂ້າວແດງອົງຄ໌ລະແລ່ງ ນຳໄປສູ່ອາຣາມແລ້ວລົງຄົກ ຕ່ຳຈັນ ສ່ວນທ່ານພຣະອານົນທ໌ບົດຂ້າວແດງແລ່ງນຶ່ງທີ່ສີລາ ແລ້ວນ້ອມເຂົ້າໄປຖວາຍແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄສເວີຍພຣະກະຍາຫາຣທີ່ບົດຖວາຍນັ້ນຢູ່ ໄດ້ຊົງສດັບສຽງຄົກແລ້ວ.

ພຣະພຸທສປະເພຕີ

ພຣະຕຖາຄົຕທັ້ງຫລາຍຊົງຮູ້ຢູ່ ຍ່ອມຕຣັສຖາມກໍມີ ຊົງຮູ້ຢູ່ຍ່ອມບໍ່ຕຣັສຖາມກໍມີ ຊົງຮູ້ກາລແລ້ວຕຣັສຖາມ ຊົງຮູ້ກາລແລ້ວບໍ່ຕຣັສຖາມ ພຣະຕຖາຄົຕທັ້ງຫລາຍຍ່ອມຕຣັສຖາມສິ່ງທີ່ປະກອບດ້ວຍປະໂຍຊນ໌ ບໍ່ຕຣັສຖາມສິ່ງທີ່ບໍ່ປະກອບດ້ວຍປະໂຍຊນ໌ ສິ່ງທີ່ບໍ່ປະ
ກອບດ້ວຍ

ປະໂຍຊນ໌ ພຣະອົງຄ໌ຊົງກຳຈັດດ້ວຍຂໍ້ປຏິບັຕິ ພຣະຜູ້ມີພຣະກາຄພຸທຘເຈົ້າທັ້ງຫລາຍຍ່ອມຊົງສອບຖາມ ພິກຆຸທັ້ງຫລາຍດ້ວຍອາກາຣສອງຢ່າງ ຄື ຈັກຊົງສະແດງທັມມ໌ຢ່າງນຶ່ງ ຈັກຊົງບັນຌັຕິສິກຂາບົທແກ່ ພຣະສາວົກທັ້ງຫລາຍຢ່າງນຶ່ງ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄຕຣັສຖາມທ່ານພຣະອານົນທ໌ວ່າ ອານົນທ໌ ນັ່ນສຽງຄືກາບໍ່ນໍ ຈຶ່ງທ່ານພຣະອານົນທ໌ຂາບທູລເຣື່ອງນັ້ນໃຫ້ຊົງຮູ້ ພຣະຜູ້ມີພຣະກາຄຕຣັສສັຣເສີນວ່າ ດີລະ ດີລະ ອານົນທ໌ ພວກທ່ານເປັນສັຕບຸຣຸຆ ຊນະວິເສຆແລ້ວ ພວກເພື່ອນພຣົຫ໌ມຈາຣີຊັ້ນຫລັງຈັກດູໝິ່ນຂ້າວ ສາລີແລະຂ້າວສຸກອັນປົນດ້ວຍຊີ້ນ.

ພຣະມຫາໂມຄຄັລລານະເປັ່ງສີຫນາທ

[໖] ຄັ້ງນັ້ນ ທ່ານພຣະມຫາໂມຄຄັລລານະເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມແລ້ວນັ່ງ ໗ ທີ່ຄວຣສ່ວນຂ້າງນຶ່ງ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ພຣະພຸທຘເຈົ້າຂ້ານ້ອຍ ບັດນີ້ເມືອງເວຣັນຊາ ມີພິກຆາຫາຣນ້ອຍ ປະຊາຊົນຫາລ້ຽງຊີພຝືດເຄືອງ ມີກະດູກຄົນຕາຍຂາວເກື່ອນ ຕ້ອງມີສລາກຊື້ ອາຫາຣ ພິກຆຸສົງຄ໌ຈະຍັງອັຕກາພໃຫ້ເປັນໄປດ້ວຍການຖືບາຕຣ໌ສແວງຫາ ກໍເຮັດບໍ່ໄດ້ງ່າຍ ພຣະພຸທຘເຈົ້າ ຂ້ານ້ອຍພື້ນເບື້ອງລຸ່ມແຫ່ງແຜ່ນດິນຜືນໃຫຍ່ນີ້ ສມບູຣຕ໌ມີຣົສອັນໂອຊາ ເຫມືອນນ້ຳເຜີ້ງຫວີ່ທີ່ບໍ່ມີຕົວອ່ອນດັ່ງນັ້ນ ຂໍປະທານພຣະວໂຣກາສ ຂ້າພຣະພຸທຘເຈົ້າຈະປີ້ນແຜ່ນດິນ ພິກຆຸທັ້ງຫລາຍຈັກໄດ້ຈົບງ້ວນດິນ ພຣະພຸທຘເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາໂມຄຄັລລານະ ກໍສັຕວ໌ຜູ້ອາສັຍແຜ່ນດິນລະ ທ່ານຈະທຳ ຈັ່ງໃດແກ່ສັຕວ໌ເຫລົ່ານັ້ນ?

ມ. ຂ້າພຣະພຸທຘເຈົ້າຈັກນິຣມິຕຝ່າມືຂ້າງນຶ່ງໃຫ້ເປັນເໝືອນແຜ່ນດິນໃຫຍ່ ຍັງສັຕວ໌ຜູ້ອາສັຍແຜ່ນດິນ ເຫລົ່ານັ້ນໃຫ້ໄປຢູ່ໃນຝ່າມືນັ້ນ ຈັກປີ້ນແຜ່ນດິນດ້ວຍມືອີກຂ້າງນຶ່ງ ພຣະພຸທຘເຈົ້າຂ້ານ້ອຍ.

ພ. ຢ່າເລີຍ ໂມຄຄັລລານະ ການປີ້ນແຜ່ນດິນ ທ່ານຢ່າພໍໃຈເລີຍ ສັຕວ໌ທັ້ງຫລາຍຈະ ໄດ້ຮັບຜົລຕົງກັນຂ້າມ.

ມ. ຂໍປະທານພຣະວໂຣກາສ ຂໍພິກຆຸສົງຄ໌ທັ້ງໝົດຄວຣໄປບິຒທບາຕໃນອຸຕຣກຸຣຸທວີປ ຂ້ານ້ອຍ.

ພ. ກໍພິກຆຸຜູ້ບໍ່ມີຣິທທິ໌ລະ ທ່ານຈັກເຮັດຈັ່ງໃດແກ່ພິກຆຸເຫລົ່ານັ້ນ?

ມ. ຂ້າພຣະພຸທຘເຈົ້າຈັກເຮັດໃຫ້ພິກຆຸທັ້ງໝົດໄປໄດ້ ພຣະພຸທຘເຈົ້າຂ້ານ້ອຍ.

ກ. ຢ່າເລີຍ ໂມຄຄັລລານະ ການທີ່ກິກບຸສົງຄ໌ທັ້ງຫມົດໄປບິຫຫບາຕເຖິງອຸຕຣກຸຣຸທວີປ ທ່ານຢ່າພໍໃຈເລີຍ.

ເຫຕຸໃຫ້ພຣະສາສນາດຳຣົງຢູ່ບໍ່ນານແລະນານ

[໗] ຄັ້ງນັ້ນ ທ່ານພຣະສາຣີບຸຕຣໄປໃນທີ່ສງັດຫລີກເຮັ້ນຢູ່ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ພຣະສາສນາຂອງພຣະຜູ້ມີພຣະກາຄພຸທສເຈົ້າທັ້ງຫລາຍ ພຣະອົງຄ໌ໃດບໍ່ດຳຣົງຢູ່ນານ ຂອງພຣະອົງຄ໌ໃດດຳຣົງຢູ່ນານ ດັ່ງນີ້ ພໍເວລາສາຍັຕຫ໌ທ່ານອອກຈາກທີ່ເຮັ້ນແລ້ວ ເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມ ນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງແລ້ວຂາບທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ຂ້າພຣະພຸທສເຈົ້າໄປໃນທີ່ສງັດຫລີກເຮັ້ນຢູ່ ຓ ຕາແສງນີ້ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ພຣະສາສນາຂອງພຣະຜູ້ມີພຣະກາຄພຸທສເຈົ້າທັ້ງຫລາຍ ພຣະອົງຄ໌ໃດບໍ່ດຳຣົງຢູ່ນານ ຂອງພຣະອົງຄ໌ໃດດຳຣົງຢູ່ນານ.

ພຣະຜູ້ມີພຣະກາຄຕຣັສຕອບວ່າ ດູຣາສາຣີບຸຕຣ໌ ພຣະສາສນາຂອງພຣະຜູ້ມີພຣະກາຄພຣະນາມວິປັສສີ ພຣະນາມສິຂີ ແລະພຣະນາມເວສສກູ ບໍ່ດຳຣົງຢູ່ນານ ຂອງພຣະຜູ້ມີພຣະກາຄພຣະນາມກກຸສັນສະ ພຣະນາມໂກນາຄມນະ ແລະພຣະນາມກັສສປະດຳຣົງຢູ່ນານ.

ສ. ອັນໃດເປັນເຫຕຸ ອັນໃດເປັນປັຈຈັຍ ໃຫ້ພຣະສາສນາຂອງພຣະຜູ້ມີພຣະກາຄພຣະນາມວິປັສສີ ພຣະນາມສິຂີ ແລະພຣະນາມເວສສກູ ບໍ່ດຳຣົງຢູ່ນານ ພຣະພຸທສເຈົ້າຂ້ານ້ອຍ?

ກ. ດູຣາສາຣີບຸຕຣ໌ ພຣະຜູ້ມີພຣະກາຄພຣະນາມວິປັສສີ ພຣະນາມສິຂີ ແລະພຣະນາມເວສສກູ ຊົງທໍ້ພຣະຫຣືທັຍເພື່ອຈະຊົງສະແດງສັມມ໌ໂດຍພິສດາຣແກ່ສາວົກທັ້ງຫລາຍ ອີກຢ່າງ ສຸຕຕະ ເຄີຍຍະເວີຍຍາກຣຓະ ຄາຖາ ອຸທານ ອິຕິວຸຕຕກະ ຊາດົກ ອັພກູຕສັມມ໌ ເວທັລລະ ຂອງພຣະຜູ້ມີພຣະກາຄທັ້ງສາມພຣະອົງຄ໌ນັ້ນມີນ້ອຍ ສິກຂາບົທກໍບໍ່ໄດ້ຊົງບັຍລັຕິ ປາຕິໂມກຂ໌ກໍບໍ່ໄດ້ຊົງສະແດງແກ່ສາວົກ ເພາະອັນຕຣຊານແຫ່ງພຣະຜູ້ມີພຣະກາຄພຸທສເຈົ້າເຫລົ່ານັ້ນ ເພາະອັນຕຣຊານແຫ່ງສາວົກຜູ້ຕຣັສຣູ້ຕາມພຣະພຸທສເຈົ້າເຫລົ່ານັ້ນ ສາວົກຊັ້ນຫລັງທີ່ຕ່າງຊື່ກັນ ຕ່າງໂຄຕຣ໌ກັນ ຕ່າງຊາຕິກັນ ອອກບວຊຈາກຕະກູລຕ່າງກັນ ຈຶ່ງຍັງພຣະສາສນານັ້ນໃຫ້ອັນຕຣຊານໂດຍຈັບພູ້ນ ດູຣາສາຣີບຸຕຣ໌ ດອກໄມ້ຕ່າງພັຣຓທີ່ເຂົາກອງໄວ້ເທິງພື້ນກະດານ ຍັງບໍ່ໄດ້ຮ້ອຍດ້ວຍດ້າຍ ລົມຍ່ອມກະຈາຍ ຂຈັດ ກຳຈັດ ຊຶ່ງດອກໄມ້ເຫລົ່ານັ້ນໄດ້ ຂໍ້ນັ້ນເພາະເຫຕຸອັນໃດ ເພາະເຂົາບໍ່ໄດ້ຮ້ອຍດ້ວຍດ້າຍ ຈັນໃດ ເພາະອັນຕຣຊານແຫ່ງພຣະຜູ້ມີພຣະກາຄພຸທສເຈົ້າເຫລົ່ານັ້ນ ເພາະອັນຕຣຊານແຫ່ງສາວົກຜູ້ຕຣັສຣູ້ຕາມພຣະພຸທສເຈົ້າເຫລົ່ານັ້ນ ສາວົກຊັ້ນຫລັງທີ່ຕ່າງຊື່ກັນ ຕ່າງໂຄຕຣ໌ກັນ ຕ່າງຊາຕິກັນ ອອກບວຊຈາກຕະກູລຕ່າງກັນ ຈຶ່ງຍັງພຣະສາສນານັ້ນໃຫ້ອັນຕຣຊານໂດຍຈັບ

ຟູ້ນ ລັນນັ້ນເຫມືອນກັນ ເພາະພຣະຜູ້ມີພຣະກາຄພຸທສເຈົ້າເຫລົ່ານັ້ນ ຊົງທໍ້ພຣະຫຣືທັຍເພື່ອຈະຊົງກຳຫນົດຈິຕຂອງສາວົກດ້ວຍພຣະຫຣືທັຍ ແລ້ວຊົງສັ່ງສອນສາວົກ.

ດູຣາສາຣີບຸຕຣ໌ ເຣື່ອງເຄີຍມີມາແລ້ວ ພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທສເຈົ້າພຣະນາມເວສສກູ ຊົງກຳຫນົດຈິຕກິກຂຸສົງຄ໌ດ້ວຍພຣະຫຣືທັຍແລ້ວຊົງສັ່ງສອນ ຄອຍສອນ ກິກຂຸສົງຄ໌ປະມາຓພັນຣູປ ໃນໄພຣສົນທ໌ອັນເປັນຕາຢ້ານແຫ່ງນຶ່ງວ່າ ພວກທ່ານຈົ່ງຕຶກຢ່າງນີ້ ຢ່າໄດ້ຕຶກຢ່າງນັ້ນ ຈົ່ງທຳໃນໃຈຢ່າງນີ້ ຢ່າໄດ້ທຳໃນໃຈຢ່າງນັ້ນ ຈົ່ງລະສ່ວນນີ້ ຈົ່ງເຂົ້າເຖິງສ່ວນນີ້ຢູ່ເທີ້ນ ດັ່ງນີ້ ລຳດັບນັ້ນແລຈິຕຂອງກິກຂຸປະມາຓພັນອົງຄ໌ນັ້ນ ອັນພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທສເຈົ້າ ພຣະນາມເວສສກູຊົງສັ່ງສອນຢູ່ຢ່າງນັ້ນ ຊົງຄອຍສອນຢູ່ຢ່າງນັ້ນ ໄດ້ຫລຸດພົ້ນແລ້ວຈາກອາສວະທັ້ງຫລາຍ ເພາະບໍ່ຖືມັ້ນໃນເພາະຄວາມທີ່ໄພສົຓທ໌ອັນເປັນຕາຢ້ານຫັນລະ ເປັນຖິ່ນທີ່ໜ້າສຍົດສຍອງ ຈຶ່ງມີຄຳນີ້ວ່າ ຜູ້ໃດຜູ້ນຶ່ງຊຶ່ງຍັງບໍ່ປູາສຈາກຣາຄະເຂົ້າໄປສູ່ໄພສົຓທ໌ນັ້ນ ສ່ວນຫຼາຍ**ໂລມຊາຕິ**ຍ່ອມຊູຊັນ.

ດູຣາສາຣີບຸຕຣ໌ ອັນນີ້ແລເປັນເຫຕຸ ອັນນີ້ແລເປັນປັຈຈັຍ ໃຫ້ພຣະສາສນາຂອງພຣະຜູ້ມີພຣະກາຄພຣະນາມວິປັສສີ ພຣະນາມສິຂີ ແລະພຣະນາມເວສສກູບໍ່ດຳຣົງຢູ່ນານ.

ສ. ອັນໃດເປັນເຫຕຸ ອັນໃດເປັນປັຈຈັຍ ໃຫ້ພຣະສາສນາຂອງພຣະຜູ້ມີພຣະກາຄພຣະນາມກກຸສັນສະພຣະນາມໂກນາຄມນະ ແລະພຣະນາມກັສສປະ ດຳຣົງຢູ່ນານ ພຣະພຸທສເຈົ້າຂ້ານ້ອຍ?

ກ. ດູຣາສາຣີບຸຕຣ໌ ພຣະຜູ້ມີພຣະກາຄພຣະນາມກກຸສັນສະ ພຣະນາມໂກນາຄມນະ ແລະພຣະນາມກັສສປະ ບໍ່ໄດ້ຊົງທໍ້ພຣະຫຣືທັຍເພື່ອຈະຊົງສະແດງສັມມ໌ໂດຍພິສດາຣແກ່ສາວົກທັ້ງຫລາຍ ອີກຢ່າງ ສຸຕຕະເຄີຍຍະ ເວີຍຍາກຣຓະ ຄາຖາ ອຸທານ ອິຕິວຸຕຕກະ ຊາດົກ ອັພກູຕສັມມ໌ ເວທັລລະ ຂອງພຣະຜູ້ມີພຣະກາຄທັ້ງສາມພຣະອົງຄ໌ນັ້ນມີຫຼາຍ ສິກຂາບົທກໍຊົງບັຍລັຕິ ປາຕິໂມກຂ໌ກໍຊົງສະແດງແກ່ສາວົກ ເພາະອັນຕຣຣານແຫ່ງພຣະຜູ້ມີພຣະກາຄພຸທສເຈົ້າເຫລົ່ານັ້ນ ເພາະອັນຕຣຣານແຫ່ງສາວົກຜູ້ຕຣັສຣູ້ຕາມພຣະພຸທສເຈົ້າເຫລົ່ານັ້ນ ສາວົກຊັ້ນຫລັງທີ່ຕ່າງຊື່ກັນ ຕ່າງໂຄຕຣ໌ກັນ ຕ່າງຊາຕິກັນ ອອກບວຊຈາກຕະກູລຕ່າງກັນ ຈຶ່ງດຳຣົງພຣະສາສນານັ້ນໄວ້ໄດ້ຕລອດຣະຍະກາລຍືນນານ ດູຣາສາຣີບຸຕຣ໌ ດອກໄມ້ຕ່າງພັຣຓທີ່ເຂົາກອງໄວ້ເທິງພື້ນກະດານ ຮ້ອຍດີແລ້ວດ້ວຍດ້າຍ ລົມຍ່ອມກະຈາຍບໍ່ໄດ້ ຂຈັດບໍ່ໄດ້ ກຳຈັດບໍ່ໄດ້ຊຶ່ງດອກໄມ້ເຫລົ່ານັ້ນຂໍ້ນັ້ນເພາະເຫຕຸໃດ ເພາະເຂົາຮ້ອຍດີແລ້ວດ້ວຍດ້າຍ ລັນໃດ ເພາະອັນຕຣຣານແຫ່ງພຣະຜູ້ມີພຣະກາຄພຸທສເຈົ້າເຫລົ່ານັ້ນ ເພາະອັນຕຣຣານແຫ່ງສາວົກຜູ້ຕຣັສຣູ້ຕາມພຣະພຸທສເຈົ້າເຫລົ່ານັ້ນ ສາວົກຊັ້ນຫລັງທີ່ຕ່າງຊື່ກັນ ຕ່າງໂຄຕຣ໌ກັນ ຕ່າງຊາຕິກັນ ອອກບວຊຈາກຕະກູລຕ່າງກັນ ຈຶ່ງດຳຣົງພຣະສາສນານັ້ນໄວ້ໄດ້ຕລອດຣະຍະກາລຍືນນານ ລັນນັ້ນ ເຫມືອນກັນ.

ດູຣາສາຣີບຸຕຣ໌ ອັນນີ້ແລເປັນເຫຕຸ ອັນນີ້ແລເປັນປັຈຈັຍ ໃຫ້ພຣະສາສນາຂອງພຣະຜູ້ມີພຣະກາຄພຣະນາມກກຸສັນສະ ພຣະນາມໂກນາຄມນະ ແລະພຣະນາມກັສສປະ ດຳຣົງຢູ່ນານ.

ປຼາຣົຠ ເຫຕຸໃຫ້ຊົງບັຎຎັຕິສິກຂາບົທ

[໗] ລຳດັບນັ້ນແລ ທ່ານພຣະສາຣີບຸຕຣ໌ລຸກຈາກອາສນະ ທຳຜ້າອຸຕຣາສົງຄ໌ພາດບ່າຂ້າງນຶ່ງ ປະຓົມອັຎຊລີໄປທາງພຣະຜູ້ມີພຣະຠາຄແລ້ວຂາບທູລວ່າ ເຖິງເວລາແລ້ວ ພຣະພຸທຘເຈົ້າຂ້ານ້ອຍ ຂ້າແຕ່ພຣະສຸຄົຕເຖິງເວລາແລ້ວ ທີ່ຈະຊົງບັຎຎັຕິສິກຂາບົທ ທີ່ຈະຊົງສະແດງປາຕິໂມກຂ໌ແກ່ສາວົກ ອັນຈະເປັນເຫຕຸໃຫ້ພຣະຨາສນານີ້ຍັ່ງຍືນດຳຣົງຢູ່ໄດ້ນານ.

ພຣະຜູ້ມີພຣະຠາຄຕຣັສວ່າ ຈົງຖ້າກ່ອນ ສາຣີບຸຕຣ໌ ຈົງຍັບຍັ້ງກ່ອນສາຣີບຸຕຣ໌ ຕຖາຄົຕຜູ້ດຽວຈັກຣູ້ກາລໃນກຣຓີຍ໌ນັ້ນ ພຣະຨາສດາຍັງບໍ່ບັຎຎັຕິສິກຂາບົທ ຍັງບໍ່ສະແດງປາຕິໂມກຂ໌ແກ່ສາວົກ ຕລອດເວລາທີ່ຘັມອັນເປັນທີ່ຕັ້ງແຫ່ງອາສວະບາງເຫລົ່າ ຍັງບໍ່ປຼາກົຏໃນສົງຆ໌ໃນຨາສນານີ້ ຕໍ່ເມື່ອໃດອາສວັຏຐານີຍຘັມມ໌ບາງເຫລົ່າ ປຼາກົຏໃນສົງຆ໌ໃນຨາສນານີ້ ເມື່ອນັ້ນພຣະຨາສດາຈຶ່ງຈະບັຎຎັຕິສິກຂາບົທ ສະແດງປາຕິໂມກຂ໌ແກ່ສາວົກ ເພື່ອກຳຈັດອາສວັຏຐານີຍຘັມມ໌ເຫລົ່ານັ້ນແຫລະ ອາສວັຏຐານີຍຘັມມ໌ບາງເຫລົ່າ ຍັງບໍ່ປຼາກົຏໃນສົງຆ໌ໃນຨາສນານີ້ ຕລອດເວລາທີ່ສົງຆ໌ຍັງບໍ່ເຖິງຄວາມເປັນຫມູ່ໃຫຎ່ໂດຍຠິກຩຸຜູ້ບວຊນານ ຕໍ່ເມື່ອໃດສົງຆ໌ເຖິງຄວາມເປັນຫມູ່ໃຫຎ່ໂດຍຠິກຩຸຜູ້ບວຊນານແລ້ວ ແລະອາສວັຏຐານີຍຘັມມ໌ບາງເຫລົ່າຍ່ອມປຼາກົຏໃນສົງຆ໌ໃນຨາສນານີ້ ເມື່ອນັ້ນພຣະຨາສດາຈຶ່ງຈະບັຎຎັຕິສິກຂາບົທ ສະແດງປາຕິໂມກຂ໌ແກ່ສາວົກ ເພື່ອກຳຈັດອາສວັຏຐານີຍຘັມມ໌ເຫລົ່ານັ້ນແຫລະ ອາສວັຏຐານີຍຘັມມ໌ບາງເຫລົ່າ ຍັງບໍ່ປຼາກົຏໃນສົງຆ໌ໃນຨາສນານີ້ ຕລອດເວລາທີ່ສົງຆ໌ຍັງບໍ່ເຖິງຄວາມເປັນຫມູ່ໃຫຎ່ໂດຍແພ່ຫລາຍ ຕໍ່ເມື່ອໃດສົງຆ໌ເຖິງຄວາມເປັນຫມູ່ໃຫຎ່ໂດຍແພ່ຫລາຍແລ້ວ ແລະອາສວັຏຐານີຍຘັມມ໌ບາງເຫລົ່າ ຍ່ອມປຼາກົຏໃນສົງຆ໌ໃນຨາສນານີ້ ເມື່ອນັ້ນພຣະຨາສດາຈຶ່ງຈະບັຎຎັຕິສິກຂາບົທ ສະແດງປາຕິໂມກຂ໌ແກ່ສາວົກເພື່ອກຳຈັດອາສວັຏຐານີຍຘັມມ໌ເຫລົ່ານັ້ນແຫລະ ອາສວັຏຐານີຍຘັມມ໌ບາງເຫລົ່າ ຍັງບໍ່ປຼາກົຏໃນສົງຆ໌ໃນຨາສນານີ້ ຕລອດເວລາທີ່ສົງຆ໌ຍັງບໍ່ເຖິງຄວາມເປັນຫມູ່ໃຫຎ່ເລີຨໂດຍລາຠ ຕໍ່ເມື່ອໃດສົງຆ໌ເຖິງຄວາມເປັນຫມູ່ໃຫຎ່ເລີຨໂດຍລາຠແລ້ວ ແລະອາສວັຏຐານີຍຘັມມ໌ບາງເຫລົ່າ ຍ່ອມປຼາກົຏໃນສົງຆ໌ໃນຨາສນານີ້ ເມື່ອນັ້ນພຣະຨາສດາຈຶ່ງຈະບັຎຎັຕິ-ສິກຂາບົທ ສະແດງປາຕິໂມກຂ໌ແກ່ສາວົກ ເພື່ອກຳຈັດອາສວັຏຐານີຍຘັມມ໌ເຫລົ່ານັ້ນແຫລະ ດູຣາສາຣີບຸຕຣ໌ ກໍຠິກຩຸສົງຆ໌ບໍ່ມີສນຽດ ບໍ່ມີໂທຩ ປຼາຨຈາກມົວຫມອງບໍຣິສຸທຘິ໌ຜຸດຜ່ອງຕັ້ງຢູ່ໃນສາຣຄຸຓ ເພາະບັຣດາຠິກຩຸ ໕໐໐ ອົງຄ໌ນີ້ ຠິກຩຸທີ່ຊົງຄຸຓຘັມມ໌ຢ່າງຕ່ຳ ກໍເປັນໂສດາບັນ ມີຄວາມບໍ່ຕົກຕ່ຳເປັນຘັມມດາ ເປັນຜູ້ທ່ຽງ ເປັນຜູ້ທີ່ຈະຕຣັສຣູ້ໃນເບື້ອງຫນ້າ.

ສເດັຈນິເວຨນ໌ເວຣັຎຊພຣາຫ໌ມຓ໌

[໘] ພໍປວາຣຓາພັຣຩາແລ້ວ ພຣະຜູ້ມີພຣະຠາຄຕຣັສເອີ້ນທ່ານພຣະອານົນທ໌ມາຣັບສັ່ງວ່າ ດູຣາອານົນທ໌ ພຣະຕຖາຄົຕທັ້ງຫລາຍຍັງບໍ່ໄດ້ບອກລາຜູ້ທີ່ນິມົນຕ໌ໃຫ້ຢູ່ຈຳພັຣຩາແລ້ວ ຈະບໍ່ຫລີກໄປສູ່ທີ່

ຈາຣິກໃນຊົນບົທ ຂໍ້ນີ້ເປັນປະເພຕີຂອງພຣະຕຖາຄົຕທັ້ງຫລາຍ ມາໄປກັນເທີ້ນອານົນທ໌ ເຮົາຈະບອກລາເວຣັນຊພຣາຫ໌ມນ໌.

ທ່ານພຣະອານົນທ໌ທູລສນອງພຣະພຸທສດຳຣັສວ່າ ເປັນດັງຮັບສັ່ງ ພຣະພຸທສເຈົ້າຂ້ານ້ອຍ.

ຂຕະນັ້ນ ພຣະຜູ້ມີພຣະພາຄຊົງອັນຕຣວາສົກແລ້ວ ຖືບາຕຣ໌ຈີວຣ ມີທ່ານພຣະອານົນທ໌ເປັນປັຈສາສມຕະ ສເດັຈພຣະພຸທສດຳເນີນໄປສູ່ນິເວສນ໌ຂອງເວຣັນຊພຣາຫ໌ມຕ໌ພໍເຖິງແລ້ວປະທັບນັ່ງເຫນືອພຣະພຸທສອາສນ໌ທີ່ເຂົາຈັດຖວາຍ ທັນໃດນັ້ນ ເວຣັນຊພຣາຫ໌ມນ໌ດຳເນີນເຂົ້າໄປສູ່ທີ່ປະທັບ ແລະແລ້ວຖວາຍບັງຄົມ ນັ່ງເຝົ້າຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ພຣະອົງຄ໌ຮັບສັ່ງວ່າ ດູຣາພຣາຫ໌ມຕ໌ເຮົາເປັນຜູ້ອັນທ່ານນິມົນຕ໌ຢູ່ຈຳພັຣຍາແລ້ວ ເຮົາຂໍບອກລາທ່ານ ເຮົາປັຕຖນາຈະຫລີກໄປສູ່ທີ່ຈາຣິກໃນຊົນບົທ.

ເວຣັນຊພຣາຫ໌ມນ໌ຂາບທູລວ່າ ເປັນຄວາມຈິງ ທ່ານພຣະໂຄດົມ ຂ້າພເຈົ້ານິມົນຕ໌ພຣະອົງຄ໌ຢູ່ຈຳພັຣຍາ ກໍແຕ່ວ່າໄທຍສົມມ໌ອັນໃດທີ່ຈະຖວາຍ ໄທຍສົມມ໌ອັນນັ້ນຂ້າພເຈົ້າຍັງບໍ່ໄດ້ຖວາຍ ແລະໄທຍ-ສົມມ໌ນັ້ນບໍ່ແມ່ນວ່າຈະບໍ່ມີ ທັ້ງປະສົງຄ໌ຈະບໍ່ຖວາຍກໍຫາບໍ່ ພາຍໃນໄຕຣມາສນີ້ ພຣະອົງຄ໌ຈະໄດ້ໄທຍ-ສົມມ໌ນັ້ນຈາກໃສ ເພາະຆຣາວາສມີກິຈຫຼາຍ ມີກຣຕີຍະຫຼາຍ ຂໍທ່ານພຣະໂຄດົມພ້ອມດ້ວຍພຣະສົງຆ໌ຈົ່ງຊົງພຣະກຣຸຕາໂປຼດຮັບພັຕຕາຫາຣຂອງຂ້າພເຈົ້າ ເພື່ອຈເຣີນບຸນກຸສົລແລະປີຕິປຼາໂມທຍ໌ໃນມື້ອື່ນເຊົ້າແກ່ຂ້າພເຈົ້າດ້ວຍເທີ້ນ.

ພຣະຜູ້ມີພຣະພາຄຊົງຮັບອັຊເຊສນາໂດຍດຸຍຕີພາພ ແລະແລ້ວຊົງຊີ້ແຈງໃຫ້ເວຣັນຊພຣາຫ໌ມຕ໌ເຫັນແຈ້ງ ສມາທານ ອາຈຫານ ຣ່າເຣີງດ້ວຍສົມມີກຖາ ແລ້ວຊົງລຸກຈາກທີ່ປະທັບສເດັຈກັບ.

ຫລັງຈາກນັ້ນ ເວຣັນຊພຣາຫ໌ມນ໌ສັ່ງໃຫ້ຕົກແຕ່ງຂອງຍ້ຳຂອງລັ້ນອັນປະຕີຕໃນນິເວສນ໌ຂອງຕົນໂດຍຜ່ານຣາຕຣີນັ້ນແລ້ວ ໃຫ້ເຈົ້າພນັກງານໄປຂາບທູລພັຕກາລແດ່ພຣະຜູ້ມີພຣະພາຄວ່າ ເຖິງເວລາແລ້ວ ທ່ານພຣະໂຄດົມ ພັຕຕາຫາຣສຳເຣັຈແລ້ວ.

ຂຕະນັ້ນເປັນເວລາເຊົ້າ ພຣະຜູ້ມີພຣະພາຄຊົງອັນຕຣວາສົກແລ້ວຖືບາຕຣ໌ຈີວຣສເດັຈພຣະພຸທສ-ດຳເນີນໄປສູ່ນິເວສນ໌ຂອງເວຣັນຊພຣາຫ໌ມຕ໌ພໍເຖິງແລ້ວ ປະທັບນັ່ງເຫນືອພຣະພຸທສອາສນ໌ທີ່ເຂົາຈັດຖວາຍພ້ອມດ້ວຍພິກຍຸສົງຆ໌ ຈຶ່ງເວຣັນຊພຣາຫ໌ມນ໌ອັງຄາສພິກຍຸສົງຆ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂາທນີຍ-ໂພຊນີຍາຫາຣອັນປະຕີຕ ດ້ວຍມືຂອງຕົນຈົນໃຫ້ຫ້າມພັຕຣ໌ແລ້ວ ໄດ້ຖວາຍໄຕຣຈີວຣແດ່ພຣະຜູ້ມີພຣະພາຄຜູ້ສເວີຍສຳເຣັຈຊົງນຳພຣະຫັຕຖ໌ອອກຈາກບາຕຣ໌ແລ້ວໃຫ້ຊົງຫົ່ມ ແລະຖວາຍຜ້າຄູ່ໃຫ້ພິກຍຸຫົ່ມ ອົງຄ໌ລະຊຸດ ຈຶ່ງພຣະອົງຄ໌ຊົງຊີ້ແຈງໃຫ້ເວຣັນຊພຣາຫ໌ມນ໌ເຫັນແຈ້ງ ສມາທານ ອາຈຫານ ຣ່າເຣີງດ້ວຍສົມມີກຖາແລ້ວຊົງລຸກຈາກທີ່ປະທັບສເດັຈກັບ ພໍພຣະອົງຄ໌ປະທັບຢູ່ທີ່ເມືອງເວຣັນຊາຕາມພຣະພຸທສາພີຣົມຍ໌ແລ້ວ

ສເດັຈພຣະພຸທສດຳເນີນໄປຍັງເມືອງທ່າປຍາຄະ ບໍ່ຊົງແວະເມືອງໂສເຣີຍະ ເມືອງສັງກັສສະ ເມືອງ ກັຓຕກຸຊຊະ ຊົງຂ້າມແມ່ນ້ຳຄົງຄາທີ່ເມືອງທ່າປຍາຄະ ສເດັຈພຣະພຸທສດຳເນີນເຖິງພຣະນຄຣພາຣາຓສີ ພໍ ພຣະອົງຄ໌ປະທັບຢູ່ທີ່ພຣະນຄຣພາຣາຓສີຕາມພຣະພຸທສາທິຣົມຍ໌ແລ້ວ ສເດັຈຈາຣິກໄປໂດຍມັຄຄາອັນຈະໄປ ສູ່ພຣະນຄຣເວສາລີ ເມື່ອສເດັຈຈາຣິກໄປໂດຍລຳດັບ ເຖິງພຣະນຄຣເວສາລີນັ້ນແລ້ວ ຮູ້ວ່າພຣະອົງຄ໌ປະທັບ ຢູ່ທີ່ກູຕາຄາຣສາລາ ປ່າມຫາວັນ ເຂຕພຣະນຄຣເວສາລີນັ້ນ.

ເວຣັລຊກາຓວາຣ ຈົບ.

ປາຣາຊິກກັຕຑ໌ ປຖົມປາຣາຊິກສິກຂາບົທ
ເຣື່ອງພຣະສຸທິນນ໌

[໑໐] ກໍໂດຍສມັຍນັ້ນແລ ໝ ສຖານທີ່ບໍ່ຫ່າງຈາກພຣະນຄຣເວສາລີ ມີບ້ານຕາແສງນຶ່ງ ຊື່ ກລັນທະ ໃນບ້ານນັ້ນມີບຸຕຣ໌ຊາວບ້ານກລັນທະຜູ້ນຶ່ງ ຊື່ ສຸທິນນ໌ ເປັນເສຖຖີບຸຕຣ໌ ຄັ້ງນັ້ນ ສຸທິນນ໌ ກລັນທບຸຕຣໄດ້ເດີນສູຣະບາງຢ່າງໃນພຣະນຄຣເວສາລີກັບສຫາຍຫລາຍຄົນ ຂຓະນັ້ນແລ ພຣະຜູ້ມີພຣະພາຄ ອັນບໍຣິບັທໝູ່ໃຫຍ່ແວດລ້ອມແລ້ວປະທັບນັ່ງສະແດງສັມມ໌ຢູ່ ສຸທິນນ໌ ກລັນທບຸຕຣໄດ້ແລເຫັນພຣະຜູ້ມີ ພຣະພາຄ ອັນບໍຣິບັທໝູ່ໃຫຍ່ແວດລ້ອມປະທັບນັ່ງສະແດງສັມມ໌ຢູ່ ເພາະໄດ້ເຫັນ ຄວາມຕຶກນີ້ ໄດ້ມີ ແກ່ເຂົາວ່າ ຈັ່ງໃດເດ້ເຮົາຈະໄດ້ຟັງສັມມ໌ແດ່ ແລ້ວເຂົາກໍເດີນຜ່ານເຂົ້າໄປທາງບໍຣິບັທນັ້ນ ພໍເຖິງແລ້ວ ນັ່ງ ໝ ທີ່ຄວຣສ່ວນຂ້າງນຶ່ງ ຄວາມຄຶດນີ້ໄດ້ມີແກ່ເຂົາຜູ້ນັ່ງ ໝ ທີ່ຄວຣສ່ວນຂ້າງນຶ່ງນີ້ວ່າ ດ້ວຍວິທີ ຈັ່ງໃດໆ ເຮົາຈຶ່ງຈະຮູ້ທົ່ວເຖິງສັມມ໌ທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວ ອັນບຸຄຄົລທີ່ຍັງມີເຮືອນຢູ່ ຈະ ປະພຶຕພຣົຫ໌ມຈັຣຍ໌ນີ້ໃຫ້ບໍຣິບູຣນ໌ໂດຍສ່ວນດຽວ ໃຫ້ບໍຣິສຸທຣ໌ໂດຍສ່ວນດຽວ ເໝືອນສັງຂ໌ທີ່ຂັດແລ້ວ ທຳ ບໍ່ໄດ້ງ່າຍ ຈັ່ງໃດເດ້ ເຮົາຄວຣແຖຜົມແລະໜວດຫົ່ມຜ້າກາສາຍະ ອອກຈາກເຮືອນບວຊເປັນບັຣພຊິຕ ພໍບໍຣິບັທນັ້ນ ອັນພຣະຜູ້ມີພຣະພາຄຊົງສະແດງ ໃຫ້ເຫັນແຈ້ງ ໃຫ້ສມາທານ ອາຈຫານ ຣ່າເຣີງ ດ້ວຍ ສັມມີກຖາແລ້ວ ລຸກຈາກທີ່ນັ່ງ ຖວາຍບັງຄົມພຣະຜູ້ມີພຣະພາຄ ທຳປະທັກບິຓຫລີກໄປແລ້ວ ຫລັງຈາກບໍຣິບັທ ລຸກໄປແລ້ວບໍ່ດົນ ເຂົາໄດ້ເດີນເຂົ້າໄປໃກ້ທີ່ປະທັບ ຖວາຍບັງຄົມແລ້ວ ນັ່ງເຝົ້າຢູ່ ໝ ທີ່ຄວຣສ່ວນ ຂ້າງນຶ່ງ.

ສຸທິນນ໌ກລັນທບຸຕຣ໌ນັ່ງເຝົ້າຢູ່ ໝ ທີ່ນັ້ນແລ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ ພຣະພຸທສ-ເຈົ້າຂ້າ ດ້ວຍວິທີຈັ່ງໃດໆ ຂ້າພຣະພຸທສເຈົ້າຈຶ່ງຈະຮູ້ທົ່ວເຖິງສັມມ໌ທີ່ພຣະອົງຄ໌ຊົງສະແດງແລ້ວ ອັນບຸຄຄົລທີ່ຍັງ ມີເຮືອນຢູ່ ຈະປະພຶຕພຣົຫ໌ມຈັຣຍ໌ນີ້ໃຫ້ບໍຣິບູຣນ໌ໂດຍສ່ວນດຽວ ໃຫ້ບໍຣິສຸທຣ໌ໂດຍສ່ວນດຽວ ເໝືອນສັງຂ໌ ທີ່ຂັດແລ້ວ ເຮັດບໍ່ໄດ້ງ່າຍ ຂ້າພຣະພຸທສເຈົ້າປັຕຖນາຈະແຖຜົມແລະໜວດ ຫົ່ມຜ້າກາສາຍະ ອອກຈາກ ເຮືອນບວຊເປັນບັຣພຊິຕ ຂໍພຣະອົງຄ໌ຊົງພຣະກຣຸຓາໂປຼດໃຫ້ຂ້າພຣະພຸທສເຈົ້າບວຊເທີ້ນ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາສຸທິນນ໌ ກໍມາຣດາບິດາອນຸຍາຕໃຫ້ທ່ານອອກຈາກເຮືອນບວຊ ເປັນບັຣພຊິຕແລ້ວຫຼື?

ສຸທິນນ໌ກລັນທບຸຕຣ໌ຂາບທູລວ່າ ຍັງບໍ່ໄດ້ອນຸຍາຕ ພຣະພຸທສເຈົ້າຂ້ານ້ອຍ.

ພ. ດູຣາສຸທິນນ໌ ພຣະຕຖາຄົຕທັ້ງຫລາຍ ຍ່ອມບໍ່ບວຊບຸຕຣ໌ທີ່ມາຣດາບິດາຍັງບໍ່ໄດ້ອນຸຍາຕ.

ສຸ. ຂ້າພຣະພຸທສເຈົ້າຈັກກະທຳໂດຍວິທີທີ່ມາຣດາບິດາຈັກອນຸຍາຕໃຫ້ຂ້າພຣະພຸທສເຈົ້າອອກຈາກເຮືອນບວຊເປັນບັຣພຊິຕ ພຣະພຸທສເຈົ້າຂ້ານ້ອຍ.

ຂໍອນຸຍາຕອອກບວຊ

[໑໑] ຫລັງຈາກນັ້ນແລ ສຸທິນນ໌ກລັນທບຸຕຣ໌ສຳເຣັຈກາຣເດີນຊຣະທີ່ໃນພຣະນຄຣເວສາລີນັ້ນແລ້ວ ກັບສູ່ກລັນທຄາມເຂົ້າຫາມາຣດາບິດາ ແລ້ວໄດ້ກ່າວຄຳນີ້ກັບມາຣດາບິດາວ່າ ຂ້າແຕ່ມາຣດາບິດາ ດ້ວຍວິທີຈັ່ງໃດໆ ລູກຈຶ່ງຈະຮູ້ທົ່ວເຖິງຣັມມ໌ທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວ ອັນບຸຄຄົລທີ່ຍັງມີເຮືອນຢູ່ ຈະປະພຶຕພຣົຫ໌ມຈັຣຍ໌ນີ້ໃຫ້ບໍຣິບູຣນ໌ໂດຍສ່ວນດຽວ ໃຫ້ບໍຣິສຸທຣິ໌ໂດຍສ່ວນດຽວ ເໝືອນສັງຂ໌ທີ່ຂັດແລ້ວ ທຳບໍ່ໄດ້ງ່າຍ ລູກປັຕຖນາຈະແຖຜົມແລະໜວດ ຫົ່ມຜ້າກາສາຍະ ອອກຈາກເຮືອນບວຊເປັນບັຣພຊິຕ ຂໍມາຣດາບິດາຈົ່ງອນຸຍາຕໃຫ້ລູກອອກຈາກເຮືອນບວຊເປັນບັຣພຊິຕເທີ້ນ.

ເມື່ອສຸທິນນ໌ກລັນທບຸຕຣ໌ກ່າວຢ່າງນີ້ແລ້ວ ມາຣດາບິດາຂອງເຂົາໄດ້ກ່າວຄຳນີ້ກັບເຂົາວ່າ ລູກສຸທິນນ໌ເຈົ້າເທົ່ານັ້ນເປັນບຸຕຣ໌ຄົນດຽວ ເປັນທີ່ຮັກ ເປັນທີ່ພໍໃຈຂອງເຮົາ ເປັນຜູ້ຈເຣີນມາດ້ວຍຄວາມສຸຂ ອັນອ້າຍລ້ຽງນາງນົມປະຄົບປະຫງົມມາດ້ວຍຄວາມສຸຂ ເຈົ້າບໍ່ຮູ້ຈັກຄວາມທຸກຂ໌ຈັກໜ້ອຍ ແມ້ເຈົ້າຈະຕາຍເຮົາກໍບໍ່ປັຕຖນາຈະຈາກ ເຫຕຸໃດເຮົາຈັກອນຸຍາຕໃຫ້ເຈົ້າຜູ້ຍັງມີຊີວິຕຢູ່ອອກຈາກເຮືອນບວຊເປັນບັຣພຊິຕໄດ້ລະ.

ແມ້ເທື່ອທີ່ສອງ ສຸທິນນ໌ກລັນທບຸຕຣ໌ກໍໄດ້ກ່າວຄຳນີ້ກັບມາຣດາບິດາວ່າ ຂ້າແຕ່ມາຣດາບິດາ ດ້ວຍວິທີຈັ່ງໃດໆ ລູກຈຶ່ງຈະຮູ້ທົ່ວເຖິງຣັມມ໌ທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວ ອັນບຸຄຄົລທີ່ຍັງມີເຮືອນຢູ່ຈະປະພຶຕພຣົຫ໌ມຈັຣຍ໌ນີ້ ໃຫ້ບໍຣິບູຣນ໌ໂດຍສ່ວນດຽວ ໃຫ້ບໍຣິສຸທຣິ໌ໂດຍສ່ວນດຽວ ເໝືອນສັງຂ໌ທີ່ຂັດແລ້ວເຮັດບໍ່ໄດ້ງ່າຍ ລູກປັຕຖນາຈະແຖຜົມແລະໜວດຫົ່ມຜ້າກາສາຍະ ອອກຈາກເຮືອນບວຊເປັນບັຣພຊິຕ ຂໍມາຣດາບິດາຈົ່ງອນຸຍາຕໃຫ້ລູກອອກຈາກເຮືອນບວຊເປັນບັຣພຊິຕເທີ້ນ.

ແມ້ເທື່ອທີ່ສອງ ມາຣດາບິດາຂອງເຂົາກໍໄດ້ກ່າວຄຳນີ້ກັບເຂົາວ່າ ລູກສຸທິນນ໌ ເຈົ້າເທົ່ານັ້ນເປັນບຸຕຣ໌ຄົນດຽວ ເປັນທີ່ຮັກເປັນທີ່ພໍໃຈຂອງເຮົາ ເປັນຜູ້ຈເຣີນມາດ້ວຍຄວາມສຸຂ ອັນອ້າຍລ້ຽງນາງນົມປະຄົບປະຫງົມມາດ້ວຍຄວາມສຸຂ ເຈົ້າບໍ່ຮູ້ຈັກຄວາມທຸກຂ໌ຈັກໜ້ອຍ ແມ້ເຈົ້າຈະຕາຍເຮົາກໍບໍ່ປັຕຖນາຈະຈາກ ເຫຕຸໃດເຮົາຈັກອນຸຍາຕໃຫ້ເຈົ້າຜູ້ຍັງມີຊີວິຕຢູ່ອອກຈາກເຮືອນບວຊເປັນບັຣພຊິຕໄດ້ລະ.

ແມ້ເທື່ອທີ່ສາມ ສຸທິນນ໌ກລັນທບຸຕຣ໌ກໍໄດ້ກ່າວຄຳນີ້ກັບມາຣດາບິດາວ່າ ຂ້າແຕ່ມາຣດາບິດາ ດ້ວຍວິທີຈັ່ງໃດໆ ລູກຈຶ່ງຈະຮູ້ທົ່ວເຖິງຣັມມ໌ທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວ ອັນບຸຄຄົລທີ່ຍັງມີເຮືອນຢູ່ຈະປະພຶຕພຣົຫ໌ມຈັຣຍ໌ນີ້ ໃຫ້ບໍຣິບູຣນ໌ໂດຍສ່ວນດຽວ ໃຫ້ບໍຣິສຸທຣິ໌ໂດຍສ່ວນດຽວ ເໝືອນສັງຂ໌ທີ່ຂັດແລ້ວເຮັດບໍ່ໄດ້ງ່າຍ ລູກປັຕຖນາຈະແຖຜົມແລະໜວດຫົ່ມຜ້າກາສາຍະອອກຈາກເຮືອນບວຊເປັນບັຣພຊິຕ ຂໍມາຣດາບິດາຈົ່ງອນຸຍາຕໃຫ້ລູກອອກຈາກເຮືອນບວຊເປັນບັຣພຊິຕເທີ້ນ.

ແມ້ເທື່ອທີ່ສາມ ມາຣດາບິດາຂອງເຂົາກໍໄດ້ກ່າວຄຳນີ້ກັບເຂົາວ່າ ລູກສຸທິນນ໌ ເຈົ້າເທົ່ານັ້ນເປັນບຸຕຣ໌ຄົນດຽວ ເປັນທີ່ຮັກ ເປັນທີ່ພໍໃຈຂອງເຮົາ ເປັນຜູ້ຈເຣີນມາດ້ວຍຄວາມສຸຂ ອັນອ້າຍລ້ຽງນາງນົມປະຄົບປະຫງົມມາດ້ວຍຄວາມສຸຂ ເຈົ້າບໍ່ຮູ້ຈັກຄວາມທຸກຂ໌ຈັກໜ້ອຍ ແມ້ເຈົ້າຈະຕາຍເຮົາກໍບໍ່ປັຕຖນາຈະຈາກ ເຫຕຸໃດ ເຮົາຈັກອນຸຍາຕໃຫ້ເຈົ້າຜູ້ຍັງມີຊີວິຕຢູ່ອອກຈາກເຮືອນບວຊເປັນບັຣພຊິຕໄດ້ລະ.

ທັນໃດນັ້ນແລ ສຸທິນນ໌ກລັນທບຸຕຣ໌ແນ່ໃຈວ່າ ມາຣດາບິດາບໍ່ອນຸຍາຕໃຫ້ເຮົາອອກຈາກເຮືອນບວຊເປັນບັຣພຊິຕ ຈຶ່ງນອນລົງເທິງພື້ນອັນປູາສຈາກເຄື່ອງປົກ ຓ ສຖານທີ່ນັ້ນເອງ ດ້ວຍຕັດສິນໃຈວ່າ ກາຣຕາຍຫຼືກາຣບວຊຈັກມີແກ່ເຮົາໃນສຖານທີ່ນີ້ແຫລະ ແລະແລ້ວເຂົາບໍ່ບໍຣິໂພຄອາຫາຣແມ້ນຶ່ງຄາບ ບໍ່ບໍຣິໂພຄອາຫາຣແມ້ສອງຄາບ ບໍ່ບໍຣິໂພຄອາຫາຣແມ້ສາມຄາບ ບໍ່ບໍຣິໂພຄອາຫາຣແມ້ສີ່ຄາບ ບໍ່ບໍຣິໂພຄອາຫາຣແມ້ຫ້າຄາບ ບໍ່ບໍຣິໂພຄອາຫາຣແມ້ຫົກຄາບ ບໍ່ບໍຣິໂພຄອາຫາຣແມ້ເຈັດຄາບ.

ມາຣດາບິດາບໍ່ອນຸຍາຕ

[໑໘] ຈະຈັ່ງໃດກໍຕາມ ມາຣດາບິດາຂອງເຂົາໄດ້ກ່າວຄຳນີ້ວ່າ ລູກສຸທິນນ໌ ເຈົ້າເທົ່ານັ້ນເປັນບຸຕຣ໌ຄົນດຽວ ເປັນທີ່ຮັກ ເປັນທີ່ພໍໃຈຂອງເຮົາ ເປັນຜູ້ຈເຣີນມາດ້ວຍຄວາມສຸຂ ອັນອ້າຍລ້ຽງນາງນົມປະຄົບປະຫງົມມາດ້ວຍຄວາມສຸຂ ເຈົ້າບໍ່ຮູ້ຈັກຄວາມທຸກຂ໌ຈັກໜ້ອຍ ແມ້ເຈົ້າຈະຕາຍເຮົາກໍບໍ່ປັຕຖນາຈະຈາກ ເຫຕຸໃດ ເຮົາຈັກອນຸຍາຕໃຫ້ເຈົ້າຜູ້ຍັງມີຊີວິຕຢູ່ອອກຈາກເຮືອນບວຊເປັນບັຣພຊິຕໄດ້ລະ ຈົ່ງລຸກຂຶ້ນເທີ້ນ ລູກສຸທິນນ໌ ຈົ່ງກິນ ຈົ່ງດື່ມ ແລະຈົ່ງຮື່ນເຣິງ ຈົ່ງສມັຄຣ໌ໃຈກິນ ດື່ມ ຮື່ນເຣິງ ບໍຣິໂພຄກາມ ທຳບຸຍຢູ່ເທີ້ນ ເຮົາບໍ່ອນຸຍາຕໃຫ້ເຈົ້າອອກຈາກເຮືອນບວຊເປັນບັຣພຊິຕ.

ເມື່ອມາຣດາບິດາກ່າວຢ່າງນີ້ແລ້ວ ສຸທິນນ໌ກລັນທບຸຕຣ໌ໄດ້ມິດຢູ່.

ແມ້ເທື່ອທີ່ສອງ ມາຣດາບິດາຂອງເຂົາກໍໄດ້ກ່າວຄຳນີ້ກັບເຂົາວ່າ ລູກສຸທິນນ໌ ເຈົ້າເທົ່ານັ້ນເປັນບຸຕຣ໌ຄົນດຽວ ເປັນທີ່ຮັກເປັນທີ່ພໍໃຈຂອງເຮົາ ເປັນຜູ້ຈເຣີນມາດ້ວຍຄວາມສຸຂ ອັນອ້າຍລ້ຽງນາງນົມປະຄົບປະຫງົມມາດ້ວຍຄວາມສຸຂ ເຈົ້າບໍ່ຮູ້ຈັກຄວາມທຸກຂ໌ຈັກໜ້ອຍ ແມ້ເຈົ້າຈະຕາຍເຮົາກໍບໍ່ປັຕຖນາຈະຈາກ ເຫຕຸໃດ ເຮົາຈັກອນຸຍາຕໃຫ້ເຈົ້າຜູ້ຍັງມີຊີວິຕຢູ່ອອກຈາກເຮືອນບວຊເປັນບັຣພຊິຕໄດ້ລະ ຈົ່ງລຸກຂຶ້ນເທີ້ນລູກສຸທິນນ໌ ຈົ່ງກິນ ຈົ່ງດື່ມ ແລະຈົ່ງຮື່ນເຣິງ ຈົ່ງສມັຄຣ໌ໃຈກິນ ດື່ມ ຮື່ນເຣິງ ບໍຣິໂພຄກາມ ທຳບຸຍຢູ່ເທີ້ນ ເຮົາບໍ່ອນຸຍາຕໃຫ້ເຈົ້າອອກຈາກເຮືອນບວຊເປັນບັຣພຊິຕ

ແມ້ເທື່ອທີ່ສອງ ສຸທິນນ໌ກລັນທບຸຕຣ໌ກໍໄດ້ມິດຢູ່.

ແມ້ເທື່ອທີ່ສາມ ມາຣດາບິດາຂອງເຂົາກໍໄດ້ກ່າວຄຳນີ້ກັບເຂົາວ່າ ລູກສຸທິນນ໌ ເຈົ້າເທົ່ານັ້ນເປັນບຸຕຣ໌ຄົນດຽວ ເປັນທີ່ຮັກ ເປັນທີ່ພໍໃຈຂອງເຮົາ ເປັນຜູ້ຈເຣີນມາດ້ວຍຄວາມສຸຂ ອັນອ້າຍລ້ຽງນາງນົມປະຄົບ

ປະຫງົມມາດ້ວຍຄວາມສຸຂ ເຈົ້າບໍ່ຮູ້ຈັກຄວາມທຸກຂ໌ຈັກໜ້ອຍ ແມ້ເຈົ້າຈະຕາຍເຮົາກໍບໍ່ປັຕຖນາຈະຈາກ ເຫຕຸໃດ ເຮົາຈັກອນຸຍາຕໃຫ້ເຈົ້າຜູ້ຍັງມີຊີວິຕຢູ່ອອກຈາກເຮືອນບວຊເປັນບັຣພຊິຕໄດ້ລະ ຈົ່ງລຸກຂຶ້ນເທີ້ນ ລູກສຸທິນນ໌ ຈົ່ງກິນ ຈົ່ງດື່ມ ແລະຈົ່ງຮື່ນເຣີງ ຈົ່ງສມັຄຣໃຈກິນ ດື່ມຮື່ນເຣີງ ບໍຣິໂພຄກາມ ທຳບຸญຢູ່ເທີ້ນ ເຮົາບໍ່ອນຸຍາຕໃຫ້ເຈົ້າອອກຈາກເຮືອນບວຊເປັນບັຣພຊິຕ.

ແມ້ເທື່ອທີ່ສາມ ສຸທິນນ໌ກລັນທບຸຕຣ໌ກໍໄດ້ມິດຢູ່.

ພວກສຫາຍຊ່ອຍເຈຣຈາ

[໑໘] ຍິ່ງກວ່ານັ້ນ ພວກສຫາຍຂອງສຸທິນນ໌ກລັນທບຸຕຣ໌ ກໍໄດ້ເຂົ້າໄປຫາສຸທິນນ໌ກລັນທບຸຕຣ໌ ພໍເຖິງແລ້ວໄດ້ກ່າວຄຳນີ້ວ່າ ສຸທິນນ໌ເພື່ອນຮັກ ທ່ານເທົ່ານັ້ນເປັນບຸຕຣ໌ຄົນດຽວ ເປັນທີ່ຮັກ ເປັນທີ່ພໍໃຈຂອງມາຣດາບິດາ ບິດາເປັນຜູ້ຈເຣີญມາດ້ວຍຄວາມສຸຂ ອັນອ້າຍລ້ຽງນາງນົມປະຄົບປະຫງົມມາດ້ວຍຄວາມສຸຂ ທ່ານບໍ່ຮູ້ຈັກຄວາມທຸກຂ໌ຈັກໜ້ອຍ ແມ້ທ່ານຈະຕາມມາຣດາບິດາກໍບໍ່ປັຕຖນາຈະຈາກ ເຫຕຸໃດທ່ານທັ້ງສອງຈັກອນຸຍາຕໃຫ້ທ່ານຜູ້ຍັງມີຊີວິຕຢູ່ອອກຈາກເຮືອນບວຊເປັນບັຣພຊິຕໄດ້ລະ ລຸກຂຶ້ນເທີ້ນສຸທິນນ໌ເພື່ອນຮັກ ຈົ່ງກິນ ຈົ່ງດື່ມ ແລະຈົ່ງຮື່ນເຣີງ ຈົ່ງສມັຄຣໃຈກິນ ດື່ມ ຮື່ນເຣີງ ບໍຣິໂພຄກາມ ທຳບຸญຢູ່ເທີ້ນ ມາຣດາບິດາບໍ່ອນຸຍາຕໃຫ້ທ່ານອອກຈາກເຮືອນບວຊເປັນບັຣພຊິຕ.

ເມື່ອຂໍກ່າວຢ່າງນີ້ແລ້ວ ສຸທິນນ໌ກລັນທບຸຕຣ໌ໄດ້ມິດຢູ່.

ແມ້ເທື່ອທີ່ສອງ ພວກສຫາຍຂອງສຸທິນນ໌ກລັນທບຸຕຣ໌ກໍໄດ້ກ່າວຄຳນີ້ກັບເຂົາວ່າ ສຸທິນນ໌ເພື່ອນຮັກ ທ່ານເທົ່ານັ້ນເປັນບຸຕຣ໌ຄົນດຽວ ເປັນທີ່ຮັກເປັນທີ່ພໍໃຈຂອງມາຣດາບິດາ ເປັນຜູ້ຈເຣີญມາດ້ວຍຄວາມສຸຂ ອັນອ້າຍລ້ຽງນາງນົມປະຄົບປະຫງົມມາດ້ວຍຄວາມສຸຂ ທ່ານບໍ່ຮູ້ຈັກຄວາມທຸກຂ໌ຈັກໜ້ອຍ ແມ້ທ່ານຈະຕາຍ ມາຣດາບິດາ ກໍບໍ່ປັຕຖນາຈະຈາກ ເຫຕຸໃດທ່ານທັ້ງສອງຈັກອນຸຍາຕໃຫ້ທ່ານຜູ້ຍັງມີຊີວິຕຢູ່ ອອກຈາກເຮືອນບວຊເປັນບັຣພຊິຕໄດ້ລະ ລຸກຂຶ້ນເທີ້ນສຸທິນນ໌ເພື່ອນຮັກ ຈົ່ງກິນ ຈົ່ງດື່ມ ແລະຈົ່ງຮື່ນເຣີງ ຈົ່ງສມັຄຣໃຈກິນ ດື່ມ ຮື່ນເຣີງ ບໍຣິໂພຄກາມ ທຳບຸญຢູ່ເທີ້ນ ມາຣດາບິດາບໍ່ອນຸຍາຕໃຫ້ທ່ານອອກຈາກເຮືອນບວຊເປັນບັຣພຊິຕ.

ແມ້ເທື່ອທີ່ສອງ ສຸທິນນ໌ກລັນທບຸຕຣ໌ກໍໄດ້ມິດຢູ່.

ແມ້ເທື່ອທີ່ສາມ ພວກສຫາຍຂອງສຸທິນນ໌ກລັນທບຸຕຣ໌ ກໍໄດ້ກ່າວຄຳນີ້ກັບເຂົາວ່າ ສຸທິນນ໌ເພື່ອນຮັກ ທ່ານເທົ່ານັ້ນເປັນບຸຕຣ໌ຄົນດຽວ ເປັນທີ່ຮັກ ເປັນທີ່ພໍໃຈຂອງມາຣດາບິດາ ເປັນຜູ້ຈເຣີญມາດ້ວຍຄວາມສຸຂ ອັນອ້າຍລ້ຽງນາງນົມປະຄົບປະຫງົມມາດ້ວຍຄວາມສຸຂ ທ່ານບໍ່ຮູ້ຈັກຄວາມທຸກຂ໌ຈັກໜ້ອຍ ແມ້ທ່ານຈະຕາຍ

ມາຣດາບິດາກໍບໍ່ປັຕຖນາຈະຈາກ ເຫຕຸໃດທ່ານທັ້ງສອງຈັກອນຸຍາຕໃຫ້ທ່ານຜູ້ຍັງມີຊີວິຕຢູ່ ອອກຈາກເຮືອນບວຊເປັນບັຣພຊິຕໄດ້ລະ ລຸກຂຶ້ນເທີ້ນສຸທິນນ໌ເພື່ອນຮັກ ຈົ່ງກິນ ຈົ່ງດື່ມ ແລະຈົ່ງຣື່ນເຣິງ ຈົ່ງສມັຄຣ໌ໃຈກິນ ດື່ມ ຣື່ນເຣິງ ບໍຣິໂພຄກາມ ທຳບຸຍຢູ່ເທີ້ນ ມາຣດາບິດາບໍ່ອນຸຍາຕໃຫ້ທ່ານອອກຈາກເຮືອນບວຊເປັນບັຣພຊິຕ.

ແມ້ເທື່ອທີ່ສາມ ສຸທິນນ໌ກລັນທບຸຕຣ໌ກໍໄດ້ມິດຢູ່.

ເມື່ອບໍ່ສຳເຣັຈ ພວກສຫາຍຂອງສຸທິນນ໌ກລັນທບຸຕຣ໌ ຈຶ່ງເຂົ້າໄປຫາມາຣດາບິດາຂອງສຸທິນນ໌ກລັນທບຸຕຣ໌ ພໍເຖິງແລ້ວໄດ້ກ່າວຄຳນີ້ວ່າ ຂ້າແຕ່ມາຣດາບິດາ ສຸທິນນ໌ນັ້ນນອນລົງເທິງພື້ນອັນປູລາດຈາກເຄື່ອງປັກ ດ້ວຍຕັດສິນໃຈວ່າການຕາຍຫຼືການບວຊຈັກມີແກ່ເຮົາ ໓ ທີ່ນີ້ແຫລະ ຖ້າມາຣດາບິດາບໍ່ອນຸຍາຕໃຫ້ສຸທິນນ໌ອອກຈາກເຮືອນບວຊເປັນບັຣພຊິຕ ຄວາມຕາຍຈັກມາເຖິງ ໓ ທີ່ນັ້ນເອງ ຖ້າອນຸຍາຕໃຫ້ສຸທິນນ໌ອອກຈາກເຮືອນບວຊເປັນບັຣພຊິຕກໍຈັກໄດ້ເຫັນເຂົາແມ້ຜູ້ບວຊແລ້ວ ຖ້າສຸທິນນ໌ຈະບໍ່ຍິນດີໃນການອອກຈາກເຮືອນບວຊເປັນບັຣພຊິຕ ເຂົາຈັກມີທາງດຳເນີນອື່ນອັນໃດລະ ເຂົາຈັກກັບມາ ໓ ທີ່ນີ້ແຫລະ ຂໍມາຣດາບິດາຈົ່ງອນຸຍາຕໃຫ້ສຸທິນນ໌ອອກຈາກເຮືອນບວຊເປັນບັຣພຊິຕເທີ້ນ.

ອນຸຍາຕຂ້ານ້ອຍ ໃຫ້ລູກສຸທິນນ໌ອອກຈາກເຮືອນບວຊເປັນບັຣພຊິຕ ມາຣດາບິດາກ່າວຍິນຍອມ.

ສຸທິນນ໌ກລັນທບຸຕຣ໌ອອກບວຊ

[໑໔] ທັນໃດນັ້ນ ພວກສຫາຍຂອງສຸທິນນ໌ກລັນທບຸຕຣ໌ ເຂົ້າໄປຫາສຸທິນນ໌ກລັນທບຸຕຣ໌ ແລ້ວໄດ້ບອກເຂົາວ່າ ລຸກຂຶ້ນເທີ້ນ ສຸທິນນ໌ເພື່ອນຮັກ ມາຣດາບິດາອນຸຍາຕໃຫ້ທ່ານອອກຈາກເຮືອນບວຊເປັນບັຣພຊິຕແລ້ວ ພໍສຸທິນນ໌ກລັນທບຸຕຣ໌ໄດ້ຮູ້ວ່າ ມາຣດາບິດາອນຸຍາຕໃຫ້ອອກຈາກເຮືອນບວຊເປັນບັຣພຊິຕແລ້ວ ກໍຣ່າເຣິງດີໃຈ ລຸກຂຶ້ນລູບເນື້ອລູບຕົວດ້ວຍຝ່າມື ເມື່ອບຳຣຸງມີກຳລັງ ສອງສາມວັນແລ້ວ ຈຶ່ງເຂົ້າໄປສູ່ພຸທສສຳນັກ ຖວາຍບັງຄົມພຣະຜູ້ມີພຣະພາຄ ນັ່ງເຝົ້າ ໓ ທີ່ຄວຣສ່ວນຂ້າງນຶ່ງ ເຂົານັ່ງເຝົ້າຢູ່ຢ່າງນັ້ນແລ ໄດ້ຂາບທູລແດ່ພຣະຜູ້ມີພຣະພາຄວ່າ ຂ້າພຣະພຸທສເຈົ້າອັນມາຣດາບິດາອນຸຍາຕໃຫ້ອອກຈາກເຮືອນບວຊເປັນບັຣພຊິຕແລ້ວ ພຣະພຸທສເຈົ້າຂ້ານ້ອຍ ຂໍພຣະອົງຄ໌ໄດ້ໂປຼດໃຫ້ຂ້າພຣະພຸທສເຈົ້າບວຊເທີ້ນພຣະ-ພຸທສເຈົ້າຂ້ານ້ອຍນ້ອຍ.

ສຸທິນນ໌ກລັນທບຸຕຣ໌ໄດ້ຮັບບັຣພຊາອຸປສົມບົທໃນພຸທສສຳນັກດັ່ງນີ້ ກໍແລເຫັນທ່ານພຣະສຸທິນນ໌ອຸປສົມບົທແລ້ວບໍ່ນານ ປະພຶຕສມາທານຊຸດົງຄ໌ຄຸຓເຫັນປານນີ້ ຄື ເປັນຜູ້ຖືອຣັຍລິກຊຸດົງຄ໌ປິຓຫປາຕິກຊຸດົງຄ໌ ປັງສຸກູລິກຊຸດົງຄ໌ ສປທານຈາຣິກຊຸດົງຄ໌ ພຳນັກຢູ່ໃກ້ໝູ່ບ້ານຊາວວັຊຊີຕາແສງນຶ່ງ.

ພຣະສຸທິນນ໌ຍັງມຕະກຸລ

[໑໕] ກໍໂດຍສມັຍນັ້ນແລ ວັຊຊີຊົນບົທອັຕຄັດອາຫາຣ ປະຊາຊົນຫາລ້ຽງຊີພຝືດເຄືອງ ມີກະດູກຄົນຕາຍຂາວເກຼື່ອນ ຕ້ອງມີສລາກຂ້ຳທານ ພິກຂຸສົງພ໌ຈະຍັງອັຕພາພໃຫ້ເປັນໄປດ້ວຍການຖື

ບາຕຣ໌ສແວງຫາກໍເຮັດບໍ່ໄດ້ງ່າຍ ດັ່ງນັ້ນ ທ່ານພຣະສຸທິນນ໌ໄດ້ມີຄວາມຄິດເຫັນວ່າ ເວລານີ້ວັຊຊີຊົນບົທອັຕຄັດອາຫາຣ ປະຊາຊົນຫາລ້ຽງຊີພຝືດເຄືອງ ມີກະດູກຄົນຕາຍຂາວເກຼື່ອນ ຕ້ອງມີສລາກຊື້ອາຫາຣ ກິກຂຸ-ສົງฆ໌ຈະຍັງອັຕກາພໃຫ້ເປັນໄປດ້ວຍການຖືບາຕຣ໌ສແວງຫາ ກໍເຮັດບໍ່ໄດ້ງ່າຍ ກໍແລຌາຕິຂອງເຮົາໃນພຣະນຄຣເວສາລີມີຫຼາຍ ລ້ວນເປັນຄົນມັ່ງຄັ່ງ ມີຊັພຍ໌ຫຼາຍ ມີໂກຄະຫຼາຍ ມີທອງແລະເງິນຫຼາຍ ມີເຄື່ອງອຸປກຣຌ໌ທີ່ໜ້າຊື່ນໃຈຫຼາຍ ມີຂ້າວເປືອກເປັນຊັພຍາກຣຫຼາຍ ຈັ່ງໃດເດ໋ ເຮົາຄວຣເຂົ້າໄປພຳນັກຢູ່ໃກ້ໝູ່ຌາຕິ ແມ້ໝູ່ຌາຕິກໍຈັກໄດ້ອາສັຍເຮົາໃຫ້ທານທຳບຸຌ ແລະກິກຂຸທັ້ງຫລາຍກໍຈັກໄດ້ລາភ ທັ້ງເຮົາກໍຈະບໍ່ລຳບາກດ້ວຍບິຌฑບາຕ ດັ່ງນັ້ນ ທ່ານພຣະສຸທິນນ໌ຈຶ່ງເກັບງຳເສນາສນະ ຖືບາຕຣ໌ຈີວຣຫລີກໄປໂດຍມັຄຄາອັນຈະໄປສູ່ພຣະນຄຣເວສາລີ ທ່ຽວຈາຣິກໄປໂດຍລຳດັບ ເຖິງພຣະນຄຣເວສາລີແລ້ວ ຮູ້ວ່າ ທ່ານພຳນັກຢູ່ ໓ ກູຕາຄາຣສາລາ ປ່າມຫາວັນ ເຂຕພຣະນຄຣເວສາລີນັ້ນ.

ບັຣດາຌາຕິຂອງທ່ານພຣະສຸທິນນ໌ ໄດ້ຮູ້ຂ່າວວ່າ ພຣະສຸທິນນ໌ກລັບທບຸຕຣ໌ກັບມາສູ່ພຣະນຄຣເວສາລີແລ້ວ ຈຶ່ງນຳភັຕຕາຫາຣມີປະມາຌ ໖໐ ໝໍ້ໄປຖວາຍທ່ານພຣະສຸທິນນ໌ໆ ສລະភັຕຕາຫາຣປະມາຌ ໖໐ ໝໍ້ນັ້ນຖວາຍແກ່ກິກຂຸທັ້ງຫລາຍ ແລ້ວເຊົ້າວັນນັ້ນຫົ່ມອັນຕຣວາສົກຖືບາຕຣ໌ຈີວຣເຂົ້າໄປບິຌฑບາຕຍັງກລັນທຄາມ ທ່ຽວບິຌฑບາຕໄປຕາມລຳດັບຮ່ອມໃນກລັນທຄາມ ໃກ້ຈະເຖິງເຮືອນບິດາຂອງຕົນ ກໍພໍດີທາສີຂອງຌາຕິທ່ານພຣະສຸທິນນ໌ ກຳລັງມີຄວາມມຸ່ງໝາຍຈະເທຂນົມສົດທີ່ຄ້າງຄືນ ຈຶ່ງທ່ານພຣະສຸທິນນ໌ໄດ້ກ່າວຄຳນີ້ກັບນາງວ່າ ນ້ອງຌິງ ຖ້າຂອງນັ້ນມີອັນຈະຕ້ອງຖິ້ມເປັນຣົມມດາ ຂໍທ່ານຈົ່ງເຊັ່ງລົງໃນບາຕຣ໌ຂອງເຮົານີ້ເທີ້ນ ຂຌະທີ່ນາງກຳລັງເຊັ່ງຂນົມສົດທີ່ຄ້າງຄືນນັ້ນລົງໃນບາຕຣ໌ ນາງຈຳເຄົ້າມື ຕີນແລະສຽງຂອງພຣະສຸທິນນ໌ໄດ້ ຈຶ່ງຟ້າວເຂົ້າໄປຫາມາຣດາຂອງທ່ານພຣະສຸທິນນ໌ ພໍເຖິງແລ້ວໄດ້ກ່າວຄຳນີ້ກັບມາຣດາຂອງທ່ານວ່າ ຍາແມ່ຂ້ານ້ອຍ ໂປຼດຮູ້ ພຣະສຸທິນນ໌ບຸຕຣ໌ຍາແມ່ກັບມາແລ້ວຂ້ານ້ອຍ.

ແມ່ທາສີ ຖ້າເຈົ້າເວົ້າຈິງ ເຮົາຈະປົດເຈົ້າບໍ່ໃຫ້ເປັນທາສີ ມາຣດາທ່ານພຣະສຸທິນນ໌ກ່າວ.

ຂຌະທີ່ທ່ານພຣະສຸທິນນ໌ກຳລັງອາສັຍລະບຽງເຮືອນແຫ່ງນຶ່ງລັນຂນົມສົດທີ່ຄ້າງຄືນນັ້ນ ພໍດີບິດາຂອງທ່ານພຣະສຸທິນນ໌ເດີນກັບມາຈາກທີ່ທຳງານ ໄດ້ແລເຫັນທ່ານພຣະສຸທິນນ໌ກຳລັງອາສັຍລະບຽງເຮືອນແຫ່ງນຶ່ງລັນຂນົມສົດທີ່ຄ້າງຄືນນັ້ນຢູ່ ຈຶ່ງເດີນເຂົ້າໄປຫາທ່ານພຣະສຸທິນນ໌ ພໍເຖິງແລ້ວໄດ້ກ່າວຄຳນີ້ກັບທ່ານວ່າ ມີຢູ່ຫຼື ພໍ່ສຸທິນນ໌ ນີ້ພໍ່ຈັກລັນຂນົມສົດທີ່ຄ້າງຄືນ ພໍ່ສຸທິນນ໌ ພໍ່ຄວຣໄປເຮືອນຂອງຕົນບໍ່ແມ່ນບໍ.

ໂຍມ ເຮົາໄດ້ໄປສູ່ເຮືອນຂອງໂຍມແລ້ວ ຂນົມສົດທີ່ຄ້າງຄືນນີ້ ເຮົາໄດ້ມາແຕ່ເຮືອນຂອງໂຍມ ພຣະສຸທິນນ໌ຕອບ.

ທັນໃດນັ້ນ ບິດາຂອງທ່ານພຣະສຸທິນນ໌ຈັບແຂນທ່ານ ແລ້ວໄດ້ກ່າວຄຳນີ້ກັບທ່ານວ່າ ມາເທີ້ນພໍ່ສຸທິນນ໌ ເຮົາຈັກໄປເຮືອນກັນ.

ລຳດັບນັ້ນ ທ່ານພຣະສຸທິນນ໌ໄດ້ເດີນຕາມເຂົ້າໄປສູ່ເຮືອນບິດາຂອງຕົນ ພໍເຖິງແລ້ວນັ່ງເທິງອາສນະທີ່ເຂົາຈັດຖວາຍ ຈຶ່ງບິດາຂອງທ່ານໄດ້ກ່າວຄຳນີ້ກັບທ່ານວ່າ ຈົ່ງສັນເທີ້ນພໍ່ສຸທິນນ໌.

ຢ່າເລີຍໂຍມ ພັຕກິຈໃນວັນນີ້ ເຮົາເຮັດສຳເຣັຈແລ້ວ ພຣະສຸທິນນ໌ກ່າວຕອບ.

ບິດາອາຣາທນາວ່າ ພໍ່ສຸທິນນ໌ ຂໍພໍ່ຈົ່ງຮັບນິມົນຕ໌ສັນພັຕຕາຫາຣໃນມື້ອື່ນເຊົ້າເທີ້ນ.

ທ່ານພຣະສຸທິນນ໌ຮັບນິມົນຕ໌ໂດຍດຸນຫີພາພ ແລະແລ້ວລຸກຈາກອາສນະຫລີກໄປ.

ບິດາວິງວອນໃຫ້ສຶກ

[໑໗] ຄັ້ງນັ້ນແລ ມາຣດາຂອງທ່ານພຣະສຸທິນນ໌ສັ່ງໃຫ້ລາດທາພື້ນແຜ່ນດິນດ້ວຍໂຄມັຍສົດ ໃຫ້ຈັດທຳກອງຊັພຍ໌ໄວ້ສອງກອງ ຄືເງິນກອງ ໑ ທອງກອງ ໑ ເປັນກອງໃຫຍ່ ຈົນເຖິງບຸຣຸษຢືນຢູ່ຂ້າງນີ້ບໍ່ແລເຫັນບຸຣຸษຢືນຢູ່ຂ້າງນັ້ນ ບຸຣຸษຢືນຢູ່ຂ້າງນັ້ນກໍບໍ່ແລເຫັນບຸຣຸษຢືນຢູ່ຂ້າງນີ້ ໃຫ້ປິດກອງຊັພຍ໌ເຫລົ່ານັ້ນດ້ວຍລຳແພນ ໃຫ້ຈັດອາສນະໄວ້ໃນທ່າມກາງ ໃຫ້ແວດວົງດ້ວຍມ່ານ ສຳເຣັຈໂດຍລ່ວງຣາຕຣີນັ້ນແລ້ວເອີ້ນປຸຣາຓທຸຕິຢິກາຂອງທ່ານພຣະສຸທິນນ໌ມາສັ່ງວ່າ ລູກຜິງ ເພາະລູກສຸທິນນ໌ຈະມາ ເຈົ້າຈົ່ງແຕ່ງກາຍດ້ວຍເຄື່ອງປະດັບ ອັນຈະເປັນເຫຕຸໃຫ້ລູກສຸທິນນ໌ເກີດຄວາມມັກຮັກພໍໃຈ.

ຢ່າງນັ້ນຂ້ານ້ອຍ ນາງຮັບຄຳມາຣດາຂອງທ່ານພຣະສຸທິນນ໌.

໓ ເວລາເຊົ້າວັນນັ້ນແລ ທ່ານພຣະສຸທິນນ໌ທົ່ມອັນຕຣວາສົກ ຖືບາຕຣ໌ຈີວຣເຂົ້າໄປສູ່ເຮືອນບິດາຂອງຕົນ ແລ້ວນັ່ງເທິງອາສນະທີ່ເຂົາຈັດຖວາຍ.

ລຳດັບນັ້ນແລ ບິດາຂອງທ່ານພຣະສຸທິນນ໌ເຂົ້າໄປຫາທ່ານພຣະສຸທິນນ໌ ແລະແລ້ວໃຫ້ຄົນເປີດກອງຊັພຍ໌ເຫລົ່ານັ້ນອອກ ໄດ້ກ່າວຄຳນີ້ກັບທ່ານພຣະສຸທິນນ໌ວ່າ ພໍ່ສຸທິນນ໌ ນີ້ຊັພຍ໌ຂອງມາຣດາພໍ່ຊຶ່ງເປັນສິນເດີມຝ່າຍຜິງທີ່ໄດ້ມາທາງຝ່າຍມາຣດາ ສ່ວນຂອງບິດາຕ່າງຫາກ ສ່ວນຂອງປູ່ຕ່າງຫາກ ພໍ່ສຸທິນນ໌ ພໍ່ຈົ່ງກັບມາເປັນຄຣືຫັສຖ໌ ຈະໄດ້ໃຊ້ສອຍໂພຄສົມບັຕິແລະບຳເພັญບຸญ ມາເທີ້ນ ພໍ່ສຸທິນນ໌ ພໍ່ຈົ່ງກັບມາເປັນຄຣືຫັສຖ໌ ໃຊ້ສອຍໂພຄສົມບັຕິແລະບຳເພັญບຸญເທີ້ນ.

ໂຍມ ອາຕມາບໍ່ອາຈ ບໍ່ສາມາຖ ອາຕມາຍັງຍິນດີປະພຶຕພຣົຫ້ມຈັຣຍ໌ຢູ່ ພຣະສຸທິນນ໌ຕອບ.

ແມ້ເທື່ອທີ່ສອງ ບິດາຂອງທ່ານພຣະສຸທິນນ໌ກໍໄດ້ກ່າວຄຳນີ້ກັບທ່ານພຣະສຸທິນນ໌ວ່າ ພໍ່ສຸທິນນ໌ນີ້ຊັພຍ໌ຂອງມາຣດາພໍ່ ຊຶ່ງເປັນສິນເດີມຝ່າຍຜິງທີ່ໄດ້ມາທາງຝ່າຍມາຣດາ ສ່ວນຂອງບິດາຕ່າງຫາກ ສ່ວນຂອງປູ່ຕ່າງຫາກ ພໍ່ສຸທິນນ໌ ພໍ່ຄວຣກັບມາເປັນຄຣືຫັສຖ໌ ຈະໄດ້ໃຊ້ສອຍໂພຄສົມບັຕິແລະບຳເພັญບຸญມາເທີ້ນ ພໍ່ສຸທິນນ໌ ພໍ່ຈົ່ງກັບມາເປັນຄຣືຫັສຖ໌ ໃຊ້ສອຍໂພຄສົມບັຕິແລະບຳເພັญບຸญເທີ້ນ.

ໂຍມ ອາຕມາບໍ່ອາຈ ບໍ່ສາມາຖ ອາຕມາຍັງຍິນດີປະພຶຕພຣົຫ້ມຈັຣຍ໌ຢູ່ ພຣະສຸທິນນ໌ຕອບ.

ແມ້ເທື່ອທີ່ສາມ ບິດາຂອງພຣະສຸທິນນ໌ກໍໄດ້ກ່າວຄຳນີ້ກັບທ່ານພຣະສຸທິນນ໌ວ່າ ພໍ່ສຸທິນນ໌ ນີ້ ຊັພຍ໌ຂອງມາຣດາພໍ່ ຊຶ່ງເປັນສິນເດີມຝ່າຍຍິງທີ່ໄດ້ມາທາງຝ່າຍມາຣດາ ສ່ວນຂອງບິດາຕ່າງຫາກ ສ່ວນຂອງປູ່ຕ່າງຫາກ ພໍ່ສຸທິນນ໌ ພໍ່ຄວຣກັບມາເປັນຄຣືຫັສຖ໌ ຈະໄດ້ໃຊ້ສອຍໂພຄສົມບັຕິ ແລະບຳເພັນບຸຍມາເທີ້ນ ພໍ່ສຸທິນນ໌ ພໍ່ຈົ່ງກັບມາເປັນຄຣືຫັສຖ໌ ໃຊ້ສອຍໂພຄສົມບັຕິແລະບຳເພັນບຸຍເທີ້ນ.

ທ່ານພຣະສຸທິນນ໌ຕອບວ່າ ໂຍມ ອາຕມາຂໍເວົ້າກັບໂຍມແດ່ ຖ້າໂຍມບໍ່ຕັດຮອນ.

ບ. ເວົ້າເທີ້ນ ພໍ່ສຸທິນນ໌.

ສຸ. ໂຍມ ຖ້າເຊັ່ນນັ້ນ ໂຍມຈົ່ງສັ່ງໃຫ້ເຂົາທຳກະສອບປ່ານໃຫຍ່ໆ ບັຣຈຸເງິນແລະທອງໃຫ້ເຕັມບັຣທຸກກຽນໄປ ແລ້ວໃຫ້ຈົມລົງໃນກະແສນ້ຳທ່າມກາງແມ່ນ້ຳຄົງຄາ ຂໍ້ນັ້ນເພາະເຫຕຸໃດ ເພາະຄວາມຢ້ານກໍດີ ຄວາມຫວາດສຽວກໍດີ ຄວາມຂົນພອງສຍອງເກຼົ້າກໍດີ ການເຝົ້າຮັກສາກໍດີ ອັນມີຊັພຍ໌ນັ້ນເປັນເຫຕຸ ທີ່ຈັກເກີດແກ່ໂຍມນັ້ນ ຈະບໍ່ມີແກ່ໂຍມເລີຍ.

ເມື່ອທ່ານພຣະສຸທິນນ໌ກ່າວຢ່າງນີ້ແລ້ວ ບິດາຂອງທ່ານໄດ້ມີຄວາມບໍ່ພໍໃຈວ່າ ຈັ່ງໃດລູກສຸທິນນ໌ຈຶ່ງໄດ້ເວົ້າຢ່າງນີ້ ແລະແລ້ວໄດ້ເອີ້ນປຸຣາຓທຸຕິຢິກາຂອງທ່ານພຣະສຸທິນນ໌ມາບອກວ່າ ລູກຍິງ ເພາະເຈົ້າເປັນທີ່ຮັກ ເປັນທີ່ພໍໃຈ ບາງເທື່ອລູກສຸທິນນ໌ຈະເຮັດຕາມຄຳຂອງເຈົ້າແດ່.

ທັນໃດນັ້ນ ນາງໄດ້ຈັບຕີນທ່ານພຣະສຸທິນນ໌ຖາມວ່າ ຂ້າແຕ່ລູກນາຍ ນາງອັປສຣ ຜູ້ເປັນເຫຕຸໃຫ້ທ່ານປະພຶຕພຣົຫ໌ມຈັຣຍ໌ນັ້ນ ຊື່ແນວໃດ?

ນ້ອງຍິງ ຈັນບໍ່ໄດ້ປະພຶຕພຣົຫ໌ມຈັຣຍ໌ ເພາະເຫຕຸແຫ່ງນາງອັປສຣເລີຍ ພຣະສຸທິນນ໌ຕອບ.

ບັດດົລ ນາງນ້ອຍໃຈວ່າ ສຸທິນນ໌ລູກນາຍ ເອີ້ນເຮົາດ້ວຍຄຳເວົ້າວ່າ ນ້ອງຍິງ ໃນວັນນີ້ເປັນເທື່ອທຳອິດ ແລ້ວສລົບລົ້ມລົງໃນທີ່ນັ້ນເອງ.

ທ່ານພຣະສຸທິນນໄດ້ກ່າວຄຳນີ້ກັບບິດາວ່າ ໂຍມ ຖ້າໂພຊນະທີ່ຈະໃຫ້ມີຢູ່ ກໍຈົ່ງໃຫ້ເທີ້ນຢ່າຮົບກວນອາຕມາເລີຍ.

ຈັນເທີ້ນ ພໍ່ສຸທິນນ໌ ມາຣດາບິດາຂອງທ່ານພຣະສຸທິນນ໌ກ່າວດັ່ງນີ້ແລ້ວ ໄດ້ອັງຄາສທ່ານພຣະສຸທິນນ໌ດ້ວຍຂາທນິຍໂພຊນີຍາຫາຣອັນປະຓີຕດ້ວຍມືຂອງຕົນ ຈົນໃຫ້ຫ້າມພັຕຣ໌ ແລະແລ້ວມາຣດາຂອງທ່ານພຣະສຸທິນນໄດ້ກ່າວຄຳນີ້ກັບທ່ານພຣະສຸທິນນ໌ຜູ້ຈັນສຳເຮັຈ ລົດມືຈາກບາຕຣ໌ແລ້ວວ່າ ພໍ່ສຸທິນນ໌ຕະກຸລນີ້ມັ່ງຄັ່ງ ມີຊັພຍ໌ຫຼາຍ ມີໂພຄະຫຼາຍ ມີທອງແລະເງິນຫຼາຍ ມີເຄື່ອງອຸປກຣນ໌ທີ່ໜ້າຊື່ນໃຈຫຼາຍ ມີຂ້າວເປືອກເປັນຊັພຍາກຣຫຼາຍ ພໍ່ຄວຣກັບມາເປັນຄຣືຫັສຖ໌ ຈະໄດ້ໃຊ້ສອຍໂພຄສົມບັຕິແລະບຳເພັນບຸຍ ມາເທີ້ນ ພໍ່ສຸທິນນ໌ ພໍ່ຈົ່ງກັບມາເປັນຄຣືຫັສຖ໌ ໃຊ້ສອຍໂພຄສົມບັຕິແລະບຳເພັນບຸຍເທີ້ນ.

ໂຍມ ອາຕມາບໍ່ອາຈ ບໍ່ສາມາຖ ອາຕມາຍັງຍິນດີປະພຶຕພຣົຫ໌ມຈັຣຍ໌ຢູ່ ພຣະສຸທິນນ໌ຕອບ.

ແມ້ເທື່ອທີ່ສອງ ມາຣດາຂອງທ່ານພຣະສຸທິນນ໌ກໍໄດ້ກ່າວຄຳນີ້ກັບທ່ານພຣະສຸທິນນ໌ວ່າ ພໍ່ສຸທິນນ໌ ຕະກຸລນີ້ມັ່ງຄັ່ງ ມີຊັພຍ໌ຫຼາຍ ມີໂກຄະຫຼາຍ ມີທອງແລະເງິນຫຼາຍ ມີເຄື່ອງອຸປກຣນ໌ທີ່ໜ້າຊື່ນໃຈຫຼາຍ ມີຂ້າວເປືອກເປັນຊັພຍາກຣຫຼາຍ ພໍ່ຄວຣກັບມາເປັນຄຣິຫັສຖ໌ ຈະໄດ້ໃຊ້ສອຍໂກຄສົມບັຕິແລະບຳເພັຍ ບຸຍ ມາເທີ້ນ ພໍ່ສຸທິນນ໌ ພໍ່ຈົ່ງກັບມາເປັນຄຣິຫັສຖ໌ ໃຊ້ສອຍໂກຄສົມບັຕິແລະບຳເພັຍບຸຍເທີ້ນ.

ໂຍມ ອາຕມາບໍ່ອາຈ ບໍ່ສາມາຖ ອາຕມາຍັງຍິນດີປະພຶຕພຣົຫ໌ມຈັຣຍ໌ຢູ່ ພຣະສຸທິນນ໌ຕອບ.

ແມ້ເທື່ອທີ່ສາມ ມາຣດາຂອງທ່ານພຣະສຸທິນນ໌ກໍໄດ້ກ່າວຄຳນີ້ກັບທ່ານພຣະສຸທິນນ໌ວ່າ ພໍ່ສຸທິນນ໌ ຕະກຸລນີ້ມັ່ງຄັ່ງ ມີຊັພຍ໌ຫຼາຍ ມີໂກຄະຫຼາຍ ມີທອງແລະມີເງິນຫຼາຍ ມີເຄື່ອງອຸປກຣນ໌ທີ່ໜ້າຊື່ນໃຈຫຼາຍ ມີຂ້າວເປືອກເປັນຊັພຍາກຣຫຼາຍ ພໍ່ສຸທິນນ໌ ດັ່ງນັ້ນ ພໍ່ຈົ່ງໃຫ້ພືຊພັນສ໌ໄວ້ແດ່ ພວກເຈົ້າລິຈຈວິຈະໄດ້ ບໍ່ຣິບຊັພຍ໌ສົມບັຕິຂອງເຮົາ ອັນຫາບຸຕຣ໌ຜູ້ສືບຕະກຸລບໍ່ໄດ້ໄປເສັຽ.

ສຸ. ໂຍມ ຈະເພາະເຣື່ອງນີ້ອາຕມາອາຈທຳໄດ້.

ມ. ພໍ່ສຸທິນນ໌ ກໍເວລານີ້ພໍ່ພຳນັກຢູ່ທີ່ໃດ?

ທີ່ປ່າມຫາວັນຂ້ານ້ອຍ ທ່ານພຣະສຸທິນນ໌ຕອບ ແລະແລ້ວໄດ້ລຸກຈາກອາສນະຫລີກໄປ.

ເສພເມຖຸນສັມມ໌

[໑໗] ຫລັງຈາກນັ້ນ ມາຣດາຂອງທ່ານພຣະສຸທິນນ໌ສັ່ງກຳຊັບປຸຣາຓທຸຕິຢິກາຂອງທ່ານພຣະສຸທິນນ໌ ວ່າ ລູກຜົງ ຖ້າກະນັ້ນເມື່ອໃດເຈົ້າມີຣະດູ ຕ່ອມໂລຫິຕເກີດມີແກ່ເຈົ້າ ເມື່ອນັ້ນເຈົ້າຄວຣບອກແກ່ແມ່.

ນາງຮັບຄຳມາຣດາຂອງທ່ານພຣະສຸທິນນ໌ແລ້ວ ຕ່ອມາບໍ່ດົນ ນາງໄດ້ມີຣະດູ ຕ່ອມໂລຫິຕໄດ້ ເກີດຂຶ້ນແກ່ນາງ ນາງຈຶ່ງໄດ້ແຈ້ງແກ່ມາຣດາຂອງທ່ານພຣະສຸທິນນ໌ວ່າ ຂ້ານ້ອຍມີຣະດູ ຂ້ານ້ອຍ ຕ່ອມໂລຫິຕ ເກີດຂຶ້ນແກ່ຂ້ານ້ອຍແລ້ວ.

ມາຣດາຂອງທ່ານພຣະສຸທິນນ໌ກ່າວວ່າ ລູກຜົງ ຖ້າກະນັ້ນ ເຈົ້າຈົ່ງແຕ່ງຕົວດ້ວຍເຄື່ອງປະດັບ ອັນຈະເປັນເຫຕຸໃຫ້ລູກສຸທິນນ໌ເກີດຄວາມມັກຮັກພໍໃຈ.

ໂດ້ຍ! ຍາແມ່ ນາງຮັບຄຳມາຣດາຂອງທ່ານພຣະສຸທິນນ໌ແລ້ວ ຈຶ່ງມາຣດາພານາງເຂົ້າໄປຫາທ່ານ ພຣະສຸທິນນ໌ທີ່ປ່າມຫາວັນ ແລ້ວຣຳພັນວ່າພໍ່ສຸທິນນ໌ ຕະກຸລນີ້ມັ່ງຄັ່ງ ມີຊັພຍ໌ຫຼາຍ ມີໂກຄະຫຼາຍ ມີທອງ ແລະເງິນຫຼາຍ ມີເຄື່ອງອຸປກຣນ໌ທີ່ໜ້າຊື່ນໃຈຫຼາຍ ມີຂ້າວເປືອກເປັນຊັພຍາກຣຫຼາຍ ພໍ່ຄວຣກັບມາ ເປັນຄຣິຫັສຖ໌ ຈະໄດ້ໃຊ້ສອຍໂກຄສົມບັຕິແລະບຳເພັຍບຸຍ ມາເທີ້ນ ພໍ່ສຸທິນນ໌ ພໍ່ຈົ່ງກັບມາເປັນ ຄຣິຫັສຖ໌ ໃຊ້ສອຍໂກຄສົມບັຕິແລະບຳເພັຍບຸຍເທີ້ນ.

ໂຍມ ອາຕມາບໍ່ອາຈ ບໍ່ສາມາຖ ອາຕມາຍັງຍິນດີປະພຶຕພຣົຫ໌ມຈັຣຍ໌ຢູ່ ພຣະສຸທິນນ໌ຕອບ.

ແມ້ເທື່ອທີ່ສອງ ມາຣດາຂອງທ່ານພຣະສຸທິນນ໌ ກໍໄດ້ຣຳພັນວ່າ ພໍ່ສຸທິນນ໌ ຕະກຸລນີ້ມັ່ງຄັ່ງ ມີຊັພຍ໌ຫຼາຍ ມີໂກຄະຫຼາຍ ມີທອງແລະເງິນຫຼາຍ ມີເຄື່ອງອຸປກຣນ໌ທີ່ໜ້າຊື່ນໃຈຫຼາຍ ມີຂ້າວເປືອກເປັນຊັພຍາກຣຫຼາຍ ພໍ່ຄວຣກັບມາເປັນຄຣືຫັສຖ໌ ຈະໄດ້ໃຊ້ສອຍໂກຄສົມບັຕິແລະບຳເພັຍບຸນ ມາເທີ້ນພໍ່ສຸທິນນ໌ ພໍ່ຈົ່ງກັບມາເປັນຄຣືຫັສຖ໌ ໃຊ້ສອຍໂກຄສົມບັຕິແລະບຳເພັຍບຸນເທີ້ນ.

ໂຍມ ອາຕມາບໍ່ອາຈ ບໍ່ສາມາຖ ອາຕມາຍັງຍິນດີປະພຶຕພຣົຫ໌ມຈັຣຍ໌ຢູ່ ພຣະສຸທິນນ໌ຕອບ.

ແມ້ເທື່ອທີ່ສາມ ມາຣດາຂອງທ່ານພຣະສຸທິນນ໌ ກໍໄດ້ຣຳພັນວ່າ ພໍ່ສຸທິນນ໌ ຕະກຸລນີ້ມັ່ງຄັ່ງ ມີຊັພຍ໌ຫຼາຍ ມີໂກຄະຫຼາຍ ມີທອງແລະເງິນຫຼາຍ ມີເຄື່ອງອຸປກຣນ໌ທີ່ໜ້າຊື່ນໃຈຫຼາຍ ມີຂ້າວເປືອກເປັນຊັພຍາກຣຫຼາຍ ພໍ່ສຸທິນນ໌ ດັ່ງນັ້ນພໍ່ຈົ່ງໃຫ້ພືຊພັນສ໌ໄວ້ແດ່ ພວກເຈົ້າລິຈຈວິຈະໄດ້ບໍ່ຣິບຊັພຍ໌ສົມບັຕິຂອງເຮົາ ອັນຫາບຸຕຣ໌ຜູ້ສືບຕະກຸລບໍ່ໄດ້ໄປເສັຽເລີຍ.

ໂຍມ ຂໍ້ນີ້ອາຕມາອາຈທຳໄດ້ ທ່ານພຣະສຸທິນນ໌ຕອບແລ້ວຈູງແຂນປຸຣາຓທຸຕິຢິກາພາເຂົ້າປ່າມຫາວັນ ເປັນຜູ້ມີຄວາມເຫັນວ່າບໍ່ມີໂທษ ເພາະສິກຂາບົທຍັງບໍ່ໄດ້ຊົງບັນຍັຕິ ຈຶ່ງເສພເມຖຸນທັມມ໌ກັບປຸຣາຓທຸຕິຢິກາ ໓ ເທື່ອ ນາງໄດ້ຕັ້ງຄັຣພ໌ເພາະອັຊຊາຈາຣນັ້ນ.

ເທພເຈົ້າກະຈາຍສຽງ

[໑໗] ເຫລົ່າກຸມເທພກະຈາຍສຽງວ່າ ທ່ານຜູ້ຈເຣີນ ໂອ ກິກຂຸສົງຄ໌ ບໍ່ມີສນຽດບໍ່ມີໂທษ ພຣະສຸທິນນ໌ກລັນທບຸຕຣ໌ກໍ່ສນຽດຂື້ນແລ້ວ ກໍ່ໂທษຂື້ນແລ້ວ ເທພຊັ້ນຈາຕຸມຫາຣາຊ ໄດ້ສດັບສຽງເຫລົ່າກຸມເທພແລ້ວກະຈາຍສຽງຕໍ່ໄປ ເທພຊັ້ນດາວດຶງສ໌ ເທພຊັ້ນຍາມາ ເທພຊັ້ນດຸສິຕ ເທພຊັ້ນນິມມານຣດີ ເທພຊັ້ນປຣນິມມິຕວສວດີ ເທພທີ່ນັບເນື່ອງໃນຫມູ່ພຣົຫ໌ມໄດ້ສດັບສຽງແລ້ວກະຈາຍສຽງກັນຕໍ່ໆ ໄປວ່າ ທ່ານຜູ້ຈເຣີນ ໂອ ກິກຂຸສົງຄ໌ ບໍ່ມີສນຽດ ບໍ່ມີໂທษ ພຣະສຸທິນນ໌ກລັນທບຸຕຣ໌ກໍ່ສນຽດຂື້ນແລ້ວ ກໍ່ໂທษຂື້ນແລ້ວ ໂດຍທັນໃດນັ້ນ ບຶດນຶ່ງນັ້ນ ສຽງໄດ້ກະຈາຍຂື້ນໄປເຖິງພຣົຫ໌ມໂລກດ້ວຍອາການຢ່າງນີ້ແລ.

ສມັຍຕໍ່ມາ ປຸຣາຓທຸຕິຢິກາຂອງທ່ານພຣະສຸທິນນ໌ ອາສັຍຄວາມແກ່ແຫ່ງຄັຣພ໌ນັ້ນ ຄລອດບຸຕຣ໌ແລ້ວ ຈຶ່ງພວກສຫາຍຂອງທ່ານພຣະສຸທິນນ໌ໄດ້ຕັ້ງຊື່ທາຣົກນັ້ນວ່າ ພີຊກະ ຕັ້ງຊື່ປູຣາຓທຸຕິຢິກາຂອງທ່ານພຣະສຸທິນນ໌ວ່າ ພີຊກມາຕາ ຕັ້ງຊື່ທ່ານພຣະສຸທິນນ໌ວ່າ ພີຊກປິຕາ ກາຍຫລັງເຂົາທັ້ງສອງໄດ້ອອກຈາກເຮືອນບວຊເປັນບັຣພຊິຕ ເຮັດໃຫ້ແຈ້ງຊຶ່ງພຣະອຣຫັຕແລ້ວ.

ພຣະສຸທິນນ໌ເກີດວິປຜິສາຣ

[໑໘] ຄັ້ງນັ້ນ ຄວາມຣຳຄາຍ ຄວາມເດືອດຮ້ອນ ໄດ້ເກີດແກ່ທ່ານພຣະສຸທິນນ໌ວ່າ ບໍ່ແມ່ນລາກຂອງເຮົານໍ ລາກຂອງເຮົາບໍ່ມີນໍ ເຮົາໄດ້ຊົ່ວແລ້ວນໍ ເຮົາບໍ່ໄດ້ດີແລ້ວນໍ ເພາະເຮົາບວຊໃນ

ພຣະສັມມ໌ວິນັຍທີ່ພຣະຜູ້ມີພຣະກາຄຕຣັສໄວ້ດີຢ່າງນີ້ແລ້ວ ຍັງບໍ່ສາມາຖປະພຶຕພຣົຫ້ມຈັຣຍ໌ ໃຫ້ບໍຣິບູຣນ໌ບໍຣິສຸທທິ໌ໄດ້ຕລອດຊີວິຕ ເພາະຄວາມຣຳຄາຍນັ້ນແຫລະ ເພາະຄວາມເດືອດຮ້ອນນັ້ນແຫລະ ທ່ານໄດ້ຈອຍຜອມ ເສົ້າຫມອງ ມີຜິວພັຣຕກ່ຳ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວຟູດ້ວຍເອັນ ມີເຣື່ອງໃນໃຈ ມີໃຈຫົດຫູ່ ມີທຸກຂ໌ໂທມນັສ ມີວິປຜິສາຣ ຊົບເຊົາແລ້ວ.

ຈຶ່ງບັຣດາກິກຂຸທີ່ເປັນສຫາຍຂອງທ່ານພຣະສຸທິນນ໌ ໄດ້ກ່າວຄຳນີ້ກັບທ່ານພຣະສຸທິນນ໌ວ່າ ອາວຸໂສສຸທິນນ໌ ເມື່ອກ່ອນທ່ານເປັນຜູ້ມີຜິວພັຣຕ ມີອິນທຣີຍ໌ສມບູຣຕ໌ມີສີຫນ້າສົດໃສ ມີຈວິວັຣຕ໌ຜຸດຜ່ອງ ມີນ້ຳມີນວລ ບັດນີ້ ເບິ່ງເຈົ້າຈອຍຜອມ ເສົ້າຫມອງ ມີຜິວພັຣຕກ່ຳ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວຟູດ້ວຍເອັນ ມີເຣື່ອງໃນໃຈ ມີໃຈຫົດຫູ່ ມີທຸກຂ໌ໂທມນັສ ມີວິປຜິສາຣ ຊົບເຊົາຢູ່ ທ່ານຈະບໍ່ຍິນດີປະພຶຕພຣົຫ້ມຈັຣຍ໌ແລ້ວບໍ່?

ອາວຸໂສທັ້ງຫລາຍ ຄວາມຈິງ ບໍ່ແມ່ນວ່າຂ້ານ້ອຍຈະບໍ່ຍິນດີປະພຶຕພຣົຫ້ມຈັຣຍ໌ ພຣະສຸທິນນ໌ຄ້ານແລ້ວຖແລງຄວາມຈິງວ່າ ເພາະບາປກັມມ໌ທີ່ຂ້ານ້ອຍທຳໄວ້ມີຢູ່ ຂ້ານ້ອຍໄດ້ເສພເມຖຸນສັມມ໌ໃນປຸຣາຕທຸຕິຢິກາ ຂ້ານອັຍຈຶ່ງໄດ້ມີຄວາມຣຳຄາຍ ຄວາມເດືອດຮ້ອນວ່າ ບໍ່ແມ່ນລາກຂອງເຮົານໍ ລາກຂອງເຮົາບໍ່ມີນໍ ເຮົາໄດ້ຊົ່ວແລ້ວນໍ ເຮົາບໍ່ໄດ້ດີແລ້ວນໍ ເພາະເຮົາບວຊໃນພຣະສັມມ໌ວິນັຍທີ່ພຣະຜູ້ມີພຣະກາຄຕຣັສໄວ້ດີຢ່າງນີ້ແລ້ວ ຍັງບໍ່ສາມາຖປະພຶຕພຣົຫ້ມຈັຣຍ໌ໃຫ້ບໍຣິບູຣນ໌ບໍຣິສຸທທິ໌ໄດ້ຕລອດຊີວິຕ ດັ່ງນີ້.

ອາວຸໂສ ສຸທິນນ໌ ຈິງ ກາຣທີ່ທ່ານບວຊໃນພຣະສັມມ໌ວິນັຍທີ່ພຣະຜູ້ມີພຣະກາຄຕຣັສໄວ້ດີຢ່າງນີ້ແລ້ວ ຍັງບໍ່ສາມາຖປະພຶຕພຣົຫ້ມຈັຣຍ໌ໃຫ້ບໍຣິບູຣນ໌ບໍຣິສຸທທິ໌ໄດ້ຕລອດຊີວິຕນັ້ນ ພໍທີ່ທ່ານຈະຣຳຄາຍ ພໍທີ່ທ່ານຈະເດືອດຮ້ອນ.

ອາວຸໂສ ສັມມ໌ອັນພຣະຜູ້ມີພຣະກາຄຊົງສະແດງແລ້ວໂດຍອເນກປຣິຍາຍ ເພື່ອຄູາຍຄວາມກຳຫນັດ ບໍ່ແມ່ນເພື່ອມີຄວາມກຳຫນັດ ເພື່ອຄວາມພູາກ ບໍ່ແມ່ນເພື່ອຄວາມປະກອບ ເພື່ອຄວາມບໍ່ຖືມັ່ນ ບໍ່ແມ່ນເພື່ອມີຄວາມຖືມັ່ນ ບໍ່ແມ່ນບໍ? ເມື່ອສັມມ໌ຊື່ນັ້ນ ອັນພຣະຜູ້ມີພຣະກາຄຊົງສະແດງແລ້ວ ເພື່ອຄູາຍຄວາມກຳຫນັດ ທ່ານຍັງຈະຄິດເພື່ອມີຄວາມກຳຫນັດ ເມື່ອຊົງສະແດງເພື່ອຄວາມພູາກ ທ່ານຍັງຈັກຄິດເພື່ອຄວາມປະກອບ ເມື່ອຊົງສະແດງເພື່ອຄວາມບໍ່ຖືມັ່ນ ທ່ານຍັງຈັກຄິດເພື່ອມີຄວາມຖືມັ່ນ.

ອາວຸໂສ ສັມມ໌ອັນພຣະຜູ້ມີພຣະກາຄຊົງສະແດງແລ້ວໂດຍອເນກປຣິຍາຍ ເພື່ອເປັນທີ່ສຳຣອກແຫ່ງຣາຄະ ເພື່ອເປັນທີ່ສ່າງແຫ່ງຄວາມເມົາ ເພື່ອເປັນທີ່ດັບສູຍແຫ່ງຄວາມກະຫາຍ ເພື່ອເປັນທີ່ຫລຸດຖອນແຫ່ງອາລັຍ ເພື່ອເປັນທີ່ເຂົ້າໄປຕັດແຫ່ງວັຕຕະ ເພື່ອເປັນທີ່ສິ້ນແຫ່ງຕັຕຫາ ເພື່ອຄູາຍຄວາມກຳຫນັດ ເພື່ອຄວາມດັບທຸກຂ໌ ເພື່ອນິພພານບໍ່ແມ່ນບໍ?

ອາວຸໂສ ການລະກາມ ການກຳຫນົດຮູ້ຄວາມຫມາຍໃນກາມ ການກຳຈັດຄວາມກະຫາຍໃນກາມ ການເພີກຖອນຄວາມຕຶກອັນກ່ຽວດ້ວຍກາມ ການຣະງັບຄວາມກູັດກລຸ້ມເພາະກາມ ພຣະຜູ້ມີພຣະກາຄຕຣັສບອກໄວ້ແລ້ວໂດຍອເນກປຣິຍາຍ ບໍ່ແມ່ນບໍ?

ອາວຸໂສ ການກະທຳຂອງທ່ານນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ການກະທຳຂອງທ່ານນັ້ນ ເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເລື່ອມໃສແລ້ວ.

ກິກຂຸສຫາຍເຫລົ່ານັ້ນ ຕິຕຽນທ່ານພຣະສຸທິນນ໌ໂດຍອເນກປຣິຍາຍດັ່ງນີ້ແລ້ວ ໄດ້ຂາບທູລຄວາມນັ້ນແດ່ພຣະຜູ້ມີພຣະກາຄ.

ຊົງປະຊຸມສົງฆ໌ບັญญັຕິສິກຂາບົທ

[໔໐] ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຂຸສົງฆ໌ ໃນເພາະເຫຕຸເປັນມູລເຄົ້ານັ້ນ ໃນເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມທ່ານພຣະສຸທິນນ໌ວ່າ ດູຣາສຸທິນນ໌ ຂ່າວວ່າທ່ານເສພເມຖຸນທັມມ໌ ໃນປຸຣາຓທຸຕິຢິກາ ຈິງຫຼື?

ທ່ານພຣະສຸທິນນ໌ທູລຮັບວ່າ ຈິງ ພຣະພຸທທເຈົ້າຂ້ານ້ອຍນ້ອຍ.

ພຣະຜູ້ມີພຣະກາຄພຸທທເຈົ້າຊົງຕິຕຽນວ່າ ດູຣາໂມฆບຸຣຸษ ການກະທຳຂອງທ່ານນັ້ນ ບໍ່ເຫມາະບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຕະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ທ່ານບວຊໃນທັມມ໌ວິນັຍທີ່ເຮົາກ່າວໄວ້ດີຢ່າງນີ້ແລ້ວ ຈັ່ງໃດຈຶ່ງບໍ່ສາມາຖປະພຶຕພຣົຫ໌ມຈັຣຍ໌ໃຫ້ບໍຣິບູຣນ໌ບໍຣິສຸທທິ໌ໄດ້ຕລອດຊີວິຕລະ.

ດູຣາໂມฆບຸຣຸษ ທັມມ໌ອັນເຮົາສະແດງແລ້ວໂດຍອເນກປຣິຍາຍ ເພື່ອຄູາຍຄວາມກຳຫນັດ ບໍ່ແມ່ນເພື່ອມີຄວາມກຳຫນັດ ເພື່ອຄວາມພູາກ ບໍ່ແມ່ນເພື່ອຄວາມປະກອບ ເພື່ອຄວາມບໍ່ຖືມັ້ນ ບໍ່ແມ່ນເພື່ອມີຄວາມຖືມັ້ນບໍ່ແມ່ນບໍ? ເມື່ອທັມມ໌ຊື່ນັ້ນອັນເຮົາສະແດງແລ້ວ ເພື່ອຄູາຍຄວາມກຳຫນັດ ທ່ານຍັງຈັກຄິດເພື່ອມີຄວາມກຳຫນັດ ເຮົາສະແດງເພື່ອຄວາມພູາກ ທ່ານຍັງຈັກຄິດເພື່ອຄວາມປະກອບ ເຮົາສະແດງເພື່ອຄວາມບໍ່ຖືມັ້ນ ທ່ານຍັງຈັກຄິດເພື່ອມີຄວາມຖືມັ້ນ.

ດູຣາໂມฆບຸຣຸษ ທັມມ໌ອັນເຮົາສະແດງແລ້ວໂດຍອເນກປຣິຍາຍ ເພື່ອເປັນທີ່ສຳຣອກແຫ່ງຣາຄະ ເພື່ອເປັນທີ່ສ່າງແຫ່ງຄວາມເມົາ ເພື່ອເປັນທີ່ດັບສູລແຫ່ງຄວາມກະຫາຍ ເພື່ອເປັນທີ່ຫລຸດຖອນແຫ່ງອາລັຍ ເພື່ອເປັນທີ່ເຂົ້າໄປຕັດແຫ່ງວັຕຕະ ເພື່ອເປັນທີ່ສິ້ນແຫ່ງຕັณຫາ ເພື່ອເປັນທີ່ສຳຣອກແຫ່ງຕັณຫາ ເພື່ອເປັນທີ່ດັບແຫ່ງຕັณຫາ ເພື່ອອອກໄປຈາກຕັณຫາຊື່ວານະ ບໍ່ແມ່ນບໍ?

ດູຣາໂມฆບຸຣຸษ ภາຣລະภາມ ภາຣກຳໜົດຮູ້ຄວາມໝາຍໃນภາມ ภາຣກຳຈັດຄວາມກະຫາຍໃນภາມ ภາຣເພີກຖອນຄວາມຕຶກອັນກ່ຽວດ້ວຍภາມ ภາຣຣະງັບຄວາມກູັດກລຸ້ມເພາະภາມ ເຮົາບອກໄວ້ແລ້ວໂດຍອເນກປຣິຍາຍ ບໍ່ແມ່ນບໍ?

ດູຣາໂມฆບຸຣຸษ ອົງຄ໌ກຳເນີດ ອັນທ່ານສອດເຂົ້າໃນປາກອສໍຣະພິษທີ່ມີພິษຮ້າຍ ຍັງດີກວ່າ ອັນອົງຄ໌ກຳເນີດທີ່ທ່ານສອດເຂົ້າໃນອົງຄ໌ກຳເນີດຂອງມາຕຸຄາມບໍ່ດີເລີຍ ອົງຄ໌ກຳເນີດອັນທ່ານສອດເຂົ້າໃນປາກງູເຫົ່າຍັງດີກວ່າ ອັນອົງຄ໌ກຳເນີດທີ່ທ່ານສອດເຂົ້າໃນອົງຄ໌ກຳເນີດຂອງມາຕຸຄາມ ບໍ່ດີເລີຍ ອົງຄ໌ກຳເນີດອັນທ່ານສອດເຂົ້າໃນຂຸມຖ່ານທີ່ໄຟຕິດລຸກວາບໆຍັງດີກວ່າ ອັນອົງຄ໌ກຳເນີດທີ່ທ່ານສອດເຂົ້າໃນອົງຄ໌ກຳເນີດຂອງມາຕຸຄາມບໍ່ດີເລີຍ.

ຂໍ້ທີ່ເຮົາວ່າດີນັ້ນ ເພາະເຫຕຸໃດ?

ເພາະບຸຄຄົລຜູ້ສອດອົງຄ໌ກຳເນີດເຂົ້າໃນປາກອສໍຣະພິษເປັນຕົ້ນນັ້ນ ຄວຣເຖິງຄວາມຕາຍ ຫຼືຄວາມທຸກຂ໌ພຽງແຄ່ຕາຍ ຊຶ່ງມີภາຣກະທຳນັ້ນເປັນເຫຕຸ ແລະເພາະภາຣກະທຳນັ້ນເປັນປັຈຈັຍ ເບື້ອງໜ້າແຕ່ແຕກภາຍຕາຍໄປ ບໍ່ຄວຣເຂົ້າເຖິງອບາຍ ທຸຄຕິ ວິນິບາຕ ນຣົກ ສ່ວນບຸຄຄົລຜູ້ທຳภາຣສອດອົງຄ໌ກຳເນີດເຂົ້າໃນອົງຄ໌ກຳເນີດຂອງມາຕຸຄາມນັ້ນ ເບື້ອງໜ້າແຕ່ແຕກภາຍຕາຍໄປ ຄວຣເຂົ້າເຖິງອບາຍ ທຸຄຕິ ວິນິບາຕ ນຣົກ ຊຶ່ງມີภາຣກະທຳນີ້ເປັນເຫຕຸ.

ດູຣາໂມฆບຸຣຸษ ເມື່ອภາຣກະທຳນັ້ນ ມີໂທษຢູ່ ທ່ານຍັງຊື່ວ່າໄດ້ຕ້ອງອສັທັມມ໌ ອັນເປັນເຣື່ອງຂອງຊາວບ້ານ ເປັນມັຣຍາທຂອງຄົນຊັ້ນຕ່ຳ ອັນຊົ່ວທຍາບ ມີນ້ຳເປັນທີ່ສຸດ ມີໃນທີ່ລັບ ເປັນຂອງຄົນຄູ່ ອັນຄົນຄູ່ຄວຣຮ່ວມກັນເປັນໄປ ທ່ານເປັນຄົນທຳອິດທີ່ກະທຳອກຸສົລັມມ໌ ເປັນຫົວໜ້າຂອງຄົນເປັນອັນຫຼາຍ ภາຣກະທຳຂອງທ່ານນັ້ນບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ภາຣກະທຳຂອງທ່ານນັ້ນ ເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເລື່ອມໃສແລ້ວ.

ພຣະຜູ້ມີພຣະภາຄຊົງຕິຕຽນທ່ານພຣະສຸທິນນ໌ໂດຍອເນກປຣິຍາຍດັ່ງນີ້ແລ້ວ ຕຣັສໂທษແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດษ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຕຣັສຄຸຓແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາภາຣທີ່ໜ້າເລື່ອມໃສ ภາຣບໍ່ສະສົມ ภາຣປຣາຣົກຄວາມພຽຣ ໂດຍອເນກປຣິຍາຍ ຊົງກະທຳธັມມີກຖາທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເຫມາະສົມແກ່ເຣື່ອງນັ້ນ ແກ່ภິກษຸທັ້ງຫລາຍ ແລ້ວຮັບສັ່ງກັບภິກษຸທັ້ງຫລາຍວ່າ

ດູຣາภິກษຸທັ້ງຫລາຍ ເພາະເຫຕຸນັ້ນແລ ເຮົາຈັກບັญญັຕິສິກຂາບົທແກ່ภິກษຸທັ້ງຫລາຍ ອາສັຍອຳນາຈປະໂຍຊນ໌ ໑໐ ປະກາຣ ຄື ເພື່ອຄວາມຮັບວ່າດີແຫ່ງສົງฆ໌ ໑ ເພື່ອຄວາມສຳຣາญແຫ່ງສົງฆ໌ ໑

ເພື່ອຂົ່ມບຸຄຄົລຜູ້ເກີ້ຍາກ ໑ ເພື່ອຢູ່ສຳຣາລແຫ່ງກິກษุຜູ້ມີສີລເປັນທີ່ຮັກ ໑ ເພື່ອປ້ອງກັນອາສວະອັນຈະບັງເກີດໃນປັຈຈຸບັນ ໑ ເພື່ອກຳຈັດອາສວະອັນຈັກບັງເກີດໃນອນາຄົຕ ໑ ເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ໑ ເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໑ ເພື່ອຄວາມຕັ້ງມັ່ນແຫ່ງພຣະສັທັມມ໌ ໑ ເພື່ອຖືຕາມພຣະວິນັຍ ໑

ດູຣາກິກษุທັ້ງຫລາຍ ກໍແລພວກທ່ານຄວຣຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະປຖົມບັນລັຕິ

໑. ກໍກິກษุໃດເສພເມຖຸນັມມ໌ ເປັນປາຣາຊິກ ຫາສັງວາສບໍ່ໄດ້

ກໍສິກຂາບົທນີ້ ຍ່ອມເປັນອັນພຣະຜູ້ມີພຣະກາຄຊົງບັນລັຕິແລ້ວແກ່ກິກษุທັ້ງຫລາຍດ້ວຍປະການນີ້.

ສຸທິນນກາຫວາຣ ຈົບ

ເຣື່ອງລິງຕົວເມັຽ

[໘໑] ກໍໂດຍສມັຍນັ້ນແລ ກິກษุອົງຄ໌ນຶ່ງເອົາເຫຍື່ອລໍ່ລິງຕົວເມັຽໃນປ່າມຫາວັນ ເຂຕພຣະນຄຣເວສາລີ ແລ້ວເສພເມຖຸນັມມ໌ໃນລິງຕົວເມັຽນັ້ນສເມີ ພໍເວລາເຊົ້າ ກິກษุນັ້ນຫົ່ມອັນຕຣວາສົກແລ້ວຖືບາຕຣ໌ຈີວຣເຂົ້າໄປບິຕຫບາຕໃນພຣະນຄຣເວສາລີ

ຄັ້ງນັ້ນແລ ກິກษุຫລາຍອົງຄ໌ທ່ຽວຈາຣິກຕາມເສນາສນະ ເດີນຜ່ານເຂົ້າໄປທາງທີ່ຢູ່ຂອງກິກษุນັ້ນ ລິງຕົວເມັຽນັ້ນແລເຫັນກິກษุເຫລົ່ານັ້ນກຳລັງເດີນມາແຕ່ໄກ ແລະແລ້ວໄດ້ເຂົ້າໄປຫາກິກษุເຫລົ່ານັ້ນ ຍົກແອວແດ່ ໂກ່ງຫາງແດ່ ແອ່ນກົ້ນແດ່ ທຳນິມິຕແດ່ ເບື້ອງຫນ້າກິກษุເຫລົ່ານັ້ນ ຈຶ່ງກິກษุເຫລົ່ານັ້ນສັນນິษฐານວ່າ ກິກษุເຈົ້າຂອງຖິ່ນເສພເມຖຸນັມມ໌ໃນລິງຕົວເມັຽນີ້ແນ່ ບໍ່ຕ້ອງສົງສັຍ ແລ້ວລີ້ຢູ່ ໓ ທີ່ກຳບັງແຫ່ງນຶ່ງ.

ເມື່ອກິກษุເຈົ້າຂອງຖິ່ນທ່ຽວບິຕຫບາຕໃນພຣະນຄຣເວສາລີ ຖືບິຕຫບາຕກັບມາແລ້ວ ລິງຕົວເມັຽນັ້ນໄດ້ເຂົ້າໄປຫາ ພໍກິກษุເຈົ້າຂອງຖິ່ນລັນບິຕຫບາຕນັ້ນສ່ວນນຶ່ງແລ້ວ ໄດ້ໃຫ້ແກ່ມັນສ່ວນນຶ່ງ ເມື່ອມັນກິນອາຫາຣສ່ວນນັ້ນແລ້ວໄດ້ແອ່ນກົ້ນໃຫ້ ຈຶ່ງກິກษุນັ້ນເສພເມຖຸນັມມ໌ໃນມັນ.

ທັນໃດ ກິກษุເຫລົ່ານັ້ນໄດ້ກ່າວກັບກິກษุນັ້ນວ່າ ອາວຸໂສ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວບໍ່ແມ່ນບໍ ເຫຕຸໃດ ທ່ານຈຶ່ງໄດ້ເສພເມຖຸນັມມ໌ໃນລິງຕົວເມັຽນີ້ລະ?

ຈິງຂ້ານ້ອຍ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ກິກษุນັ້ນສາຣະກາພແລ້ວຄ້ານວ່າ ແຕ່ພຣະບັນລັຕິນັ້ນຈະເພາະລົງມນຸษย໌ ບໍ່ກ່ຽວເຖິງສັຕວ໌ດິຣັຈສານຕົວເມັຽ.

ອາວຸໂສ ພຣະບັນລັຕິນັ້ນ ຍ່ອມເປັນເຫມືອນກັນທັ້ງນັ້ນບໍ່ແມ່ນບໍ? ການກະທຳຂອງທ່ານນັ້ນບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຓະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ທ່ານບໍ່ບວຊໃນພຣະຮັມມ໌ວິນັຍທີ່ພຣະຜູ້ມີພຣະພາຄຕຣັສໄວ້ດີຢ່າງນີ້ແລ້ວ ຈັ່ງໃດຈຶ່ງບໍ່ສາມາຖປະພຶຕພຣົຫ໌ມຈັຣຍ໌ໃຫ້ບໍຣິບູຣຓ໌ບໍຣິສຸທຮ໌ໄດ້ຕລອດຊີວິຕລະ.

ເຣື່ອງເປືອຍກາຍ

[໕໒] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວ ເປືອຍກາຍເສພເມຖຸນສັມມ໌ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງປອມເປັນເດັຽຣຖີຍ໌ ໗ ເຣື່ອງ

[໕໓] ໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວນຸ່ງ**ຄາກຼອງ**ເສພເມຖຸນສັມມ໌ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທ ໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີ ພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໒. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວນຸ່ງ ເປືອກໄມ້ສານເສພເມຖຸນສັມມ໌ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທ ໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີ ພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

---

[5] **ຄາກຼອງ** ເຄື່ອງປົກປິດຮ່າງກາຍທີ່ເຮັດດ້ວຍ ຫຍ້າ ຫຼືເປືອກໄມ້

໓. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວນຸ່ງໄມ້ສານເສພເມຖຸນສັມມ໌ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໔. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວນຸ່ງຜ້າກັມພົລທຳດ້ວຍເສັ້ນຜົມເສພເມຖຸນສັມມ໌ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວນຸ່ງຜ້າກັມພົລທຳດ້ວຍຂົນຫາງສັຕວ໌ເສພເມຖຸນສັມມ໌ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທ່ານຕ້ອງອາບັຕິປາຣາຊິກແລ້ວ

໖. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວນຸ່ງຜ້າທຳດ້ວຍຂົນປີກນົກເຄົ້າເສພເມຖຸນສັມມ໌ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໗. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວນຸ່ງໜັງເສືອເສພເມຖຸນສັມມ໌ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງເດັກລິງ

[໕໔] ກໍໂດຍສມັຍນັ້ນແລ ກິກຂຸຜູ້ຖືທ່ຽວບິຕຑບາຕເປັນວັຕຣ໌ອົງຄ໌ນຶ່ງ ເຫັນເດັກລິງນອນຢູ່ເທິງຕັ່ງ ເກີດຄວາມກຳໜັດ ຈຶ່ງສອດນີ້ວໂປ້ມືເຂົ້າໄປໃນອົງຄ໌ກຳເນີດເດັກລິງໆ ນັ້ນຕາຍ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຆາທິເສສ.

ເຣື່ອງກິກຂຸຕີຊື່ອຸປປົລວັຕຕາ

[໕໕] ກໍໂດຍສມັຍນັ້ນແລ ມາຕົພຄົນນຶ່ງມີຈິຕປຜົພັທທ໌ໃນກິກຂຸຕີ ຊື່ອຸປປົລວັຕຕາ ເມື່ອກິກຂຸຕີອຸປປົລວັຕຕາ ເຂົ້າໄປສູ່ບ້ານເພື່ອບິຕທບາຕ ຈຶ່ງເຂົ້າໄປລີ້ຢູ່ໃນກຸຜົ ເວລາປັຈສາກັຕຣ໌ກິກຂຸຕີອຸປປົລວັຕຕາກັບຈາກບິຕທບາຕ ລ້າງຕີນແລ້ວເຂົ້າກຸຜົນັ່ງເທິງຕຽງ ມາຕົພນັ້ນຈຶ່ງເຂົ້າປູກປລໍ້າປະທຸສຮ້າຍກິກຂຸຕີອຸປປົລວັຕຕາ ນາງຈຶ່ງແຈ້ງເຫຕຸນັ້ນແກ່ກິກຂຸຕີທັ້ງຫລາຍໆ ໄດ້ແຈ້ງເຣື່ອງນັ້ນແກ່ກິກຂຸທັ້ງຫລາຍໆ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸຕີຜູ້ບໍ່ຍິນດີ ບໍ່ຕ້ອງອາບັຕິ.

ເຣື່ອງເພສກັບ ໘ ເຣື່ອງ

[໕໖] ໑. ກໍໂດຍສມັຍນັ້ນແລ ເພສລຶງປູາກົຕແກ່ກິກຂຸອົງຄ໌ນຶ່ງ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕອຸປັຊຊາຍ໌ເດີມນັ້ນແຫລະ ອຸປສົມບົທເດີມນັ້ນແຫລະ ພັຣສາກໍເຫລົ່ານັ້ນ ແລະໃຫ້ຢູ່ຮ່ວມກັບກິກຂຸຕີທັ້ງຫລາຍ ອາບັຕິເຫລົ່າໃດຂອງກິກຂຸທັ້ງຫລາຍທີ່ທົ່ວໄປກັບກິກຂຸຕີທັ້ງຫລາຍ ເຮົາອນຸຍາຕໃຫ້ປົງອາບັຕິເຫລົ່ານັ້ນໃນສຳນັກກິກຂຸຕີທັ້ງຫລາຍ ອາບັຕິເຫລົ່າໃດຂອງກິກຂຸທັ້ງຫລາຍທີ່ບໍ່ທົ່ວໄປກັບກິກຂຸຕີທັ້ງຫລາຍ ບໍ່ຕ້ອງອາບັຕິເພາະອາບັຕິເຫລົ່ານັ້ນ

໘. ກໍໂດຍສມັຍນັ້ນແລ ເພສຊາຍປູາກົຕແກ່ກິກຂຸຕີອົງຄ໌ນຶ່ງ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕອຸປັຊຊາຍ໌ເດີມນັ້ນແຫລະອຸປສົມບົທເດີມນັ້ນແຫລະ ພັຣສາກໍເຫລົ່ານັ້ນ ແລະໃຫ້ຢູ່ຮ່ວມກັບກິກຂຸທັ້ງຫລາຍ ອາບັຕິເຫລົ່າໃດຂອງກິກຂຸຕີທັ້ງຫລາຍທີ່ທົ່ວໄປກັບກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ປົງອາບັຕິເຫລົ່ານັ້ນ ໃນສຳນັກກິກຂຸທັ້ງຫລາຍ ອາບັຕິເຫລົ່າໃດຂອງກິກຂຸຕີທັ້ງຫລາຍທີ່ບໍ່ທົ່ວໄປກັບກິກຂຸທັ້ງຫລາຍ ບໍ່ຕ້ອງອາບັຕິເພາະອາບັຕິເຫລົ່ານັ້ນ.

ເຣື່ອງມາຣດາ

[໕໗] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວເສພເມຖຸນສັມມ໌ໃນມາຣດາ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັລລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງທິດາ

ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວເສພ-ເມຖຸນສັມມ໌ໃນທິດາ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັລລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງ

ອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງອ້າຍນ້ອງຜິງ

ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ແລ້ວເສພ-ເມຖຸນສັມມ໌ໃນອ້າຍນ້ອງຜິງ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງພັຣຍາ

ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງເສພເມຖຸນສັມມ໌ໃນພັຣຍາເກົ່າ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງພິກຂຸມີຫລັງອ່ອນ

[໕໗] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງມີຫລັງອ່ອນ ທ່ານຖືກຄວາມກະສັນບີບຄັ້ນແລ້ວ ໄດ້ອົມອົງຄ໌ກຳເນີດຂອງຕົນດ້ວຍປາກ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງພິກຂຸມີອົງຄ໌ກຳເນີດຍາວ

ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງມີອົງຄ໌ກຳເນີດຍາວ ທ່ານຖືກຄວາມກະສັນບີບຄັ້ນແລ້ວ ໄດ້ສອດອົງຄ໌ກຳເນີດຂອງຕົນເຂົ້າສູ່ວັຈຈມັຄຄ໌ຂອງຕົນ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງແຜລ ໔ ເຣື່ອງ

[໕໘] ໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງໄດ້ພົບສົພ ແລະທີ່ສົພນັ້ນມີແຜລຢູ່ໃກ້ອົງຄ໌ກຳເນີດ ພິກຂຸນັ້ນຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ຈຶ່ງສອດອົງຄ໌ກຳເນີດຂອງຕົນ ເຂົ້າໃນ

ອົງຄ໌ກຳເນີດຂອງສົພ ແລ້ວຖອນອອກທາງແຜລ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຊຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໘. ກໍໂດຍສມັຍນັ້ນແລ ກິກຊຸອົງຄ໌ນຶ່ງໄດ້ພົບສົພ ແລະທີ່ສົພນັ້ນມີແຜລຢູ່ໃກ້ອົງຄ໌ກຳເນີດ ກິກຊຸນັ້ນຄິດວ່າ ເຮົາຈະບໍ່ຕ້ອງອາບັຕິດ້ວຍວິທີຢ່າງນີ້ ຈຶ່ງສອດອົງຄ໌ກຳເນີດຂອງຕົນເຂົ້າໃນແຜລ ແລ້ວຖອນອອກທາງອົງຄ໌ກຳເນີດຂອງສົພ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຊຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງຮູປປັ້ນ

[໖໐] ກໍໂດຍສມັຍນັ້ນແລ ກິກຊຸອົງຄ໌ນຶ່ງມີຄວາມກຳຫນັດ ໄດ້ຖືກຕ້ອງນິມິຕແຫ່ງຮູປປັ້ນດ້ວຍອົງຄ໌ກຳເນີດ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຊຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ.

ເຣື່ອງຕຸ໊ກຕາໄມ້

ກໍໂດຍສມັຍນັ້ນແລ ກິກຊຸອົງຄ໌ນຶ່ງມີຄວາມກຳຫນັດ ໄດ້ຖືກຕ້ອງນິມິຕແຫ່ງຕຸ໊ກຕາໄມ້ດ້ວຍອົງຄ໌ກຳເນີດ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຊຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ.

ເຣື່ອງກິກຊຸຊື່ສຸນທຣະ

[໖໑] ກໍໂດຍສມັຍນັ້ນແລ ກິກຊຸຊື່ສຸນທຣະ ບວຊຈາກກຸງຣາຊຄຣຶຫ໌ ແລ້ວເດີນໄປຕາມຖນົນ ສຕຣີຜູ້ນຶ່ງເຫັນທ່ານແລ້ວກ່າວວ່າ ທ່ານຂ້ານ້ອຍ ນິມົນຕ໌ຫຍຸດຢ່າຟ້າວກ່ອນ ຂ້ານ້ອຍຈັກໄຫວ້ ນາງໄຫວ້ພ້ອມທັງເລີກຜ້າອັນຕຣວາສົກຂຶ້ນແລ້ວ ໄດ້ອົມອົງຄ໌ກຳເນີດດ້ວຍປາກ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າຖາມ ທ່ານຍິນດີຫຼື?

ภิ. ຂ້າພຣະພຸທຣເຈົ້າບໍ່ຍິນດີ ພຣະພຸທຣເຈົ້າຂ້ານ້ອຍນ້ອຍ

ภ. ດູຣາພິກຂຸ ພິກຂຸຜູ້ບໍ່ຍິນດີ ບໍ່ຕ້ອງອາບັຕິ.

ເຣື່ອງສຕຣີ ๔ ເຣື່ອງ

[໖໔] ๑. ກໍໂດຍສມັຍນັ້ນແລ ສຕຣີຜູ້ນຶ່ງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ພິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ສຕຣີນັ້ນແນະນຳວ່າ ນິມົນຕ໌ມາເທີ້ນຂ້ານ້ອຍ ຂ້ານ້ອຍຈັກພຍາຍາມເອງ ທ່ານບໍ່ຕ້ອງພຍາຍາມ ໂດຍວິຣີນີ້ອາບັຕິຈະບໍ່ມີແກ່ທ່ານ

ພິກຂຸນັ້ນໄດ້ທຳຢ່າງນັ້ນແລ້ວ ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໔. ກໍໂດຍສມັຍນັ້ນແລ ສຕຣີຜູ້ນຶ່ງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ພິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ສຕຣີນັ້ນແນະນຳວ່າ ນິມົນຕ໌ມາເທີ້ນຂ້ານ້ອຍ ທ່ານຈົ່ງພຍາຍາມເອງ ຂ້ານ້ອຍຈະບໍ່ພຍາຍາມ ໂດຍວິຣີນີ້ອາບັຕິຈະບໍ່ມີແກ່ທ່ານ

ພິກຂຸນັ້ນໄດ້ທຳຢ່າງນັ້ນແລ້ວ ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໖. ກໍໂດຍສມັຍນັ້ນແລ ສຕຣີຜູ້ນຶ່ງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ພິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ສຕຣີນັ້ນແນະນຳວ່າ ນິມົນຕ໌ມາເທີ້ນຂ້ານ້ອຍ ທ່ານຈົ່ງພຍາຍາມພາຍໃນ ແລ້ວປ່ອຍ**ສຸກກະ**[6]ພາຍນອກ ໂດຍວິຣີນີ້ອາບັຕິຈະບໍ່ມີແກ່ທ່ານ

---

[6] **ສຸກກະ** ນ້ຳກາມ, ນ້ຳອສຸຈິ

ກິກບຸນັ້ນໄດ້ທຳຢ່າງນັ້ນແລ້ວ ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກບຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໔. ກໍໂດຍສມັຍນັ້ນແລ ສຕຣີຜູ້ນຶ່ງພົບກິກບຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພ ເມຖຸນສັມມ໌ເທີ້ນ

ກິກບຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ກາຣເຣື່ອງນີ້ບໍ່ຄວຣ

ສຕຣີນັ້ນແນະນຳວ່າ ນິມົນຕ໌ມາເທີ້ນຂ້ານ້ອຍ ທ່ານຈົງພຍາຍາມກາຍນອກ ແລ້ວປ່ອຍສຸກກະ ກາຍໃນ ໂດຍວິທີນີ້ອາບັຕິຈະບໍ່ມີແກ່ທ່ານ

ກິກບຸນັ້ນໄດ້ທຳຢ່າງນັ້ນແລ້ວ ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທ ໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີ ພຣະກາຄຕຣັສວ່າ ດູຣາກິກບຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງປ່າຊ້າ ໕ ເຣື່ອງ

[໓໙] ໑. ກໍໂດຍສມັຍນັ້ນແລ ກິກບຸອົງຄ໌ນຶ່ງໄປປ່າຊ້າ ເຫັນສົພຊຶ່ງຍັງບໍ່ຖືກສັຕວ໌ກັດ ໄດ້ເສພ ເມຖຸນສັມມ໌ໃນສົພນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງ ອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກບຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໒. ກໍໂດຍສມັຍນັ້ນແລ ກິກບຸອົງຄ໌ນຶ່ງໄປປ່າຊ້າ ເຫັນສົພຊຶ່ງຍັງບໍ່ຖືກສັຕວ໌ກັດໂດຍ ໄດ້ເສພ ເມຖຸນສັມມ໌ໃນສົພນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງ ອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກບຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໓. ກໍໂດຍສມັຍນັ້ນແລ ກິກບຸອົງຄ໌ນຶ່ງໄປປ່າຊ້າ ເຫັນສົພຊຶ່ງຖືກສັຕວ໌ກັດສ່ວນຫຼາຍ ໄດ້ເສພ ເມຖຸນສັມມ໌ໃນສົພນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງ ອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກບຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

໔. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງໄປປ່າຊ້າ ເຫັນສົພຊຶ່ງມີຫົວຂາດ ໄດ້ສອດອົງຄ໌ກຳເນີດເຂົ້າໄປກະທົບໃນປາກທີ່ອ້າ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແຫ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໕. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງໄປປ່າຊ້າ ເຫັນສົພຊຶ່ງມີຫົວຂາດ ໄດ້ສອດອົງຄ໌ກຳເນີດເຂົ້າໄປໃນປາກທີ່ອ້າ ບໍ່ໃຫ້ກະທົບ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແຫ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ.

ເຣື່ອງກະດູກ

ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງມີຈິຕປຜິພັທທ໌ໃນສຕຣີຜູ້ນຶ່ງ ສຕຣີນັ້ນເຖິງແກ່ກັມມ໌ແລ້ວເຂົາຖິ້ມໄວ້ໃນປ່າຊ້າ ກະດູກເຫຼື່ອນກຼີ້ນ ພາຍຫລັງພິກຂຸນັ້ນໄປປ່າຊ້າ ເກັບກະດູກຄຸມກັນເຂົ້າແລ້ວຈົດອົງຄ໌ກຳເນີດລົງທີ່ນິມິຕ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແຫ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ.

ເຣື່ອງນາຄຕົວເມັຽ

[໖໔] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງເສພເມຖຸນສັມມ໌ໃນນາຄຕົວເມັຽ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແລ້ວບໍ່ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງນາງຍັກນິຕີ

ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງເສພເມຖຸນສັມມ໌ໃນນາງຍັກນິຕີ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແຫ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງລິງເປຕ

ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງເສພເມຖຸນສັມມ໌ໃນລິງເປຕ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັຌລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງບັຒເຫາະກ໌

ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງເສພເມຖຸນສັມມ໌ໃນບັຒເຫາະກ໌ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັຌລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງກິກຂຸມີອິນທຣີຍ໌ພິກາຣ

[໖໕] ໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງມີອິນທຣີຍ໌ພິກາຣ ທ່ານຄິດວ່າ ເຮົາບໍ່ຮູ້ສຶກສຸຂຫຼື ທຸກຂ໌ ອາບັຕິຈະບໍ່ມີແກ່ເຮົາ ຈຶ່ງເສພເມຖຸນສັມມ໌ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັຌລັຕິ ສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງແຈ້ງເຣື່ອງນັ້ນແກ່ກິກຂຸທັ້ງຫລາຍໆ ຈຶ່ງ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ໂມຄບຸຣຸຍນັ້ນ ຮູ້ສຶກກໍຕາມ ບໍ່ຮູ້ສຶກກໍຕາມ ຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງຈັບຕ້ອງ

[໖໖] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຄິດວ່າ ເຮົາຈັກເສພເມຖຸນສັມມ໌ໃນສຕຣີ ພໍຈັບຕ້ອງ ຕົວເຂົ້າເທົ່ານັ້ນ ກໍເກີດຄວາມກິນແໜງ ທ່ານໄດ້ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັຌລັຕິສິກຂາບົທ ໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີ ພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ.

ເຣື່ອງພຣະອຣຫັນຕ໌ເມືອງກັທທິຍະຈຳວັດຫລັບ

[໖໗] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງ ຢູ່ໃນທີ່ພັກກາງວັນໃນປ່າຊາຕິຍາວັນ ແຂວງເມືອງ ກັທທິຍະ ຈຳວັດຫລັບຢູ່ ອວັຍວະໃຫຍ່ນ້ອຍຂອງກິກຂຸນັ້ນຖືກລົມຣຳເພີຍໃຫ້ຕຶງຕົວ ສຕຣີຜູ້ນຶ່ງພົບເຂົ້າແລ້ວ ໄດ້ນັ່ງຄຣ່ອມອົງຄ໌ກຳເນີດ ກະທຳກາຣພໍແກ່ຄວາມປະສົງຄ໌ ແລ້ວຫລີກໄປ ກິກຂຸເຫັນອົງຄ໌ກຳເນີດ

ເປິະເປື້ອນ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ອົງຄ໌ກຳເນີດເປັນອວັຍວະໃຊ້ການໄດ້ດ້ວຍອາການ ໕ ຢ່າງ ຄື ກຳໜັດ ໑ ປວດອຸຈຈາຣະ ໑ ປວດປັສສາວະ ໑ ຖືກລົມຣຳເພີຍ ໑ ຖືກບຸ້ງຂົນ ໑ ດູຣາກິກຂຸທັ້ງຫລາຍ ອົງຄ໌ກຳເນີດເປັນອວັຍວະໃຊ້ການໄດ້ ດ້ວຍອາການ ໕ ຢ່າງນີ້ແລ ກິກຂຸທັ້ງຫລາຍ ອົງຄ໌ກຳເນີດຂອງກິກຂຸນັ້ນ ຈະໄດ້ເປັນອວັຍວະໃຊ້ການໄດ້ ດ້ວຍຄວາມກຳໜັດໃດ ຂໍ້ນັ້ນບໍ່ແມ່ນຖານະ ບໍ່ແມ່ນໂອກາສ ເພາະກິກຂຸນັ້ນເປັນອຣຫັນຕ໌ ກິກຂຸນັ້ນບໍ່ຕ້ອງອາບັຕິ.

ເຣື່ອງກິກຂຸເມືອງສາວັຕຖີ ໔ ເຣື່ອງ

[໖໘] ໑. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງ ຢູ່ໃນທີ່ພັກກາງວັນໃນປ່າອັນธວັນ ແຂວງ ເມືອງສາວັຕຖີ ຈຳວັດຫລັບຢູ່ ສຕຣີລ້ຽງງົວຄົນນຶ່ງພົບເຂົ້າ ຈຶ່ງນັ່ງຄຣ່ອມອົງຄ໌ກຳເນີດ ກິກຂຸນັ້ນຍິນດີກິຣິຍາ ທີ່ເຂົ້າໄປ ຍິນດີກິຣິຍາທີ່ເຂົ້າໄປເຖິງທີ່ແລ້ວ ຍິນດີກິຣິຍາທີ່ຫຍຸດຢູ່ ຍິນດີກິຣິຍາທີ່ຖອນອອກ ແລ້ວມີຄວາມຢ້ານ ບາປ

ວ່າ ພຣະຜູ້ມີພຣະກາຄຊົງບັญຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແລ້ວບໍ່ຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໒. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຢູ່ໃນທີ່ພັກກາງວັນ ໃນປ່າອັນธວັນ ແຂວງເມືອງສາວັຕຖີ ຈຳວັດຫລັບຢູ່ ສຕຣີລ້ຽງແພະຄົນນຶ່ງພົບເຂົ້າ ຈຶ່ງນັ່ງຄຣ່ອມອົງຄ໌ກຳເນີດ ກິກຂຸນັ້ນຍິນດີກິຣິຍາທີ່ເຂົ້າໄປ ຍິນດີກິຣິຍາທີ່ເຂົ້າໄປເຖິງແລ້ວ ຍິນດີກິຣິຍາທີ່ຫຍຸດຢູ່ ຍິນດີກິຣິຍາທີ່ຖອນອອກ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັญຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໓. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຢູ່ໃນທີ່ພັກກາງວັນ ໃນປ່າອັນธວັນ ແຂວງເມືອງສາວັຕຖີ ຈຳວັດຫລັບຢູ່ ສຕຣີຫາຟືນຄົນນຶ່ງພົບເຂົ້າ ຈຶ່ງນັ່ງຄຣ່ອມອົງຄ໌ກຳເນີດ ກິກຂຸນັ້ນຍິນດີກິຣິຍາທີ່ບໍ່ພໍໃຈວ່າ ເຂົ້າໄປ ຍິນດີກິຣິຍາທີ່ເຂົ້າໄປເຖິງທີ່ແລ້ວ ຍິນດີກິຣິຍາທີ່ຫຍຸດຢູ່ ຍິນດີກິຣິຍາທີ່ຖອນອອກ ແລ້ວມີຄວາມ ພຣະຜູ້ມີພຣະກາຄຊົງບັญຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໔. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຢູ່ໃນທີ່ພັກກາງວັນ ໃນປ່າອັນธວັນ ແຂວງເມືອງ ສາວັຕຖີ ຈຳວັດຫລັບຢູ່ ສຕຣີຂົນໂຄມັຍຄົນນຶ່ງພົບເຂົ້າ ຈຶ່ງນັ່ງຄຣ່ອມອົງຄ໌ກຳເນີດ ກິກຂຸນັ້ນຍິນດີກິຣິຍາ ທີ່ເຂົ້າໄປ ຍິນດີກິຣິຍາທີ່ເຂົ້າໄປເຖິງທີ່ແລ້ວ ຍິນດີກິຣິຍາທີ່ຫຍຸດຢູ່ ຍິນດີກິຣິຍາທີ່ຖອນອອກ ແລ້ວມີຄວາມ ບໍ່ພໍໃຈວ່າ ພຣະຜູ້ມີພຣະກາຄຊົງບັญຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແລ້ວບໍ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິ ປາຣາຊິກແລ້ວ.

ເຣື່ອງກິກຊຸຊາວມັລລະເມືອງເວສາລີ ໓ ເຣື່ອງ

[໓໙] ໑. ກໍໂດຍສມັຍນັ້ນແລ ກິກຊຸອົງຄ໌ນຶ່ງຢູ່ໃນທີ່ພັກກາງວັນ ໃນປ່າມຫາວັນ ແຂວງເມືອງເວສາລີ ຈຳວັດຫລັບຢູ່ ສຕຣີຄົນນຶ່ງພົບເຂົ້າ ຈຶ່ງນັ່ງຄຣ່ອມອົງຄ໌ກຳເນີດ ກະທຳການພໍແກ່ຄວາມປະສົງຄ໌ ແລ້ວຢືນຫົວເຣາະຢູ່ໃກ້ໆ ກິກຊຸນັ້ນຕື່ນຂຶ້ນແລ້ວໄດ້ຖາມສຕຣີນັ້ນວ່າ ນີ້ເປັນການກະທຳຂອງທ່ານບໍ່?

ສຕຣີນັ້ນບອກວ່າ ຂ້ານ້ອຍ ເປັນການກະທຳຂອງຂ້ານ້ອຍ

ກິກຊຸນັ້ນມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັດລັດຕິສິກຂາບົທໄວ້ແລ້ວ ເຣົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຊຸ ທ່ານຮູ້ສຶກຕົວຫຼື?

ກິ. ຂ້າພຣະພຸທສເຈົ້າບໍ່ຮູ້ສຶກຕົວ ພຣະພຸທສເຈົ້າຂ້ານ້ອຍນ້ອຍ

ກ. ດູຣາກິກຊຸ ກິກຊຸຜູ້ບໍ່ຮູ້ສຶກຕົວ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ກິກຊຸອົງຄ໌ນຶ່ງຢູ່ໃນທີ່ພັກກາງວັນ ໃນປ່າມຫາວັນ ແຂວງເມືອງເວສາລີ ຈຳວັດຫລັບພິງຕົ້ນໄມ້ຢູ່ ສຕຣີຄົນນຶ່ງພົບເຂົ້າ ຈຶ່ງນັ່ງຄຣ່ອມອົງຄ໌ກຳເນີດ ກິກຊຸນັ້ນຟ້າວລຸກຂຶ້ນທັນທີ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັດລັດຕິສິກຂາບົທໄວ້ແລ້ວ ເຣົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຊຸທ່ານຍິນດີຫຼື?

ກິ. ຂ້າພຣະພຸທສເຈົ້າບໍ່ຍິນດີ ພຣະພຸທສເຈົ້າຂ້ານ້ອຍນ້ອຍ

ກ. ດູຣາກິກຊຸ ກິກຊຸຜູ້ບໍ່ຍິນດີ ບໍ່ຕ້ອງອາບັຕິ

໓. ກໍໂດຍສມັຍນັ້ນແລ ກິກຊຸອົງຄ໌ນຶ່ງຢູ່ໃນທີ່ພັກກາງວັນ ໃນປ່າມຫາວັນແຂວງເມືອງເວສາລີຈຳວັດຫລັບພິງຕົ້ນໄມ້ຢູ່ ສຕຣີຄົນນຶ່ງພົບເຂົ້າ ຈຶ່ງນັ່ງຄຣ່ອມອົງຄ໌ກຳເນີດ ກິກຊຸນັ້ນຍັນໃຫ້ກິ້ງໄປ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັດລັດຕິສິກຂາບົທໄວ້ແລ້ວ ເຣົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຊຸທ່ານຍິນດີຫຼື?

ກິ. ຂ້າພຣະພຸທສເຈົ້າບໍ່ຍິນດີ ພຣະພຸທສເຈົ້າຂ້ານ້ອຍນ້ອຍ

ກ. ດູຣາກິກຊຸ ກິກຊຸຜູ້ບໍ່ຍິນດີ ບໍ່ຕ້ອງອາບັຕິ.

ເຣື່ອງກິກຊຸເປີດປະຕູນອນ

[໗໐] ກໍໂດຍສມັຍນັ້ນແລ ກິກຊຸອົງຄ໌ນຶ່ງຢູ່ໃນທີ່ພັກກາງວັນ ຓ ກູຕາຄາຣສາລາປ່າມຫາວັນແຂວງເມືອງເວສາລີ ເປີດປະຕູຈຳວັດຫລັບຢູ່ ອວັຍວະໃຫຍ່ນ້ອຍຂອງທ່ານ ຖືກລົມຣຳເພີຍໃຫ້ຕຶງຕົວ

ຄັ້ງນັ້ນ ສຕຣີຫລາຍຄົນຖືຂອງຫອມແລະດອກໄມ້ໄປສູ່ອາຣາມ ມຸ່ງຕົງໄປຍັງວິຫາຣ ພົບພິກຂຸນັ້ນ ແລ້ວໄດ້ນັ່ງຄຣ່ອມອົງຄ໌ກຳເນີດ ກະທຳການພໍແກ່ຄວາມປະສົງຄ໌ ແລ້ວກ່າວວ່າພິກຂຸນີ້ເປັນບຸຣຸຫອົງອາຈນັກ ແລ້ວຖືຂອງຫອມແລະດອກໄມ້ກັບໄປ

ພິກຂຸເຫັນອົງຄ໌ກຳເນີດເປິະເປື້ອນ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄໆ ຕຣັສວ່າ ດູຣາພິກຂຸທັ້ງຫລາຍ ອົງຄ໌ກຳເນີດຍ່ອມເປັນອວັຍວະໃຊ້ການໄດ້ດ້ວຍອາການ ໕ ຢ່າງ ຄື ກຳໜັດ ໑ ປວດອຸຈຈາຣະ ໑ ປວດປັສສາວະ ໑ ຖືກລົມຣຳເພີຍ ໑ ຖືກບຸ້ງຂົນ ໑ ດູຣາພິກຂຸທັ້ງຫລາຍ ອົງຄ໌ກຳເນີດເປັນອວັຍວະໃຊ້ການໄດ້ດ້ວຍອາການ ໕ ຢ່າງນີ້ແລ ອົງຄ໌ກຳເນີດຂອງພິກຂຸນັ້ນ ຄວຣໃຊ້ການໄດ້ດ້ວຍຄວາມກຳໜັດໃດ ຂໍ້ນັ້ນ ບໍ່ແມ່ນຖານະ ບໍ່ແມ່ນໂອກາສ ເພາະພິກຂຸນັ້ນເປັນອຣຫັນຕ໌ ພິກຂຸນັ້ນບໍ່ຕ້ອງອາບັຕິ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກຂຸຜູ້ຈະພັກຜ່ອນໃນກາງວັນ ປິດປະຕູກ່ອນຈຶ່ງຈະພັກຜ່ອນໄດ້.

ເຣື່ອງພິກຂຸຊາວເມືອງພາຣຸກັຈຈະຝັນ

[໗໑] ກໍໂດຍສມັຍນັ້ນແລ ພິກຂຸຊາວເມືອງພາຣຸກັຈຈະອົງຄ໌ນຶ່ງ ຝັນວ່າໄດ້ເສພເມຖຸນສັມມ໌ໃນພັຣຍາເກົ່າ ແລ້ວຄິດວ່າ ເຮົາບໍ່ເປັນສມຕະ ຈັກສຶກລະ ແລ້ວເດີນທາງໄປສູ່ເມືອງພາຣຸກັຈຈະ ພົບທ່ານພຣະອຸບາລີໃນຣະຫວ່າງທາງ ຈຶ່ງຂາບຮຽນເຣື່ອງນັ້ນໃຫ້ຮູ້ ທ່ານພຣະອຸບາລີກ່າວຢ່າງນີ້ວ່າ ອາວຸໂສ ອາບັຕິບໍ່ມີເພາະຄວາມຝັນ.

ເຣື່ອງອຸບາສິກາຊື່ສຸປັພພາ ໗ ເຣື່ອງ

[໗໔] ໑. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສຸປັພພາ ໃນເມືອງຣາຊຄຣຶຫ໌ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ

ນາງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ ມາເສພເມຖຸນສັມມ໌ເທີ້ນ

ພິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ຣະຫວ່າງຂາອ່ອນ ໂດຍວິທີນີ້ອາບັຕິຈັກບໍ່ມີແກ່ທ່ານ

ພິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄໆ ຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

໔. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສຸປັພພາ ໃນເມືອງຣາຊຄຣຶຫ໌ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ພິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົງພຍາຍາມທີ່ສາຍບື ໂດຍວິທີນີ້ອາບັຕິຈະບໍ່ມີແກ່ທ່ານ

ພິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄໆ ຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

໓. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສຸປັພພາ ໃນເມືອງຣາຊຄຣຶຫ໌ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ພິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົງພຍາຍາມທູທີ່ທ້ອງ ໂດຍວິທີນີ້ອາບັຕິຈັກບໍ່ມີແກ່ທ່ານ

ພິກຂຸນັ້ນໄດ້ກະທຳຕາມນັ້ນແລ້ວ ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

໔. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສຸປັພພາ ໃນເມືອງຣາຊຄຣຶຫ໌ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ພິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົງພຍາຍາມທີ່ກ້ອງຂີ່ແຮ້ ໂດຍວິທີນີ້ອາບັຕິຈັກບໍ່ມີແກ່ທ່ານ

ພິກຂຸນັ້ນໄດ້ກະທຳຕາມນັ້ນແລ້ວ ມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄໆ ຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

໕. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສຸປັພພາ ໃນເມືອງຣາຊຄຣຶຫ໌ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ກິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຮື່ອງນີ້ບໍ່ຄວນ

ນາງແນະນຳວ່າ ນິມົນຕ໌ມາເຫີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ຄໍ ໂດຍວິທີນີ້ອາບັຕິຈະບໍ່ມີແກ່ທ່ານ

ກິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຮື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

ຜ. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສຸປັພພາ ໃນເມືອງຣາຊຄຣຶຫ໌ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບກິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເຫີ້ນ

ກິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຮື່ອງນີ້ບໍ່ຄວນ

ນາງແນະນຳວ່າ ນິມົນຕ໌ມາເຫີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ຊ່ອງຫູ ໂດຍວິທີນີ້ອາບັຕິຈະບໍ່ມີແກ່ທ່ານ

ກິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຮື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

ກ. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສຸປັພພາ ໃນເມືອງຣາຊຄຣຶຫ໌ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບກິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເຫີ້ນ

ກິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຮື່ອງນີ້ບໍ່ຄວນ

ນາງແນະນຳວ່າ ນິມົນຕ໌ມາເຫີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ມວຍຜົມ ໂດຍວິທີນີ້ອາບັຕິຈະບໍ່ມີແກ່ທ່ານ

ກິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຮື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ

ຓ. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສຸປັພພາ ໃນເມືອງຣາຊຄຣຶຫ໌ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບກິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເຫີ້ນ

ກິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຮື່ອງນີ້ບໍ່ຄວນ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ງ່າມມື ໂດຍວິທີນີ້ອາບັຕິຈະບໍ່ມີແກ່ທ່ານ

ພິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

໗. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສຸປັພພາ ໃນເມືອງຣາຊຄຣຶຫ໌ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ພິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ຂ້ານ້ອຍຈັກພຍາຍາມດ້ວຍມືໃຫ້ສຸກກະເຄື່ອນ ໂດຍວິທີນີ້ອາບັຕິຈະບໍ່ມີແກ່ທ່ານ

ພິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງບັນລັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

ເຣື່ອງອຸບາສິກາຊື່ສັທສາ ໗ ເຣື່ອງ

[໗໓] ໑. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສັທສາໃນເມືອງສາວັຕຖີເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ພິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ຣະຫວ່າງຂາອ່ອນ ໂດຍວິທີນີ້ອາບັຕິຈະບໍ່ມີແກ່ທ່ານ

ພິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະພາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

[໗໔] ໒. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສັທສາ ໃນເມືອງສາວັຕຖີ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບພິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ກິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ສາຍບື ໂດຍວິທີນີ້ອາບັຕິຈະບໍ່ມີແກ່ທ່ານ

ກິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຆາທິເສສ.

໓. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສັທທາ ໃນເມືອງສາວັຕຖີ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບກິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ກິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມຖູທີ່ທ້ອງ ໂດຍວິທີນີ້ອາບັຕິຈັກບໍ່ມີແກ່ທ່ານ

ກິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຆາທິເສສ.

໔. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສັທທາ ໃນເມືອງສາວັຕຖີ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບກິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ກິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ໃກ້ຂີ້ແຮ້ ໂດຍວິທີນີ້ອາບັຕິຈະບໍ່ມີແກ່ທ່ານ

ກິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນຍັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຆາທິເສສ.

໕. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສັທທາ ໃນເມືອງສາວັຕຖີ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນສັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບກິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ

ກິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ຄໍ ໂດຍວິຣີນີ້ອາບັຕິຈະບໍ່ມີແກ່ທ່ານ

ກິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັຌລັຕິສິກຂາບົທ ໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີ ພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຆາທິເສສ.

໖. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສັທສາ ໃນເມືອງສາວັຕຖີ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນ ຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນັສມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບ ກິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນັສມ໌ເທີ້ນ

ກິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ຊ່ອງຫູ ໂດຍວິຣີນີ້ອາບັຕິຈະບໍ່ມີ ແກ່ທ່ານ

ກິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັຌລັຕິສິກຂາບົທ ໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີ ພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຆາທິເສສ.

໗. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສັທສາ ໃນເມືອງສາວັຕຖີ ເປັນຜູ້ມີຄວາມເລື່ອມໃສຍັງ ອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນັສມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບ ກິກຂຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນັສມ໌ເທີ້ນ

ກິກຂຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ການເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ມວຍຜົມ ໂດຍວິຣີນີ້ອາບັຕິຈະບໍ່ມີ ແກ່ທ່ານ

ກິກຂຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັຌລັຕິສິກຂາບົທໄວ້ ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີ ພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຆາທິເສສ.

໘. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສັທສາ ໃນເມືອງສາວັຕຖີ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນ ຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນັສມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບກິກຂຸ ແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນັສມ໌ເທີ້ນ

ກິກຈຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ກາຣເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ທ່ານຈົ່ງພຍາຍາມທີ່ງ່າມມື ໂດຍວິຣີນີ້ອາບັຕິຈະບໍ່ມີແກ່ທ່ານ

ກິກຈຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຈຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

໙. ກໍໂດຍສມັຍນັ້ນແລ ອຸບາສິກາຊື່ສັທຣາ ໃນເມືອງສາວັຕຖີ ເປັນຜູ້ມີຄວາມເລື່ອມໃສຍັງອ່ອນຢູ່ ນາງມີຄວາມເຫັນຢ່າງນີ້ວ່າ ສຕຣີໃດໃຫ້ເມຖຸນຣັມມ໌ ສຕຣີນັ້ນຊື່ວ່າໃຫ້ທານອັນເລີສ ນາງພົບກິກຈຸແລ້ວໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນຣັມມ໌ເທີ້ນ

ກິກຈຸນັ້ນຫ້າມວ່າ ຢ່າເລີຍ ນ້ອງຍິງ ກາຣເຣື່ອງນີ້ບໍ່ຄວຣ

ນາງແນະນຳວ່າ ນິມົນຕ໌ມາເທີ້ນ ຂ້ານ້ອຍ ຂ້ານ້ອຍຈັກພຍາຍາມດ້ວຍມືໃຫ້ສຸກກະເຄື່ອນ ໂດຍວິຣີນີ້ອາບັຕິຈະບໍ່ມີແກ່ທ່ານ

ກິກຈຸນັ້ນໄດ້ກະທຳຕາມນັ້ນ ແລ້ວມີຄວາມຢ້ານບາປວ່າ ພຣະຜູ້ມີພຣະກາຄຊົງບັນລັຕິສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຈຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ.

ເຣື່ອງກິກຈຸນີ

[໗໔] ກໍໂດຍສມັຍນັ້ນແລ ພວກລິຈຈວີກຸມາຣໃນເມືອງເວສາລີ ຈັບກິກຈຸຂືນໃຫ້ປຜິບັຕິຜິດໃນນາງກິກຈຸນີ ທ່ານທັ້ງສອງຍິນດີ ພຣະວິນັຍຣຣຄວຣໃຫ້ນາສນະເສັຽທັ້ງສອງ ທ່ານທັ້ງສອງບໍ່ຍິນດີ ທັ້ງສອງບໍ່ຕ້ອງອາບັຕິ.

ເຣື່ອງສິກຂມານາ

ກໍໂດຍສມັຍນັ້ນແລ ພວກລິຈຈວີກຸມາຣໃນເມືອງເວສາລີ ຈັບກິກຈຸຂືນໃຫ້ປຜິບັຕິຜິດໃຫ້ນາງສິກຂມານາ ທ່ານທັ້ງສອງຍິນດີ ພຣະວິນັຍຣຣຄວຣໃຫ້ນາສນະເສັຽທັ້ງສອງ ທ່ານທັ້ງສອງບໍ່ຍິນດີ ທັ້ງສອງບໍ່ຕ້ອງອາບັຕິ.

ເຣື່ອງສາມເຓຣີ

ກໍໂດຍສມັຍນັ້ນແລ ພວກລິຈຈວີກຸມາຣໃນເມືອງເວສາລີ ຈັບກິກຈຸຂືນໃຫ້ປຜິບັຕິຜິດໃນສາມເຓຣີ ທ່ານທັ້ງສອງຍິນດີ ພຣະວິນັຍຣຣຄວຣໃຫ້ນາສນະເສັຽທັ້ງສອງ ທ່ານທັ້ງສອງບໍ່ຍິນດີ ທັ້ງສອງບໍ່ຕ້ອງອາບັຕິ.

ເຣື່ອງລິງແພສຍາ

[໗໘] ກໍໂດຍສມັຍນັ້ນແລ ພວກລິຈຈວີກຸມາຣໃນເມືອງເວສາລີ ຈັບພິກຂຸໃຫ້ປຜິບັຕິຜິດໃນລິງແພສຍາ ພິກຂຸຍິນດີ ພຣະວິນັຍສຣຄວຣໃຫ້ນາສນະພິກຂຸເສັຽ ພິກຂຸບໍ່ຍິນດີ ບໍ່ຕ້ອງອາບັຕິ.

ເຣື່ອງບັຒເທາະກ໌

ກໍໂດຍສມັຍນັ້ນແລ ພວກລິຈຈວີກຸມາຣໃນເມືອງເວສາລີ ຈັບພິກຂຸໃຫ້ປຜິບັຕິຜິດໃນບັຒເທາະກ໌ ພິກຂຸຍິນດີ ພຣະວິນັຍສຣຄວຣໃຫ້ນາສນະພິກຂຸເສັຽ ພິກຂຸບໍ່ຍິນດີ ບໍ່ຕ້ອງອາບັຕິ.

ເຣື່ອງສຕຣີຄຣືຫັສຖ໌

ກໍໂດຍສມັຍນັ້ນແລ ພວກລິຈຈວີກຸມາຣໃນເມືອງເວສາລີ ຈັບພິກຂຸໃຫ້ປຜິບັຕິຜິດໃນສຕຣີຄຣືຫັສຖ໌ ພິກຂຸຍິນດີ ພຣະວິນັຍສຣຄວຣໃຫ້ນາສນະພິກຂຸເສັຽ ພິກຂຸບໍ່ຍິນດີ ບໍ່ຕ້ອງອາບັຕິ.

ເຣື່ອງໃຫ້ປຸ່ງນກັນ

ກໍໂດຍສມັຍນັ້ນແລ ພວກລິຈຈວີກຸມາຣໃນເມືອງເວສາລີ ຈັບພິກຂຸໃຫ້ປຜິບັຕິຜິດໃນກັນແລະກັນ ທ່ານທັ້ງສອງຍິນດີ ພຣະວິນັຍສຣຄວຣໃຫ້ນາສນະເສັຽທັ້ງສອງ ທ່ານທັ້ງສອງບໍ່ຍິນດີ ທັ້ງສອງບໍ່ຕ້ອງອາບັຕິ.

ເຣື່ອງພິກຂຸຜູ້ເຜົາ

[໗໙] ກໍໂດຍສມັຍນັ້ນແລ ພິກຂຸຜູ້ເຜົາອົງຄ໌ນຶ່ງ ໄດ້ໄປຍັງພັຣຍາເກົ່າ ນາງໄດ້ຈັບບັງຄັບວ່າ ທ່ານຈົງມາສຶກເສັຽເທີ້ນ ພິກຂຸນັ້ນຖອຍຫລັງລົ້ມຫງາຍ ນາງຈຶ່ງຂຶ້ນຄຣ່ອມອົງຄ໌ກຳເນີດ ທ່ານໄດ້ມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸ ທ່ານຍິນດີຫຼືບໍ່?

ພິ. ຂ້າພຣະພຸທສເຈົ້າບໍ່ຍິນດີ ພຣະພຸທສເຈົ້າຂ້ານ້ອຍນ້ອຍ

ພ. ດູຣາພິກຂຸ ພິກຂຸຜູ້ບໍ່ຍິນດີ ບໍ່ຕ້ອງອາບັຕິ.

ເຣື່ອງລູກກວາງ

[໘໐] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງຢູ່ໃນປ່າ ລູກກວາງມາສູ່ທີ່ຖ່າຍປັສສາວະຂອງທ່ານແລ້ວ ໄດ້ອົມອົງຄ໌ກຳເນີດພ້ອມທັງດື່ມປັສສາວະ ພິກຂຸນັ້ນຍິນດີແລ້ວໄດ້ມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ປາຣາຊິກສິກຂາບົທທີ່ ໑ ຈົບ.

ທຸຕິຍປາຣາຊິກສິກຂາບົທ

ເຣື່ອງພຣະສນິຍະ ກຸມກາກາຣບຸຕຣ໌

[໗໙] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓ ກູເຂົາຄິຊຌກູຕເຂຕພຣະນຄຣຣາຊຄຣິຫ໌ ຄັ້ງນັ້ນ ກິກຂຸຫລາຍອົງຄ໌ຊຶ່ງເຄີຍເຫັນກັນເຄີຍຄົບຫາກັນມາ ທຳກຸຜີມຸງບັງດ້ວຍຫຍ້າ ຓ ເຊີງກູເຂົາອິສີຄິລິແລ້ວຢູ່ຈຳພັຣສາ ແມ້ທ່ານພຣະສນິຍະ ກຸມກາກາຣບຸຕຣ໌ ກໍໄດ້ທຳກຸຜີມຸງດ້ວຍຫຍ້າແລ້ວຢູ່ຈຳພັຣສາ ພໍກິກຂຸເຫລົ່ານັ້ນຈຳພັຣສາໂດຍລ່ວງໄຕຣມາສແລ້ວ ໄດ້ຮື້ກຸຜີມຸງບັງດ້ວຍຫຍ້າ ເກັບຫຍ້າ ແລະຕົວໄມ້ໄວ້ ແລ້ວຫລີກໄປສູ່ຈາຣິກໃນຊົນບົທ ສ່ວນທ່ານພຣະສນິຍະ ກຸມກາກາຣບຸຕຣ໌ຢູ່ ຓ ທີ່ນັ່ນເອງ ຕລອດຣະດູຝົນ ຣະດູໜາວ ແລະຣະດູຮ້ອນ ຂຓະເມື່ອທ່ານພຣະສນິຍະ ກຸມກາກາຣບຸຕຣ໌ເຂົ້າໄປບ້ານເພື່ອບິຓฑບາຕ ຄົນຫາບຫຍ້າ ຄົນຫາຟືນ ໄດ້ຮື້ກຸຜີບັງດ້ວຍຫຍ້າເສັຽ ແລ້ວຂົນຫຍ້າແລະໄມ້ໄປ

ແມ້ເທື່ອທີ່ສອງ ທ່ານພຣະສນິຍະ ກຸມກາກາຣບຸຕຣ໌ ໄດ້ຫ່ຽວຫາຫຍ້າ ແລະໄມ້ມາທຳກຸຜີມຸງບັງດ້ວຍຫຍ້າອີກ ເມື່ອທ່ານພຣະສນິຍະ ກຸມກາກາຣບຸຕຣ໌ ເຂົ້າໄປບ້ານເພື່ອບິຓฑບາຕ ແມ້ເທື່ອທີ່ສອງຄົນຫາບຫຍ້າ ຄົນຫາຟືນ ກໍໄດ້ຮື້ກຸຜີມຸງບັງດ້ວຍຫຍ້າເສັຽແລ້ວຂົນຫຍ້າແລະຕົວໄມ້ໄປ

ແມ້ເທື່ອທີ່ສາມ ທ່ານພຣະສນິຍະ ກຸມກາກາຣບຸຕຣ໌ ກໍໄດ້ຫ່ຽວຫາຫຍ້າແລະໄມ້ມາທຳກຸຜີມຸງບັງດ້ວຍຫຍ້າອີກ ເມື່ອທ່ານສນິຍະ ກຸມກາກາຣບຸຕຣ໌ ເຂົ້າໄປບ້ານເພື່ອບິຓฑບາຕ ແມ້ເທື່ອທີ່ສາມ ຄົນຫາບຫຍ້າຄົນຫາຟືນ ກໍໄດ້ຮື້ກຸຜີມຸງບັງດ້ວຍຫຍ້າເສັຽແລ້ວຂົນຫຍ້າແລະຕົວໄມ້ໄປອີກ

ຫລັງຈາກນັ້ນ ທ່ານພຣະສນິຍະ ກຸມກາກາຣບຸຕຣ໌ ໄດ້ມີຄວາມຄິດວ່າ ເມື່ອເຮົາເຂົ້າໄປບ້ານເພື່ອບິຓฑບາຕ ຄົນຫາບຫຍ້າ ຄົນຫາຟືນ ໄດ້ຮື້ກຸຜີມຸງບັງດ້ວຍຫຍ້າເສັຽ ແລ້ວຂົນຫຍ້າແລະຕົວໄມ້ໄປເຖິງສາມເທື່ອແລ້ວ ກໍເຮົານີ່ແຫລະ ເປັນຜູ້ໄດ້ສຶກສາມາດີແລ້ວບໍ່ບົກພ່ອງ ເປັນຜູ້ສຳເຣັຈສິລປະໃນການຊ່າງໝໍ້ສເມີດ້ວຍອາຈາຣຍ໌ຂອງຕົນ ບໍ່ດັ່ງນັ້ນເຮົາຄວຣຍຸບຂີ້ຕົມທຳກຸຜີສຳເຣັຈດ້ວຍດິນລ້ວນເສັຽເອງ ຈຶ່ງທ່ານພຣະສນິ-ຍະ ກຸມກາກາຣບຸຕຣ໌ ຍຸບຂີ້ຕົມທຳກຸຜີສຳເຣັຈດ້ວຍດິນລ້ວນ ດ້ວຍຕົນເອງ ແລ້ວຮວບຮວມຫຍ້າໄມ້ແລະໂຄມັຍມາເຜົາກຸຜີນັ້ນ ກຸຜີນັ້ນງົດງາມ ໜ້າເບິ່ງ ໜ້າຊົມ ມີສີແດງເໝືອນແມງຄ່ອມທອງ ມີສຽງເໝືອນສຽງກະດິງ

ຄັ້ງນັ້ນ ພຣະຜູ້ມີພຣະກາຄສເດັຈລົງຈາກກູເຂົາຄິຊຌກູຕພ້ອມດ້ວຍກິກຂຸຫຼວງຫຼາຍ ທອດພຣະເນຕຣ໌ເຫັນກຸຜີນັ້ນງົດງາມໜ້າເບິ່ງໜ້າຊົມມີສີແດງ ແລະແລ້ວ ຈຶ່ງຕຣັສຖາມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ນັ່ນອັນໃດ ງົດງາມ ໜ້າເບິ່ງ ໜ້າຊົມ ມີສີແດງເໝືອນແມງຄ່ອມທອງ ພໍກິກຂຸເຫລົ່ານັ້ນ ຂາບທູນໃຫ້ຊົງຮູ້ແລ້ວ ພຣະພຸທສອົງຄ໌ຊົງຕິຕຽນວ່າ ດູຣາກິກຂຸທັ້ງຫລາຍ ການກະທຳຂອງໂມฆບຸຣຸษນັ້ນບໍ່ເໝາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຓະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ຈັ່ງໃດໂມฆບຸຣຸษນັ້ນ

ຈຶ່ງໄດ້ຍຸບຂີ້ຕົມ ທຳກຸຝີສຳເຣັຈດ້ວຍດິນລ້ວນ ດ້ວຍຕົນເອງລະ ດູຣາກິກຂຸທັ້ງຫລາຍ ຄວາມເອັນດູ ຄວາມອນຸເຄາະຫ໌ ຄວາມບໍ່ບຽດບຽນຫມູ່ສັຕວ໌ ບໍ່ໄດ້ມີແກ່ໂມຄບຸຣຸຄນັ້ນເລີຍ ພວກທ່ານຈົ່ງໄປທຳລາຍກຸຝີນັ້ນ ພວກເພື່ອນພຣົຫ໌ມຈາຣີຊັ້ນຫລັງ ຢ່າເຖິງຄວາມບຽດບຽນຫມູ່ສັຕວ໌ເລີຍ ອັນກິກຂຸບໍ່ຄວຣເຮັດກຸຝີທີ່ສຳເຣັຈດ້ວຍດິນລ້ວນ ກິກຂຸໃດທຳ ຕ້ອງອາບັຕິທຸກກົຕ

ກິກຂຸເຫລົ່ານັ້ນຮັບພຣະພຸທສາຕັຕິແລ້ວ ພາກັນໄປທີ່ກຸຝີນັ້ນ ເທື່ອເຖິງແລ້ວໄດ້ທຳລາຍກຸຝີນັ້ນເສັຽ ທ່ານພຣະທນິຍະ ກຸມກາການບຸຕຣ໌ ຈຶ່ງຖາມກິກຂຸເຫລົ່ານັ້ນວ່າ ອາວຸໂສ ພວກທ່ານທຳລາຍກຸຝີຂອງຂ້ານ້ອຍເພື່ອອັນໃດ?

ກິ. ພຣະຜູ້ມີພຣະກາຄຮັບສັ່ງໃຫ້ທຳລາຍ ຂ້ານ້ອຍ.

ທ. ທຳລາຍເທີ້ນ ຂ້ານ້ອຍ ຖ້າພຣະຜູ້ມີພຣະກາຄຜູ້ສົມມ໌ສາມີຮັບສັ່ງໃຫ້ທຳລາຍ.

[໗໐] ກາລຕໍ່ມາ ຄວາມດຳຣິນີ້ໄດ້ມີແກ່ທ່ານພຣະທນິຍະ ກຸມກາການບຸຕຣ໌ວ່າ ເມື່ອເຮົາເຂົ້າໄປບ້ານເພື່ອບິຕທບາຕ ຄົນຫາບຫຍ້າ ຄົນຫາຟືນ ໄດ້ຮື້ກຸຝີມຸງດ້ວຍຫຍ້າເສັຽ ແລ້ວຂົນຫຍ້າແລະຕິ້ວໄມ້ໄປເຖິງສາມເທື່ອແລ້ວ ແມ້ກຸຝີດິນລ້ວນທີ່ເຮົາເຮັດໄວ້ນັ້ນ ພຣະຜູ້ມີພຣະກາຄກໍຮັບສັ່ງໃຫ້ທຳລາຍເສັຽ ກໍເຈົ້າພນັກງານຮັກສາໄມ້ທີ່ເຫັນດີກັບເຮົາມີຢູ່ ຈັ່ງໃດເດ້ເຮົາຈະຂໍໄມ້ຕໍ່ເຈົ້າພນັກງານຮັກສາໄມ້ມາທຳກຸຝີໄມ້ ຈຶ່ງທ່ານພຣະ-ທນິຍະ ກຸມກາການບຸຕຣ໌ ເຂົ້າໄປຫາເຈົ້າພນັກງານຮັກສາໄມ້ ແລະແລ້ວໄດ້ບອກເຣື່ອງນີ້ຕໍ່ເຈົ້າພນັກງານຮັກສາໄມ້ວ່າ ຂໍຈເຣີຍພອຣ ເມື່ອອາຕມາເຂົ້າໄປບ້ານເພື່ອບິຕທບາຕ ຄົນຫາບຫຍ້າ ຄົນຫາຟືນ ໄດ້ຮື້ກຸຝີມຸງບັງດ້ວຍຫຍ້າເສັຽ ແລ້ວຂົນຫຍ້າແລະຕິ້ວໄມ້ໄປເຖິງສາມເທື່ອ ແມ້ກຸຝີດິນລ້ວນທີ່ອາຕມາທຳໄວ້ນັ້ນພຣະຜູ້ມີພຣະກາຄກໍຮັບສັ່ງໃຫ້ທຳລາຍເສັຽແລ້ວ ຂໍທ່ານຈົ່ງໃຫ້ໄມ້ແກ່ອາຕມາໆ ປະສົງຄ໌ຈະທຳກຸຝີໄມ້.

ຈ. ໄມ້ທີ່ຂ້ານ້ອຍຈະຖວາຍແກ່ພຣະຜູ້ເປັນເຈົ້າໄດ້ນັ້ນ ບໍ່ມີ ຂ້ານ້ອຍ ມີແຕ່ໄມ້ຂອງຫລວງທີ່ສງວນໄວ້ສຳຫຼັບຊ່ອມແປງພຣະນຄຣ ຊຶ່ງເກັບໄວ້ເພື່ອໃຊ້ໃນຄຣາວມີອັນຕາຍ ຖ້າພຣະເຈົ້າແຜ່ນດິນຮັບສັ່ງໃຫ້ພຣະຣາຊທານໄມ້ເຫລົ່ານັ້ນ ຂໍທ່ານຈົ່ງໃຫ້ຄົນຂົນໄປເທີ້ນຂ້ານ້ອຍ.

ທ. ຂໍຈເຣີຍພອຣ ໄມ້ເຫລົ່ານັ້ນ ພຣະເຈົ້າແຜ່ນດິນພຣະຣາຊທານແລ້ວ.

ລຳດັບນັ້ນ ເຈົ້າພນັກງານຮັກສາໄມ້ຄິດວ່າ ພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ເຫລົ່ານັ້ນແລເປັນຜູ້ປະພຶຕສົມມ໌ ປະພຶຕສງົບ ປະພຶຕພຣົຫ໌ມຈັຣຍ໌ ກ່າວຄຳສັຕຍ໌ ມີສີລ ມີກັລຍາຕສົມມ໌ ພຣະເຈົ້າແຜ່ນດິນກໍຊົງເລື່ອມໃສໃນພຣະສມຕະເຫລົ່ານີ້ຍິ່ງນັກ ທ່ານພຣະທນິຍະນີ້ຍ່ອມບໍ່ບັງອາຈເພື່ອຈະກ່າວເຖິງສິ່ງຂອງທີ່ພຣະເຈົ້າແຜ່ນດິນຍັງບໍ່ໄດ້ພຣະຣາຊທານ ວ່າພຣະຣາຊທານແລ້ວ ຈຶ່ງໄດ້ຮຽນຕໍ່ທ່ານພຣະທນິຍະ ກຸມກາການບຸຕຣ໌ວ່າ ນິມົນຕ໌ໃຫ້ຄົນຂົນໄປເທີ້ນ ຂ້ານ້ອຍ ຈຶ່ງທ່ານພຣະທນິຍະ ກຸມກາການບຸຕຣ໌ ສັ່ງໃຫ້ຕັດໄມ້ເຫລົ່ານັ້ນເປັນທ່ອນນ້ອຍທ່ອນໃຫຍ່ບັຣທຸກກຽນໄປ ທຳກຸຝີໄມ້ແລ້ວ.

ວັສສກາຣພຣາຫ໌ມນ໌ກວດຣາຊການ

[໗໑] ຕໍ່ຈາກນັ້ນ ວັສສກາຣພຣາຫ໌ມຕ໌ມຫາອຳມາຕຍ໌ໃນມຄສຣັຖໄປກວດຣາຊການໃນກຸງຣາຊຄຣືຫ໌ ໄດ້ເຂົ້າໄປຫາເຈົ້າພນັກງານຮັກສາໄມ້ ແລະແລ້ວໄດ້ເວົ້າເຖິງເຣື່ອງນີ້ ຕໍ່ເຈົ້າພນັກງານຮັກສາໄມ້ວ່ານາຍ ໄມ້ຂອງຫລວງທີ່ຮັກສາໄວ້ສຳຫຼັບຊ່ອມແປງພຣະນຄຣ ຊຶ່ງເກັບໄວ້ເພື່ອໃຊ້ໃນຄຣາວມີອັນຕາຍເຫລົ່ານັ້ນ ຢູ່ ໓ ທີ່ໃດ?

ເຈົ້າພນັກງານຮັກສາໄມ້ຮຽນວ່າ ໃຕ້ຕີນຂ້ານ້ອຍ ໄມ້ເຫລົ່ານັ້ນ ພຣະເຈົ້າແຜ່ນດິນໄດ້ພຣະຣາຊທານແກ່ທ່ານພຣະຣະນີຍະ ກຸມພກາຣບຸຕຣ໌ ໄປແລ້ວ.

ທັນໃດນັ້ນ ວັສສກາຣພຣາຫ໌ມຕ໌ມຫາອຳມາຕຍ໌ໃນມຄສຣັຖ ເກີດຄວາມບໍ່ພໍໃຈວ່າ ຈັ່ງໃດພຣະເຈົ້າແຜ່ນດິນຈຶ່ງໄດ້ພຣະຣາຊທານໄມ້ຂອງຫລວງທີ່ສງວນໄວ້ສຳຫຼັບຊ່ອມແປງພຣະນຄຣ ຊຶ່ງເກັບໄວ້ເພື່ອໃຊ້ໃນຄຣາວມີອັນຕາຍແກ່ພຣະຣະນີຍະ ກຸມພກາຣບຸຕຣ໌ ໄປລະ ຈຶ່ງເຂົ້າເຝົ້າພຣະເຈົ້າພິມພິສາຣຈອມເສນາມາຄສຣາຊ ຂາບທູລວ່າ ໄດ້ຮູ້ເງົ້າວ່າ ໄມ້ຂອງຫລວງທີ່ສງວນໄວ້ສຳຫຼັບຊ່ອມແປງພຣະນຄຣຊຶ່ງເກັບໄວ້ເພື່ອໃຊ້ໃນຄຣາວມີອັນຕາຍ ພຣະອົງຄ໌ພຣະຣາຊທານແກ່ພຣະຣະນີຍະ ກຸມພກາຣບຸຕຣໄປແລ້ວຈິງຫຼືພຣະພຸທສເຈົ້າຂ້ານ້ອຍນ້ອຍ?

ພຣະເຈົ້າພິມພິສາຣຕຣັສຖາມວ່າ ໃຜເວົ້າຢ່າງນັ້ນ?

ວ. ເຈົ້າພນັກງານຮັກສາໄມ້ເວົ້າ ພຣະພຸທສເຈົ້າຂ້ານ້ອຍນ້ອຍ.

ພ. ພຣາຫ໌ມຕ໌ຖ້າເຊັ່ນນັ້ນ ທ່ານຈົ່ງໃຫ້ຄົນໄປນຳເຈົ້າພນັກງານຮັກສາໄມ້ມາ.

ຈຶ່ງວັສສກາຣພຣາຫ໌ມຕ໌ມຫາອຳມາຕຍ໌ໃນມຄສຣັຖ ສັ່ງໃຫ້ເຈົ້າໜ້າທີ່ຈອງຈຳເຈົ້າພນັກງານຮັກສາໄມ້ນຳມາ

[໗໘] ທ່ານພຣະຣະນີຍະ ກຸມພກາຣບຸຕຣ໌ ໄດ້ເຫັນເຈົ້າພນັກງານຮັກສາໄມ້ຖືກເຈົ້າໜ້າທີ່ຈອງຈຳນຳໄປ ຈຶ່ງໄຕ່ຖາມເຈົ້າພນັກງານຮັກສາໄມ້ວ່າ ຈເຣີຍພອຣ ທ່ານຖືກເຈົ້າໜ້າທີ່ຈອງຈຳນຳໄປ ດ້ວຍເຣື່ອງອັນໃດ?

ເຈົ້າພນັກງານຮັກສາໄມ້ຕອບວ່າ ເຣື່ອງໄມ້ເຫລົ່ານັ້ນ ຂ້ານ້ອຍ.

ຣ. ໄປເທີ້ນ ທ່ານ ແມ້ອາຕມາກໍຈະໄປ.

ຈ. ໃຕ້ຕີນຄວຣໄປ ຂ້ານ້ອຍ ກ່ອນທີ່ຂ້ານ້ອຍຈະຖືກປະຫາຣ.

ຈຶ່ງທ່ານພຣະຣະນີຍະ ກຸມພກາຣບຸຕຣ໌ ໄດ້ເຂົ້າໄປສູ່ພຣະຣາຊນິເວສນ໌ຂອງພຣະເຈົ້າພິມພິສາຣຈອມເສນາມາຄສຣາຊ ພໍເຖິງແລ້ວ ນັ່ງເຫນືອອາສນະທີ່ເຂົາຈັດຖວາຍ ຂຓະນັ້ນພຣະເຈົ້າພິມພິສາຣຈອມເສນາມາຄສຣາຊ ສເດັຈເຂົ້າໄປຫາທ່ານພຣະຣະນີຍະ ກຸມພກາຣບຸຕຣ໌ ຊົງອພິວາທແລ້ວ ປະທັບນັ່ງ ໗ ທີ່ສົມຄວຣ

ສ່ວນຂ້າງນຶ່ງ ຕຣັສຖາມທ່ານພຣະຂນີຍະກຸມກາການບຸຕຣ໌ເຖິງເຣື່ອງໄມ້ນັ້ນວ່າ ຂ້າແຕ່ພຣະຄຸນເຈົ້າ ຮູ້ວ່າໄມ້ຂອງຫລວງທີ່ສງວນໄວ້ສຳຫຼັບຊ່ອມແປງພຣະນຄຣ ຊຶ່ງເຂົາເກັບໄວ້ເພື່ອໃຊ້ໃນຄຣາວມີອັນຕາຍ ໂຍມໄດ້ຖວາຍແກ່ພຣະຄຸນເຈົ້າ ຈິງຫຼື?

ຂ. ຈິງຢ່າງນັ້ນ ຂໍຖວາຍພຣະພອຣ.

ພ. ຂ້າແຕ່ພຣະຄຸນເຈົ້າ ໂຍມເປັນພຣະເຈົ້າແຜ່ນດິນ ມີກິຈຫຼາຍ ມີກຣະນີຍະຫຼາຍ ແມ້ຖວາຍແລ້ວກໍຣະລຶກບໍ່ໄດ້ ຂໍພຣະຄຸນເຈົ້າໂປຼດເຕືອນໃຫ້ໂຍມຣະລຶກໄດ້.

ຂ. ຂໍຖວາຍພຣະພອຣ ພຣະອົງຄ໌ຊົງຣະລຶກໄດ້ບໍ່ ເທື່ອພຣະອົງຄ໌ສເດັຈເຖລິງຖວັລຍຣາຊຍ໌ໃໝ່ໆ ໄດ້ຊົງເປັ່ງພຣະວາຈາເຊັ່ນນີ້ວ່າ ຫຍ້າ ໄມ້ ແລະນ້ຳຂ້າພເຈົ້າຖວາຍແລ້ວແກ່ສມຕະແລະພຣາຫ໌ມນ໌ທັ້ງຫລາຍ ຂໍສມຕະແລະພຣາຫ໌ມນ໌ທັ້ງຫລາຍໂປຼດໃຊ້ສອຍເທີ້ນ.

ພ. ຂ້າແຕ່ພຣະຄຸນເຈົ້າ ໂຍມຣະລຶກໄດ້ ສມຕະແລະພຣາຫ໌ມນ໌ທັ້ງຫລາຍທີ່ເປັນຜູ້ມີຄວາມລະອາຍ ມີຄວາມຢ້ານບາປ ມັກຕໍ່ສິກຂາ ມີຢູ່ ຄວາມຢ້ານບາປແມ້ໃນເຫຕຸເລັກນ້ອຍຈະເກີດແກ່ສມຕະແລະພຣາຫ໌ມຕ໌ເຫລົ່ານັ້ນ ຄຳທີ່ກ່າວນັ້ນ ໂຍມໝາຍເຖິງການນຳຫຍ້າໄມ້ແລະນ້ຳຂອງສມຕະແລະພຣາຫ໌ມນ໌ເຫລົ່ານັ້ນ ແຕ່ວ່າຫຍ້າໄມ້ແລະນ້ຳນັ້ນແລຢູ່ໃນປ່າ ບໍ່ມີໃຜຫວງແຫນ ພຣະຄຸນເຈົ້ານັ້ນ ຍ່ອມສຳຄັຍເພື່ອຈະນຳໄມ້ທີ່ເຂົາບໍ່ໄດ້ໃຫ້ໄປດ້ວຍເລ່ຫ໌ນັ້ນ ພຣະເຈົ້າແຜ່ນດິນເຊັ່ນໂຍມ ຈະຂ້າ ຈອງຈຳ ຫຼືເນຣເທສ ຊຶ່ງສມຕະຫຼືພຣາຫ໌ມນ໌ຈັ່ງໃດໄດ້ ນິມົນຕ໌ກັບໄປເທີ້ນ ພຣະຄຸນເຈົ້າ ຣອດຕົວເພາະບັຣພຊາເພສແລ້ວແຕ່ຢ່າໄດ້ທຳຢ່າງນັ້ນອີກ.

ປະຊາຊົນເພັ່ງໂທສຕິຕຽນໂພນທະນາ

[໘໓] ຄົນທັ້ງຫລາຍ ພາກັນເພັ່ງໂທສວ່າ ພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ເຫລົ່ານີ້ ບໍ່ລະອາຍ ທຸສີລ ເວົ້າເທັຈ ພຣະສມຕະເຫລົ່ານີ້ຍັງປະຕິຍານວ່າ ເປັນຜູ້ປະພຶຕສັມມ໌ ປະພຶຕສງົບ ປະພຶຕພຣົຫ໌ມຈັຣຍ໌ ກ່າວຄຳສັຕຍ໌ ມີສີລ ມີກັລຍານສັມມ໌ ຕິຕຽນວ່າ ຄວາມເປັນສມຕະຍ່ອມບໍ່ມີແກ່ພຣະສມຕະເຫລົ່ານີ້ ຄວາມເປັນພຣາຫ໌ມນ໌ຍ່ອມບໍ່ມີແກ່ພຣະສມຕະເຫລົ່ານີ້ ຄວາມເປັນສມຕະຂອງພຣະສມຕະເຫລົ່ານີ້ ເສື່ອມແລ້ວ ຄວາມເປັນພຣາຫ໌ມນ໌ຂອງພຣະສມຕະເຫລົ່ານີ້ ເສື່ອມແລ້ວ ຄວາມເປັນສມຕະຂອງພຣະສມຕະເຫລົ່ານີ້ ຈະມີແຕ່ໃສ ຄວາມເປັນພຣາຫ໌ມນ໌ຂອງພຣະສມຕະເຫລົ່ານີ້ ຈະມີແຕ່ໃສ ແລະໂພນທະນາວ່າ ພຣະສມຕະເຫລົ່ານີ້ ປາສຈາກຄວາມເປັນສມຕະແລ້ວ ພຣະສມຕະເຫລົ່ານີ້ປາສຈາກຄວາມເປັນພຣາຫ໌ມນ໌ແລ້ວ ແມ້ພຣະເຈົ້າແຜ່ນດິນ ພຣະສມຕະເຫລົ່ານີ້ຍັງຫລອກລວງໄດ້ ຈັ່ງໃດຈັກ

ບໍ່ຫລອກລວງຄົນອື່ນລະ ພິກຂຸທັ້ງຫລາຍໄດ້ຍິນຄົນເຫລົ່ານັ້ນເພັ່ງໂທษ ຕິຕຽນ ໂພນທະນາຢູ່ ບັຣດາທີ່ເປັນຜູ້ມັກນ້ອຍ ສັນໂດษ ມີຄວາມລະອາຍ ມີຄວາມຢ້ານບາປ ມັກຕໍ່ສິກຂາ ຕ່າງກໍເພັ່ງໂທษ ຕິຕຽນ ໂພນທະນາວ່າ ຈັ່ງໃດ ທ່ານພຣະຊນິຍະ ກຸມພກາຣບຸຕຣ໌ ຈຶ່ງໄດ້ຖືເອົາໄມ້ຂອງຫລວງທີ່ເຂົາບໍ່ໄດ້ໃຫ້ໄປ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ.

ປະຊຸມສົງฆ໌ຊົງບັญญັຕິສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມພິກຂຸສົງฆ໌ ໃນເພາະເຫຕຸເປັນມູລເຄົ້ານັ້ນ ໃນເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມທ່ານພຣະຊນິຍະ ກຸມພກາຣບຸຕຣ໌ວ່າ ດູຣາຊນິຍະ ຂ່າວວ່າ ທ່ານໄດ້ຖືເອົາໄມ້ຂອງຫລວງທີ່ເຂົາບໍ່ໄດ້ໃຫ້ໄປ ຈິງຫຼື?

ທ່ານພຣະຊນິຍະທູລຮັບວ່າ ຈິງ ພຣະພຸທຊເຈົ້າຂ້ານ້ອຍນ້ອຍ.

ພຣະຜູ້ມີພຣະພາຄພຣະພຸທຊເຈົ້າຊົງຕິຕຽນວ່າ ດູຣາໂມฆບຸຣຸษ ກາຣກະທຳຂອງທ່ານນັ້ນບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຓະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ຈັ່ງໃດ ທ່ານຈຶ່ງໄດ້ຖືເອົາໄມ້ຂອງຫລວງທີ່ເຂົາບໍ່ໄດ້ໃຫ້ໄປລ້າໆ ກາຣກະທຳຂອງທ່ານນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຜູ້ທີ່ເລື່ອມໃສແລ້ວ ໂດຍທີ່ແທ້ກາຣກະທຳຂອງທ່ານນັ້ນເປັນໄປເພື່ອຄວາມເລື່ອມໃສຂອງຜູ້ທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຄົນບາງພວກທີ່ເລື່ອມໃສແລ້ວ

ກໍສມັຍນັ້ນແລ ມຫາອຳມາຕຍ໌ຜູ້ພິພາກษາເກົ່າຄົນນຶ່ງບວຊໃນຫມູ່ພິກຂຸ ນັ່ງຢູ່ບໍ່ຫ່າງພຣະຜູ້ມີພຣະພາຄ ຈຶ່ງພຣະອົງຄ໌ໄດ້ຕຣັສພຣະວາຈານີ້ຕໍ່ພິກຂຸອົງຄ໌ນັ້ນວ່າ ດູຣາພິກຂຸ ພຣະເຈົ້າພິມພິສາຣຈອມເສນາມາຄຊຣາຊຈັບໂຈຣໄດ້ແລ້ວ ປະຫາຣຊີວິຕເສັຽແດ່ ຈອງຈຳໄວ້ແດ່ ເນຣເທສເສັຽແດ່ ເພາະຊັພຍ໌ປະມາຓເທົ່າໃດນໍ?

ພິກຂຸອົງຄ໌ນັ້ນຂາບທູລວ່າ ເພາະຊັພຍ໌ດອນລ໌ນຶ່ງແດ່ ເພາະຂອງຄວຣຄ່າດອນລ໌ນຶ່ງແດ່ ເກີນດອນລ໌ນຶ່ງແດ່ ພຣະພຸທຊເຈົ້າຂ້ານ້ອຍນ້ອຍ

ແທ້ຈິງສມັຍນັ້ນ ຊັພຍ໌ **໕ ມາສົກ**[7]ໃນກຸງຣາຊຄຣຶຫ໌ ເປັນນຶ່ງດອນລ໌

ພໍພຣະຜູ້ມີພຣະພາຄຊົງຕິຕຽນທ່ານພຣະຊນິຍະ ກຸມພກາຣບຸຕຣ໌ ໂດຍອເນກປຣິຍາຍແລ້ວຈຶ່ງຕຣັສໂທษແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດษ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຕຣັສຄຸຓແຫ່ງຄວາມເປັນຄົນ

---

[7] **໕ ມາສົກ** ທຽບເທົ່າດອນລ່າ ໂດຍປະມານ

ລ້ຽງງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມຈຳກັດ ອາການທີ່ໜ້າເລື່ອມໃສ ການບໍ່ເຫມາະສົມ ການປາຣົກຄວາມພຽຣ ໂດຍອເນກປຣິຍາຍ ແລ້ວຊົງກະທຳ ສັມມີກຖາ ທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເຫມາະສົມແກ່ເຣື່ອງນັ້ນ ແກ່ກິກษຸທັ້ງຫລາຍ ແລ້ວຮັບສັ່ງກັບກິກษຸ ທັ້ງຫລາຍວ່າ

ດູຣາກິກษຸທັ້ງຫລາຍ ເພາະເຫຕຸນັ້ນແລ ເຣົາຈັກບັນລັຕິສິກຂາບົທແກ່ກິກษຸທັ້ງຫລາຍ ອາສັຍອຳນາຈ ປະໂຍຊນ໌ ໑໐ ປະການ ຄື ເພື່ອຄວາມຮັບວ່າດີແຫ່ງສົງฆ໌ ໑ ເພື່ອຄວາມສຳຣາລແຫ່ງສົງฆ໌ ໑ ເພື່ອຂົ່ມ ບຸຄຄົລຜູ້ເກີ້ຍາກ ໑ ເພື່ອຢູ່ສຳຣາລແຫ່ງກິກษຸຜູ້ມີສີລເປັນທີ່ຮັກ ໑ ເພື່ອປ້ອງກັນອາສວະອັນຈະບັງເກີດໃນ ປັຈຈຸບັນ ໑ ເພື່ອກຳຈັດອາສວະອັນຈັກບັງເກີດໃນອນາຄົຕ ໑ ເພື່ອຄວາມ ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມ-ໃສ ໑ ເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໑ ເພື່ອຄວາມຕັ້ງມັ່ນແຫ່ງພຣະສັທັມມ໌ ໑ ເພື່ອຖືຕາມພຣະວິນັຍ ໑

ດູຣາກິກษຸທັ້ງຫລາຍ ກໍແລພວກທ່ານຄວຣຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:-

ພຣະປຖົມບັນລັຕິ

໔. ອີກຢ່າງ ກິກษຸໃດ ຖືເອົາຊັພຍ໌ອັນເຈົ້າຂອງບໍ່ໄດ້ໃຫ້ ດ້ວຍສ່ວນແຫ່ງຄວາມເປັນ ຂໂມຍ ພຣະຣາຊາທັ້ງຫລາຍ ຈັບໂຈຣໄດ້ແລ້ວຄວຣປະຫາຣເສັຽແດ່ ຈອງຈຳໄວ້ແດ່ ເນຣເທສ ເສັຽແດ່ ດ້ວຍບໍຣິກາษວ່າ ເຈົ້າເປັນໂຈຣ ເຈົ້າເປັນຄົນພາລ ເຈົ້າເປັນຄົນຫລົງ ເຈົ້າເປັນຂໂມຍ ໃນເພາະຖືເອົາຊັພຍ໌ອັນເຈົ້າຂອງບໍ່ໄດ້ໃຫ້ເຫັນປານໃດ ກິກษຸຖືເອົາຊັພຍ໌ອັນເຈົ້າຂອງ ບໍ່ໄດ້ໃຫ້ເຫັນປານນັ້ນ ແມ້ກິກษຸນີ້ ກໍເປັນປາຣາຊິກ ຫາສັງວາສບໍ່ໄດ້.

ກໍສິກຂາບົທນີ້ ຍ່ອມເປັນອັນພຣະຜູ້ມີພຣະກາຄຊົງບັນລັຕິແລ້ວ ແກ່ກິກษຸທັ້ງຫລາຍ ດ້ວຍປະການ ນີ້.

ເຣື່ອງພຣະธນິຍະ ກຸມກາການບຸຕຣ໌ ຈົບ.

ເຣື່ອງພຣະລັພພັຄຄີຍ໌

[໗໔] ກໍໂດຍສມັຍນັ້ນແລ ພຣະລັພພັຄຄີຍ໌ຊວນກັນໄປສູ່ລານຕາກຜ້າຂອງຊ່າງຍ້ອມ ໄດ້ລັກ ຫໍ່ຜ້າຂອງຊ່າງຍ້ອມ ນຳມາສູ່ອາຣາມແລ້ວແບ່ງປັນກັນ ກິກษຸທັ້ງຫລາຍເວົ້າຂຶ້ນຢ່າງນີ້ວ່າ ທ່ານທັ້ງຫລາຍ ພວກທ່ານເປັນຜູ້ມີບຸລຫຼາຍ ເພາະຜ້າເກີດແກ່ພວກທ່ານມາກ

໑. ທ່ານທັ້ງຫລາຍ ບຸລຂອງພວກຂ້ານ້ອຍຈັກມີແຕ່ໃສ ພວກຂ້ານ້ອຍໄປສູ່ລານຕາກຜ້າຂອງຊ່າງຍ້ອມ ແລ້ວໄດ້ລັກຫໍ່ຜ້າຂອງຊ່າງຍ້ອມມາດັ່ງວນີ້

ກ. ພຣະຜູ້ມີພຣະກາຄຊົງບັລລັຕິສິກຂາບົທໄວ້ແລ້ວບໍ່ແມ່ນບໍ ເຫຕຸໃດພວກທ່ານຈຶ່ງໄດ້ລັກທໍ່ຜ້າຂອງຊ່າງຍ້ອມມາ.

ຂ. ຈິງຂ້ານ້ອຍ ພຣະຜູ້ມີພຣະກາຄຊົງບັລລັຕິສິກຂາບົທໄວ້ແລ້ວ ແຕ່ສິກຂາບົທນັ້ນແລ ພຣະອົງຄ໌ຊົງບັລລັຕິເພາະໃນເຂຕບ້ານ ບໍ່ໄດ້ຊົງບັລລັຕິໄປເຖິງໃນປ່າ.

ກ. ທ່ານທັ້ງຫລາຍ ພຣະບັລລັຕິນັ້ນຍ່ອມເປັນໄດ້ເຫມືອນກັນທັ້ງນັ້ນບໍ່ແມ່ນບໍ ການກະທຳຂອງພວກທ່ານນັ້ນບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຕະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ຈັ່ງໃດພວກທ່ານຈຶ່ງໄດ້ລັກທໍ່ຜ້າຂອງຊ່າງຍ້ອມມາລະ ການກະທຳຂອງພວກທ່ານນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຜູ້ທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ການກະທຳຂອງພວກທ່ານນັ້ນ ເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເລື່ອມໃສແລ້ວ ພິກຂຸເຫລົ່ານັ້ນ ຕິຕຽນພຣະຉັພພັຄຄີຍ໌ ໂດຍອເນກປຣິຍາຍແລ້ວໄດ້ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ປະຊຸມສົງฆ໌ຊົງບັລລັຕິອນຸບັລລັຕິ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຂຸສົງฆ໌ ໃນເພາະເຫຕຸເປັນມູລເຄົ້ານັ້ນ ໃນເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມພຣະຉັພພັຄຄີຍ໌ວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າ ພວກທ່ານໄປສູ່ລານຕາກຜ້າຂອງຊ່າງຍ້ອມ ແລ້ວລັກທໍ່ຜ້າຂອງຊ່າງຍ້ອມມາ ຈິງຫຼື?

ພຣະຉັພພັຄຄີຍ໌ທູລຮັບວ່າ ຈິງ ພຣະພຸທຮເຈົ້າຂ້ານ້ອຍນ້ອຍ.

ພຣະຜູ້ມີພຣະກາຄພຸທຮເຈົ້າຊົງຕິຕຽນວ່າ ດູຣາໂມฆບຸຣຸษທັ້ງຫລາຍ ການກະທຳຂອງພວກທ່ານນັ້ນບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຕະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ຈັ່ງໃດພວກທ່ານຈຶ່ງໄດ້ລັກທໍ່ຜ້າຂອງຊ່າງຍ້ອມມາລະ ການກະທຳຂອງພວກທ່ານນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສ ແລ້ວໂດຍທີ່ແທ້ ການກະທຳຂອງພວກທ່ານນັ້ນເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນຍັງທີ່ບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຄົນບາງພວກທີ່ເລື່ອມໃສແລ້ວ ພໍຊົງຕິຕຽນພຣະຉັພພັຄຄີຍ໌ໂດຍອເນກປຣິຍາຍແລ້ວ ຈຶ່ງຕຣັສໂທษແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດษ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຕຣັສຄຸຕແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາການທີ່ໜ້າເລື່ອມໃສ ການບໍ່ສະສົມ ການປຼາຣົກຄວາມພຽຣ ໂດຍອເນກປຣິຍາຍ ຊົງກະທຳທັມມີກຖາທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເຫມາະສົມແກ່ເຣື່ອງນັ້ນ ແກ່ກິກຂຸທັ້ງຫລາຍແລ້ວຮັບສັ່ງກັບກິກຂຸທັ້ງຫລາຍວ່າ

ດູຣາພິກษຸທັ້ງຫລາຍ ເພາະເຫຕຸນັ້ນແລ ເຮົາຈັກບັນລັຕິສິກຂາບົທແກ່ພິກษຸທັ້ງຫລາຍ ອາສຍອຳນາຈ ປະໂຍຊນ໌ ໑໐ ປະການ ຄື ເພື່ອຄວາມຮັບວ່າດີແຫ່ງສົງฆ໌ ໑ ເພື່ອຄວາມສຳຣາຍແຫ່ງສົງฆ໌ ໑ ເພື່ອຂົ່ມບຸຄຄົລ ຜູ້ເກີ້ຍາກ ໑ ເພື່ອຢູ່ສຳຣາຍແຫ່ງພິກษຸຜູ້ມີສີລເປັນທີ່ຮັກ ໑ ເພື່ອປ້ອງກັນອາສວະອັນຈະບັງເກີດໃນປັຈຈຸບັນ ໑ ເພື່ອກຳຈັດອາສວະອັນຈັກບັງເກີດໃນອນາຄົຕ ໑ ເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ໑ ເພື່ອ ຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໑ ເພື່ອຄວາມຕັ້ງມັ່ນແຫ່ງພຣະສັທທັມມ໌ ໑ ເພື່ອຖືຕາມພຣະ-ວິນັຍ ໑

ດູຣາພິກษຸທັ້ງຫລາຍ ກໍແລພວກທ່ານຄວຣຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:-

ພຣະອນຸບັນລັຕິ

໔. ກ. ອີກຢ່າງ ພິກษຸໃດ ຖືເອົາຊັພຍ໌ອັນເຈົ້າຂອງບໍ່ໄດ້ໃຫ້ດ້ວຍ ສ່ວນແຫ່ງຄວາມ ເປັນຂໂມຍ ຈາກບ້ານກໍດີ ຈາກປ່າກໍດີ ພຣະຣາຊາທັ້ງຫລາຍ ຈັບໂຈຣໄດ້ແລ້ວ ປະຫາຣເສັ່ງ-ແດ່ ຈອງຈຳໄວ້ແດ່ ເນຣເທສເສັ່ງແດ່ ດ້ວຍບໍຣິภາษວ່າ ເຈົ້າເປັນໂຈຣ ເຈົ້າເປັນຄົນພາລ ເຈົ້າເປັນຄົນຫລົງ ເຈົ້າເປັນຂໂມຍ ດັ່ງນີ້ ໃນເພາະຖືເອົາຊັພຍ໌ອັນເຈົ້າຂອງບໍ່ໄດ້ໃຫ້ເຫັນ ປານໃດ ພິກษຸຖືເອົາຊັພຍ໌ອັນເຈົ້າຂອງບໍ່ໄດ້ໃຫ້ເຫັນປານນັ້ນ ແມ້ພິກษຸນີ້ ກໍເປັນປາຣາຊິກ ຫາສັງວາສບໍ່ໄດ້.

ເຣື່ອງພຣະວັພພັຄຄີຍ໌ ຈົບ.

ສິກຂາບົທວິພັງຄ໌

[໗໔] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ມີການງານຢ່າງໃດ ມີຊາຕິຢ່າງໃດ ມີຊື່ຢ່າງໃດ ມີໂຄຕຣ໌ຢ່າງໃດ ມີປົກຕິຢ່າງໃດ ມີສັມມ໌ເຄື່ອງຢູ່ຢ່າງໃດ ມີອາຣົມມ໌ຢ່າງໃດ ເປັນ ເຖຣະກໍຕາມ ເປັນນວກະກໍຕາມ ເປັນມັຊຊິມະກໍຕາມ ນີ້ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງ .. ໃດ

ບົທວ່າ ພິກษຸ ຄວາມວ່າ ທີ່ຊື່ວ່າ ພິກษຸ ເພາະອັຖວ່າເປັນຜູ້ຂໍ ຊື່ວ່າ ພິກษຸ ເພາະ ອັຖວ່າປະພຶຕພິກຂາຈຣິຍວັຕຣ໌ ຊື່ວ່າ ພິກษຸ ເພາະອັຖວ່າຊົງຜືນຜ້າທີ່ຖືກທຳລາຍແລ້ວ ຊື່ວ່າ ພິກษຸ ໂດຍສົມຍາ ຊື່ວ່າ ພິກษຸ ໂດຍປຕິຍາ ຊື່ວ່າ ພິກษຸ ເພາະອັຖວ່າເປັນເອຫິພິກษຸ ຊື່ວ່າ ພິກษຸ ເພາະອັຖວ່າ ເປັນຜູ້ອຸປສົມບົທແລ້ວ ດ້ວຍໄຕຣສຣຕຄົມນ໌ ຊື່ວ່າ ພິກษຸ ເພາະອັຖວ່າເປັນຜູ້ຈເຣີນ ຊື່ວ່າ ພິກษຸ ເພາະອັຖວ່າມີສາຣະສັມມ໌ ຊື່ວ່າ ພິກษຸ ເພາະອັຖວ່າ ເປັນພຣະເສຂະ ຊື່ວ່າ ພິກษຸ ເພາະອັຖວ່າ ເປັນພຣະອເສຂະ ຊື່ວ່າ ພິກษຸ ເພາະວ່າ ອັຖວ່າ ເປັນຜູ້ອັນສົງฆ໌ພ້ອມພຽງ

ກັນໃຫ້ອຸປສົມບົທແລ້ວດ້ວຍລັຕຕິຈຕຸຕຖກັມມ໌ ອັນບໍ່ກຳເຣິບ ຄວຣແກ່ຖານະ ບັຣດາຜູ້ທີ່ຊື່ວ່າກິກຂຸເຫລົ່າ-ນັ້ນ ກິກຂຸນີ້ໃດ ທັ້ງສົງຄ໌ພ້ອມພຽງກັນໃຫ້ອຸປສົມບົທແລ້ວດ້ວຍລັຕຕິຈຕຸຕຖກັມມ໌ ອັນບໍ່ກຳເຣິບ ຄວຣແກ່ຖານະ ກິກຂຸນີ້ ພຣະຜູ້ມີພຣະກາຄຊົງປະສົງຄ໌ວ່າ ກິກຂຸ ໃນອັຖນີ້

ປະເທສທີ່ຊື່ວ່າ ບ້ານ ມີອະທິບາຍວ່າ ບ້ານມີກະຕູບຫລັງດຽວກໍດີ ມີກະຕູບ ໒ ຫລັງກໍດີ ມີກະຕູບ ໓ ຫລັງກໍດີ ມີກະຕູບ ໔ ຫລັງກໍດີ ມີຄົນຢູ່ກໍດີ ບໍ່ມີຄົນຢູ່ກໍດີ ແມ້ທີ່ເຂົາລ້ອມໄວ້ກໍດີ ແມ້ທີ່ເຂົາບໍ່ໄດ້ລ້ອມໄວ້ກໍດີ ແມ້ທີ່ເຂົາສ້າງເໝືອນເປັນທີ່ໂຄຈຣເປັນຕົ້ນກໍດີ ແມ້ຫມູ່ກຽນຫຼືຕ່າງທີ່ອາສຍຢູ່ເກີນ ໔ ເດືອນກໍດີ ພຣະຜູ້ມີພຣະກາຄຕຣັສວ່າ ບ້ານ

ທີ່ຊື່ວ່າ ອຸປຈາຣບ້ານ ກຳຫນົດເອົາທີ່ ຊຶ່ງບຸຣຸຜຂນາດກາງ ຜູ້ຍືນຢູ່ ໓ ເສົາເຂື່ອນແຫ່ງບ້ານທີ່ລ້ອມ ໂຍນກ້ອນດິນໄປຕົກ ຫຼືກຳຫນົດເອົາທີ່ຊຶ່ງບຸຣຸຜຂນາດກາງ ຜູ້ຍືນຢູ່ ໓ ອຸປຈາຣເຮືອນແຫ່ງບ້ານທີ່ບໍ່ໄດ້ລ້ອມ ໂຍນກ້ອນດິນໄປຕົກ

ທີ່ຊື່ວ່າ ປ່າ ມີອະທິບາຍວ່າ ສຖານທີ່ທີ່ເວັ້ນບ້ານແລະອຸປຈາຣບ້ານ ນອກນັ້ນຊື່ວ່າ ປ່າ

ທີ່ຊື່ວ່າ ຊັພຍ໌ອັນເຈົ້າຂອງບໍ່ໄດ້ໃຫ້ ມີອະທິບາຍວ່າ ຊັພຍ໌ໃດອັນເຈົ້າຂອງບໍ່ໄດ້ໃຫ້ ບໍ່ໄດ້ລະວາງ ຍັງຮັກສາປົກຄອງຢູ່ ຍັງຖືກັມມ໌ສິທສີຢູ່ວ່າເປັນຂອງເຮົາ ຍັງມີຜູ້ອື່ນຫວງແຫນ ຊັພຍ໌ນັ້ນຊື່ວ່າຊັພຍ໌ອັນເຈົ້າຂອງບໍ່ໄດ້ໃຫ້

ບົທວ່າ ດ້ວຍສ່ວນແຫ່ງຄວາມເປັນຂໂມຍ ໄດ້ແກ່ມີຈິຕຄິດຂໂມຍ ຄືມີຈິຕຄິດລັກ.

[໗໖] ບົທວ່າ ຖືເອົາ ຄື ຍຶດເອົາ ເອົາໄປ ເອົາລົງ ຍັງອິຣິຍາບົຖໃຫ້ກຳເຣິບ ໃຫ້ເຄື່ອນຮາກຖານ ໃຫ້ລ່ວງເລີຍເຂຕຫມາຍ.

[໗໗] ທີ່ຊື່ວ່າ ເຫັນປານໃດ ຄື ນຶ່ງດອນລ໌ກໍດີ ຄວຣແກ່ນຶ່ງດອນລ໌ກໍດີ ເກີນກວ່ານຶ່ງດອນລ໌ກໍດີ

ທີ່ຊື່ວ່າ ພຣະຣາຊາທັ້ງຫລາຍ ໄດ້ແກ່ພຣະເຈົ້າແຜ່ນດິນ ເຈົ້າຜູ້ປົກຄອງປະເທສ ທ່ານຜູ້ປົກຄອງມຕຫລ ເຈົ້າເມືອງ ຜູ້ພິພາກສາ ມຫາອຳມາຕຍ໌ ຫຼືທ່ານຜູ້ສັ່ງປະຫາຣແລະຈອງຈຳໄດ້ທ່ານເຫລົ່ານີ້ ຊື່ວ່າ ພຣະຣາຊາທັ້ງຫລາຍ

ທີ່ຊື່ວ່າ ໂຈຣ ມີອະທິບາຍວ່າ ຜູ້ໃດຖືເອົາສິ່ງຂອງອັນເຂົາບໍ່ໄດ້ໃຫ້ ໄດ້ຣາຄາ ໕ ມາສົກກໍດີ ເກີນກວ່າ ໕ ມາສົກກໍດີ ດ້ວຍສ່ວນແຫ່ງຄວາມເປັນຂໂມຍ ຜູ້ນັ້ນຊື່ວ່າ ໂຈຣ

ບົທວ່າ ປະຫາຣເສັຽແດ່ ຄື ປະຫາຣດ້ວຍມືຫຼືດ້ວຍຕີນ ດ້ວຍແສ້ຫຼືດ້ວຍຫວາຍດ້ວຍໄມ້ຄ້ອນສັ້ນຫຼືດ້ວຍດາບ

ບົທວ່າ ຈອງຈຳໄວ້ແດ່ ຄື ຜູກລ່າມໄວ້ດ້ວຍເຄື່ອງມັດຄືເຊືອກ ດ້ວຍເຄື່ອງຈອງຈຳຄືຂື່ຄາໂຊ່ຕວນ ຫຼືດ້ວຍເຂຕຈຳກັດຄືເຮືອນ ແຂວງ ຫມູ່ບ້ານ ຕາແສງບ້ານ ຫຼືໃຫ້ບຸຣຸຜຄວບຄຸມ

ບົທວ່າ ເນຣເທສເສັງແດ່ ຄື ຂັບໄລ່ເສັງຈາກຫມູ່ບ້ານ ຕາແສງບ້ານ ແຂວງ ມົຕຫົລ ຫຼືປະເທສ

ຄຳວ່າ ເຈົ້າເປັນໂຈຣ ເຈົ້າເປັນຄົນພາລ ເຈົ້າເປັນຄົນຫລົງ ເຈົ້າເປັນຂໂມຍ ນີ້ເປັນຄຳບໍຣິກາຍ.

[๗๗] ທີ່ຊື່ວ່າ ເຫັນປານນັ້ນ ຄື ນຶ່ງດອນລ໌ກໍດີ ຄວຣແກ່ນຶ່ງດອນລ໌ກໍດີ ເກີນກວ່ານຶ່ງດອນລ໌ກໍດີ

ບົທວ່າ ຖືເອົາ ຄື ຕູ່ ຊົກຊິ່ງ ສໍ້ ຍັງອິຣິຍາບົຖໃຫ້ກຳເຣີບ ໃຫ້ເຄື່ອນຈາກຖານ ໃຫ້ລ່ວງເລີຍເຂຕຫມາຍ.

[๗໘] ຄຳວ່າ ແມ້ກິກຂຸນີ້ ພຣະຜູ້ມີພຣະກາຄຕຣັສຫຍບຄຽງກິກຂຸອົງຄ໌ກ່ອນ

ຄຳວ່າ ເປັນປາຣາຊິກ ມີອະທິບາຍວ່າ ໃບໄມ້ເຫລືອງຫລົ່ນຈາກຂົ້ວແລ້ວ ບໍ່ອາຈຈະເປັນຂອງຂຽວສົດຂຶ້ນໄດ້ ແມ້ສັນໃດ ກິກຂຸກໍສັນນັ້ນແຫລະ ຖືເອົາຊັພຍ໌ອັນເຂົາບໍ່ໄດ້ໃຫ້ ດ້ວຍສ່ວນແຫ່ງຄວາມເປັນຂໂມຍ ນຶ່ງດອນລ໌ກໍດີ ຄວຣແກ່ນຶ່ງດອນລ໌ກໍດີ ເກີນກວ່ານຶ່ງດອນລ໌ກໍດີ ແລ້ວບໍ່ເປັນສມຕະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ເພາະເຫຕຸນັ້ນຈຶ່ງຕຣັສວ່າ ເປັນປາຣາຊິກ

ບົທວ່າ ຫາສັງວາສບໍ່ໄດ້ ຄວາມວ່າ ທີ່ຊື່ວ່າ ສັງວາສ ໄດ້ແກ່ກັມມ໌ທີ່ຈະທຳຮ່ວມກັນ ອຸເທສທີ່ຄວຣສູຕຮ່ວມກັນ ຄວາມເປັນຜູ້ມີສິກຂາສເມີກັນນັ້ນຊື່ວ່າ ສັງວາສ ສັງວາສນັ້ນບໍ່ມີຮ່ວມກັບກິກຂຸນັ້ນເພາະເຫຕຸນັ້ນຈຶ່ງຕຣັສວ່າ ຫາສັງວາສບໍ່ໄດ້.

ບົທກາຊນີຍ໌

ມາຕິກາ

[໘໐] ຊັພຍ໌ຢູ່ໃນດິນ	ຊັພຍ໌ຕັ້ງຢູ່ເທິງດິນ
ຊັພຍ໌ລອຍຢູ່ໃນອາກາສ	ຊັພຍ໌ຕັ້ງຢູ່ໃນທີ່ແຈ້ງ
ຊັພຍ໌ຕັ້ງຢູ່ໃນນ້ຳ	ເຮືອ ແລະຊັພຍ໌ຢູ່ໃນເຮືອ
ຍານ ແລະຊັພຍ໌ຢູ່ໃນຍານ	ຊັພຍ໌ທີ່ຕົນນຳໄປ
ສວນ ແລະຊັພຍ໌ຢູ່ໃນສວນ	ຊັພຍ໌ຢູ່ໃນວັດ
ນາ ແລະຊັພຍ໌ຢູ່ໃນນາ	ພື້ນທີ່ແລະຊັພຍ໌ຢູ່ໃນພື້ນທີ່
ຊັພຍ໌ຢູ່ໃນບ້ານ	ປ່າ ແລະຊັພຍ໌ຢູ່ໃນປ່າ
ນ້ຳ ໄມ້ຊຳຣະຟັນ ຕົ້ນໄມ້ເຈົ້າປ່າ	ຊັພຍ໌ທີ່ມີຜູ້ນຳໄປ

ຊັພຍ໌ທີ່ເຂົາຝາກໄວ້	ດ່ານພາສີ ສັຕວ໌ມີຊີວິຕ
ສັຕວ໌ບໍ່ມີຕີນ ສັຕວ໌ສອງຕີນ	ສັຕວ໌ສີ່ຕີນ ສັຕວ໌ມີຕີນມາກ
໔. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງ ເມື່ອຈະໄປສູ່ຫມູ່ບ້ານ ພິກຂຸອີກອົງຄ໌ນຶ່ງ ໄດ້ກ່າວກັບພິກຂຸນັ້ນວ່າ ທ່ານ ທ່ານຈົ່ງບອກຕະກຸລອຸປັຕຖາກຂອງຂ້ານ້ອຍຕາມທີ່ຂ້ານ້ອຍບອກ ພິກຂຸນັ້ນໄປເຖິງຈຶ່ງໃຫ້ເຂົານຳຜ້າສາຎົກມາຄູ່ນຶ່ງ ແລ້ວໃຊ້ເສັ່ງເອງ ໑ ຜືນ ໃຫ້ພິກຂຸຜູ້ບອກ ໑ ຜືນ ພິກຂຸຜູ້ບອກຮູ້ເຂົ້າຈຶ່ງໂຈທພິກຂຸນັ້ນວ່າ ທ່ານບໍ່ເປັນສມຓະ ທ່ານໄດ້ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ພິກຂຸບໍ່ຄວຣກ່າວວ່າ ທ່ານຈົ່ງບອກຕາມທີ່ຂ້ານ້ອຍບອກ ອົງຄ໌ໃດກ່າວ ຕ້ອງອາບັຕິທຸກກົຕ.

໕. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງ ເມື່ອຈະໄປສູ່ຫມູ່ບ້ານ ໄດ້ກ່າວກັບພິກຂຸອີກອົງຄ໌ນຶ່ງວ່າ ທ່ານ ຂ້ານອັຍຈະບອກຕະກຸລອຸປັຕຖາກຂອງທ່ານຕາມທີ່ທ່ານບອກ ແມ້ພິກຂຸນັ້ນກໍກ່າວຢ່າງນີ້ວ່າ ທ່ານຈົ່ງບອກຕາມທີ່ຂ້ານ້ອຍບອກເທີ້ນ ພິກຂຸນັ້ນໄປເຖິງຈຶ່ງໃຫ້ເຂົານຳເນີຍໃສ ໑ ອາຄຫົກ ໑ ນ້ຳອ້ອຍງົບ ໑ ດຸລ ໔ ຂ້າວສາຣ ໑ໂທຓະ ໕ ມາແລ້ວຈັນເສັ່ງເອງ ພິກຂຸຜູ້ບອກຮູ້ເຂົ້າຈຶ່ງໂຈທພິກຂຸນັ້ນວ່າ ທ່ານບໍ່ເປັນສມຓະ ທ່ານໄດ້ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີ-ພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ພິກຂຸບໍ່ຄວຣກ່າວວ່າ ຂ້ານ້ອຍບອກຕາມທີ່ທ່ານບອກອົງຄ໌ໃດກ່າວ ຕ້ອງອາບັຕິທຸກກົຕ.

ເຣື່ອງນຳແກ້ວມົຓີລ່ວງດ່ານພາສີ ໖ ເຣື່ອງ

[໑໔໔] ໑. ກໍໂດຍສມັຍນັ້ນແລ ບຸຣຸຫຜູ້ນຶ່ງນຳແກ້ວມົຓີຊຶ່ງມີຣາຄາມາກເດີນທາງໄກໄປກັບພິກຂຸອົງຄ໌ນຶ່ງ ພໍບຸຣຸຫນັ້ນເຫັນດ່ານພາສີ ຈຶ່ງຫຍ່ອນແກ້ວມົຓີລົງໃນຖຸງຍ່າມຂອງພິກຂຸນັ້ນຜູ້ບໍ່ຮູ້ຕົວ ເດີນພົ້ນດ່ານພາສີໄປແລ້ວ ຈຶ່ງຖືນຳໄປເອງ ພິກຂຸນັ້ນໄດ້ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແລ້ວບໍ່ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າບໍ່ຮູ້ຕົວ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ພິກຂຸຜູ້ບໍ່ຮູ້ຕົວ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ບຸຣຸຫຜູ້ນຶ່ງນຳແກ້ວມົຓີຊຶ່ງມີຣາຄາຫຼາຍ ເດີນທາງໄກໄປກັບພິກຂຸຣູປນຶ່ງ ພໍພິກຂຸນັ້ນເຫັນດ່ານພາສີ ຈຶ່ງທຳລວງວ່າເປັນໄຂ້ ແລ້ວໄດ້ໃຫ້ຫໍ່ຂອງຂອງຕົນແກ່ພິກຂຸນັ້ນ ພໍເດີນທາງພົ້ນດ່ານພາສີໄປແລ້ວ ບຸຣຸຫນັ້ນຈຶ່ງໄດ້ກ່າວກັບພິກຂຸນັ້ນວ່າ ທ່ານຜູ້ຈເຣີຍ ຂໍທ່ານຈົ່ງນຳຫໍ່ຂອງຂອງຂ້ານ້ອຍມາ ຂ້ານ້ອຍຫາໄດ້ເປັນໄຂ້ບໍ່ ພິກຂຸນັ້ນຖາມວ່າ ທ່ານ ທ່ານໄດ້ທຳທີທ່າເຊັ່ນນັ້ນເພື່ອປະສົງຄ໌ອັນໃດ ບຸຣຸຫນັ້ນໄດ້ແຈ້ງຄວາມແກ່ພິກຂຸນັ້ນແລ້ວ ທ່ານໄດ້ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແລ້ວບໍ່ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

#໑.໔ ປັຕຖະເປັນ ໑ ອາຄຫົກ ໔. ຮ້ອຍປລະເປັນ ໑ ດຸລ ໕. ສີ່ອາຄຫົກເປັນ ໑ ໂທຓະ ໗

ກິ. ຂ້າພຣະພຸທສເຈົ້າບໍ່ຮູ້ຕົວ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຸ ກິກຸຜູ້ບໍ່ຮູ້ຕົວ ບໍ່ຕ້ອງອາບັຕິ

๗. ກໍໂດຍສມັຍນັ້ນແລ ກິກຸອົງຄ໌ນຶ່ງເດີນທາງໄກໄປກັບພວກກຽນ ບຸຣຸຫຄົນນຶ່ງເກັ້ຽກ່ອມ ກິກຸນັ້ນດ້ວຍອາມິສແລ້ວ ເຫັນດ່ານກາສີ ຈຶ່ງສົ່ງແກ້ວມະນີຊຶ່ງມີຣາຄາມາກໃຫ້ແກ່ກິກຸນັ້ນ ດ້ວຍຂໍຮ້ອງວ່າ ທ່ານຜູ້ຈເຣີນ ຂໍທ່ານຈົ່ງຊ່ວຍນຳແກ້ວມະນີນີ້ຜ່ານດ່ານກາສີດ້ວຍ ຈຶ່ງກິກຸນັ້ນນຳແກ້ວມະນີນັ້ນໃຫ້ຜ່ານດ່ານກາສີ ໄປແລ້ວ ໄດ້ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງປ່ອຍໝູ ๘ ເຣື່ອງ

[໑໕໗] ໑. ກໍໂດຍສມັຍນັ້ນແລ ກິກຸອົງຄ໌ນຶ່ງມີຄວາມສົງສາຣ ໄດ້ປ່ອຍໝູທີ່ຕິດບ່ວງໄປແລ້ວ ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າມີຄວາມປະສົງຄ໌ຈະຊ່ວຍເຫລືອ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຸ ກິກຸຜູ້ມີຄວາມປະສົງຄ໌ຈະຊ່ວຍເຫລືອ ບໍ່ຕ້ອງອາບັຕິ

๘. ກໍໂດຍສມັຍນັ້ນແລ ກິກຸອົງຄ໌ນຶ່ງມີໄຖຍຈິຕ ໄດ້ປ່ອຍໝູທີ່ຕິດບ່ວງໄປເສັຽກ່ອນດ້ວຍຄິດວ່າ ພວກເຈົ້າຂອງຈະເຫັນ ແລ້ວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າມີໄຖຍຈິຕ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

ເຣື່ອງປ່ອຍເນື້ອ ๘ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ກິກຸອົງຄ໌ນຶ່ງມີຄວາມສົງສາຣ ໄດ້ປ່ອຍເນື້ອທີ່ຕິດບ່ວງໄປແລ້ວ ມີຄວາມ ຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້-ມີພຣະກາຄຕຣັສຖາມວ່າ ດູຣາກິກຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າມີຄວາມປະສົງຄ໌ຈະຊ່ວຍເຫລືອ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຸ ກິກຸຜູ້ມີຄວາມປະສົງຄ໌ຈະຊ່ວຍເຫລືອ ບໍ່ຕ້ອງອາບັຕິ

๘. ກໍໂດຍສມັຍນັ້ນແລ ກິກຸອົງຄ໌ນຶ່ງມີໄຖຍຈິຕ ໄດ້ປ່ອຍເນື້ອທີ່ຕິດບ່ວງໄປເສັຽກ່ອນດ້ວຍຄິດວ່າ ພວກເຈົ້າຂອງຈະເຫັນ ແລ້ວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງ ນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຸ ທ່ານຄິດຈັ່ງໃດ?

ภิ. ข้าพระพุทธเจ้ามีไถยจิต พระพุทธเจ้าข้าน้อย

ภ. ดูราภิกษุ ท่านต้องอาบัติปาราชิกแล้ว

เรื่องปล่อยปลา ๔ เรื่อง

๑. ก็โดยสมัยนั้นแล ภิกษุองค์หนึ่งมีความสงสาร ได้ปล่อยปลาที่ติดลอบไป แล้วมีความยำเกรงว่า เราต้องอาบัติปาราชิกแล้ว แท้หนอ จึงขาบทูลเรื่องนั้นแด่พระผู้มีพระภาค พระผู้มีพระภาคตรัสถามว่า ดูราภิกษุ ท่านคิดอย่างไร?

ภิ. ข้าพระพุทธเจ้ามีความประสงค์จะช่วยเหลือ พระพุทธเจ้าข้าน้อย

ภ. ดูราภิกษุ ภิกษุผู้มีความประสงค์จะช่วยเหลือ ไม่ต้องอาบัติ

๔. ก็โดยสมัยนั้นแล ภิกษุองค์หนึ่งมีไถยจิต ได้ปล่อยปลาที่ติดลอบไปเสียก่อน ด้วยคิดว่า พวกเจ้าของจะเห็น แล้วมีความยำเกรงว่า เราต้องอาบัติปาราชิกแล้ว แท้หนอ จึงขาบทูลเรื่องนั้นแด่พระผู้มีพระภาค พระผู้มีพระภาคตรัสถามว่า ดูราภิกษุ ท่านคิดอย่างไร?

ภิ. ข้าพระพุทธเจ้ามีไถยจิต พระพุทธเจ้าข้าน้อย

ภ. ดูราภิกษุ ท่านต้องอาบัติปาราชิกแล้ว.

เรื่องกังสัพยในยาน

[๑๕๔] ๑. ก็โดยสมัยนั้นแล ภิกษุองค์หนึ่งเห็นสัพยในยานแล้วคิดว่า เราถือเอาไปจากยานนี้จักเป็นปาราชิก จึงเสือกให้กลิ้งถือเอาไป แล้วมีความยำเกรงว่า เราต้องอาบัติปาราชิกแล้ว แท้หนอ จึงขาบทูลเรื่องนั้นแด่พระผู้มีพระภาค พระผู้มีพระภาค ตรัสว่า ดูราภิกษุ ท่านต้องอาบัติปาราชิกแล้ว.

เรื่องชิ้นเนื้อ ๔ เรื่อง

[๑๕๕] ๑. ก็โดยสมัยนั้นแล ภิกษุองค์หนึ่งได้ถือเอาชิ้นเนื้อที่เหยี่ยวหยุมไป ด้วยตั้งใจว่าจักให้แก่พวกเจ้าของๆ โจทภิกษุนั้นว่า ท่านไม่เป็นสมณะ ท่านมีความยำเกรงว่า เราต้องอาบัติปาราชิกแล้ว แท้หนอ จึงขาบทูลเรื่องนั้นแด่พระผู้มีพระภาค พระผู้มีพระภาค ตรัสว่า ดูราภิกษุ ภิกษุผู้หาไถยจิตไม่ได้ ไม่ต้องอาบัติ.

๔. ก็โดยสมัยนั้นแล ภิกษุองค์หนึ่งมีไถยจิตถือเอาชิ้นเนื้อที่เหยี่ยวหยุมไปเสียก่อน ด้วยคิดว่า พวกเจ้าของจะเห็น พวกเจ้าของโจทภิกษุนั้นว่า ท่านไม่เป็นสมณะ ท่านมีความยำเกรงว่า

เราต้องอาบัติปาราชิกแล้ว แท้หนอ จึงขาบทูลเรื่องนั้นแด่พระผู้มีพระภาค พระผู้มีพระภาค ตรัสว่า ดูราภิกษุ ท่านต้องอาบัติปาราชิกแล้ว.

ເຣື່ອງໄມ້ ໒ ເຣື່ອງ

[໑໕໖] ໑. ກໍໂດຍສມັຍນັ້ນແລ ຄົນທັ້ງຫລາຍຜູກໄມ້ແພແລ້ວໃຫ້ລອຍໄປຕາມກະແສໃນແມ່ນ້ຳອຈິຣວດີ ເມື່ອເຄື່ອງຜູກຂາດ ບໍ່ໄດ້ລອຍກະຈາຍໄປ ກິກຊຸທັ້ງຫລາຍມີຄວາມສຳຄັຍວ່າເປັນຂອງບັງສຸກຸລ ຈຶ່ງຊ່ອຍກັນຂົນຂຶ້ນ ພວກເຈົ້າຂອງໂຈທກິກຊຸເຫລົ່ານັ້ນວ່າ ພວກທ່ານບໍ່ເປັນສມຓະ ກິກຊຸເຫລົ່ານັ້ນມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຊຸທັ້ງຫລາຍ ກິກຊຸຜູ້ມີຄວາມສຳຄັຍວ່າເປັນຂອງບັງສຸກຸລ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ຄົນທັ້ງຫລາຍຜູກໄມ້ແພແລ້ວໃຫ້ລອຍໄປຕາມກະແສໃນແມ່ນ້ຳອຈິຣວດີ ເມື່ອເຄື່ອງຜູກຂາດ ບໍ່ໄດ້ລອຍກະຈາຍໄປ ກິກຊຸທັ້ງຫລາຍມີໄຖຍຈິຕ ຊ່ອຍກັນຂົນຂຶ້ນເສັຽກ່ອນດ້ວຍຄິດວ່າ ພວກເຈົ້າຂອງຈະເຫັນ ພວກເຈົ້າຂອງໂຈທກິກຊຸເຫລົ່ານັ້ນວ່າ ພວກທ່ານບໍ່ເປັນສມຓະ ກິກຊຸເຫລົ່ານັ້ນມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຊຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງຜ້າບັງສຸກຸລ

[໑໕໗] ກໍໂດຍສມັຍນັ້ນແລ ຄົນລ້ຽງງົວຄົນນຶ່ງພາດຜ້າສາຏົກ ໄວ້ທີ່ຕົ້ນໄມ້ແລ້ວໄປຖ່າຍ-ອຸຈຈາຣະ ກິກຊຸອົງຄ໌ນຶ່ງມີຄວາມສຳຄັຍວ່າເປັນຜ້າບັງສຸກຸລຈຶ່ງຖືເອົາໄປ ຄົນລ້ຽງງົວນັ້ນໂຈທກິກຊຸນັ້ນວ່າ ທ່ານບໍ່ເປັນສມຓະ ທ່ານໄດ້ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຊຸ ກິກຊຸຜູ້ມີຄວາມສຳຄັຍວ່າເປັນຂອງບັງສຸກຸລ ບໍ່ຕ້ອງອາບັຕິ.

ເຣື່ອງຂ້າມນ້ຳ ໒ ເຣື່ອງ

[໑໕໘] ໑. ກໍໂດຍສມັຍນັ້ນແລ ກິກຊຸອົງຄ໌ນຶ່ງກຳລັງຂ້າມນ້ຳ ຜ້າສາຏົກທີ່ຫລຸດຈາກມືຂອງພວກຊ່າງຍ້ອມ ໄປຄ້ອງຢູ່ທີ່ຕີນກິກຊຸໆ ນັ້ນເກັບໄວ້ ດ້ວຍຕັ້ງໃຈວ່າຈັກໃຫ້ແກ່ພວກເຈົ້າຂອງໆ ໂຈທກິກຊຸນັ້ນວ່າ ທ່ານບໍ່ເປັນສມຓະ ກິກຊຸນັ້ນມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຊຸ ກິກຊຸຜູ້ຫາໄຖຍຈິຕບໍ່ໄດ້ ບໍ່ຕ້ອງອາບັຕິ.

໒. ກໍໂດຍສມັຍນັ້ນແລ ກິກຊຸອົງຄ໌ນຶ່ງກຳລັງຂ້າມນ້ຳ ຜ້າສາຏົກທີ່ຫລຸດຈາກມືຂອງພວກຊ່າງຍ້ອມ ໄດ້ໄປຄ້ອງຢູ່ທີ່ຕີນກິກຊຸໆ ນັ້ນມີໄຖຍຈິຕຍຶດເອົາໄວ້ເສັຽກ່ອນ ດ້ວຍຄິດວ່າ ພວກເຈົ້າຂອງຈັກເຫັນ ພວກເຈົ້າຂອງໂຈທກິກຊຸນັ້ນວ່າ ທ່ານບໍ່ເປັນສມຓະ ກິກຊຸນັ້ນມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຊຸ ທ່ານຕ້ອງອາບັຕິ ປາຣາຊິກແລ້ວ.

ເຣື່ອງລົ້ນທີລະນ້ອຍ

[໑໕໙] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງເຫັນໝໍ້ເນີຍໃສແລ້ວລົ້ນເຂົ້າໄປທີລະນ້ອຍໆ ແລ້ວມີຄວາມຍ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ.

ເຣື່ອງຊວນກັນລັກຊັພຍ໌ ໔ ເຣື່ອງ

[໑໖໐] ໑. ກໍໂດຍສມັຍນັ້ນແລ ກິກຂຸຫລາຍອົງຄ໌ຊັກຊວນກັນໄປ ດ້ວຍຕັ້ງໃຈວ່າຈັກລັກຊັພຍ໌ ກິກຂຸອົງຄ໌ນຶ່ງລັກຊັພຍ໌ມາໄດ້ ກິກຂຸເຫລົ່ານັ້ນກ່າວຢ່າງນີ້ວ່າ ພວກເຮົາບໍ່ເປັນປາຣາຊິກ ອົງຄ໌ໃດລັກ ອົງຄ໌ນັ້ນເປັນປາຣາຊິກ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ.

໒. ກໍໂດຍສມັຍນັ້ນແລ ກິກຂຸຫລາຍອົງຄ໌ຊວນກັນລັກຊັພຍ໌ມາໄດ້ແລ້ວແບ່ງກັນ ເມື່ອແບ່ງຊັພຍ໌ກັນ ກິກຂຸອົງຄ໌ນຶ່ງໆ ໄດ້ສ່ວນແບ່ງບໍ່ຄົບ ໕ ມາສົກ ຈຶ່ງກ່າວກັນຂຶ້ນຢ່າງນີ້ວ່າ ພວກເຮົາບໍ່ເປັນປາຣາຊິກ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງກໍາມື ໔ ເຣື່ອງ

[໑໖໑] ໑. ກໍໂດຍສມັຍນັ້ນແລ ໃນເມືອງສາວັຕຖີ ມີຂ້າວແພງ ກິກຂຸອົງຄ໌ນຶ່ງມີໄຖຍຈິຕລັກຂ້າວສາຣຂອງຊາວຮ້ານ ໑ ກໍາມື ແລ້ວມີຄວາມຍ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໒. ກໍໂດຍສມັຍນັ້ນແລ ໃນເມືອງສາວັຕຖີ ມີຂ້າວແພງ ກິກຂຸອົງຄ໌ນຶ່ງມີໄຖຍຈິຕລັກຖົ່ວຂຽວ-ຊາວຮ້ານ ໑ ກໍາມື ແລ້ວມີຄວາມຍ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໓. ກໍໂດຍສມັຍນັ້ນແລ ໃນເມືອງສາວັຕຖີ ມີຂ້າວແພງ ກິກຂຸອົງຄ໌ນຶ່ງມີໄຖຍຈິຕລັກຖົ່ວຝັກຍາວຂອງຊາວຮ້ານ ໑ ກໍາມື ແລ້ວມີຄວາມຍ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

໔. ກໍໂດຍສມັຍນັ້ນແລ ໃນເມືອງສາວັຕຖີ ມີຂ້າວແພງ ກິກຂຸອົງຄ໌ນຶ່ງມີໄຖຍຈິຕລັກງາຂອງຊາວຮ້ານ ໑ ກໍາມື ແລ້ວມີຄວາມຍ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງເນື້ອເດນ ໒ ເຣື່ອງ

[໑໙໒] ໑. ກໍໂດຍສມັຍນັ້ນແລ ພວກໂຈຣໃນປ່າອັນສວັນແຂວງເມືອງສາວັຕຖີຂ້າງົວກິນເນື້ອແລ້ວ ລີ້ສ່ວນທີ່ເຫລືອໄວ້ແລ້ວພາກັນໄປ ກິກຂຸທັ້ງຫລາຍສຳຄັລວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ຖືເອົາໄປລັນ ພວກໂຈຣໂຈທກິກຂຸເຫລົ່ານັ້ນວ່າ ພວກທ່ານບໍ່ເປັນສມຓະ ກິກຂຸເຫລົ່ານັ້ນມີຄວາມຢ້ານບາປວ່າ ພວກເຮົາ ຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸຜູ້ມີຄວາມສຳຄັລວ່າເປັນຂອງບັງສຸກຸລ ບໍ່ຕ້ອງອາບັຕິ.

໒. ກໍໂດຍສມັຍນັ້ນແລ ພວກໂຈຣໃນປ່າອັນສວັນແຂວງເມືອງສາວັຕຖີ ຂ້າຫມູກິນເນື້ອແລ້ວ ລີ້ສ່ວນທີ່ເຫລືອໄວ້ແລ້ວພາກັນໄປ ກິກຂຸທັ້ງຫລາຍສຳຄັລວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ຖືເອົາໄປລັນ ພວກ-ໂຈຣໂຈທກິກຂຸເຫລົ່ານັ້ນວ່າ ພວກທ່ານບໍ່ເປັນສມຓະ ກິກຂຸເຫລົ່ານັ້ນມີຄວາມຢ້ານບາປວ່າ ພວກເຮົາຕ້ອງ-ອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸຜູ້ມີຄວາມສຳຄັລວ່າເປັນຂອງບັງສຸກຸລ ບໍ່ຕ້ອງອາບັຕິ.

ເຣື່ອງຫຍ້າ ໒ ເຣື່ອງ

[໑໙໓] ໑. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງໄປສູ່ແດນດົງຫຍ້າ ມີໄຖຍຈິຕລັກຫຍ້າທີ່ເຂົາກ່ຽວໄວ້ ໄດ້ຣາຄາ ໕ ມາສົກ ແລ້ວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງ ນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

[໑໙໔] ໒. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງໄປສູ່ແດນດົງຫຍ້າ ມີໄຖຍຈິຕລັກກ່ຽວຫຍ້າ ໄດ້ຣາຄາ ໕ ມາສົກ ແລ້ວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງໃຫ້ແບ່ງຂອງສົງຄ໌ ໗ ເຣື່ອງ

[໑໙໕] ໑. ກໍໂດຍສມັຍນັ້ນແລ ພຣະອາຄັນຕຸກະທັ້ງຫລາຍຍັງກັນແລະກັນ ໃຫ້ແຈກໝາກມ່ວງຂອງ ສົງຄ໌ແລ້ວລັນ ກິກຂຸເຈົ້າຖິ່ນທັ້ງຫລາຍໂຈທພວກພຣະອາຄັນຕຸກະວ່າ ພວກທ່ານບໍ່ເປັນສມຓະ ພວກພຣະ ອາຄັນຕຸກະມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ຄິດເພື່ອຕ້ອງການລັນ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸທັ້ງຫລາຍ ຄິດເພື່ອຕ້ອງການລັນ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ພຣະອາຄັນຕຸກະທັ້ງຫລາຍ ຍັງກັນແລະກັນ ໃຫ້ແຈກຊົມພູ່ຂອງສົງຄ໌-ແລ້ວລັນ ກິກຂຸເຈົ້າຖິ່ນທັ້ງຫລາຍໂຈທພວກພຣະອາຄັນຕຸກະວ່າ ພວກທ່ານບໍ່ເປັນສມຓະ ພວກພຣະອາ-

ຄັນຕຸກະມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ຄິດເພື່ອຕ້ອງການຣັບ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸທັ້ງຫລາຍ ຄິດເພື່ອຕ້ອງການຣັບ ບໍ່ຕ້ອງອາບັຕິ

໓. ກໍໂດຍສມັຍນັ້ນແລ ພຣະອາຄັນຕຸກະທັ້ງຫລາຍ ຍັງກັນແລະກັນ ໃຫ້ແຈກຂນຸນສຳມະລໍຂອງສົງຄ໌ແລ້ວຣັບ ກິກຂຸເຈົ້າຖິ່ນທັ້ງຫລາຍໂຈທພວກພຣະອາຄັນຕຸກະວ່າ ພວກທ່ານບໍ່ເປັນສມຕະ ພວກພຣະອາຄັນຕຸກະມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ຄິດເພື່ອຕ້ອງການຣັບ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸທັ້ງຫລາຍ ຄິດເພື່ອຕ້ອງການຣັບ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພຣະອາຄັນຕຸກະທັ້ງຫລາຍ ຍັງກັນແລະກັນ ໃຫ້ແຈກໝາກໝີ້ຂອງສົງຄ໌ແລ້ວຣັບ ກິກຂຸເຈົ້າຖິ່ນທັ້ງຫລາຍໂຈທພວກພຣະອາຄັນຕຸກະວ່າ ພວກທ່ານບໍ່ເປັນສມຕະ ພວກພຣະອາຄັນຕຸກະມີຄວາມບໍ່ພໍໃຈ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ຄິດເພື່ອຕ້ອງການຣັບ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸທັ້ງຫລາຍ ຄິດເພື່ອຕ້ອງການຣັບ ບໍ່ຕ້ອງອາບັຕິ

໕. ກໍໂດຍສມັຍນັ້ນແລ ພຣະອາຄັນຕຸກະທັ້ງຫລາຍ ຍັງກັນແລະກັນ ໃຫ້ແຈກໝາກຕາລສຸກຂອງ-ສົງຄ໌ແລ້ວຣັບ ກິກຂຸເຈົ້າຖິ່ນທັ້ງຫລາຍໂຈທພວກພຣະອາຄັນຕຸກະວ່າ ພວກທ່ານບໍ່ເປັນສມຕະ ພວກພຣະອາຄັນຕຸກະມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ຄິດເພື່ອຕ້ອງການຣັບ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸທັ້ງຫລາຍ ຄິດເພື່ອຕ້ອງການຣັບ ບໍ່ຕ້ອງອາບັຕິ

໖. ກໍໂດຍສມັຍນັ້ນແລ ພຣະອາຄັນຕຸກະທັ້ງຫລາຍຍັງກັນແລະກັນ ໃຫ້ແຈກອ້ອຍຂອງສົງຄ໌ແລ້ວຣັບ ກິກຂຸເຈົ້າຖິ່ນທັ້ງຫລາຍໂຈທພວກພຣະອາຄັນຕຸກະວ່າ ພວກທ່ານບໍ່ເປັນສມຕະ ພວກພຣະອາຄັນຕຸກະມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ຄິດເພື່ອຕ້ອງການລັກ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸທັ້ງຫລາຍ ຄິດເພື່ອຕ້ອງການລັກ ບໍ່ຕ້ອງອາບັຕິ

ຖ. ກໍໂດຍສມັຍນັ້ນແລ ພຣະອາຄັນຕຸກະທັ້ງຫລາຍ ຍັງກັນແລະກັນ ໃຫ້ແຈກໝາກເຫຼືອງຂອງ-ສົງຄ໌ແລ້ວລັກ ກິກຂຸເຈົ້າຖິ່ນທັ້ງຫລາຍໂຈທພວກພຣະອາຄັນຕຸກະວ່າ ພວກທ່ານບໍ່ເປັນສມຕະ ພວກພຣະອາຄັນຕຸກະມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ຄິດເພື່ອຕ້ອງການລັກ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸທັ້ງຫລາຍ ຄິດເພື່ອຕ້ອງການລັກ ບໍ່ຕ້ອງອາບັຕິ

ເຣື່ອງບໍ່ແມ່ນເຈົ້າຂອງ ຖ ເຣື່ອງ

[໑໖໖] ໑. ກໍໂດຍສມັຍນັ້ນແລ ພວກຄົນຮັກສາໝາກມ່ວງໄດ້ຖວາຍໝາກມ່ວງແກ່ກິກຂຸທັ້ງຫລາຍໆ ບໍ່ພໍໃຈຢູ່ວ່າ ຄົນພວກນີ້ມີໜ້າທີ່ຮັກສາ ບໍ່ມີໜ້າທີ່ຈະໃຫ້ ຈຶ່ງບໍ່ຮັບ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນຮັກສາຖວາຍ

໒. ກໍໂດຍສມັຍນັ້ນແລ ພວກຄົນຮັກສາຊົມພູ່ ໄດ້ຖວາຍໝາກຊົມພູ່ແກ່ກິກຂຸທັ້ງຫລາຍໆ ມີຄວາມ-ບໍ່ພໍໃຈຢູ່ວ່າ ຄົນພວກນີ້ມີໜ້າທີ່ຮັກສາ ບໍ່ມີໜ້າທີ່ຈະໃຫ້ ຈຶ່ງບໍ່ຮັບ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນຮັກສາຖວາຍ

໓. ກໍໂດຍສມັຍນັ້ນແລ ພວກຄົນຮັກສາຂນຸນສຳມະລໍ ໄດ້ຖວາຍໝາກຂນຸນສຳມະລໍແກ່ກິກຂຸ-ທັ້ງຫລາຍໆ ບໍ່ພໍໃຈຢູ່ວ່າ ຄົນພວກນີ້ມີໜ້າທີ່ຮັກສາ ບໍ່ມີໜ້າທີ່ຈະໃຫ້ ຈຶ່ງບໍ່ຮັບ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນຮັກສາຖວາຍ

໔. ກໍໂດຍສມັຍນັ້ນແລ ພວກຄົນຮັກສາໝາກໝີ້ ໄດ້ຖວາຍໝາກໝີ້ແກ່ກິກຂຸທັ້ງຫລາຍໆ ບໍ່ພໍໃຈຢູ່ວ່າ ຄົນພວກນີ້ມີໜ້າທີ່ຮັກສາ ບໍ່ມີໜ້າທີ່ຈະໃຫ້ ຈຶ່ງບໍ່ຮັບ ແລ້ວຂາບທູລເຣື່ອງນັ້ນ ແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນຮັກສາຖວາຍ

໕. ກໍໂດຍສມັຍນັ້ນແລ ພວກຄົນຮັກສາໝາກຕາລສຸກ ໄດ້ຖວາຍໝາກຕາລສຸກແກ່ກິກຂຸທັ້ງຫລາຍໆ ບໍ່ພໍໃຈຢູ່ວ່າ ຄົນພວກນີ້ມີໜ້າທີ່ຮັກສາ ບໍ່ມີໜ້າທີ່ຈະໃຫ້ ຈຶ່ງບໍ່ຮັບ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນຮັກສາຖວາຍ

໖. ກໍໂດຍສມັຍນັ້ນແລ ພວກຄົນຮັກສາອ້ອຍ ໄດ້ຖວາຍອ້ອຍແກ່ກິກຂຸທັ້ງຫລາຍໆ ບໍ່ມັກຢູ່ວ່າ ຄົນພວກນີ້ມີໜ້າທີ່ຮັກສາ ບໍ່ມີໜ້າທີ່ຈະໃຫ້ ຈຶ່ງບໍ່ຮັບ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນຮັກສາຖວາຍ

ภ. ກໍໂດຍສມັຍນັ້ນແລ ພວກຄົນຮັກษາໝາກເຫຼືອງ ໄດ້ຖວາຍໝາກເຫຼືອງແກ່ภิกษุທັ້ງຫລາຍໆ ຢ້ານວ່າ ຄົນພວກນີ້ມີໜ້າທີ່ຮັກษາ ບໍ່ມີໜ້າທີ່ຈະໃຫ້ ຈຶ່ງບໍ່ຮັບ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະภาค ພຣະຜູ້ມີພຣະภาค ຕຣັສວ່າ ດູຣາภิกษุທັ້ງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນຮັກษาຖວາຍ

เรื่องยืมไม้ของสงฆ์

[໑໙໗] ກໍໂດຍສມັຍນັ້ນແລ ภิกษุອົງຄ໌ນຶ່ງຂໍຍືມໄມ້ຂອງສົງฆ໌ໄປຄ້ຳຝາທີ່ຢູ່ຂອງຕົນ ภิกษุທັ້ງຫລາຍໂຈທภิกษุນັ້ນວ່າ ທ່ານບໍ່ເປັນສມณะ ທ່ານມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະภาค ພຣະຜູ້ມີພຣະภาค ຕຣັສຖາມວ່າ ດູຣາภิกษุ ທ່ານຄິດຈັ່ງໃດ?

ภิ. ຂ້າພຣະພຸທธເຈົ້າ ຄິດຂໍຍືມ ພຣະພຸທธເຈົ້າຂ້ານ້ອຍ

ภ. ດູຣາภิกษุ ທ່ານບໍ່ຕ້ອງອາບັຕິ ເພາະຂໍຍືມ.

เรื่องลักน้ำของสงฆ์

[໑໙໘] ກໍໂດຍສມັຍນັ້ນແລ ภิกษุອົງຄ໌ນຶ່ງມີໄຖຍຈິຕລັກນ້ຳຂອງສົງฆ໌ ແລ້ວມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະภาค ພຣະຜູ້ມີພຣະภาค ຕຣັສຖາມວ່າ ດູຣາภิกษุ ທ່ານຄິດຈັ່ງໃດ?

ภิ. ຂ້າພຣະພຸທธເຈົ້າ ຄິດລັກ ພຣະພຸທธເຈົ້າຂ້ານ້ອຍ

ภ. ດູຣາภิกษุ ທ່ານຕ້ອງອາບັຕິປາຣາຊິກແລ້ວ

เรื่องลักดินของสงฆ์

ກໍໂດຍສມັຍນັ້ນແລ ภิกษุອົງຄ໌ນຶ່ງມີໄຖຍຈິຕລັກດິນຂອງສົງฆ໌ ແລ້ວມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະภาค ພຣະຜູ້ມີພຣະภาค ຕຣັສຖາມວ່າ ດູຣາภิกษุ ທ່ານຄິດຈັ່ງໃດ?

ภิ. ຂ້າພຣະພຸທธເຈົ້າ ຄິດລັກ ພຣະພຸທธເຈົ້າຂ້ານ້ອຍ

ภ. ດູຣາภิกษุ ທ່ານຕ້ອງອາບັຕິປາຣາຊິກແລ້ວ

เรื่องหญ้า ๘ เรื่อง

໑. ກໍໂດຍສມັຍນັ້ນແລ ภิกษุອົງຄ໌ນຶ່ງມີໄຖຍຈິຕລັກຫຍ້າມຸງກະຕ່າຍຂອງສົງฆ໌ ແລ້ວມີຄວາມຢ້ານ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະภาค ພຣະຜູ້ມີພຣະภาค ຕຣັສຖາມວ່າ ດູຣາภิกษุ ທ່ານຄິດຈັ່ງໃດ?

ภิ. ຂ້າພຣະພຸທธເຈົ້າ ຄິດລັກ ພຣະພຸທธເຈົ້າຂ້ານ້ອຍ

ภ. ດູຣາภิกษุ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໒. ກໍໂດຍສມັຍນັ້ນແລ ภิกษุອົງຄ໌ນຶ່ງມີໄຖຍຈິຕເຜົາຫຍ້າມຸງກະຕ່າຍຂອງສົງฆ໌ ແລ້ວມີຄວາມຢ້ານ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະภาค ພຣະຜູ້ມີພຣະภาค ຕຣັສຖາມວ່າ ດູຣາภิกษุ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທທເຈົ້າ ຄິດເຜີາ ພຣະພຸທທເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ.

ເຣື່ອງເສນາສນະຂອງສົງຆ໌ ໗ ເຣື່ອງ

[໑໖໗] ໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງ ມີໄຖຍຈິຕ ລັກຕຽງຂອງສົງຆ໌ ແລ້ວມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທທເຈົ້າ ຄິດລັກ ພຣະພຸທທເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໒. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງ ມີໄຖຍຈິຕ ລັກຕັ່ງຂອງສົງຆ໌ ແລ້ວມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທທເຈົ້າ ຄິດລັກ ພຣະພຸທທເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງ ມີໄຖຍຈິຕ ລັກຟູກຂອງສົງຆ໌ ແລ້ວມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທທເຈົ້າ ຄິດລັກ ພຣະພຸທທເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໔. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງ ມີໄຖຍຈິຕ ລັກໝອນຂອງສົງຆ໌ ແລ້ວມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທທເຈົ້າ ຄິດລັກ ພຣະພຸທທເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງ ມີໄຖຍຈິຕ ລັກບານປະຕູຂອງສົງຆ໌ ແລ້ວມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທທເຈົ້າ ຄິດລັກ ພຣະພຸທທເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໖. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງ ມີໄຖຍຈິຕ ລັກບານຫນ້າຕ່າງຂອງສົງຆ໌ ແລ້ວມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທທເຈົ້າ ຄິດລັກ ພຣະພຸທທເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

ຖ. ກໍໂດຍສມັຍນັ້ນແລ ກິກษຸອົງຄ໌ນຶ່ງ ມີໄຖຍຈິຕ ລັກໄມ້ກລອນຂອງສົງฆ໌ ແລ້ວມີຄວາມຢ້ານບາປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກษຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ຄິດລັກ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກษຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

ເຣື່ອງຂອງມີເຈົ້າຂອງ ບໍ່ຄວຣນຳໄປໃຊ້

[໑໗໐] ກໍໂດຍສມັຍນັ້ນແລ ກິກษຸທັ້ງຫລາຍນຳເສນາສນະອັນເປັນເຄື່ອງໃຊ້ສຳຫຼັບວິຫາຣຂອງອຸບາສົກຄົນນຶ່ງ ໄປໃຊ້ສອຍ ໃນທີ່ແຫ່ງອື່ນ ຈຶ່ງອຸບາສົກນັ້ນເພັ່ງໂທษ ຕິຕຽນໂພນທະນາວ່າ ຈັ່ງໃດພຣະຜູ້ເປັນເຈົ້າທັ້ງຫລາຍຈຶ່ງໄດ້ນຳເຄື່ອງໃຊ້ສອຍໃນທີ່ອື່ນໄປໃຊ້ສອຍໃນທີ່ອີກແຫ່ງນຶ່ງລະ ກິກษຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກษຸທັ້ງຫລາຍ ເຄື່ອງໃຊ້ສອຍໃນທີ່ແຫ່ງນຶ່ງອັນກິກษຸບໍ່ຄວຣໃຊ້ສອຍໃນທີ່ອີກແຫ່ງນຶ່ງ ອົງຄ໌ໃດໃຊ້ສອຍ ຕ້ອງອາບັຕິທຸກກົຕ

ເຣື່ອງຂອງມີເຈົ້າຂອງ ຈະຂໍຢືມ

ກໍໂດຍສມັຍນັ້ນແລ ກິກษຸທັ້ງຫລາຍບໍ່ມັກທີ່ຈະນຳຈົນເຖິງຜ້າປູນັ່ງປະຊຸມໄປ ແມ້ ໓ ໂຮງອຸໂບສົຖ ຈຶ່ງນັ່ງເທິງພື້ນດິນ ເນື້ອຕົວກໍດີ ຈີວຣກໍດີ ແປດເປື້ອນຝຸ່ນ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກษຸທັ້ງຫລາຍ ເຮົາອນຸญາຕໃຫ້ນຳໄປໃຊ້ໄດ້ຊົ່ວຄາວ ๆ

ເຣື່ອງກິກษຸณີຊາວເມືອງຈັມປາ

[໑໗໑] ກໍໂດຍສມັຍນັ້ນແລ ອັນເຕວາສິກາຂອງກິກษຸณີຖຸລລນັນທາ ໄປສູ່ຕະກຸລອຸປັຕຖາກຂອງກິກษຸณີຖຸລລນັນທາໃນເມືອງຈັມປາແລ້ວບອກວ່າ ແມ່ເຈົ້າປັຕຖນາຈະດື່ມຢາຄູທີ່ປຸງດ້ວຍຂອງ ໓ ຢ່າງ ຕົນສັ່ງໃຫ້ເຂົາຫຸງຫາໃຫ້ແລ້ວນຳໄປລົນເສັຽ ກິກษຸณີຖຸລລນັນທາຮູ້ເຂົ້າ ຈຶ່ງໂຈທກິກຸณີອັນເຕວາສິການັ້ນວ່າ ທ່ານບໍ່ເປັນສມຕະ ກິກษຸณີອັນເຕວາສິກາມີຄວາມຢ້ານບາປ ຈຶ່ງຮ້ອງຮຽນແກ່ກິກษຸณີທັ້ງຫລາຍໆ ແຈ້ງແກ່ກິກษຸທັ້ງຫລາຍໆ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກษຸທັ້ງຫລາຍ ກິກษຸณີນັ້ນບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິປາຈິຕຕີຍ໌ ເພາະສັມປຊານມຸສາວາທ

ເຣື່ອງກິກษຸณີຊາວເມືອງຣາຊຄຣຶຫ໌

ກໍໂດຍສມັຍນັ້ນແລ ກິກษຸณີອັນເຕວາສິກາຂອງກິກษຸณີຖຸລລນັນທາໄປສູ່ຕະກຸລອຸປັຕຖາກຂອງກິກษຸณີຖຸລລນັນທາໃນເມືອງຣາຊຄຣຶຫ໌ແລ້ວບອກວ່າ ແມ່ເຈົ້າປັຕຖນາຈະລົນຂນົມຣອງເຜີ້ງ ຕົນສັ່ງໃຫ້ເຂົາທອດແລ້ວນຳໄປລົນເສັຽ ກິກษຸณີຖຸລລນັນທາຮູ້ເຂົ້າ ຈຶ່ງໂຈທກິກษຸณີອັນເຕວາສິການັ້ນວ່າ ທ່ານບໍ່ເປັນສມຕະ ກິກษຸณີອັນເຕວາສິກາມີຄວາມຢ້ານບາປ ຈຶ່ງຮ້ອງຮຽນແກ່ກິກษຸณີທັ້ງຫລາຍໆ ແຈ້ງແກ່ກິກษຸທັ້ງຫລາຍໆ

ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຮາກິກຂຸທັ້ງຫລາຍ ກິກຂຸຕົນັ້ນ ບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິປາຈິຕຕີຍ໌ ເພາະສັມປຊານມຸສາວາທ.

ເຣື່ອງພຣະອັຊຊຸກະເມືອງເວສາລີ

[໑໗໔] ກໍໂດຍສມັຍນັ້ນແລ ຄຫບໍດີອຸປັຕຖາກຂອງທ່ານພຣະອັຊຊຸກະໃນເມືອງເວສາລີ ມີເດັກຊາຍ ໔ ຄົນ ຄື ບຸຕຣ໌ຊາຍຄົນນຶ່ງ ຫລານຊາຍຄົນນຶ່ງ ຄັ້ງນັ້ນທ່ານຄຫບໍດີໄດ້ສັ່ງຄຳນີ້ໄວ້ກັບທ່ານພຣະອັຊຊຸກະ ວ່າ ພຣະຄຸຓເຈົ້າຂ້ານ້ອຍ ບັຣດາເດັກ ໔ ຄົນນີ້ ເດັກຄົນໃດມີສຣັທຮາເລື່ອມໃສ ພຣະຄຸຓເຈົ້າຄວຣບອກສຖານທີ່ ຝັງຊັພຍ໌ນີ້ແກ່ເດັກຄົນນັ້ນ ດັ່ງນີ້ແລ້ວໄດ້ເຖິງແກ່ກັມມ໌ ພໍສມັຍຕໍ່ມາ ຫລານຊາຍຂອງຄຫບໍດີນັ້ນ ເປັນຜູ້ມີສຣັທຮາເລື່ອມໃສ ຈຶ່ງທ່ານພຣະອັຊຊຸກະໄດ້ບອກສຖານທີ່ຝັງຊັພຍ໌ນັ້ນແກ່ເດັກຫລານຊາຍໆ ນັ້ນ ໄດ້ຮວບຮວມຊັພຍ໌ ແລະເຣີ່ມບຳເພັຍທານດ້ວຍຊັພຍ໌ສົມບັຕິນັ້ນແລ້ວ

ກາຍຫລັງ ບຸຕຣ໌ຊາຍຄຫບໍດີນັ້ນ ໄດ້ຮຽນຖາມເຣື່ອງນີ້ກັບທ່ານພຣະອານົນທ໌ວ່າ ຂ້າແຕ່ທ່ານ ພຣະອານົນທ໌ ໃຜເດີ້ເປັນທາຍາທຂອງບິດາບຸຕຣ໌ຊາຍຫຼືຫລານຊາຍ

ທ່ານພຣະອານົນທ໌ຕອບວ່າ ທ່ານ ສົມມດາບຸຕຣ໌ຊາຍເປັນທາຍາທຂອງບິດາ

ບຸ. ຂ້າແຕ່ທ່ານຜູ້ຈເຣີນ ພຣະຄຸຓເຈົ້າອັຊຊຸກະນີ້ ໄດ້ບອກຊັພຍ໌ສົມບັຕິຂອງຂ້ານ້ອຍໃຫ້ແກ່ຄູ່ ແຂ່ງຂັນຂອງຂ້ານ້ອຍ

ອາ. ທ່ານ ທ່ານພຣະອັຊຊຸກະບໍ່ເປັນສມຓະ

ລຳດັບນັ້ນ ທ່ານພຣະອັຊຊຸກະໄດ້ກ່າວຄຳນີ້ກັບທ່ານພຣະອານົນທ໌ວ່າ ອາວຸໂສ ອານົນທ໌ ຂໍທ່ານ ໄດ້ໂປຼດໃຫ້ການວິນິຈສັຍແກ່ຂ້ານ້ອຍດ້ວຍເທີ້ນ

ກໍຄັ້ງນັ້ນແລ ທ່ານພຣະອຸບາລີເປັນຝັກຝ່າຍຂອງທ່ານພຣະອັຊຊຸກັບທ່ານຈຶ່ງຖາມທ່ານພຣະອານົນທ໌ວ່າ ອາວຸໂສ ອານົນທ໌ ກິກຂຸໃດອັນເຈົ້າຂອງຊັພຍ໌ສັ່ງໄວ້ວ່າ ຂໍທ່ານໄດ້ໂປຼດບອກສຖານທີ່ຝັງຊັພຍ໌ນີ້ແກ່ ບຸຄຄົລນັ້ນ ກິກຂຸນັ້ນຈະຕ້ອງອາບັຕິດ້ວຍຫຼື?

ອາ. ຂ້າແຕ່ທ່ານຜູ້ຈເຣີນ ກິກຂຸນັ້ນບໍ່ຕ້ອງອາບັຕິຈັກໜ້ອຍ ໂດຍທີ່ສຸດແມ້ພຽງອາບັຕິທຸກກົຕ

ອຸ. ອາວຸໂສ ທ່ານພຣະອັຊຊຸກະນີ້ອັນເຈົ້າຂອງຊັພຍ໌ສັ່ງໄວ້ວ່າ ຂໍທ່ານໄດ້ໂປຼດບອກສຖານທີ່ຝັງ ຊັພຍ໌ນີ້ແກ່ບຸຄຄົລຊື່ນີ້ ຈຶ່ງໄດ້ບອກແກ່ບຸຄຄົລນັ້ນ ທ່ານພຣະອັຊຊຸກະບໍ່ຕ້ອງອາບັຕິ.

ເຣື່ອງເມືອງພາຣາຓສີ

[໑໗໕] ກໍໂດຍສມັຍນັ້ນແລ ຕະກຸລອຸປັຕຖາກຂອງທ່ານພຣະປີລິນທວັຈຈະໃນເມືອງພາຣາຓສີ ຖືກພວກໂຈຣປຼົ້ນ ແລະເດັກ ໔ ຄົນ ຖືກພວກໂຈຣນຳຕົວໄປ ຄັ້ງນັ້ນທ່ານພຣະປີລິນທວັຈຈະນຳເດັກ ໔ ຄົນ ນັ້ນມາດ້ວຍຣິທຮິ໌ແລ້ວໃຫ້ຢູ່ໃນປຼາສາທ ຊາວບ້ານເຫັນເດັກ ໔ ຄົນ ນັ້ນແລ້ວ ຕ່າງພາກັນເລື່ອມໃສໃນ

ທ່ານພຣະປິລິນທວັຈຈະເປັນຢ່າງຍິ່ງວ່າ ນີ້ເປັນຣິທສານຸກາພຂອງພຣະປິລິນທວັຈຈະ ກິກຂຸທັ້ງຫລາຍພາກັນເພັ່ງໂທສ ຕິຕຽນ ໂພນທະນາວ່າ ຈັ່ງໃດທ່ານພຣະປິລິນທວັຈຈະຈຶ່ງໄດ້ນຳເດັກທີ່ຖືກພວກໂຈຣນຳຕົວໄປແລ້ວຄືນມາລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍບໍ່ເປັນອາບັຕິ ເພາະວິສັຍແຫ່ງຣິທສໍ່ຂອງກິກຂຸຜູ້ມີຣິທສໍ່.

ເຣື່ອງກິກຂຸຊາວເມືອງໂກສັມພີ

[໑໗໔] ກໍໂດຍສມັຍນັ້ນແລ ກິກຂຸ ໔ ອົງຄ໌ ຊື່ປັຕຫກະ ໑ ຊື່ກປິລະ ໑ ເປັນສຫາຍກັນອົງຄ໌ນຶ່ງຢູ່ໃນໝູ່ບ້ານ ອີກອົງຄ໌ນຶ່ງຢູ່ໃນເມືອງໂກສັມພີ ຂຕະເມື່ອກິກຂຸນັ້ນເດີນທາງຈາກໝູ່ບ້ານໄປເມືອງໂກສັມພີ ຂ້າມແມ່ນ້ຳໃນຣະຫວ່າງທາງ ແປວມັນຂົ້ນທີ່ຫລຸດຈາກມືຂອງພວກຄົນຜ່າໝູລອຍຕິດຢູ່ທີ່ຕີນ ກິກຂຸນັ້ນໄດ້ເກັບໄວ້ດ້ວຍຕັ້ງໃຈວ່າ ຈັກໃຫ້ແກ່ພວກເຈົ້າຂອງໆ ໂຈທກິກຂຸນັ້ນວ່າ ທ່ານບໍ່ເປັນສມຕະສຕຣີລ້ຽງງົວຄົນນຶ່ງເຫັນກິກຂຸນັ້ນຂ້າມແມ່ນ້ຳຂຶ້ນມາແລ້ວ ໄດ້ກ່າວຄຳນີ້ວ່າ ທ່ານຂ້ານ້ອຍ ນິມົນຕ໌ມາເສພເມຖຸນສັມມ໌ເທີ້ນ ກິກຂຸນັ້ນຄິດວ່າ ແມ້ໂດຍປົກຕິ ເຮົາກໍບໍ່ເປັນສມຕະແລ້ວ ຈຶ່ງເສພເມຖຸນສັມມ໌ໃນສຕຣີລ້ຽງງົວນັ້ນ ໄປເຖິງເມືອງໂກສັມພີແລ້ວ ແຈ້ງເຣື່ອງນີ້ແກ່ກິກຂຸທັ້ງຫລາຍໆ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸນັ້ນບໍ່ຕ້ອງອາບັຕິປາຣາຊິກ ເພາະອທິນນາທານແຕ່ຕ້ອງອາບັຕິປາຣາຊິກ ເພາະເສພເມຖຸນສັມມ໌ຯ

ເຣື່ອງສັທສິວິຫາຣິກພຣະທັລທິກະເມືອງສາຄລະ

[໑໗໕] ກໍໂດຍສມັຍນັ້ນແລ ກິກຂຸສັທສິວິຫາຣິກຂອງທ່ານພຣະທັລທິກະໃນເມືອງສາຄລະ ຖືກຄວາມກະສັນບີບຄັ້ນແລ້ວ ໄດ້ລັກຜ້າໂພກຂອງຊາວຮ້ານໄປ ແລ້ວໄດ້ກ່າວຄຳນີ້ກັບທ່ານພຣະທັລທິກະວ່າ ຂ້ານ້ອຍບໍ່ເປັນສມຕະ ຈັກລາສິກຂາ ຂ້ານ້ອຍ

ທ່ານພຣະທັລທິກະຖາມວ່າ ທ່ານທຳອັນໃດໄວ້ຯ

ກິກຂຸນັ້ນສາຣະກາພວ່າ ລັກຜ້າໂພກຂອງຊາວຮ້ານ ຂ້ານ້ອຍ

ທ່ານພຣະທັລທິກະໃຫ້ນຳຜ້າໂພກນັ້ນມາ ແລ້ວໃຫ້ຊາວຮ້ານຕີຣາຄາເມື່ອຕີຣາຄາຜ້າໂພກນັ້ນ ຣາຄາບໍ່ເຖິງ ໕ ມາສົກ ທ່ານພຣະທັລທິກະຊີ້ແຈງເຫຕຸຜົລວ່າ ທ່ານບໍ່ຕ້ອງອາບັຕິປາຣາຊິກ ດັ່ງນີ້ ກິກຂຸນັ້ນຍິນດີຍິ່ງນັກແລ.

ປາຣາຊິກສິກຂາບົທ ທີ່ ໒ ຈົບ.

ຕຕິຍປາຣາຊິກສິກຂາບົທ

ນິທານປຖົມບັນຍັຕິ ເຣື່ອງພິກສຸຫລາຍອົງຄ໌

[໑໗໘] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທธເຈົ້າປະທັບຢູ່ ຓ ກູຕາຄາຣສາລາ ປ່າມຫາວັນ ເຂຕພຣະນຄຣເວສາລີ ຄັ້ງນັ້ນພຣະອົງຄ໌ຊົງສະແດງອສຸภກຖາ ຊົງພັຣຓນາຄຸຓແຫ່ງອສຸภກັມມັຕຖານ ຊົງສັຣເສີນຄຸຓແຫ່ງການຈເຣີນອສຸภກັມມັຕຖານ ຊົງພັຣຓນາຄຸຓອສຸภສມາບັຕິເນືອງໆ ໂດຍອເນກ ປຣິຍາຍແກ່ພິກສຸທັ້ງຫລາຍ ແລ້ວຮັບສັ່ງກັບພິກສຸທັ້ງຫລາຍວ່າ ດູຣາພິກສຸທັ້ງຫລາຍ ເຣົາປັຕຖນາຈະຫລີກ ອອກເຣັ້ນຢູ່ຕລອດເຄິ່ງເດືອນ ໃຜໆ ຢ່າເຂົ້າໄປຫາເຣົາ ນອກຈາກພິກສຸຜູ້ນຳບິຓฑບາຕເຂົ້າໄປໃຫ້ອົງຄ໌ດຽວ ພິກສຸເຫລົ່ານັ້ນຮັບ ຮັບສັ່ງແລ້ວ ບໍ່ມີໃຜກ້າເຂົ້າໄປເຝົ້າພຣະຜູ້ມີພຣະພາຄເລີຍ ນອກຈາກພິກສຸຜູ້ນຳບິຓฑບາຕ ເຂົ້າໄປຖວາຍອົງຄ໌ດຽວ ພິກສຸເຫລົ່ານັ້ນສົນທນາກັນວ່າ ພຣະຜູ້ມີພຣະພາຄຊົງສະແດງອສຸภກຖາ ຊົງພັຣຓນາຄຸຓແຫ່ງອສຸภກັມມັຕຖານ ຊົງສັຣເສີນຄຸຓແຫ່ງການຈເຣີນອສຸภກັມມັຕຖານ ຊົງພັຣຓນາຄຸຓແຫ່ງອສຸภ-ສມາບັຕິເນືອງໆ ໂດຍອເນກປຣິຍາຍດັ່ງນີ້ ແລ້ວພາກັນປະກອບຄວາມພຽຣໃນການຈເຣີນອສຸภກັມມັຕຖານ ຫລາຍຢ່າງຫລາຍກະບວນຢູ່ ພິກສຸເຫລົ່ານັ້ນ ອຶດອັດ ຣະອາ ບໍ່ມັກຮ່າງກາຍຂອງຕົນ ເໝືອນສຕຣີ ຮຸ່ນສາວຫຼືບຸຣຸษຮຸ່ນຫນຸ່ມ ພໍໃຈໃນການຕົກແຕ່ງກາຍ ອາບນ້ຳສຣະເກົ້າ ມີຊາກສົພງູ ຊາກສົພສຸນັຂ ຫຼືຊາກສົພມນຸษຍ໌ມາຄ້ອງຢູ່ທີ່ຄໍ ຈະອຶດອັດ ສະອິດສະອຽນ ບໍ່ພໍໃຈ ດັ່ງນັ້ນ ຈຶ່ງປົງຊີວິຕ ຕົນເອງແດ່ ວານກັນແລະກັນໃຫ້ປົງຊີວິຕແດ່ ບາງເຫລົ່າກໍເຂົ້າໄປຫາມິຄລັຓฑິກສມົຓກຸຕຕກ໌ ໑ ກ່າວ ຢ່າງນີ້ວ່າ ທ່ານ ຂໍທ່ານໄດ້ປົງຊີວິຕພວກຂ້ອຍທີ ບາຕຣ໌ຈີວຣນີ້ຈັກເປັນຂອງທ່ານ ຄັ້ງນັ້ນມິຄລັຓฑິກ ສມົຓກຸຕຕກ໌ ອັນພິກສຸທັ້ງຫລາຍຈ້າງດ້ວຍບາຕຣ໌ຈີວຣ ຈຶ່ງປົງຊີວິຕພິກສຸຫຼວງຫຼາຍແລ້ວ ຖືດາບເປື້ອນ ເລືອດເດີນໄປທາງແມ່ນ້ຳວັຄຄຸມຸທາ ຂຓະເມື່ອມິຄລັຓฑິກສມົຓກຸຕຕກ໌ ກຳລັງລ້າງດາບທີ່ເປື້ອເລືອດນັ້ນຢູ່ ໄດ້ມີຄວາມຣຳຄາญ ຄວາມເດືອດຮ້ອນວ່າ ບໍ່ແມ່ນລາภຂອງເຣົານໍ ລາภຂອງເຣົາບໍ່ມີນໍ ເຣົາໄດ້ຊົ່ວແລ້ວ ນໍ ເຣົາບໍ່ໄດ້ດີແລ້ວນໍ ເຣົາສ້າງບາປໄວ້ມາກຈິງນໍ ເພາະເຣົາໄດ້ປົງຊີວິຕພິກສຸທັ້ງຫລາຍ ຊຶ່ງເປັນຜູ້ມີສິລ ມີກັລຍາຓທັມມ໌ ຂຓະນັ້ນເທພດາຕົນນຶ່ງຜູ້ນັບເນື່ອງໃນຫມູ່ມາຣ ເດີນມາເທິງນ້ຳບໍ່ໄດ້ແຕກ ໄດ້ກ່າວຄຳນີ້ກັບເຂົາວ່າ ດີແລ້ວ ດີແລ້ວ ທ່ານສັຕບຸຣຸษ ເປັນລາภທ່ານ ທ່ານໄດ້ດີແລ້ວ ທ່ານໄດ້ສ້າງສົມ ບຸญໄວ້ຫຼາຍ ເພາະທ່ານໄດ້ຊ່ອຍສິ່ງຄົນທີ່ຍັງຂ້າມບໍ່ພົ້ນໃຫ້ຂ້າມພົ້ນໄດ້ ພໍມິຄລັຓฑິກສມົຓກຸຕຕກ໌ ໄດ້ຮູ້ວ່າເປັນລາภຂອງເຣົາ ເຣົາໄດ້ດີແລ້ວ ເຣົາໄດ້ສ້າງສົມບຸญໄວ້ຫຼາຍ ເພາະເຣົາໄດ້ຊ່ອຍສິ່ງຄົນທີ່ຍັງ ຂ້າມບໍ່ພົ້ນໃຫ້ຂ້າມພົ້ນໄດ້ ດັ່ງນີ້ ຈຶ່ງຖືດາບອັນຄົມ ຈາກວິຫາຣເຂົ້າໄປສູ່ວິຫາຣ ຈາກບໍຣິເວຓເຂົ້າໄປສູ່ #໑ ຄົນໂກນຜົມໄວ້ຈຸກນຸ່ງຜ້າກາສາວະຜືນນຶ່ງ ຫົ່ມຜືນນຶ່ງ ທຳນອງເປັນຕາເຖນ ๗

ບໍຣິເວຓ ແລ້ວກ່າວຢ່າງນີ້ວ່າ ໃຜຍັງຂ້າມບໍ່ພົ້ນ ຂ້າພເຈົ້າຈະຊ່ວຍສົ່ງໃຫ້ຂ້າມພົ້ນ ບັຣດາກິກຸເຫລົ່ານັ້ນ ກິກຸເຫລົ່າໃດ ຍັງບໍ່ປາສຈາກຣາຄະ ຄວາມຢ້ານ ຄວາມຫວາດສຽວ ຄວາມສຍອງ ຍ່ອມມີແກ່ກິກຸ ເຫລົ່ານັ້ນໃນເວລານັ້ນ ສ່ວນກິກຸເຫລົ່າໃດປາສຈາກຣາຄະແລ້ວ ຄວາມຢ້ານ ຄວາມຫວາດສຽວ ຄວາມສຍອງ ຍ່ອມບໍ່ມີແກ່ກິກຸເຫລົ່ານັ້ນໃນເວລານັ້ນ ຄັ້ງນັ້ນມິຄລັຕຫິກສມົຕກຸຕກ໌ ປົງຊີວິຕກິກຸເສັຽວັນລະ ໑ ອົງຄ໌ແດ່ ໒ ອົງຄ໌ແດ່ ໓ ອົງຄ໌ແດ່ ໔ ອົງຄ໌ແດ່ ໕ ອົງຄ໌ແດ່ ໖ ອົງຄ໌ແດ່ ໗ ອົງຄ໌ແດ່ ໘ ອົງຄ໌ແດ່ ໙ ອົງຄ໌ແດ່ ໑໐ ອົງຄ໌ແດ່ ໒໐ ອົງຄ໌ແດ່ ໓໐ ອົງຄ໌ແດ່ ໔໐ ອົງຄ໌ແດ່ ໕໐ ອົງຄ໌ແດ່ ໖໐ ອົງຄ໌ແດ່.

ຮັບສັ່ງໃຫ້ຜຽງ[9]ສົງຄ໌

[໑໗໗] ພໍລ່ວງເຄິ່ງເດືອນນັ້ນ ພຣະຜູ້ມີພຣະກາຄສເດັຈອອກຈາກທີ່ປະທັບເຮັ້ນແລ້ວ ຮັບສັ່ງ ຖາມທ່ານພຣະອານົນທ໌ວ່າ ດູຣາອານົນທ໌ ເຫຕຸຈັ່ງໃດເດ້ ກິກຸສົງຄ໌ຈຶ່ງເບິ່ງຄືນ້ອຍໄປ

ທ່ານພຣະອານົນທ໌ຂາບທູລວ່າ ຈິງຢ່າງນັ້ນ ພຣະພຸທສເຈົ້າຂ້ານ້ອຍ ເພາະພຣະອົງຄ໌ຊົງສະແດງ ອສຸກກຖາ ຊົງພັຣຕນາຄຸຕແຫ່ງອສຸກກັມມັຕຖານ ຊົງສັຣເສີນຄຸຕແຫ່ງການຈເຣີນອສຸກກັມມັຕຖານ ຊົງພັຣຕນາຄຸຕແຫ່ງອສຸກສມາບັຕິເນືອງໆ ໂດຍອເນກປຣິຍາຍແກ່ກິກຸທັ້ງຫລາຍ ພຣະພຸທສເຈົ້າຂ້ານ້ອຍ ແລະ ກິກຸເຫລົ່ານັ້ນກໍພາກັນເວົ້າວ່າ ພຣະຜູ້ມີພຣະກາຄຊົງສະແດງອສຸກກຖາ ຊົງພັຣຕນາຄຸຕແຫ່ງອສຸກກັມມັຕຖານ ຊົງສັຣເສີນຄຸຕແຫ່ງການຈເຣີນອສຸກກັມມັຕຖານ ຊົງພັຣຕນາຄຸຕແຫ່ງອສຸກສມາບັຕິເນືອງໆ ໂດຍອເນກ ປຣິຍາຍ ຈຶ່ງພາກັນປະກອບຄວາມພຽຣໃນການຈເຣີນອສຸກກັມມັຕຖານ ຫລາຍຢ່າງຫລາຍກະບວນຢູ່ ທ່ານເຫລົ່ານັ້ນ ອຶດອັດ ຣະອາ ບໍ່ມັກຮ່າງກາຍຂອງຕົນ ເໝືອນສຕຣີຮຸ່ນສາວຫຼືບຸຣຸຜຮຸ່ນຫນຸ່ມ ພໍໃຈ ໃນການຕົກແຕ່ງກາຍ ອາບນ້ຳ ສຣະເກົ້າ ມີຊາກສົພງູ ຊາກສົພສຸນັຂ ຫຼືຊາກສົພມນຸຜຍ໌ມາຄ້ອງຢູ່ ທີ່ຄໍ ຈະອຶດອັດ ສະອິດສະອຽນ ບໍ່ມັກ ດັ່ງນັ້ນ ຈຶ່ງປົງຊີວິຕຕົນເອງແດ່ ວານກັນແລະກັນ ໃຫ້ປົງຊີວິຕແດ່ ບາງເຫລົ່າກໍເຂົ້າໄປຫາມິຄລັຕຫິກສມົຕກຸຕກ໌ ກ່າວຢ່າງນີ້ວ່າ ທ່ານ ຂໍທ່ານໄດ້ ຊ່ວຍປົງຊີວິຕພວກຂ້ອຍທີ ບາຕຣ໌ຈີວຣນີ້ຈະເປັນຂອງທ່ານ ພຣະພຸທສເຈົ້າຂ້ານ້ອຍ ພໍມິຄລັຕຫິກສມົຕກຸຕກ໌ ໄດ້ບາຕຣ໌ຈີວຣເປັນຄ່າຈ້າງແລ້ວ ຈຶ່ງປົງຊີວິຕກິກຸເສັຽວັນລະ ໑ ອົງຄ໌ແດ່ ໒ ອົງຄ໌ແດ່ ໓ ອົງຄ໌ແດ່ ໔ ຮູປ ແດ່ ໕ ອົງຄ໌ແດ່ ໖ ອົງຄ໌ແດ່ ໗ ອົງຄ໌ແດ່ ໘ ອົງຄ໌ແດ່ ໙ ອົງຄ໌ແດ່ ໑໐ ອົງຄ໌ແດ່ ໒໐ ອົງຄ໌ແດ່ ໓໐ ຮູປ ແດ່ ໔໐ ອົງຄ໌ແດ່ ໕໐ ອົງຄ໌ແດ່ ໖໐ ອົງຄ໌ແດ່ ຂ້າພຣະພຸທສເຈົ້າຂໍປະທານພຣະວໂຣກາສ ກິກຸສົງຄ໌ນີ້ ຈະດຳຣົງຢູ່ໃນພຣະອຣຫັຕຕຜົລດ້ວຍປຣິຍາຍໃດ ຂໍພຣະຜູ້ມີພຣະກາຄຈົ່ງຕຣັສບອກປຣິຍາຍອື່ນນັ້ນເທີ້ນ ພຣະພຸທສເຈົ້າຂ້ານ້ອຍ

---

[9] **ຜຽງ** ບອກແຈ້ງໃຫ້ຮູ້, ບອກນິມົນຕ໌, ບອກກ່າວຫຼືປະກາສເຊື້ອເຊີນເພື່ອໃຫ້ຮ່ວມທຳກິຈໂດຍພ້ອມພຽງກັນ

ພຣະຜູ້ມີພຣະພາຄຕຣັສວ່າ ດູຣາອານົນທ໌ ຖ້າເຊັ່ນນັ້ນ ທ່ານຈົງຜຽງພິກຂຸທີ່ອາສັຍພຣະນຄຣ ເວສາລີຢູ່ທັ້ງໝົດ ໃຫ້ປະຊຸມກັນທີ່ອຸປັຏຖານສາລາ

ເປັນດັ່ງຮັບສັ່ງພຣະພຸທສເຈົ້າຂ້ານ້ອຍ ທ່ານພຣະອານົນທ໌ຮັບສນອງພຣະພຸທສພົຈນ໌ແລ້ວ ຈຶ່ງຜຽງພິກຂຸສົງຆ໌ທີ່ອາສັຍພຣະນຄຣເວສາລີຢູ່ທັ້ງສິ້ນ ໃຫ້ປະຊຸມທີ່ອຸປັຏຖານສາລາ ແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ຂາບທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ພິກຂຸສົງຆ໌ປະຊຸມພ້ອມກັນແລ້ວ ຂໍພຣະອົງຄ໌ຊົງພຣະກຣຸຓາໂປຣດຮູ້ການອັນຄວຣ ໃນບັດນີ້ເທີ້ນ ພຣະພຸທສເຈົ້າຂ້ານ້ອຍ.

ຊົງສະແດງອານາປານສຕິສມາធິກຖາ

[໑໗໘] ລຳດັບນັ້ນ ພຣະຜູ້ມີພຣະພາຄສເດັຈເຂົ້າສູ່ອຸປັຏຖານສາລາປະທັບນັ່ງເໜືອພຸທສອາສນ໌ທີ່ຈັດໄວ້ຖວາຍ ແລ້ວຮັບສັ່ງກັບພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ແມ້ສມາធິໃນອານາປານສຕິນີ້ແລ ອັນພິກຂຸອົບຮົມເຮັດໃຫ້ຫຼາຍແລ້ວ ຍ່ອມເປັນຄຸຓສງົບ ປະຓີຕ ເຢືອກເຢັນ ຢູ່ເປັນສຸຂ ແລະຍັງບາປອກຸສົລສັມມ໌ທີ່ເກີດຂຶ້ນແລ້ວໆ ໃຫ້ອັນຕຣສານສງົບໄປໂດຍລັບພັ້ນ ເໝືອນລະອອງແລະຝຸ່ນທີ່ຟຸ້ງ ຂຶ້ນໃນເດືອນທ້າຍຣະດູຮ້ອນ ຝົນໃຫຍ່ທີ່ຕົກໃນສມັຍບໍ່ແມ່ນຣະດູການ ຍ່ອມຍັງລະອອງແລະຝຸ່ນນັ້ນໆ ໃຫ້ອັນຕຣສານສງົບໄປໄດ້ ໂດຍລັບພັ້ນ ດັ່ງນັ້ນ

ດູຣາພິກຂຸທັ້ງຫລາຍ ກໍອານາປານສຕິສມາធິ ອັນພິກຂຸອົບຮົມຈັ່ງໃດ ເຮັດໃຫ້ຫຼາຍຈັ່ງໃດ ຈຶ່ງເປັນຄຸຓສງົບ ປະຓີຕ ເຢືອກເຢັນ ຢູ່ເປັນສຸຂ ແລະຍັງບາປອກຸສົລສັມມ໌ທີ່ເກີດຂຶ້ນແລ້ວໆ ໃຫ້ອັນຕຣສານສງົບໄປໂດຍລັບພັ້ນ

ດູຣາພິກຂຸທັ້ງຫລາຍ ພິກຂຸໃນສັມມ໌ວິນັຍນີ້ ຢູ່ໃນປ່າກໍຕາມ ຢູ່ ໓ ໂຄນໄມ້ກໍຕາມ ຢູ່ໃນສຖານທີ່ສງັດກໍຕາມ ນັ່ງຄູ້ບັລລັງກ໌ຕັ້ງກາຍຕົງດຳຣົງສຕິບ່າຍໜ້າສູ່ກັມມ໌ຖານ ພິກຂຸນັ້ນຍ່ອມມີສຕິຫາຍໃຈເຂົ້າ ມີສຕິຫາຍໃຈອອກ ເມື່ອຫາຍໃຈເຂົ້າຍາວ ກໍຮູ້ສຶກວ່າຫາຍໃຈເຂົ້າຍາວ ຫຼືເມື່ອຫາຍໃຈອອກຍາວ ກໍຮູ້ສຶກວ່າຫາຍໃຈອອກຍາວ ເມື່ອຫາຍໃຈເຂົ້າສັ້ນ ກໍຮູ້ສຶກວ່າຫາຍໃຈເຂົ້າສັ້ນ ຫຼືເມື່ອຫາຍໃຈອອກສັ້ນ ກໍຮູ້ສຶກວ່າຫາຍໃຈອອກສັ້ນ ຍ່ອມສຳໜຽກວ່າ ເຮົາຈັກຮູ້ແຈ້ງຊຶ່ງກອງລົມທັ້ງປວງຫາຍໃຈເຂົ້າ ຍ່ອມສຳໜຽກວ່າ ເຮົາຈັກຮູ້ແຈ້ງຊຶ່ງກອງລົມທັ້ງປວງຫາຍໃຈອອກ ຍ່ອມສຳໜຽກວ່າ ເຮົາຈັກລະງັບກາຍສັງຂາຣຫາຍໃຈເຂົ້າ ຍ່ອມສຳໜຽກວ່າ ເຮົາຈັກລະງັບກາຍສັງຂາຣຫາຍໃຈອອກ ຍ່ອມສຳໜຽກວ່າ ເຮົາຈັກຮູ້ແຈ້ງຊຶ່ງປີຕິຫາຍໃຈເຂົ້າ ຍ່ອມສຳໜຽກວ່າ ເຮົາຈັກຮູ້ແຈ້ງຊຶ່ງປີຕິຫາຍໃຈອອກ ຍ່ອມສຳໜຽກວ່າ ເຮົາຈັກຮູ້ແຈ້ງຊຶ່ງສຸຂຫາຍໃຈເຂົ້າ ຍ່ອມສຳໜຽກວ່າ ເຮົາຈັກຮູ້ແຈ້ງຊຶ່ງສຸຂຫາຍໃຈອອກ ຍ່ອມສຳໜຽກວ່າ ເຮົາຈັກຮູ້ແຈ້ງຊຶ່ງຈິຕສັງຂາຣຫາຍໃຈເຂົ້າ ຍ່ອມສຳໜຽກວ່າ ເຮົາຈັກຮູ້ແຈ້ງຊຶ່ງຈິຕສັງຂາຣຫາຍໃຈອອກ ຍ່ອມສຳໜຽກວ່າ ເຮົາຈັກລະງັບ

ຈິຕສັງຂາຣຫາຍໃຈເຂົ້າ ຍ່ອມສຳເໜຽກວ່າ ເຮົາຈັກຣະງັບຈິຕສັງຂາຣຫາຍໃຈອອກ ຍ່ອມສຳເໜຽກວ່າ ເຮົາຈັກຮູ້ແຈ້ງຊຶ່ງຈິຕຫາຍໃຈເຂົ້າ ຍ່ອມສຳເໜຽກວ່າ ເຮົາຈັກຮູ້ແຈ້ງຊຶ່ງຈິຕຫາຍໃຈອອກ ຍ່ອມສຳເໜຽກວ່າ ເຮົາຈັກຍັງຈິຕໃຫ້ບັນເທີງຫາຍໃຈເຂົ້າ ຍ່ອມສຳເໜຽກວ່າ ເຮົາຈັກຍັງຈິຕໃຫ້ບັຣເທີງຫາຍໃຈອອກ ຍ່ອມສຳເໜຽກວ່າ ເຮົາຈັກຕັ້ງຈິຕໄວ້ມັ່ນຫາຍໃຈເຂົ້າ ຍ່ອມສຳເໜຽກວ່າ ເຮົາຈັກຕັ້ງຈິຕໄວ້ມັ່ນຫາຍໃຈອອກ ຍ່ອມສຳເໜຽກວ່າ ເຮົາຈັກປ່ອຍຈິຕຫາຍໃຈເຂົ້າ ຍ່ອມສຳເໜຽກວ່າ ເຮົາຈັກປ່ອຍຈິຕຫາຍໃຈອອກ ຍ່ອມສຳເໜຽກວ່າ ເຮົາຈັກພິຈາຣຕາເຫັນສັມມ໌ອັນບໍ່ທ່ຽງຫາຍໃຈເຂົ້າ ຍ່ອມສຳເໜຽກວ່າ ເຮົາຈັກພິຈາຣຕາເຫັນສັມມ໌ອັນບໍ່ທ່ຽງຫາຍໃຈອອກ ຍ່ອມສຳເໜຽກວ່າ ເຮົາຈັກພິຈາຣຕາເຫັນວິຣາຄະຫາຍໃຈເຂົ້າ ຍ່ອມສຳເໜຽກວ່າ ເຮົາຈັກພິຈາຣຕາເຫັນວິຣາຄະຫາຍໃຈອອກ ຍ່ອມສຳເໜຽກວ່າ ເຮົາຈັກພິຈາຣຕາເຫັນນິໂຣຣຫາຍໃຈເຂົ້າ ຍ່ອມສຳເໜຽກວ່າ ເຮົາຈັກພິຈາຣຕາເຫັນນິໂຣຣຫາຍໃຈອອກ ຍ່ອມສຳເໜຽກວ່າ ເຮົາຈັກພິຈາຣຕາເຫັນປຏິນິສສັຄຄະຫາຍໃຈເຂົ້າ ຍ່ອມສຳເໜຽກວ່າ ເຮົາຈັກພິຈາຣຕາເຫັນປຏິນິສສັຄຄະຫາຍໃຈອອກ

ດູຣາພິກຂຸທັ້ງຫລາຍ ອານາປານສຕິສມາຣິ ອັນພິກຂຸອົບຣົມແລ້ວຢ່າງນີ້ແລ ເຮັດໃຫ້ຫຼາຍແລ້ວຢ່າງນີ້ແລ ຈຶ່ງເປັນຄຸຕສງົບ ປະຕີຕ ເຢືອກເຢັນ ຢູ່ເປັນສຸຂ ແລະຍັງບາປອກຸສົລສັມມ໌ທີ່ເກີດຂຶ້ນແລ້ວໆ ໃຫ້ອັນຕຣຣານສງົບໄປໄດ້ໂດຍລັບພັ້ນ.

ປະຊຸມສົງຄ໌ຊົງບັຌລັຕິສິກຂາບົທ

[໑໗໙] ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມພິກຂຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ຂ່າວວ່າພວກພິກຂຸປົງຊີວິຕຕົນເອງແດ່ ວານກັນແລະກັນໃຫ້ປົງຊີວິຕແດ່ ບາງເຫລົ່າກໍໄປຫາມິຄລັຕຫິກສມັຕກຸຕຕກ໌ກ່າວຢ່າງນີ້ວ່າ ທ່ານ ຂໍທ່ານໄດ້ຊ່ອຍປົງຊີວິຕພວກລັນທິ ບາຕຣ໌ຈີວຣນີ້ຈັກເປັນຂອງທ່ານ ດັ່ງນີ້ ຈິງຫຼື?

ພິກຂຸທັ້ງຫລາຍທູລຮັບວ່າ ຈິງ ພຣະພຸທຣເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະພາຄພຸທຣເຈົ້າຊົງຕິຕຽນວ່າ ດູຣາພິກຂຸທັ້ງຫລາຍ ກາຣກະທຳຂອງພິກຂຸເຫລົ່ານັ້ນບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຕະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ຈັ່ງໃດພິກຂຸເຫລົ່ານັ້ນຈຶ່ງໄດ້ປົງຊີວິຕຕົນເອງແດ່ ວານກັນແລະກັນໃຫ້ປົງຊີວິຕແດ່ ບາງເຫລົ່າກໍເຂົ້າໄປຫາມິຄລັຕຫິກສມັຕກຸຕຕກ໌ເວົ້າຢ່າງນີ້ວ່າ ທ່ານ ຂໍທ່ານໄດ້ຊ່ອຍປົງຊີວິຕພວກລັນທິ ບາຕຣ໌ຈີວຣນີ້ຈັກເປັນຂອງທ່ານ ດັ່ງນີ້ລະ ດູຣາພິກຂຸທັ້ງຫລາຍ ກາຣກະທຳຂອງພິກຂຸເຫລົ່ານັ້ນນັ່ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຜູ້ທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ກາຣກະທຳຂອງພິກຂຸເຫລົ່າ

ນັ້ນນັ່ນ ເປັນໄປເພື່ອຄວາມບໍ່ເລື່ອມໃສ ຂອງຜູ້ທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຄົນບາງພວກຜູ້ເລື່ອມໃສແລ້ວ ພໍພຣະຜູ້ມີພຣະກາຄຊົງຕິຕຽນກິກຂຸເຫລົ່ານັ້ນໂດຍອເນກປຣິຍາຍແລ້ວ ຈຶ່ງຊົງຕິໂທษແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດษ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຊົງສັຣເສີນຄຸຓແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມເປັນຄົນມັກນ້ອຍ ຄວາມເປັນຄົນສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາການທີ່ໜ້າເລື່ອມໃສ ການບໍ່ສະສົມ ການປາຣົກຄວາມພຽຣໂດຍອເນກປຣິຍາຍ ແລ້ວຊົງສະແດງທັມມີກຖາທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເຫມາະສົມແກ່ເຣື່ອງນັ້ນແກ່ກິກຂຸທັ້ງຫລາຍ ແລ້ວຮັບສັ່ງກັບກິກຂຸທັ້ງຫລາຍວ່າ

ດູຣາກິກຂຸທັ້ງຫລາຍ ເພາະເຫຕຸນັ້ນແລ ເຮົາຈັກບັญญັຕິສິກຂາບົທແກ່ກິກຂຸທັ້ງຫລາຍ ອາศຍອຳນາຈປະໂຍຊນ໌ ໑໐ ປະການ ຄື ເພື່ອຄວາມຮັບວ່າດີແຫ່ງສົງฆ໌ ໑ ເພື່ອຄວາມສຳຣາญແຫ່ງສົງฆ໌ ໑ ເພື່ອຂົ່ມບຸຄຄົລຜູ້ເກີ້ຍາກ ໑ ເພື່ອຢູ່ສຳຣາญແຫ່ງກິກຂຸຜູ້ມີສີລເປັນທີ່ຮັກ ໑ ເພື່ອປ້ອງກັນອາສວະອັນຈະບັງເກີດໃນປັຈຈຸບັນ ໑ ເພື່ອກຳຈັດອາສວະຈັກບັງເກີດໃນອນາຄົຕ ໑ ເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ໑ ເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໑ ເພື່ອຄວາມຕັ້ງມັ່ນແຫ່ງພຣະສັທ-ທັມມ໌ ໑ ເພື່ອຖືຕາມພຣະວິນັຍ ໑

ດູຣາກິກຂຸທັ້ງຫລາຍ ກໍແລພວກທ່ານຄວຣຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:-

ພຣະປຖົມບັญญັຕິ

໓. ອີກຢ່າງ ກິກຂຸໃດຈົງໃຈພູາກກາຍມນຸษຍ໌ຈາກຊີວິຕ ຫຼືສແວງຫາศສຕຣາອັນຈະປົ໊ດຊີວິຕໃຫ້ແກ່ກາຍມນຸษຍ໌ນັ້ນ ແມ້ກິກຂຸນີ້ກໍເປັນປາຣາຊິກ ຫາສັງວາສບໍ່ໄດ້

ກໍສິກຂາບົທນີ້ ຍ່ອມເປັນອັນພຣະຜູ້ມີພຣະກາຄຊົງບັญญັຕິແລ້ວ ແກ່ກິກຂຸທັ້ງຫລາຍ ດ້ວຍປະການນີ້ ຯ

ເຣື່ອງພຣະລັພພັຄຄີຍ໌

[໑໗໐] ກໍໂດຍສມັຍນັ້ນແລ ອຸບາສົກຄົນນຶ່ງເປັນໄຂ້ ກຣິຍາຂອງເຂົາເປັນຄົນງາມ ໜ້າອີ່ດູໜ້າຊົມ ພວກພຣະລັພພັຄຄີຍ໌ມີຈິຕປຜິພັທທ໌ໃນລົງນັ້ນຈຶ່ງດຳຣິຂຶ້ນວ່າ ຖ້າອຸບາສົກສາມີຍັງມີຊີວິຕຢູ່ ພວກເຮົາຈະບໍ່ໄດ້ນາງ ຄິດດັ່ງນັ້ນ ພວກເຮົາຈັກພັຣຓນາຄຸຓແຫ່ງຄວາມຕາຍແກ່ອຸບາສົກນັ້ນ ພໍດຳຣິນີ້ແລ້ວຈຶ່ງເຂົ້າໄປຫາອຸບາສົກນັ້ນກ່າວຢ່າງນີ້ວ່າ ດູຣາອຸບາສົກ ທ່ານເປັນຜູ້ທຳຄວາມດີໄວ້ແລ້ວ ທຳກຸສົລໄວ້ແລ້ວທຳຄວາມຕ້ານທານຕໍ່ຄວາມຂີ້ຂາດໄວ້ແລ້ວ ບໍ່ໄດ້ທຳບາປ ບໍ່ໄດ້ທຳຄວາມຊົ່ວ ບໍ່ໄດ້ທຳຄວາມເສັຽຫາຍ ທຳແຕ່ຄວາມດີ ບໍ່ໄດ້ທຳບາປ ຈະປະໂຍຊນ໌ອັນໃດແກ່ທ່ານດ້ວຍຊີວິຕອັນແສນລຳບາກຍາກແຄ້ນນີ້ ທ່ານຕາຍ

ເສັ່ງດີກວ່າເປັນຢູ່ ຕາຍຈາກໂລກນີ້ແລ້ວ ເບື້ອງຫນ້າແຕ່ຕາຍເພາະກາຍແຕກ ທ່ານຈັກເຂົ້າເຖິງສຸຄຕິໂລກ
ສວັຣຄ໌ ຈັກໄດ້ຮັບບຳເຣີພູບພ້ອມອີ່ມເອີບດ້ວຍເບັ່ຍຈກາມຄຸຕອັນເປັນທິພຍ໌ ໃນສຸຄຕິໂລກສວັຣຄ໌ນັ້ນ

ຄັ້ງນັ້ນ ອຸບາສິການັ້ນເຫັນຈິງວ່າ ທ່ານເວົ້າຈິງ ເພາະເຮົາເຮັດຄວາມດີໄວ້ແລ້ວ ທຳກຸສົລໄວ້ແລ້ວ
ທຳຄວາມຕ້ານທານຕໍ່ຄວາມຂີ້ຂາດໄວ້ແລ້ວ ບໍ່ໄດ້ທຳບາປ ບໍ່ໄດ້ທຳຄວາມຊົ່ວ ບໍ່ໄດ້ທຳຄວາມເສັ່ງຫາຍ ເຮົາ-
ທຳແຕ່ຄວາມດີ ເຮົາບໍ່ໄດ້ທຳຄວາມຊົ່ວ ຈະປະໂຍຊນ໌ອັນໃດແກ່ເຮົາ ດ້ວຍຊີວິຕອັນແສນລຳບາກຍາກແຄ້ນນີ້
ເຮົາຕາຍເສັ່ງດີກວ່າເປັນຢູ່ ຕາຍຈາກໂລກນີ້ ແລ້ວເບື້ອງຫນ້າແຕ່ຕາຍເພາະກາຍແຕກ ເຮົາຈັກເຂົ້າເຖິງສຸຄຕິ
ໂລກສວັຣຄ໌ ຈັກໄດ້ຮັບບຳເຣີພູບພ້ອມອີ່ມເອີບດ້ວຍເບັ່ຍຈກາມຄຸຕອັນເປັນທິພຍ໌ ໃນສຸຄຕິໂລກ-
ສວັຣຄ໌ນັ້ນ ດັ່ງນີ້ແລ້ວ ເຂົາຈຶ່ງປະທານໂກຊນະທີ່ສແລງ ຍ້ຳຂາທນີຍະທີ່ສແລງ ຊິມສາຍນີຍະທີ່ສແລງ
ແລະດື່ມປານະທີ່ສແລງ ເມື່ອເປັນເຊັ່ນນັ້ນ ຄວາມປ່ວຍຫນັກກໍເກີດຂຶ້ນ ເຂົາເຖິງແກ່ກັມມ໌ເພາະປ່ວຍໄຂ້ນັ້ນ-
ເອງ ກຣິຍາຂອງເຂົາຈຶ່ງເພັ່ງໂທษວ່າ ພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ເຫລົ່ານີ້ ເປັນຜູ້ບໍ່ລະອາຍ ທຸສີລ
ເວົ້າເທັຈ ແທ້ຈິງພຣະສມຕະເຫລົ່ານີ້ ຍັງປະຕິຍາຕຕົນວ່າ ເປັນຜູ້ປະພຶຕສັມມ໌ ປະພຶຕສງົບ ປະ-
ພຶຕພຣົຫ໌ມຈັຣຍ໌ ກ່າວຄຳສັຕຍ໌ ມີສີລ ມີກັລຍາຕສັມມ໌ ຕິຕຽນວ່າ ຄວາມເປັນສມຕະຍ່ອມບໍ່ມີແກ່
ພຣະສມຕະເຫລົ່ານີ້ ຄວາມເປັນພຣາຫມົຕ໌ຂອງພຣະສມຕະເຫລົ່ານີ້ ຫາມີບໍ່ ຄວາມເປັນສມຕະ ຄວາມ
ເປັນພຣາຫ໌ມນ໌ຂອງສມຕະເຫລົ່ານີ້ ພິນາສແລ້ວ ຄວາມເປັນສມຕະ ຄວາມເປັນພຣາຫມົຕ໌ຂອງພຣະສມຕະ
ເຫລົ່ານີ້ ຈະມີແຕ່ໃສ ແລະໂພນທະນາວ່າ ພຣະສມຕະເຫລົ່ານີ້ ປາສຈາກຄວາມເປັນສມຕະ ປາສຈາກ
ຄວາມເປັນພຣາຫ໌ມນ໌ເສັ່ງແລ້ວ ເພາະສມຕະເຫລົ່ານີ້ ໄດ້ພັຣຕນາຄຸຕແຫ່ງຄວາມຕາຍແກ່ສາມີຂອງເຮົາ
ສາມີຂອງເຮົາຖືກພຣະສມຕະເຫລົ່ານີ້ເຮັດໃຫ້ຕາຍແລ້ວ

ແມ້ຄົນເຫລົ່າອື່ນກໍເພັ່ງໂທษວ່າ ພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ເຫລົ່ານີ້ ເປັນຜູ້ບໍ່ລະອາຍ
ທຸສີລເວົ້າເທັຈ ແທ້ຈິງ ພຣະສມຕະເຫລົ່ານີ້ ຍັງປະຕິຍາຕຕົນວ່າ ເປັນຜູ້ປະພຶຕສັມມ໌ ປະພຶຕສງົບ
ປະພຶຕພຣົຫ໌ມຈັຣຍ໌ ກ່າວຄຳສັຕຍ໌ ມີສີລ ມີກັລຍາຕສັມມ໌ ຕິຕຽນວ່າ ຄວາມເປັນສມຕະ ຄວາມເປັນ
ພຣາຫມົຕ໌ຂອງສມຕະເຫລົ່ານີ້ ຫາມີບໍ່ ຄວາມເປັນສມຕະ ຄວາມເປັນພຣາຫມົຕ໌ຂອງພຣະສມຕະ-
ເຫລົ່ານີ້ ພິນາສແລ້ວ ຄວາມເປັນສມຕະ ຄວາມເປັນພຣາຫມົຕ໌ຂອງພຣະສມຕະເຫລົ່ານີ້ ຈະມີແຕ່ໃສ
ແລະໂພນທະນາວ່າ ພຣະສມຕະເຫລົ່ານີ້ ປາສຈາກຄວາມເປັນສມຕະ ປາສຈາກຄວາມເປັນພຣາຫ໌ມນ໌-
ເສັ່ງແລ້ວ ເພາະພຣະສມຕະເຫລົ່ານີ້ ພັຣຕນາຄຸຕແຫ່ງຄວາມຕາຍແກ່ອຸບາສິກາ ຖືກພຣະສມຕະເຫລົ່າ
ນີ້ເຮັດໃຫ້ຕາຍແລ້ວ ດັ່ງນີ້

ກິກษຸທັ້ງຫລາຍ ໄດ້ຍິນຄົນເຫລົ່ານັ້ນເພັ່ງໂທษຕິຕຽນໂພນທະນາຢູ່ ຈຳພວກທີ່ມີຄວາມມັກນ້ອຍ
ສັນໂດษ ມີຄວາມລະອາຍ ມີຄວາມຢ້ານບາປ ເປັນຜູ້ມັກຕໍ່ສິກຂາ ຕ່າງກໍເພັ່ງໂທษຕິຕຽນໂພນທະນາວ່າ

ຈັ່ງໃດພຣະວັພພັຄຄີຍ໌ ຈຶ່ງໄດ້ພັຣຕນາຄຸຕແຫ່ງຄວາມຕາຍແກ່ອຸບາສົກລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ

ປະຊຸມສົງຄ໌ຊົງບັນລັຕິອນຸບັນລັຕິ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຂຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນ-ເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມພຣະວັພພັຄຄີຍ໌ເຫລົ່ານັ້ນວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າພວກທ່ານພັຣຕນາຄຸຕແຫ່ງຄວາມຕາຍແກ່ອຸບາສົກຈິງຫຼື?

ພຣະວັພພັຄຄີຍ໌ທູລຮັບວ່າ ຈິງ ຂ້າພຣະພຸທສເຈົ້າ.

ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕິຕຽນວ່າ ດູຣາໂມຄບຸຣຸຫທັ້ງຫລາຍ ກາຣກະທຳຂອງພວກທ່ານນັ້ນບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຕະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ຈັ່ງໃດພວກທ່ານຈຶ່ງໄດ້ພັຣຕນາຄຸຕແຫ່ງຄວາມຕາຍແກ່ອຸບາສົກລະ ດູຣາໂມຄບຸຣຸຫທັ້ງຫລາຍ ກາຣກະທຳຂອງພວກທ່ານນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ກາຣກະທຳຂອງພວກທ່ານນັ້ນ ເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຜູ້ທີ່ຍັງບໍ່ເລື່ອມໃສ ແລະເພື່ອ-ຄວາມເປັນຢ່າງອື່ນຂອງຄົນບາງພວກທີ່ເລື່ອມໃສແລ້ວ ພໍພຣະຜູ້ມີພຣະກາຄຊົງຕິຕຽນພຣະວັພພັຄຄີຍ໌ເຫລົ່ານັ້ນໂດຍອເນກປຣິຍາຍແລ້ວ ຕຣັສໂທຫແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດຫ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຕຣັສຄຸຕແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດຫ ຄວາມຂັດເກຼົາ ຄວາມກຳຈັດອາການທີ່ໜ້າເລື່ອມໃສ ກາຣບໍ່ສະສົມ ກາຣປາຣົກຄວາມພຽຣໂດຍອເນກປຣິຍາຍ ຊົງສະແດງຣັມມີກຖາທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເຫມາະສົມແກ່ເຣື່ອງນັ້ນແກ່ກິກຂຸທັ້ງຫລາຍ ແລ້ວຮັບສັ່ງກັບກິກຂຸທັ້ງຫລາຍວ່າ

ດູຣາກິກຂຸທັ້ງຫລາຍ ເພາະເຫຕຸນັ້ນແລ ເຮົາຈັກບັນລັຕິສິກຂາບົທແກ່ກິກຂຸທັ້ງຫລາຍ ອາສຍອຳນາຈປະໂຍຊນ໌ ໑໐ ປະການ ຄືເພື່ອຄວາມຮັບວ່າດີແຫ່ງສົງຄ໌ ໑ ເພື່ອຄວາມສຳຣາລແຫ່ງສົງຄ໌ ໑ ເພື່ອຂົ່ມບຸຄຄົລຜູ້ເກີ້ຍາກ ໑ ເພື່ອຢູ່ສຳຣາລແຫ່ງກິກຂຸຜູ້ມີສີລເປັນທີ່ຮັກ ໑ ເພື່ອປ້ອງກັນອາສວະອັນຈະບັງເກີດໃນປັຈຈຸບັນ ໑ ເພື່ອກຳຈັດອາສວະອັນຈັກບັງເກີດໃນອນາຄົຕ ໑ ເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ໑ ເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໑ ເພື່ອຄວາມຕັ້ງມັ່ນແຫ່ງພຣະສັທັມມ໌ ໑ ເພື່ອຖືຕາມພຣະວິນັຍ ໑

ດູຣາກິກຂຸທັ້ງຫລາຍ ກໍແລພວກທ່ານຄວຣຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້;-

ອນຸບັນລັຕິ

໖. ອີກຢ່າງ ກິກຂຸໃດຈົງໃຈພຼາກກາຍມນຸຫຍ໌ຈາກຊີວິຕ ຫຼືສແວງຫາສສຕຣາອັນຈະປົດຊີວິຕໃຫ້ແກ່ກາຍມນຸຫຍ໌ນັ້ນ ຫຼືພັຣຕນາຄຸຕແຫ່ງຄວາມຕາຍ ຫຼືຊັກຊວນເພື່ອອັນຕາຍ

ດ້ວຍຄຳວ່າ ແນ່ະນາຍຜູ້ເປັນຊາຍ ຈະປະໂຍຊນ໌ອັນໃດແກ່ທ່ານ ດ້ວຍຊີວິຕອັນແສນລຳບາກ ຍາກແຄ້ນນີ້ ທ່ານຕາຍເສັຽດີກວ່າເປັນຢູ່ດັ່ງນີ້ ທ່ານມີຈິຕຢ່າງນີ້ ມີໃຈຢ່າງນີ້ ມີຄວາມໝາຍ ຫລາຍຢ່າງ ຢ່າງນີ້ ພັຣຓນາຄຸຓໃນຄວາມຕາຍກໍດີ ຊັກຊວນເພື່ອອັນຕາຍກໍດີ ໂດຍຫລາຍນັຍ ແມ້ກິກຊຸນີ້ກໍເປັນປາຣາຊິກ ຫາສັງວາສບໍ່ໄດ້.

ເຣື່ອງພຣະວັພພັຄຄິຍ໌ ຈົບ.

ສິກຂາບົທວິກັງຄ໌

[໑໗໑] ບົທວ່າ ອີກຢ່າງ .. ໃດ ຄວາມວ່າຜູ້ໃດ ຄື ຜູ້ເຊັ່ນໃດ ມີກາຣງານຢ່າງໃດ ມີຊາຕິຢ່າງໃດ ມີຊື່ຢ່າງໃດ ມີໂຄຕຣ໌ຢ່າງໃດ ມີປົກຕິຢ່າງໃດ ມີຣັມມ໌ເຄື່ອງຢູ່ຢ່າງໃດ ມີອາຣົມນ໌ຢ່າງໃດ ເປັນເຖຣະກໍຕາມ ເປັນນວກະກໍຕາມ ເປັນມັຊຊິມະກໍຕາມ ນີ້ພຣະຜູ້ມີພຣະກາຄຕຣັສວ່າ ອີກຢ່າງ .. ໃດ

ບົທວ່າ ກິກຊຸ ຄວາມວ່າ ທີ່ຊື່ວ່າ ກິກຊຸ ເພາະອັຖວ່າ ເປັນຜູ້ຂໍ ຊື່ວ່າ ກິກຊຸ ເພາະ-ອັຖວ່າ ປະພຶຕກິກຂາຈຣິຍວັຕຣ໌ ຊື່ວ່າ ກິກຊຸ ເພາະອັຖວ່າ ຊົງຜືນຜ້າທີ່ຖືກທຳລາຍແລ້ວ ຊື່ວ່າ ກິກຊຸ ໂດຍສົມຍາ ຊື່ວ່າ ກິກຊຸ ໂດຍປະຕິຍາ ຊື່ວ່າ ກິກຊຸ ເພາະອັຖວ່າ ເປັນເອຫິກິກຊຸ ຊື່ວ່າ ກິກຊຸ ເພາະອັຖວ່າ ເປັນຜູ້ອຸປສົມບົທແລ້ວດ້ວຍໄຕຣສຣຓຄົມນ໌ ຊື່ວ່າ ກິກຊຸ ເພາະອັຖວ່າ ເປັນຜູ້ຈເຣີນ ຊື່ວ່າ ກິກຊຸ ເພາະອັຖວ່າ ມີສາຣຣັມມ໌ ຊື່ວ່າ ກິກຊຸ ເພາະອັຖວ່າ ເປັນພຣະເສຂະ ຊື່ວ່າ ກິກຊຸ ເພາະອັຖວ່າ ເປັນພຣະອເສຂະ ຊື່ວ່າ ກິກຊຸ ເພາະອັຖວ່າ ເປັນຜູ້ອັນສົງຄ໌ພ້ອມພຽງກັນໃຫ້ອຸປ-ສົມບົທແລ້ວດ້ວຍຍັຕຕິຈຕຸຕຖກັມມ໌ ອັນບໍ່ກຳເຣີບ ຄວຣແກ່ຖານະ ບັຣດາຜູ້ທີ່ຊື່ວ່າກິກຊຸເຫລົ່ານັ້ນ ກິກຊຸນີ້ໃດ ທີ່ສົງຄ໌ພ້ອມພຽງກັນໃຫ້ອຸປສົມບົທແລ້ວດ້ວຍຍັຕຕິຈຕຸຕຖກັມມ໌ ອັນບໍ່ກຳເຣີບ ຄວຣແກ່ຖານະ ກິກຊຸນີ້ ພຣະຜູ້ມີພຣະກາຄຊົງປະສົງຄ໌ວ່າ ກິກຊຸ ໃນອັຖນີ້

ບົທວ່າ ຈົງໃຈ ຄວາມວ່າ ກິກຊຸໃດຮູ້ຢູ່ ຮູ້ດີຢູ່ ພຣາກກາຍມນຸຍ໌ຈາກຊີວິຕ ກາຣກະທຳຂອງ ກິກຊຸນັ້ນ ເປັນຄວາມຕັ້ງໃຈ ພຍາຍາມ ລະເມີດ

ທີ່ຊື່ວ່າ ກາຍມນຸຍ໌ ໄດ້ແກ່ຈິຕທຳອິດເກີດຂຶ້ນ ຄື ປຖົມວິຍຍາຓປາກົຕຂຶ້ນໃນທ້ອງແຫ່ງມາຣດາ ຕຣາບເທົ່າເຖິງກາລເປັນທີ່ຕາຍ ອັຕກາພໃນຣະຫວ່າງນີ້ ຊື່ວ່າ ກາຍມນຸຍ໌

ບົທວ່າ ພຣາກຈາກຊີວິຕ ຄວາມວ່າ ຕັດຫອນ ບັ່ນຫອນ ຊຶ່ງອິນທຣິຍ໌ ຄືຊີວິຕ ທຳຄວາມສືບຕໍ່ ໃຫ້ກຳເຣີບ

ບົທວ່າ ຫຼືສແວງຫາສສຕຣາອັນຈະປົງດຊີວິຕໃຫ້ແກ່ກາຍມນຸຍ໌ນັ້ນ ໄດ້ແກ່ ດາບ ຫອກ ຈມວກ ຫລາວ ຄ້ອນ ຫີນ ມີດ ຍາພິຍ ຫຼືເຊືອກ.

[໑໗໔] ບົທວ່າ ຫຼືພັຣຕນາຄຸຕແຫ່ງຄວາມຕາຍ ໄດ້ແກ່ສະແດງໂທษໃນຄວາມເປັນຢູ່ ພັຣຕນາຄຸຕໃນຄວາມຕາຍ.

[໑໗໕] ບົທວ່າ ຫຼືຊັກຊວນເພື່ອອັນຕາຍ ຄືຊັກຊວນວ່າ ຈົງນຳມີດມາ ຈົງກິນຢາພິษ ຫຼືຈົງແຂວນຄໍຕາຍດ້ວຍເຊືອກ.

[໑໗໔] ບົທວ່າ ແນ່ະນາຍຜູ້ເປັນຊາຍ ນີ້ເປັນຄຳສຳຫຼັບເອີ້ນ ຄືຄຳທັກທາຍ

ຄຳວ່າ ຈະປະໂຍຊນ໌ອັນໃດແກ່ທ່ານ ດ້ວຍຊີວິຕອັນແສນລຳບາກຍາກແຄ້ນນີ້ ທ່ານຕາຍເສັຽດີກວ່າເປັນຢູ່ ດັ່ງນີ້ ນັ້ນ ອະທິບາຍວ່າ ຊີວິຕທີ່ຊື່ວ່າຍາກແຄ້ນ ຄືທຽບຊີວິຕຂອງຄົນມັ່ງຄັ່ງ ຊີວິຕຂອງຄົນເຂັນໃຈ ກໍຊື່ວ່າຍາກແຄ້ນ ທຽບຊີວິຕຂອງຄົນມີຊັພຍ໌ ຊີວິຕຂອງຄົນໄຮ້ຊັພຍ໌ ກໍຊື່ວ່າຍາກແຄ້ນ ທຽບຊີວິຕຂອງເຫລົ່າເທພເຈົ້າ ຊີວິຕຂອງພວກມນຸษຍ໌ ກໍຊື່ວ່າຍາກແຄ້ນ ຊີວິຕຂອງຄົນມີມືຂາດ ມີຕີນຂາດ ມີທັງມືທັ້ງຕີນຂາດ ມີຫູຂາດ ມີດັງຂາດ ມີທັ້ງຫູທັ້ງດັງຂາດ ຊື່ວ່າຊີວິຕອັນແສນລຳບາກ ຈະປະໂຍຊນ໌ອັນໃດດ້ວຍຊີວິຕອັນແສນລຳບາກແລະຍາກແຄ້ນເຊັ່ນນີ້ ທ່ານຕາຍເສັຽດີກວ່າເປັນຢູ່ ດັ່ງນີ້

ບົທວ່າ ມີຈິຕຢ່າງນີ້ ມີໃຈຢ່າງນີ້ ຄວາມວ່າ ສັມມ໌ຊາຕິອັນໃດເປັນຈິຕ ສັມມ໌ຊາຕິອັນນັ້ນ ຊື່ວ່າໃຈ ສັມມ໌ຊາຕິອັນໃດເປັນໃຈ ສັມມ໌ຊາຕິອັນນັ້ນຊື່ວ່າຈິຕ

ບົທວ່າ ມີຄວາມມຸ່ງຫມາຍຫລາຍຢ່າງ ຢ່າງນີ້ ຄືມີຄວາມຫມາຍໃນອັນຕາຍ ມີຄວາມຈົງໃຈໃນອັນຕາຍ ມີຄວາມປະສົງຄ໌ໃນອັນຕາຍ

ບົທວ່າ ໂດຍຫລາຍນັຍ ຄື ໂດຍອາການຫຼວງຫຼາຍ

ບົທວ່າ ພັຣຕນາຄຸຕໃນຄວາມຕາຍກໍດີ ໄດ້ແກ່ສະແດງໂທษໃນຄວາມເປັນຢູ່ ພັຣຕນາຄຸຕໃນຄວາມຕາຍວ່າ ທ່ານຕາຍຈາກໂລກນີ້ແລ້ວ ເບື້ອງຫນ້າແຕ່ຕາຍເພາະກາຍແຕກ ຈັກເຂົ້າເຖິງສຸຄຕິໂລກສວັຣຄ໌ ຈັກໄດ້ຮັບບຳເຣີພຽບພ້ອມອີ່ມເອີບດ້ວຍເບັຍຈກາມຄຸຕອັນເປັນທິພຍ໌ ໃນສຸຄຕິໂລກສວັຣຄ໌ນັ້ນ.

[໑໗໕] ບົທວ່າ ຊັກຊວນເພື່ອອັນຕາຍກໍດີ ຄືຊັກຊວນວ່າ ຈົງນຳມີດມາ ຈົງກິນຢາພິษ ຈົງແຂວນຄໍຕາຍດ້ວຍເຊືອກ ຫຼືຈົງໂຕນລົງໃນນ້ຳສ້າງ ໃນເຫວ ຫຼືໃນທີ່ຊັນ ໆ

[໑໗໖] ຄຳວ່າ ແມ້ກິກษຸນີ້ ພຣະຜູ້ມີພຣະກາຄຕຣັສທຽບຄຽງກິກษຸ ໔ ອົງຄ໌ທຳອິດ

ຄຳວ່າ ເປັນປາຣາຊິກ ມີອະທິບາຍວ່າ ສີລາຫນາແຕກສອງປ່ຽງແລ້ວເປັນຂອງກັບຕໍ່ໃຫ້ຕິດສນິທອີກບໍ່ໄດ້ແມ້ສັນໃດ ກິກษຸກໍສັນນັ້ນເຫມືອນກັນ ຈົງໃຈພູາກກາຍມນຸษຍ໌ຈາກຊີວິຕແລ້ວ ຍ່ອມບໍ່ເປັນສມຕະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ເພາະເຫຕຸນັ້ນ ຈຶ່ງຕຣັສວ່າ ເປັນປາຣາຊິກ

ບົທວ່າ ຫາສັງວາສບໍ່ໄດ້ ຄວາມວ່າ ທີ່ຊື່ວ່າສັງວາສນັ້ນ ໄດ້ແກ່ກັມມ໌ທີ່ຈະທຳຮ່ວມກັນ ອຸເທສທີ່ຄວຣສູຕຮ່ວມກັນ ຄວາມເປັນຜູ້ມີສິກຂາສເມີກັນ ນັ່ນຊື່ວ່າສັງວາສ ສັງວາສນັ້ນບໍ່ມີກັບກິກษຸນັ້ນ ເພາະເຫຕຸນັ້ນ ຈຶ່ງຕຣັສວ່າ ຫາສັງວາສບໍ່ໄດ້.

ບົທກາຊນີຍ໌

ມາຕິກາ

[໑໗໗] ທຳເອງ ຢືນຢູ່ໃກ້	ສັ່ງທູຕ ສັ່ງທູຕຕໍ່
ທູຕບໍ່ສາມາຖ	ທູຕໄປແລ້ວກັບມາ
ທີ່ບໍ່ລັບ ສຳຄັນວ່າທີ່ລັບ	ທີ່ລັບ ສຳຄັນວ່າທີ່ບໍ່ລັບ
ທີ່ບໍ່ລັບ ສຳຄັນວ່າທີ່ບໍ່ລັບ	ທີ່ລັບ ສຳຄັນວ່າທີ່ລັບ
ພັຣຕນາດ້ວຍກາຍ	ພັຣຕນາດ້ວຍວາຈາ
ພັຣຕນາດ້ວຍກາຍແລະວາຈາ	ພັຣຕນາດ້ວຍທູຕ
ພັຣຕນາດ້ວຍໜັງສື	ຂຸມຫ້າງ ວັຕຖຸທີ່ພີງ
ການລອບວາງ ເກສັຊ	ການນຳຮູປເຂົ້າໄປ
ການນຳສຽງເຂົ້າໄປ	ການນຳກິ່ນເຂົ້າໄປ
ການນຳຣົສເຂົ້າໄປ	ການນຳໂພຕກັຕພະເຂົ້າໄປ
ການນຳສັມມ໌າຣມນ໌ເຂົ້າໄປ	ກິຣິຍາທີ່ບອກ ການແນະນຳ
ການນັດໝາຍ	ການທຳນິມິຕ.

ມາຕິກາວິກັງຄ໌

ສາຫັຕຖິກປະໂຍຄ ທຳເອງ

[໑໗໘] ຄຳວ່າ ທຳເອງ ຄືຂ້າເອງດ້ວຍກາຍ ດ້ວຍເຄື່ອງປະຫານ ທີ່ເນື່ອງດ້ວຍກາຍ ຫຼືດ້ວຍເຄື່ອງທີ່ປະຫານຊັດໄປ

ຢືນຢູ່ໃກ້

ຄຳວ່າ ຢືນຢູ່ໃກ້ ຄືຢືນສັ່ງຢູ່ ຓ ທີ່ໃກ້ວ່າ ຈົງຍິງຢ່າງນີ້ ຈົງປະຫານຢ່າງນີ້ ຈົງຂ້າຢ່າງນີ້.

ອາณັຕຕິກປະໂຍຄ ສັ່ງທູຕ

[໑໗໙] ກິກຂຸສັ່ງກິກຂຸວ່າ ຈົງປົງຊີວິຕບຸຄຄົລຊື່ນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ກິກຂຸຜູ້ຮັບຄຳສັ່ງເຂົ້າໃຈວ່າບຸຄຄົລນັ້ນແນ່ ຈົງປົງຊີວິຕບຸຄຄົລນັ້ນ ຕ້ອງອາບັຕິປາຣາຊິກທັ້ງ ໔ ອົງຄ໌

ພິກຂຸສັ່ງພິກຂຸວ່າ ຈົ່ງປົງຊີວິຕບຸຄຄົລຊື່ນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ຮັບຄຳສັ່ງ ເຂົ້າໃຈວ່າບຸຄຄົລນັ້ນແນ່ ແຕ່ປົງຊີວິຕບຸຄຄົລອື່ນ ພິກຂຸຜູ້ສັ່ງບໍ່ຕ້ອງອາບັຕິ ພິກຂຸຜູ້ຜ່າ ຕ້ອງອາບັຕິປາຣາຊິກ

ພິກຂຸສັ່ງພິກຂຸວ່າ ຈົ່ງປົງຊີວິຕບຸຄຄົລຊື່ນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ຮັບຄຳສັ່ງ ເຂົ້າໃຈວ່າບຸຄຄົລອື່ນ ແຕ່ປົງຊີວິຕບຸຄຄົລຊື່ນັ້ນ ຕ້ອງອາບັຕິປາຣາຊິກທັ້ງ ໔ ອົງຄ໌

ພິກຂຸສັ່ງພິກຂຸວ່າ ຈົ່ງປົງຊີວິຕບຸຄຄົລຊື່ນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ຮັບຄຳສັ່ງ ເຂົ້າໃຈວ່າບຸຄຄົລອື່ນ ແລະປົງຊີວິຕບຸຄຄົລອື່ນ ພິກຂຸຜູ້ສັ່ງບໍ່ຕ້ອງອາບັຕິ ພິກຂຸຜູ້ຜ່າ ຕ້ອງອາບັຕິປາຣາຊິກ.

ສັ່ງທູຕຕໍ່

[໑໘໐] ພິກຂຸສັ່ງພິກຂຸວ່າ ທ່ານຈົ່ງບອກແກ່ພິກຂຸຊື່ນີ້ວ່າ ພິກຂຸຊື່ນີ້ຈົ່ງໄປບອກແກ່ພິກຂຸຊື່ນີ້ວ່າ ພິກຂຸຊື່ນີ້ຈົ່ງປົງຊີວິຕບຸຄຄົລຊື່ນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ຮັບຄຳສັ່ງ ບອກແກ່ພິກຂຸນອກນີ້ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ຜ່າຮັບຄຳ ພິກຂຸຜູ້ສັ່ງເດີມ ຕ້ອງອາບັຕິຖຸລລັຈຈັຍ ພິກຂຸຜູ້ຜ່າ ປົງຊີວິຕບຸຄຄົລນັ້ນສຳເຣັຈ ຕ້ອງອາບັຕິປາຣາຊິກທຸກອົງຄ໌

ພິກຂຸສັ່ງພິກຂຸວ່າ ທ່ານຈົ່ງບອກແກ່ພິກຂຸຊື່ນີ້ວ່າ ພິກຂຸຊື່ນີ້ຈົ່ງໄປບອກແກ່ພິກຂຸຊື່ນີ້ວ່າ ພິກຂຸຊື່ນີ້ຈົ່ງປົງຊີວິຕບຸຄຄົລຊື່ນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ຮັບຄຳສັ່ງ ສັ່ງພິກຂຸອົງຄ໌ອື່ນຕໍ່ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ມາຮັບຄຳ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ຜ່າ ປົງຊີວິຕບຸຄຄົລນັ້ນສຳເຣັຈ ພິກຂຸຜູ້ສັ່ງເດີມ ບໍ່ຕ້ອງອາບັຕິ ພິກຂຸຜູ້ຮັບຄຳສັ່ງ ແລະພິກຂຸຜູ້ຜ່າ ຕ້ອງອາບັຕິປາຣາຊິກ.

ທູຕບໍ່ສາມາຖ

[໑໘໑] ພິກຂຸສັ່ງພິກຂຸວ່າ ຈົ່ງປົງຊີວິຕບຸຄຄົລຊື່ນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ຮັບຄຳສັ່ງ ໄປແລ້ວກັບມາບອກອີກວ່າ ຂ້ານ້ອຍບໍ່ສາມາຖປົງຊີວິຕເຂົາໄດ້ ພິກຂຸຜູ້ສັ່ງ ສັ່ງໃໝ່ວ່າ ທ່ານສາມາຖເມື່ອໃດ ຈົ່ງປົງຊີວິຕເຂົາເສັຽເມື່ອນັ້ນ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ຮັບຄຳສັ່ງປົງຊີວິຕບຸຄຄົລນັ້ນສຳເຣັຈ ຕ້ອງ-ອາບັຕິປາຣາຊິກທັ້ງ ໔ ອົງຄ໌.

ທູຕໄປແລ້ວກັບມາ

[໑໘໔] ພິກຂຸສັ່ງພິກຂຸວ່າ ຈົ່ງປົງຊີວິຕບຸຄຄົລຊື່ນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພໍພິກຂຸນັ້ນສັ່ງພິກຂຸນັ້ນແລ້ວ ມີຄວາມຮ້ອນໃຈ ແຕ່ເວົ້າບໍ່ໃຫ້ໄດ້ຍິນວ່າ ຢ່າຜ່າ ພິກຂຸຜູ້ຮັບຄຳສັ່ງປົງຊີວິຕບຸຄຄົລນັ້ນສຳເຣັຈ ຕ້ອງອາບັຕິປາຣາຊິກທັ້ງ ໔ ອົງຄ໌

ພິກຂຸສັ່ງພິກຂຸວ່າ ຈົ່ງປົງຊີວິຕບຸຄຄົລຊື່ນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພໍພິກຂຸນັ້ນສັ່ງພິກຂຸ-ນັ້ນແລ້ວ ມີຄວາມຮ້ອນໃຈ ເວົ້າໃຫ້ໄດ້ຍິນວ່າ ຢ່າຜ່າເລີຍ ພິກຂຸຜູ້ຮັບຄຳສັ່ງກັບເວົ້າວ່າ ທ່ານສັ່ງຂ້ານ້ອຍແລ້ວ ຈົ່ງປົງຊີວິຕບຸຄຄົລຊື່ນັ້ນເສັຽ ພິກຂຸຜູ້ສັ່ງເດີມ ບໍ່ຕ້ອງອາບັຕິ ພິກຂຸຜູ້ຜ່າ ຕ້ອງອາບັຕິປາຣາຊິກ

ພິກษຸສັ່ງພິກษຸວ່າ ຈົງປົງຊີວິຕບຸຄຄົລຊື່ນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພໍພິກษຸນັ້ນ ສັ່ງພິກษຸນັ້ນແລ້ວ ມີຄວາມຮ້ອນໃຈ ເວົ້າໃຫ້ໄດ້ຍິນວ່າ ຢ່າຂ້າເລີຍ ພິກษຸຜູ້ຮັບຄຳສັ່ງ ຮັບຄຳວ່າດີແລ້ວ ງົດເສັຽ ບໍ່ຕ້ອງອາບັຕິທັ້ງ ๔ ອົງຄ໌

ທີ່ບໍ່ລັບ ສຳຄັญວ່າທີ່ລັບ

[໑໗໓] ທີ່ບໍ່ລັບ ພິກษຸສຳຄັญວ່າທີ່ລັບ ເວົ້າຂຶ້ນວ່າ ເຮັດຈັ່ງໃດນໍ ບຸຄຄົລຊື່ນີ້ຄວຣຖືກຂ້າ ດັ່ງນີ້ ຕ້ອງອາບັຕິທຸກກົຕ

ທີ່ລັບ ສຳຄັญວ່າທີ່ບໍ່ລັບ

ທີ່ລັບ ພິກษຸສຳຄັญວ່າທີ່ບໍ່ລັບ ເວົ້າຂຶ້ນວ່າ ເຮັດຈັ່ງໃດນໍ ບຸຄຄົລຊື່ນີ້ຄວຣຖືກຂ້າ ດັ່ງນີ້ ຕ້ອງອາບັຕິທຸກກົຕ

ທີ່ບໍ່ລັບ ສຳຄັญວ່າທີ່ບໍ່ລັບ

ທີ່ບໍ່ລັບ ພິກษຸສຳຄັญວ່າທີ່ບໍ່ລັບ ເວົ້າຂຶ້ນວ່າ ເຮັດຈັ່ງໃດນໍ ບຸຄຄົລຊື່ນີ້ ຄວຣຖືກຂ້າ ດັ່ງນີ້ ຕ້ອງອາບັຕິທຸກກົຕ

ທີ່ລັບ ສຳຄັญວ່າທີ່ລັບ

ທີ່ລັບ ພິກษຸສຳຄັญວ່າທີ່ລັບ ເວົ້າຂຶ້ນວ່າ ເຮັດຈັ່ງໃດນໍ ບຸຄຄົລຊື່ນີ້ຄວຣຖືກຂ້າ ດັ່ງນີ້ ຕ້ອງອາບັຕິທຸກກົຕ

ພັຣณນາດ້ວຍກາຍ

[໑໗๔] ທີ່ຊື່ວ່າ ພັຣณນາດ້ວຍກາຍ ໄດ້ແກ່ພິກษຸທຳກາຍວິກາຣວ່າ ຜູ້ໃດຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍົສ ຫຼືໄປສວັຣຄ໌ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເພາະການພັຣณນານັ້ນ ຜູ້ໃດຜູ້ນຶ່ງຄິດວ່າ ເຮົາຈັກຕາຍ ແລ້ວຍັງທຸກຂເວທນາໃຫ້ເກີດ ພິກษຸຜູ້ພັຣณນາ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກษຸຜູ້ພັຣณນາ ຕ້ອງອາບັຕິປາຣາຊິກ

ພັຣณນາດ້ວຍວາຈາ

ທີ່ຊື່ວ່າ ພັຣณນາດ້ວຍວາຈາ ໄດ້ແກ່ ພິກษຸກ່າວດ້ວຍວາຈາວ່າ ຜູ້ໃດຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍົສ ຫຼືໄປສວັຣຄ໌ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເພາະການພັຣณນານັ້ນ ຜູ້ໃດຜູ້ນຶ່ງຄິດວ່າເຮົາຈັກຕາຍ ແລ້ວຍັງທຸກຂເວທນາໃຫ້ເກີດ ພິກษຸຜູ້ພັຣณນາຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກษຸຜູ້ພັຣณນາ ຕ້ອງອາບັຕິປາຣາຊິກ

ພັຣณນາດ້ວຍກາຍແລະວາຈາ

ທີ່ຊື່ວ່າ ພັຣณນາດ້ວຍກາຍແລະວາຈາ ອະທິບາຍວ່າພິກษຸທຳວິກາຣດ້ວຍກາຍກໍດີ ກ່າວດ້ວຍວາຈາກໍດີ ວ່າຜູ້ໃດຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍົສ ຫຼືໄປສວັຣຄ໌ດັ່ງນີ້ ຕ້ອງອາບັຕິທຸກກົຕ ເພາະການພັຣณນາ

ນັ້ນ ຜູ້ໃດຜູ້ນຶ່ງຄິດວ່າ ເຮົາຈັກຕາຍ ແລ້ວຍັງທຸກຂເວທນາໃຫ້ເກີດ ກິກຂຸຜູ້ພັຣຕນາ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ກິກຂຸຜູ້ພັຣຕນາ ຕ້ອງອາບັຕິປາຣາຊິກ.

ພັຣຕນາດ້ວຍທູຕ

[໑໙໕] ທີ່ຊື່ວ່າ ພັຣຕນາດ້ວຍທູຕ ໄດ້ແກ່ກິກຂຸສັ່ງທູຕໄປວ່າ ຜູ້ໃດຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍົສ ຫຼືໄປສວັຣຄ໌ ດັ່ງນີ້ ຕ້ອງອາບັຕິທຸກກົຕ ຜູ້ໃດຜູ້ນຶ່ງຜູ້ໄດ້ຮູ້ຄຳບອກຂອງທູຕແລ້ວ-ຄິດວ່າ ເຮົາຈັກຕາຍ ແລ້ວຍັງທຸກຂເວທນາໃຫ້ເກີດ ກິກຂຸຜູ້ພັຣຕນາ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ກິກຂຸພັຣຕນາ ຕ້ອງອາບັຕິປາຣາຊິກ

ພັຣຕນາດ້ວຍໜັງສື

ທີ່ຊື່ວ່າ ພັຣຕນາດ້ວຍໜັງສື ໄດ້ແກ່ກິກຂຸຂຽນໜັງສືໄວ້ວ່າ ຜູ້ໃດຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍົສ ຫຼືໄປສວັຣຄ໌ ດັ່ງນີ້ ຕ້ອງອາບັຕິທຸກກົຕ ທຸກໆ ຕົວອັກຂຣ ຜູ້ໃດຜູ້ນຶ່ງເຫັນໜັງສືແລ້ວຄິດວ່າ ເຮົາຈັກຕາຍ ແລ້ວຍັງທຸກຂເວທນາໃຫ້ເກີດ ກິກຂຸຜູ້ຂຽນ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ກິກຂຸ-ຜູ້ຂຽນ ຕ້ອງອາບັຕິປາຣາຊິກຯ

ຂຸມຫ້າງ

[໑໙໖] ທີ່ຊື່ວ່າ ຂຸມຫ້າງ ໄດ້ແກ່ກິກຂຸຂຸດຂຸມຫ້າງເຈາະຈົງມນຸษຍ໌ໄວ້ວ່າ ເຂົາຈັກຕົກຕາຍ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເມື່ອຜູ້ໃດຜູ້ນຶ່ງຕົກລົງໄປແລ້ວໄດ້ຮັບທຸກຂເວທນາ ກິກຂຸຜູ້ຂຸດ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ກິກຂຸຜູ້ຂຸດຕ້ອງອາບັຕິປາຣາຊິກ ກິກຂຸຂຸດຂຸມຫ້າງໄວ້ບໍ່ໄດ້ເຈາະຈົງວ່າ ຜູ້ໃດຜູ້ນຶ່ງຈັກຕົກຕາຍ ດັ່ງນີ້ ຕ້ອງອາບັຕິທຸກກົຕ ມນຸษຍ໌ຕົກລົງໄປໃນຂຸມຫ້າງນັ້ນ ກິກຂຸຕ້ອງອາບັຕິທຸກກົຕ ເມື່ອເຂົາຕົກລົງໄປແລ້ວໄດ້ຮັບທຸກຂເວທນາ ກິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ກິກຂຸຕ້ອງອາບັຕິປາຣາຊິກ ຍັກษ໌ກໍດີ ເປຕກໍດີ ສັຕວ໌ດິຣັຈຈານແປງເພສເປັນມນຸษຍ໌ກໍດີ ຕົກລົງໄປໃນຂຸມຫ້າງນັ້ນ ກິກຂຸຕ້ອງອາບັຕິທຸກກົຕ ເມື່ອມັນຕົກລົງໄປແລ້ວໄດ້ຮັບຄວາມທຸກຂເວທນາ ກິກຂຸຕ້ອງອາບັຕິທຸກກົຕ ມັນຕາຍ ກິກຂຸຕ້ອງອາບັຕິຖຸລລັຈຈັຍ ສັຕວ໌ດິຣັຈຈານຕົກລົງໄປໃນຂຸມຫ້າງນັ້ນ ກິກຂຸຕ້ອງອາບັຕິທຸກກົຕ ເມື່ອມັນຕົກລົງໄປແລ້ວໄດ້ຮັບທຸກຂເວທນາ ກິກຂຸຕ້ອງອາບັຕິທຸກກົຕ ມັນຕາຍ ກິກຂຸຕ້ອງອາບັຕິປາຈິຕຕີຍ໌.

ວັຕຖຸທີ່ພິງ

[໑໙໗] ທີ່ຊື່ວ່າ ວັຕຖຸທີ່ພິງ ໄດ້ແກ່ກິກຂຸວາງສສຕຣາໄວ້ໃນທີ່ສຳຫຼັບພິງກໍດີ ທາຍາພິษໄວ້ກໍດີ ເຮັດໃຫ້ເພກໍດີ ວາງໄວ້ຂອບນ້ຳສ້າງ ເຫວຫຼືທີ່ຊັນ ດ້ວຍໝາຍໃຈວ່າ ບຸຄຄົລຈັກຕົກຕາຍດ້ວຍວິຣີນີ້ ດັ່ງນີ້ກໍດີ ຕ້ອງອາບັຕິທຸກກົຕ ເຂົາໄດ້ຮັບທຸກຂເວທນາ ເພາະຕ້ອງສສຕຣາ ຖືກຍາພິษ ຫຼືຕົກລົງໄປ ກິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ກິກຂຸຕ້ອງອາບັຕິປາຣາຊິກ.

ການລອບວາງ

[໑໙໗] ທີ່ຊື່ວ່າ ການລອບວາງ ໄດ້ແກ່ພິກຂຸວາງດາບ ຫອກ ລູກສອນ ຫລາວ ໄມ້ຄ້ອນ ຫີນ ມີດ ຢາພິດ ຫຼືເຊືອກໄວ້ໃກ້ໆ ດ້ວຍຕັ້ງໃຈວ່າ ບຸຄຄົລຈັກຕາຍດ້ວຍຂອງສິ່ງນີ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເຂົາຄິດວ່າ ເຮົາຈັກຕາຍດ້ວຍຂອງສິ່ງນັ້ນ ແລ້ວຍັງທຸກຂເວທນາໃຫ້ເກີດ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ.

ເພສັຊ

[໑໙໙] ທີ່ຊື່ວ່າ ເພສັຊ ໄດ້ແກ່ພິກຂຸໃຫ້ເນີຍໃສ ເນີຍຂົ້ນ ນ້ຳມັນ ນ້ຳເຜິ້ງ ຫຼືນ້ຳອ້ອຍ ດ້ວຍຕັ້ງໃຈວ່າ ເຂົາຊີມເພສັຊນີ້ແລ້ວຈັກຕາຍ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເມື່ອເຂົາຊີມເພສັຊນັ້ນແລ້ວ ໄດ້ຮັບທຸກຂເວທນາ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ.

ການນຳຮູບເຂົ້າໄປ

[໒໐໐] ທີ່ຊື່ວ່າ ການນຳຮູບເຂົ້າໄປ ໄດ້ແກ່ພິກຂຸນຳຮູບຊຶ່ງບໍ່ເປັນທີ່ຊອບໃຈ ໜ້າຢ້ານ ໜ້າ-ຫວາດສຽວເຂົ້າໄປ ດ້ວຍຕັ້ງໃຈວ່າ ເຂົາເຫັນຮູບນີ້ແລ້ວຈັກຕົກໃຈຕາຍ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເຂົ້າເຫັນຮູບນັ້ນແລ້ວຕົກໃຈ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ

ພິກຂຸນຳຮູບຊຶ່ງເປັນທີ່ຊອບໃຈ ໜ້າຮັກ ໜ້າຈັບໃຈເຂົ້າໄປ ດ້ວຍຕັ້ງໃຈວ່າ ເຂົາເຫັນຮູບນີ້ແລ້ວຈັກຈ່ອຍຜອມຕາຍ ເພາະຫາບໍ່ໄດ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເຂົາເຫັນຮູບນັ້ນແລ້ວ ຈ່ອຍຜອມ ເພາະຫາບໍ່ໄດ້ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ

ການນຳສຽງເຂົ້າໄປ

ທີ່ຊື່ວ່າ ການນຳສຽງເຂົ້າໄປ ໄດ້ແກ່ພິກຂຸນຳສຽງຊຶ່ງບໍ່ເປັນທີ່ຊອບໃຈ ໜ້າຢ້ານ ໜ້າຫວາດສຽວເຂົ້າໄປ ດ້ວຍຕັ້ງໃຈວ່າ ເຂົາໄດ້ຍິນສຽງນີ້ແລ້ວ ຈັກຕົກໃຈຕາຍ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເຂົາໄດ້ຍິນສຽງນັ້ນແລ້ວຕົກໃຈ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ

ພິກຂຸນຳສຽງຊຶ່ງເປັນທີ່ຊອບໃຈ ໜ້າຮັກ ໜ້າຈັບໃຈເຂົ້າໄປ ດ້ວຍຕັ້ງໃຈວ່າ ເຂົາໄດ້ຍິນສຽງນີ້ແລ້ວ ຈັກຈອຍຜອມຕາຍ ເພາະຫາບໍ່ໄດ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເຂົາໄດ້ຍິນສຽງນັ້ນແລ້ວຈອຍຜອມ ເພາະຫາບໍ່ໄດ້ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ

ການນຳກິ່ນເຂົ້າໄປ

ທີ່ຊື່ວ່າ ການນຳກິ່ນເຂົ້າໄປ ໄດ້ແກ່ພິກຂຸນຳກິ່ນຊຶ່ງບໍ່ເປັນທີ່ຊອບໃຈ ໜ້າຂີ້ດຽດ ໜ້າປຕິກູລເຂົ້າໄປ ດ້ວຍຕັ້ງໃຈວ່າ ເຂົາດົມກິ່ນນີ້ແລ້ວ ຈັກຕາຍ ເພາະບໍ່ມັກ ເພາະປຕິກູລ ດັ່ງນີ້ ຕ້ອງອາບັຕິ

ທຸກກົຕ ເມື່ອເຂົາດົມກິ່ນນັ້ນແລ້ວ ໄດ້ຮັບທຸກຂເວທນາ ເພາະບໍ່ມັກ ເພາະປຕິກູລ ພິກຂຸຕ້ອງອາບັຕິ ຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ

ພິກຂຸນຳກິ່ນຊຶ່ງເປັນທີ່ຊູໃຈເຂົ້າໄປ ດ້ວຍຕັ້ງໃຈວ່າ ເຂົາດົມກິ່ນນີ້ແລ້ວຈະຈອຍຜອມຕາຍ ເພາະຫາບໍ່ໄດ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເຂົາສູບກິ່ນນັ້ນແລ້ວຈອຍຜອມເພາະຫາບໍ່ໄດ້ ພິກຂຸຕ້ອງອາບັຕິ ຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ

ການນຳຣົສເຂົ້າໄປ

ທີ່ຊື່ວ່າ ການນຳຣົສເຂົ້າໄປ ໄດ້ແກ່ພິກຂຸນຳຣົສຊຶ່ງບໍ່ເປັນທີ່ຊອບໃຈ ໜ້າຂີ້ດຽດ ໜ້າປຕິກູລ ເຂົ້າໄປ ດ້ວຍຕັ້ງໃຈວ່າ ເຂົາຊີມຣົສນີ້ແລ້ວຈັກຕາຍ ເພາະບໍ່ມັກ ເພາະປຕິກູລ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເມື່ອເຂົາຊີມຣົສນັ້ນແລ້ວໄດ້ຮັບທຸກຂເວທນາ ເພາະບໍ່ມັກ ເພາະປຕິກູລ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ

ພິກຂຸນຳຣົສຊຶ່ງເປັນທີ່ຊອບໃຈເຂົ້າໄປ ດ້ວຍຕັ້ງໃຈວ່າ ເຂົາຊີມຣົສນີ້ແລ້ວຈະຈອຍຜອມ ເພາະຫາບໍ່ໄດ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເຂົາຊີມຣົສນັ້ນແລ້ວຈອຍຜອມ ເພາະຫາບໍ່ໄດ້ອີກແລ້ວ ພິກຂຸຕ້ອງອາບັຕິ ຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ

ການນຳໂຜຕັຕພະເຂົ້າໄປ

ທີ່ຊື່ວ່າ ການນຳໂຜຕພັຕພະເຂົ້າໄປ ໄດ້ແກ່ພິກຂຸນຳໂຜຕພັຕພະ ຊຶ່ງບໍ່ເປັນທີ່ພໍໃຈ ມີສັມຜັສບໍ່ສບາຍແລະກະດ້າງເຂົ້າໄປດ້ວຍຕັ້ງໃຈວ່າ ເຂົາຖືກຕ້ອງສິ່ງນີ້ເຂົ້າແລ້ວຈັກຕາຍ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເມື່ອເຂົາຖືກຕ້ອງສິ່ງນັ້ນເຂົ້າ ໄດ້ຮັບທຸກຂເວທນາ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ

ພິກຂຸນຳໂຜຕພັຕພະຊຶ່ງເປັນທີ່ຊອບໃຈ ມີສັມຜັສສບາຍ ແລະອ່ອນນຸ່ມເຂົ້າໄປດ້ວຍຕັ້ງໃຈວ່າ ເຂົາຖືກສິ່ງນີ້ແລ້ວ ຈັກຈອຍຜອມຕາຍ ເພາະຫາບໍ່ໄດ້ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເຂົາຖືກຕ້ອງສິ່ງນັ້ນເຂົ້າແລ້ວ ຈອຍຜອມ ເພາະຫາບໍ່ໄດ້ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ.

ການນຳທັມມາຣົມມ໌ເຂົ້າໄປ

ທີ່ຊື່ວ່າ ການນຳທັມມາຣົມມ໌ເຂົ້າໄປ ໄດ້ແກ່ພິກຂຸສະແດງເຣື່ອງນຣົກແກ່ຄົນຜູ້ຄວຣເກີດໃນນຣົກ ດ້ວຍຕັ້ງໃຈວ່າ ເຂົາຟັງເຣື່ອງນຣົກນີ້ແລ້ວ ຈັກຕົກໃຈຕາຍ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເຂົາຟັງເຣື່ອງນຣົກນັ້ນ ແລ້ວຕົກໃຈ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ.

ພິກຂຸສະແດງເຣື່ອງສວັຣຄ໌ແກ່ຄົນຜູ້ທຳຄວາມດີດ້ວຍຕັ້ງໃຈວ່າ ເຂົາຟັງເຣື່ອງສວັຣຄ໌ນີ້ແລ້ວ ຈັກນ້ອມໃຈຕາຍ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເຂົາຟັງເຣື່ອງສວັຣຄ໌ນັ້ນແລ້ວຄິດວ່າເຮົາຈັກນ້ອມໃຈຕາຍ ແລ້ວຍັງທຸກຂ-ເວທນາໃຫ້ເກີດ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິປາຣາຊິກ.

ກິຣິຍາທີ່ບອກ

[໔໐໑] ທີ່ຊື່ວ່າ ກິຣິຍາທີ່ບອກ ໄດ້ແກ່ພິກຂຸຖືກເຂົາຖາມ ແລ້ວບອກວ່າຈົ່ງຕາຍຢ່າງນີ້ ຜູ້ໃດ ຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍົສ ຫຼືໄປສວັຣຄ໌ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເພາະການບອກ ນັ້ນ ເຂົາຄິດວ່າເຮົາຈັກຕາຍ ແລ້ວຍັງທຸກຂເວທນາໃຫ້ເກີດ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງ ອາບັຕິປາຣາຊິກ

ການແນະນຳ

ທີ່ຊື່ວ່າ ການແນະນຳ ໄດ້ແກ່ພິກຂຸອັນເຂົາບໍ່ໄດ້ຖາມ ແຕ່ແນະນຳວ່າ ຈົ່ງຕາຍຢ່າງນີ້ ຜູ້ໃດ ຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍົສ ຫຼືໄປສວັຣຄ໌ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເພາະການແນະນຳນັ້ນ ເຂົາຄິດວ່າເຮົາຈັກຕາຍ ແລ້ວຍັງທຸກຂເວທນາໃຫ້ເກີດ ພິກຂຸຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ພິກຂຸຕ້ອງອາບັຕິ ປາຣາຊິກ.

ການນັດຫມາຍ

[໔໐໔] ທີ່ຊື່ວ່າ ການນັດຫມາຍ ໄດ້ແກ່ພິກຂຸທຳການນັດຫມາຍວ່າ ຈົ່ງປົງຊີວິຕເຂົາເສັຽຕາມ ຄຳນັດຫມາຍນັ້ນ ໃນເວລາເຊົ້າຫຼືໃນເວລາເຢັນ ໃນເວລາກາງຄືນຫຼືກາງວັນ ດັ່ງນີ້ ຕ້ອງອາບັຕິທຸກກົຕ ເພາະການນັດຫມາຍນັ້ນ ພິກຂຸຜູ້ຮັບຄຳສັ່ງປົງຊີວິຕເຂົາສຳເຣັຈ ຕ້ອງອາບັຕິປາຣາຊິກທັ້ງ ໔ ອົງຄ໌ ປົງຊີວິຕ ເຂົາໄດ້ກ່ອນຫຼືຫລັງຄຳນັດຫມາຍນັ້ນ ພິກຂຸຜູ້ສັ່ງເດີມ ບໍ່ຕ້ອງອາບັຕິ ພິກຂຸຜູ້ຜ່າ ຕ້ອງອາບັຕິປາຣາຊິກ

ການທຳນິມິຕ

ທີ່ຊື່ວ່າ ການທຳນິມິຕ ໄດ້ແກ່ພິກຂຸທຳນິມິຕວ່າ ຂ້ານ້ອຍຈັກພິບຕາ ຍົກຄິ້ວ ຫຼືງົກຫົວ ທ່ານ ຈົ່ງປົງຊີວິຕເຂົາຕາມນິມິຕນັ້ນ ດັ່ງນີ້ ຕ້ອງອາບັຕິທຸກກົຕ ພິກຂຸຜູ້ຮັບສັ່ງ ປົງຊີວິຕເຂົາສຳເຣັຈຕາມນິມິຕນັ້ນ ຕ້ອງອາບັຕິປາຣາຊິກທັ້ງ ໔ ອົງຄ໌ ປົງຊີວິຕເຂົາກ່ອນຫຼືຫລັງນິມິຕນັ້ນ ພິກຂຸຜູ້ສັ່ງເດີມ ບໍ່ຕ້ອງອາບັຕິ ພິກຂຸຜູ້ຜ່າ ຕ້ອງອາບັຕິປາຣາຊິກ.

ອນາປັຕຕິວາຣ

[໔໐໕] ພິກຂຸບໍ່ຈົງໃຈ ໑ ພິກຂຸບໍ່ຮູ້ ໑ ພິກຂຸບໍ່ປະສົງຄ໌ຈະໃຫ້ຕາຍ ໑ ພິກຂຸວິກົລຈຣິຕ ໑ ພິກຂຸມີຈິຕຟຸ້ງຊ່ານ ໑ ພິກຂຸກະສັບກະສ່າຍເພາະເວທນາ ໑ ພິກຂຸອາທິກັມມິກະ ໑ ເຫລົ່ານີ້ ບໍ່ຕ້ອງ ອາບັຕິ ດັ່ງນີ້ແລ.

ປຖົມກາຕວາຣ

ໃນມນຸສສວິຄຄຫປາຣາຊິກ ຈົບ

ວິນີຕວັຕຖຸ

ອຸທານຄາຖາ

[໔໐໔] ເຣື່ອງພັຣຕນາ ໑ ເຣື່ອງ
ເຣື່ອງນັ່ງ ໑ ເຣື່ອງ
ເຣື່ອງສາກ ໑ ເຣື່ອງ
ເຣື່ອງຄົກ ໑ ເຣື່ອງ
ເຣື່ອງພຣະຜູ້ເຖົ້າ ໕ ເຣື່ອງ
ເຣື່ອງຊີ້ນຕິດຄໍ ໕ ເຣື່ອງ
ເຣື່ອງຢາພິษ ໔ ເຣື່ອງ
ເຣື່ອງສ້າງທີ່ຢູ່ ໕ ເຣື່ອງ
ເຣື່ອງອິຖ ໕ ເຣື່ອງ
ເຣື່ອງມີດ ໕ ເຣື່ອງ
ເຣື່ອງໄມ້ກລອນ ໕ ເຣື່ອງ
ເຣື່ອງຮ່າງຮ້ານ ໕ ເຣື່ອງ
ເຣື່ອງໃຫ້ລົງ ໕ ເຣື່ອງ
ເຣື່ອງຕົກ ໔ ເຣື່ອງ
ເຣື່ອງນິ່ງຕົວ ໕ ເຣື່ອງ
ເຣື່ອງນັຕຖຸ໌ຢາ ໕ ເຣື່ອງ
ເຣື່ອງນວດ ໕ ເຣື່ອງ
ເຣື່ອງໃຫ້ອາບນ້ຳ ໕ ເຣື່ອງ
ເຣື່ອງໃຫ້ທານ້ຳມັນ ໕ ເຣື່ອງ
ເຣື່ອງໃຫ້ລຸກຂຶ້ນ ໕ ເຣື່ອງ
ເຣື່ອງໃຫ້ລົ້ມລົງ ໕ ເຣື່ອງ
ເຣື່ອງໃຫ້ຕາຍດ້ວຍຂ້າວ ໕ ເຣື່ອງ
ເຣື່ອງໃຫ້ຕາຍດ້ວຍນ້ຳລັນ ໕ ເຣື່ອງ
ເຣື່ອງມີຄັຣຄ໌ກັບຊູ້ ໑ ເຣື່ອງ
ເຣື່ອງຍິງຮ່ວມສາມີ ໔ ເຣື່ອງ
ເຣື່ອງຜ່າສອງມາຣດາບຸຕຣ໌ຕາຍ ໑ ເຣື່ອງ
ເຣື່ອງຜ່າສອງມາຣດາບຸຕຣ໌ບໍ່ຕາຍ ໑ ເຣື່ອງ
ເຣື່ອງໃຫ້ຮີດ ໑ ເຣື່ອງ
ເຣື່ອງໃຫ້ຮ້ອນ ໑ ເຣື່ອງ
ເຣື່ອງຍິງໝັນ ໑ ເຣື່ອງ
ເຣື່ອງຍິງມີປົກຕິຄລອດ ໑ ເຣື່ອງ
ເຣື່ອງຈີ້ ໑ ເຣື່ອງ
ເຣື່ອງທັບ ໑ ເຣື່ອງ
ເຣື່ອງຜ່າຍັກษ໌ ໑ ເຣື່ອງ
ເຣື່ອງສົ່ງໄປສູ່ທີ່ມີສັຕວ໌ຮ້າຍແລະຍັກษ໌ດຸຮ້າຍ ໗ ເຣື່ອງ
ເຣື່ອງສຳຄັນແນ່ ໔ ເຣື່ອງ
ເຣື່ອງປະຫາຣ ໕ ເຣື່ອງ
ເຣື່ອງພັຣຕນາສວັຣຄ໌ ໕ ເຣື່ອງ
ເຣື່ອງພັຣຕນານຣົກ ໕ ເຣື່ອງ
ເຣື່ອງຕັດຕົ້ນໄມ້ທີ່ເມືອງອາລວີ ໕ ເຣື່ອງ
ເຣື່ອງເຜົາປ່າ ໕ ເຣື່ອງ
ເຣື່ອງຢ່າໃຫ້ລຳບາກ ໑ ເຣື່ອງ
ເຣື່ອງບໍ່ເຮັດຕາມຄຳຂອງທ່ານ ໑ ເຣື່ອງ
ເຣື່ອງໃຫ້ດື່ມຟຸ້ງ ໑ ເຣື່ອງ

ເຣື່ອງໃຫ້ດື່ມຢາດອງໂລຕະໂສຈີຣກະ ໑ ເຣື່ອງ.

ວິນີຕວັຕຖຸ

ເຣື່ອງພັຣຕນາ

[໘໐໕] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍໄດ້ພັຣຕນາຄຸຕແຫ່ງຄວາມຕາຍແກ່ພິກຂຸນັ້ນ ດ້ວຍຄວາມກຣຸຕາ ພິກຂຸນັ້ນເຖິງມໍຣຕກາພແລ້ວ ພິກຂຸເຫລົ່ານັ້ນມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາ ພິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງນັ່ງ

[໘໐໖] ກໍໂດຍສມັຍນັ້ນແລ ພິກຂຸຜູ້ຖືທ່ງອບິຕຫບາຕເປັນວັຕຣ໌ອົງຄ໌ນຶ່ງ ນັ່ງທັບເດັກຊາຍທີ່ທີ່ເຂົາເອົາຜ້າເກົ່າຄຸມໄວ້ເທິງຕັ່ງໃຫ້ຕາຍແລ້ວ ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແລ້ວບໍ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກແລ້ວ ຕຣັສວ່າ ດູຣາພິກຂຸທັ້ງຫລາຍ ອີກຢ່າງ ພວກທ່ານບໍ່ພິຈາຣຕາກ່ອນແລ້ວຢ່ານັ່ງເທິງອາສນະ ອົງຄ໌ໃດນັ່ງ ຕ້ອງອາບັຕິທຸກກົຕ.

ເຣື່ອງສາກ

[໘໐໗] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງປູລາດອາສນະຢູ່ທີ່ໂຣງອາຫາຣໃນລະແວກບ້ານ ໄດ້ຫຍິບສາກອັນນຶ່ງໃນສາກທີ່ເຂົາພິງຮວມກັນໄວ້ ສາກອັນທີ່ສອງໄດ້ລົ້ມຟາດລົງທີ່ຫົວເດັກຊາຍຄົນນຶ່ງ ເດັກຊາຍນັ້ນຕາຍແລ້ວ ທ່ານໄດ້ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ຈົງໃຈ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ພິກຂຸບໍ່ຈົງໃຈ ບໍ່ຕ້ອງອາບັຕິ

ເຣື່ອງຄົກ

ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງປູລາດອາສນະຢູ່ທີ່ໂຣງອາຫາຣໃນລະແວກບ້ານ ໄດ້ຢຽບຂອນໄມ້ທີ່ເຂົານຳມາເພື່ອທຳຄົກ ເຊໄປທັບເດັກຄົນນຶ່ງຕາຍ ແລ້ວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ຈົງໃຈ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ພິກຂຸບໍ່ຈົງໃຈ ບໍ່ຕ້ອງອາບັຕິ

ເຣື່ອງພຣະຜູ້ເຜົາ ๓ ເຣື່ອງ

[໔໐໗] ໑. ກໍໂດຍສມັຍນັ້ນແລ ບິດາແລະບຸຕຣ໌ບວຊຢູ່ໃນສຳນັກກິກຸ ເມື່ອເຂົາບອກ ກັຕຕກາລແລ້ວ ກິກຸຜູ້ບຸຕຣໄດ້ກ່າວກັບກິກຸຜູ້ບິດາວ່າ ນິມົນຕ໌ໄປເທີ້ນ ຂ້ານ້ອຍ ພຣະສົງຆ໌ກຳລັງຄອຍທ່ານ ຢູ່ ແລ້ວດຸນຫລັງຊຸກໄປ ກິກຸຜູ້ບິດາໄດ້ລົ້ມລົງເຖິງມໍຣຕກາພ ກິກຸຜູ້ບຸຕຣ໌ນັ້ນມີຄວາມຢ້ານບາປວ່າ ເຮົາ ຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາ ກິກຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ບໍ່ມີຄວາມປະສົງຄ໌ຈະໃຫ້ເຖິງມໍຣຕກາພ ພຣະພຸທສເຈົ້າຂ້ານ້ອຍ

ກ. ກິກຸບໍ່ມີຄວາມປະສົງຄ໌ຈະໃຫ້ເຖິງມໍຣຕກາພ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ບິດາແລະບຸຕຣ໌ບວຊຢູ່ໃນສຳນັກກິກຸ ເມື່ອເຂົາບອກກັຕຕກາລແລ້ວ ກິກຸຜູ້ບຸຕຣໄດ້ກ່າວກັບກິກຸຜູ້ບິດາວ່າ ນິມົນຕ໌ໄປເທີ້ນ ຂ້ານ້ອຍ ພຣະສົງຆ໌ ກຳລັງຄອຍທ່ານຢູ່ ກິກຸ ຜູ້ບຸຕຣ໌ມີຄວາມປະສົງຄ໌ຈະໃຫ້ເຖິງມໍຣຕກາພ ຈຶ່ງດຸນຫລັງຊຸກໄປ ກິກຸຜູ້ບິດາໄດ້ລົ້ມລົງເຖິງມໍຣຕກາພ ກິກຸ ຜູ້ບຸຕຣ໌ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີ ພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ເຖິງມໍຣຕກາພ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ບິດາແລະບຸຕຣ໌ບວຊຢູ່ໃນສຳນັກກິກຸ ເມື່ອເຂົາບອກກັຕຕກາລແລ້ວ ກິກຸຜູ້ບຸຕຣໄດ້ກ່າວກັບກິກຸຜູ້ບິດາວ່າ ນິມົນຕ໌ໄປເທີ້ນ ຂ້ານ້ອຍ ພຣະສົງຆ໌ກຳລັງຄອຍທ່ານຢູ່ ກິກຸຜູ້ບຸຕຣ໌ ມີຄວາມປະສົງຄ໌ຈະໃຫ້ເຖິງມໍຣຕກາພ ຈຶ່ງດຸນຫລັງຊຸກໄປ ກິກຸຜູ້ບິດາໄດ້ລົ້ມລົງ ແຕ່ບໍ່ເຖິງມໍຣຕກາພ ກິກຸຜູ້ບຸຕຣ໌ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ຜູ້ມີພຣະ ພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າຂ້ານ້ອຍ ມີຄວາມປະສົງຄ໌ຈະໃຫ້ເຖິງມໍຣຕກາພ ພຣະພຸທສເຈົ້າຂ້ານ້ອຍ

ກ. ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

ເຣື່ອງຊີ້ນຕິດຄໍ ๓ ເຣື່ອງ

[໔໐໘] ໑. ກໍໂດຍສມັຍນັ້ນແລ ກິກຸອົງຄ໌ນຶ່ງກຳລັງສັນອາຫາຣ ຊີ້ນຕິດຄໍ ກິກຸອີກອົງຄ໌ນຶ່ງ ໄດ້ໃຫ້ປະຫາຣທີ່ຄໍກິກຸນັ້ນ ເນື້ອຫລຸດອອກມາພ້ອມກັບໂລຫິຕ ກິກຸນັ້ນເຖິງມໍຣຕກາພ ກິກຸອົງຄ໌ທີ່ ປະຫາຣມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີ ພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຸ ທ່ານຄິດຈັ່ງໃດ?

ភិ. ຂ້າພຣະພຸທສເຈົ້າ ບໍ່ມີຄວາມປະສົງຄ໌ຈະໃຫ້ເຖິງມໍຣຕພາພ ພຣະພຸທສເຈົ້າຂ້ານ້ອຍ

ພ. ພິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ເຖິງມໍຣຕພາພ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ເມື່ອພິກຂຸອົງຄ໌ນຶ່ງກຳລັງຈັນອາຫາຣ ຊີ້ນຕິດຄໍ ພິກຂຸອີກອົງຄ໌ນຶ່ງປະສົງຄ໌ຈະໃຫ້ເຖິງມໍຣຕພາພ ໄດ້ໃຫ້ປະຫາຣທີ່ຄໍພິກຂຸນັ້ນ ເນື້ອຫລຸດອອກມາພ້ອມກັບໂລຫິຕ ພິກຂຸນັ້ນເຖິງມໍຣຕພາພ ພິກຂຸອົງຄ໌ທີ່ປະຫາຣ ມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແລ້ວບໍ່ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ភិ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ເຖິງມໍຣຕພາພ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ເມື່ອພິກຂຸອົງຄ໌ນຶ່ງກຳລັງຈັນອາຫາຣ ຊີ້ນຕິດຄໍ ພິກຂຸອີກອົງຄ໌ນຶ່ງປະສົງຄ໌ຈະໃຫ້ເຖິງມໍຣຕພາພ ໄດ້ໃຫ້ປະຫາຣທີ່ຄໍພິກຂຸນັ້ນ ເນື້ອຫລຸດອອກມາພ້ອມກັບໂລຫິຕ ແຕ່ພິກຂຸນັ້ນບໍ່ເຖິງກັບມໍຣຕພາພ ພິກຂຸອົງຄ໌ທີ່ປະຫາຣມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແລ້ວບໍ່ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ភិ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ເຖິງມໍຣຕພາພ ພຣະພຸທສເຈົ້າຂ້ານ້ອຍ

ພ. ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງຍາພິຂ ໔ ເຣື່ອງ

[໔໑໐] ໑. ກໍໂດຍສມັຍນັ້ນແລ ພິກຂຸຜູ້ຖືທຸ່ງວບິຕພາບາຕເປັນວັຕຣ໌ອົງຄ໌ນຶ່ງ ໄດ້ບິຕພາບາຕເຈືອຍາພິຂມາແລ້ວນຳໄປສູ່ໂຮງຈັນ ໄດ້ຖວາຍບິຕພາບາຕນັ້ນແກ່ພິກຂຸທັ້ງຫລາຍໃຫ້ຈັນກ່ອນ ພິກຂຸເຫລົ່ານັ້ນເຖິງມໍຣຕພາພແລ້ວ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ភិ. ຂ້າພຣະພຸທສເຈົ້າ ບໍ່ຮູ້ເຖົ້າ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ພິກຂຸບໍ່ຮູ້ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງປະສົງຄ໌ຈະທົດລອງ ໄດ້ໃຫ້ຍາພິຂແກ່ພິກຂຸອີກອົງຄ໌ນຶ່ງຈັນ ພິກຂຸນັ້ນເຖິງມໍຣຕພາພແລ້ວ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແລ້ວບໍ່ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ភិ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະທົດລອງ ພຣະພຸທສເຈົ້າຂ້ານ້ອຍ

ພ. ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

ເຣື່ອງສ້າງທີ່ຢູ່ ໓ ເຣື່ອງ

[໔໑໑] ໑. ກໍໂດຍສມັຍນັ້ນແລ ພວກກິກຍຸຊາວເມືອງອາລວີ ຊ່ວຍກັນສ້າງວິຫາຣທີ່ຢູ່ ກິກຍຸອົງຄ໌ນຶ່ງຢູ່ຂ້າງລຸ່ມຍົກສິລາສົ່ງຂຶ້ນໄປ ສິລາທີ່ກິກຍຸຜູ້ຢູ່ທາງເທິງຮັບໄວ້ບໍ່ມັ່ນ ໄດ້ຕົກທັບກະໜ່ອມກິກຍຸຜູ້ຢູ່ຂ້າງລຸ່ມເຖິງມໍຣຕກາພແລ້ວ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແລ້ວບໍ່ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຍຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າບໍ່ໄດ້ຈິງໃຈ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຍຸ ກິກຍຸບໍ່ຈິງໃຈ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພວກກິກຍຸຊາວເມືອງອາລວີ ຊ່ວຍກັນສ້າງວິຫາຣທີ່ຢູ່ ກິກຍຸອົງຄ໌ນຶ່ງຢູ່ຂ້າງລຸ່ມ ຍົກສິລາສົ່ງຂຶ້ນໄປ ກິກຍຸຜູ້ຢູ່ທາງເທິງ ມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງປ່ອຍສິລາລົງເທິງກະໜ່ອມກິກຍຸຜູ້ຢູ່ຂ້າງລຸ່ມ ກິກຍຸຜູ້ຢູ່ຂ້າງລຸ່ມນັ້ນເຖິງມໍຣຕກາພແລ້ວ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຍຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຍຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ພວກກິກຍຸຊາວເມືອງອາລວີ ຊ່ວຍກັນສ້າງວິຫາຣທີ່ຢູ່ ກິກຍຸອົງຄ໌ນຶ່ງຢູ່ຂ້າງລຸ່ມ ຍົກສິລາສົ່ງຂຶ້ນໄປ ກິກຍຸຜູ້ຢູ່ທາງເທິງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງປ່ອຍສິລາລົງເທິງກະໜ່ອມກິກຍຸຜູ້ຢູ່ຂ້າງລຸ່ມ ແຕ່ກິກຍຸຜູ້ຢູ່ຂ້າງລຸ່ມບໍ່ເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຍຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງອິກ ໓ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພວກກິກຍຸຊາວເມືອງອາລວີ ຊ່ວຍກັນກໍ່ຝາຜນັງວິຫາຣ ກິກຍຸອົງຄ໌ນຶ່ງຢູ່ຂ້າງລຸ່ມສົ່ງອິກຂຶ້ນໄປ ອິກທີ່ກິກຍຸຜູ້ຢູ່ທາງເທິງຮັບໄວ້ບໍ່ມັ່ນ ໄດ້ຫລົ່ນທັບກະໜ່ອມກິກຍຸຜູ້ຢູ່ຂ້າງລຸ່ມເຖິງມໍຣຕກາພແລ້ວ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຍຸ ທ່ານຄິດຈັ່ງໃດ?

ກ. ຂ້າພຣະພຸທສເຈົ້າ ບໍ່ໄດ້ຈົງໃຈ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ກິກຂຸບໍ່ຈົງໃຈ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພວກກິກຂຸຊາວເມືອງອາລວີ ຊ່ອຍກັນກໍ່ຝາຜນັງວິຫາຣ ກິກຂຸອົງຄ໌ນຶ່ງຢູ່ຂ້າງລຸ່ມສົ່ງອິກຂຶ້ນໄປ ກິກຂຸຜູ້ຢູ່ທາງເທິງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງປ່ອຍອິກລົງເທິງກະໝ່ອມກິກຂຸຜູ້ຢູ່ຂ້າງລຸ່ມ ກິກຂຸຜູ້ຢູ່ຂ້າງລຸ່ມນັ້ນເຖິງມໍຣຕກາພແລ້ວ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ພວກກິກຂຸຊາວເມືອງອາລວີ ຊ່ອຍກັນກໍ່ຝາຜນັງວິຫາຣ ກິກຂຸອົງຄ໌ນຶ່ງຢູ່ຂ້າງລຸ່ມສົ່ງອິກຂຶ້ນໄປ ກິກຂຸຜູ້ຢູ່ທາງເທິງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງປ່ອຍອິກລົງເທິງກະໝ່ອມກິກຂຸຜູ້ຢູ່ຂ້າງລຸ່ມ ແຕ່ກິກຂຸຜູ້ຢູ່ຂ້າງລຸ່ມບໍ່ເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງມີດ ໕ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພວກກິກຂຸຊາວເມືອງອາລວີ ຊ່ອຍກັນທຳ**ນວກັມມ໌**[10] ກິກຂຸອົງຄ໌ນຶ່ງຢູ່ຂ້າງລຸ່ມສົ່ງມີດຂຶ້ນໄປ ມີດທີ່ກິກຂຸຜູ້ຢູ່ທາງເທິງຮັບໄວ້ບໍ່ມັ່ນ ໄດ້ຕົກລົງເທິງກະໝ່ອມກິກຂຸຜູ້ຢູ່ຂ້າງລຸ່ມເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກ. ຂ້າພຣະພຸທສເຈົ້າ ບໍ່ໄດ້ຈົງໃຈ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ກິກຂຸບໍ່ຈົງໃຈ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພວກກິກຂຸຊາວເມືອງອາລວີ ຊ່ອຍກັນທຳນວກັມມ໌ ກິກຂຸອົງຄ໌ນຶ່ງຢູ່ຂ້າງລຸ່ມສົ່ງມີດຂຶ້ນໄປ ກິກຂຸຜູ້ຢູ່ທາງເທິງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງປ່ອຍມີດລົງເທິງກະໝ່ອມກິກຂຸຜູ້ຢູ່ຂ້າງລຸ່ມເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບ

---

[10] **ນວກັມມ໌** ການກໍ່ສ້າງ

ທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

៦. ກໍໂດຍສມັຍນັ້ນແລ ພວກກິກຂຸຊາວເມືອງອາລວີ ຊ່ອຍກັນທຳນວກັມມ໌ ກິກຂຸອົງຄ໌ນຶ່ງຢູ່ຂ້າງລຸ່ມສົ່ງມີດຂຶ້ນໄປ ກິກຂຸຜູ້ຢູ່ທາງເທິງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງປ່ອຍມີດລົງເທິງກະຫມ່ອມກິກຂຸຜູ້ຢູ່ຂ້າງລຸ່ມ ແຕ່ກິກຂຸຜູ້ຢູ່ຂ້າງລຸ່ມບໍ່ເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງໄມ້ກລອນ ៣ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພວກກິກຂຸຊາວເມືອງອາລວີ ຊ່ອຍກັນທຳນວກັມມ໌ ກິກຂຸອົງຄ໌ນຶ່ງຢູ່ຂ້າງລຸ່ມຍົກໄມ້ກລອນສົ່ງຂຶ້ນໄປ ໄມ້ກລອນທີ່ກິກຂຸຜູ້ຢູ່ທາງເທິງຈັບໄວ້ບໍ່ໝັ້ນ ໄດ້ຍູ້ຕົກລົງເທິງກະຫມ່ອມກິກຂຸຜູ້ຢູ່ຂ້າງລຸ່ມ ກິກຂຸຜູ້ຢູ່ຂ້າງລຸ່ມນັ້ນເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ຈົງໃຈ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ກິກຂຸບໍ່ຈົງໃຈ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພວກກິກຂຸຊາວເມືອງອາລວີ ຊ່ອຍກັນທຳນວກັມມ໌ ກິກຂຸອົງຄ໌ນຶ່ງຢູ່ຂ້າງລຸ່ມຍົກໄມ້ກລອນສົ່ງຂຶ້ນໄປ ກິກຂຸຜູ້ຢູ່ທາງເທິງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງປ່ອຍໄມ້ກລອນລົງເທິງກະຫມ່ອມກິກຂຸຜູ້ຢູ່ຂ້າງລຸ່ມ ກິກຂຸຜູ້ຢູ່ຂ້າງລຸ່ມນັ້ນເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

៣. ກໍໂດຍສມັຍນັ້ນແລ ພວກກິກຂຸຊາວເມືອງອາລວີ ຊ່ອຍກັນທຳນວກັມມ໌ ກິກຂຸອົງຄ໌ນຶ່ງຢູ່ຂ້າງລຸ່ມຍົກໄມ້ກລອນສົ່ງຂຶ້ນໄປ ກິກຂຸຜູ້ຢູ່ທາງເທິງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງປ່ອຍໄມ້ກລອນລົງເທິງກະຫມ່ອມກິກຂຸຜູ້ຢູ່ຂ້າງລຸ່ມ ແຕ່ກິກຂຸຜູ້ຢູ່ຂ້າງລຸ່ມນັ້ນ ບໍ່ເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງ

ອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງຊ່າງຮ້ານ ๓ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພວກພິກຂຸຊາວເມືອງອາລວີ ຜູກຮ່າງຮ້ານທຳນວກັມມ໌ ພິກຂຸອົງຄ໌ນຶ່ງໄດ້ກ່າວກັບພິກຂຸອີກອົງຄ໌ນຶ່ງວ່າ ອາວຸໂສ ທ່ານຈົ່ງຍືນຜູກທີ່ຕົງນີ້ ພິກຂຸນັ້ນຍືນຜູກຢູ່ ໓ ທີ່ນັ້ນ ໄດ້ຢູ້ຕົກລົງເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ພິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພວກພິກຂຸຊາວເມືອງອາລວີ ຜູກຮ່າງຮ້ານທຳນວກັມມ໌ ພິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໄດ້ກ່າວກັບພິກຂຸອີກອົງຄ໌ນຶ່ງວ່າ ອາວຸໂສ ທ່ານຈົ່ງຍືນຜູກທີ່ຕົງນີ້ ພິກຂຸນັ້ນຍືນຜູກຢູ່ ໓ ທີ່ນັ້ນ ໄດ້ຢູ້ຕົກລົງເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

๓. ກໍໂດຍສມັຍນັ້ນແລ ພວກພິກຂຸຊາວເມືອງອາລວີ ຜູກຮ່າງຮ້ານທຳນວກັມມ໌ ພິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໄດ້ກ່າວກັບພິກຂຸອີກອົງຄ໌ນຶ່ງວ່າ ອາວຸໂສ ທ່ານຈົ່ງຍືນຜູກທີ່ຕົງນີ້ ພິກຂຸນັ້ນຍືນຜູກຢູ່ ໓ ທີ່ນັ້ນ ໄດ້ຢູ້ຕົກລົງ ແຕ່ບໍ່ເຖິງມໍຣຕກາພ ພິກຂຸຜູ້ກ່າວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

ເຣື່ອງໃຫ້ລົງ ໓ ເຣື່ອງ

[໘໑໘] ໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງມຸງວິຫາຣສຳເຣັຈແລ້ວຈະລົງ ພິກຂຸອີກອົງຄ໌ນຶ່ງໄດ້ກ່າວກັບພິກຂຸນັ້ນວ່າ ອາວຸໂສ ທ່ານຈົ່ງລົງທາງນີ້ ພິກຂຸນັ້ນກໍລົງທາງນັ້ນ ໄດ້ຢູ້ຕົກລົງເຖິງມໍຣຕກາພແລ້ວ ອົງຄ໌ທີ່ກ່າວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ພິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງມຸງວິຫາຣສຳເຣັຈແລ້ວຈະລົງ ພິກຂຸອີກອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໄດ້ກ່າວກັບພິກຂຸອົງຄ໌ນັ້ນວ່າ ອາວຸໂສ ທ່ານຈົ່ງລົງທາງນີ້ ພິກຂຸນັ້ນກໍລົງທາງນັ້ນ ໄດ້ຢູ້ຕົກລົງເຖິງມໍຣຕກາພແລ້ວ ອົງຄ໌ທີ່ກ່າວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແລ້ວບໍ່ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງມຸງຫລັງຄາສຳເຣັຈແລ້ວຈະລົງ ພິກຂຸອີກອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໄດ້ກ່າວກັບພິກຂຸອົງຄ໌ນັ້ນວ່າ ອາວຸໂສ ທ່ານຈົ່ງລົງທາງນີ້ ພິກຂຸນັ້ນກໍລົງທາງນັ້ນ ໄດ້ຢູ້ຕົກລົງແລ້ວແຕ່ບໍ່ເຖິງມໍຣຕກາພ ອົງຄ໌ທີ່ກ່າວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

ເຣື່ອງຕົກ ໒ ເຣື່ອງ

[໘໑໙] ໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງຖືກຄວາມກະສັນບີບຄັ້ນ ຈຶ່ງຂຶ້ນພູເຂົາຄິຊຌກູຕ ແລ້ວໂຕນລົງທີ່ເຂົາຂາດ ທັບຊ່າງສານຄົນນຶ່ງຕາຍ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແລ້ວຕຣັສວ່າ ດູຣາພິກຂຸທັ້ງຫລາຍ ອັນພິກຂຸບໍ່ຄວຣຍັງຕົນໃຫ້ຕົກ ອົງຄ໌ໃດໃຫ້ຕົກ ຕ້ອງອາບັຕິທຸກກົຕ

໔. ກໍໂດຍສມັຍນັ້ນແລ ພຣະສັພພັຄຄີຍ໌ຂຶ້ນພູເຂົາຄິຊຊກູຕ ແລ້ວພາກັນກິ້ງສິລາຫຼິ້ນ ສິລາ ນັ້ນຕົກທັບຄົນລ້ຽງງົວຄົນນຶ່ງຕາຍ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ພິກຂຸບໍ່ຄວຣກິ້ງສິລາຫຼິ້ນ ອົງຄ໌ໃດ ກິ້ງ ຕ້ອງອາບັຕິທຸກກົຕ.

ເຣື່ອງນິ້ງຕົວ ໕ ເຣື່ອງ

[໔໑໔] ໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍຈຶ່ງໃຫ້ພິກຂຸນັ້ນນິ້ງຕົວ ພິກຂຸນັ້ນເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວ ແລ້ວບໍ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານ ຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ ພິກຂຸນັ້ນນິ້ງຕົວ ພິກຂຸນັ້ນເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ ພິກຂຸນັ້ນນິ້ງຕົວ ແຕ່ພິກຂຸນັ້ນບໍ່ເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກ ແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸ ທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງບັດຖ໌ຍາ ໓ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງປວດຫົວ ພິກຂຸທັ້ງຫລາຍໄດ້ບັດຖ໌ຍາໃຫ້ແກ່ພິກຂຸນັ້ນ ພິກຂຸນັ້ນເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວ ແລ້ວບໍ່ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ພິກຂຸຜູ້ບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງປວດຫົວ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໄດ້ບັດຖ໌ຍາໃຫ້ແກ່ພິກຂຸນັ້ນໆ ເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງປວດຫົວ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໄດ້ບັດຖ໌ຍາໃຫ້ແກ່ພິກຂຸນັ້ນ ແຕ່ພິກຂຸນັ້ນບໍ່ເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແກ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງນວດ ໓ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາທ ພິກຂຸທັ້ງຫລາຍຈຶ່ງນວດຟັ້ນພິກຂຸນັ້ນໆ ເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພິກຂຸຜູ້ບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາທ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງນວດຟັ້ນພິກຂຸນັ້ນໆ ເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວ

ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາສ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງນວດຟັ້ນພິກຂຸນັ້ນ ແຕ່ພິກຂຸນັ້ນບໍ່ເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງໃຫ້ອາບນ້ຳ ໓ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາສ ພິກຂຸທັ້ງຫລາຍຈຶ່ງໃຫ້ພິກຂຸນັ້ນອາບນ້ຳ ພິກຂຸນັ້ນເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພິກຂຸຜູ້ບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາສ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ພິກຂຸນັ້ນອາບນ້ຳ ພິກຂຸນັ້ນເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາສ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ພິກຂຸນັ້ນອາບນ້ຳ ແຕ່ພິກຂຸນັ້ນບໍ່ເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງໃຫ້ທານ້ຳມັນ ໑ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍຈຶ່ງເອົານ້ຳມັນທາພິກຂຸນັ້ນໆ ເຖິງມໍຣຕກາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພິກຂຸຜູ້ບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງເອົານ້ຳມັນທາພິກຂຸນັ້ນ ພິກຂຸນັ້ນເຖິງມໍຣຕກາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກ
ແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງໃຫ້ລຸກຂຶ້ນ ໑ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍໃຫ້ພິກຂຸນັ້ນລຸກຂຶ້ນ ພິກຂຸນັ້ນເຖິງມໍຣຕກາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພິກຂຸຜູ້ບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ພິກຂຸນັ້ນລຸກຂຶ້ນ ພິກຂຸນັ້ນເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ພິກຂຸນັ້ນລຸກຂຶ້ນ ແຕ່ພິກຂຸນັ້ນບໍ່ເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງໃຫ້ລົ້ມລົງ ៥ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍຍັງພິກຂຸນັ້ນໃຫ້ລົ້ມລົງ ພິກຂຸນັ້ນເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພິກຂຸຜູ້ບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ພິກຂຸນັ້ນລົ້ມລົງ ພິກຂຸນັ້ນເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ພິກຂຸນັ້ນລົ້ມລົງ ແຕ່ພິກຂຸນັ້ນບໍ່ເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິ

ປາຣາຊິກແລ້ວແຫ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາ ກິກຈຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຈຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງໃຫ້ຕາຍດ້ວຍຂ້າວ ๓ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ກິກຈຸອົງຄ໌ນຶ່ງອາພາຣ ກິກຈຸທັ້ງຫລາຍໄດ້ໃຫ້ຂ້າວແກ່ກິກຈຸນັ້ນ ກິກຈຸນັ້ນ ເຖິງມໍຣຕກາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແຫ້ນໍ ຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຈຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຈຸທັ້ງຫລາຍ ກິກຈຸຜູ້ບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ກິກຈຸອົງຄ໌ນຶ່ງອາພາຣ ກິກຈຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ຂ້າວແກ່ກິກຈຸນັ້ນ ກິກຈຸນັ້ນເຖິງມໍຣຕກາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກ ແລ້ວແຫ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຈຸ ທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຈຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ກິກຈຸອົງຄ໌ນຶ່ງອາພາຣ ກິກຈຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ຂ້າວແກ່ກິກຈຸນັ້ນ ແຕ່ກິກຈຸນັ້ນບໍ່ເຖິງມໍຣຕກາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິ ປາຣາຊິກແລ້ວແຫ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາ ກິກຈຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ກິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຈຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງໃຫ້ຕາຍດ້ວຍນ້ຳຈັນ ๓ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ກິກຈຸອົງຄ໌ນຶ່ງອາພາຣ ກິກຈຸທັ້ງຫລາຍໄດ້ໃຫ້ນ້ຳຈັນແກ່ກິກຈຸນັ້ນໆ ເຖິງ ມໍຣຕກາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແຫ້ນໍ ຈຶ່ງຂາບທູລເຣື່ອງ ນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຈຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພິກຂຸຜູ້ບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໄດ້ໃຫ້ນ້ຳຈັນແກ່ພິກຂຸນັ້ນ ພິກຂຸນັ້ນເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາຣ ພິກຂຸທັ້ງຫລາຍມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໄດ້ໃຫ້ນ້ຳຈັນແກ່ພິກຂຸນັ້ນ ແຕ່ພິກຂຸນັ້ນບໍ່ເຖິງມໍຣຕພາພ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

ພິ. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

ເຣື່ອງຍິງມີຄັຣພ໌ກັບຊູ້

[໑໑໕] ກໍໂດຍສມັຍນັ້ນແລ ສຕຣີຄົນນຶ່ງ ສາມີຢ່າຮ້າງໄປນານ ຈຶ່ງມີຄັຣພ໌ກັບຊາຍຊູ້ ນາງໄດ້ບອກເຣື່ອງນີ້ກັບພິກຂຸກຸລຸປກະວ່າ ນິມົນຕ໌ເທີ້ນຂ້ານ້ອຍ ຂໍທ່ານຈົ່ງຮູ້ເພສັຊທີ່ເຮັດໃຫ້ຄັຣພ໌ຕົກ ພິກຂຸນັ້ນຮັບຄຳວ່າ ດີລະນ້ອງຍິງ ແລ້ວໄດ້ໃຫ້ເພສັຊທີ່ເຮັດໃຫ້ຄັຣພ໌ຕົກແກ່ຍິງນັ້ນ ທາຣົກໄດ້ເຖິງແກ່ຄວາມຕາຍ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

ເຣື່ອງຍິງຮ່ວມສາມີ ໒ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ບຸຣຸຸສຄົນນຶ່ງມີພັຣຍາ ໒ ຄົນໆ ນຶ່ງເປັນໝັນ ອີກຄົນນຶ່ງມີປົກກະຕິຄລອດ ຍິງໝັນໄດ້ລະເຣື່ອງນີ້ກັບພິກຂຸກຸລຸປກະວ່າ ທ່ານຂ້ານ້ອຍ ຖ້ານາງຄົນນັ້ນຄລອດບຸຕຣ໌ ຈັກໄດ້ຄອບທົ່ມຊັພຍ໌ສິນທັ້ງມວລ ນິມົນຕ໌ເທີ້ນຂ້ານ້ອຍ ທ່ານຈົ່ງຮູ້ເພສັຊທີ່ເຮັດໃຫ້ຄັຣພ໌ຕົກແກ່ນາງ ພິກຂຸນັ້ນຮັບຄຳວ່າ ດີລະນ້ອງຍິງ ແລ້ວໄດ້ໃຫ້ເພສັຊທີ່ເຮັດໃຫ້ຄັຣພ໌ຕົກແກ່ຍິງນັ້ນ ທາຣົກໄດ້ເຖິງແກ່ຄວາມຕາຍ

ແຕ່ມາຣດາບໍ່ຕາຍ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນ ແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໔. ກໍໂດຍສມັຍນັ້ນແລ ບຸຣຸษຄົນນຶ່ງມີກັຣຍາ ໒ ຄົນໆ ນຶ່ງເປັນໝັນ ອີກຄົນນຶ່ງມີ ປົກຕິຄລອດ ນຶງໝັນໄດ້ລະເຣື່ອງນີ້ກັບກິກຂຸກຸລຸປກະວ່າ ທ່ານຂ້ານ້ອຍ ຖ້ານາງຄົນນັ້ນຄລອດບຸຕຣ໌ ຈັກໄດ້ ຄອບຫົ່ມຊັພຍ໌ສິນທັ້ງມວລ ນິມົນຕ໌ເທີ້ນຂ້ານ້ອຍ ທ່ານຈົ່ງຮູ້ເກສັຊທີ່ເຮັດໃຫ້ຄັຣພ໌ຕົກແກ່ນາງ ກິກຂຸນັ້ນຮັບ ຄຳວ່າ ດີລະນ້ອງນຶງ ແລ້ວໄດ້ໃຫ້ເກສັຊທີ່ເຮັດໃຫ້ຄັຣພ໌ຕົກແກ່ນຶງນັ້ນ ມາຣດາໄດ້ເຖິງແກ່ຄວາມຕາຍ ແຕ່ທາຣົກບໍ່ຕາຍ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນ ແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິ ຖຸລລັຈຈັຍ

ເຣື່ອງຂ້າສອງມາຣດາບຸຕຣ໌ຕາຍ

ກໍໂດຍສມັຍນັ້ນແລ ບຸຣຸษຄົນນຶ່ງມີກັຣຍາ ໒ ຄົນໆ ນຶ່ງເປັນໝັນ ອີກຄົນນຶ່ງມີປົກຕິຄລອດ ນຶງໝັນໄດ້ລະເຣື່ອງນີ້ກັບກິກຂຸກຸລຸປກະວ່າ ທ່ານຂ້ານ້ອຍ ຖ້ານາງຄົນນັ້ນຄລອດບຸຕຣ໌ ຈັກໄດ້ຄອບຫົ່ມ ຊັພຍ໌ສິນທັ້ງມວລ ນິມົນຕ໌ເທີ້ນຂ້ານ້ອຍ ທ່ານຈົ່ງຮູ້ເກສັຊທີ່ເຮັດໃຫ້ຄັຣພ໌ຕົກແກ່ນາງ ກິກຂຸນັ້ນຮັບຄຳວ່າ ດີລະ ນ້ອງນຶງ ແລ້ວໄດ້ໃຫ້ເກສັຊທີ່ເຮັດໃຫ້ຄັຣພ໌ຕົກແກ່ນຶງນັ້ນ ມາຣດາແລະບຸຕຣໄດ້ຕາຍທັ້ງ ໒ ຄົນ ທ່ານມີ ຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

ເຣື່ອງຂ້າສອງມາຣດາບຸຕຣ໌ບໍ່ຕາຍ

ກໍໂດຍສມັຍນັ້ນແລ ບຸຣຸษຄົນນຶ່ງມີກັຣຍາ ໒ ຄົນໆ ນຶ່ງເປັນໝັນ ອີກຄົນນຶ່ງມີປົກຕິຄລອດ ນຶງໝັນໄດ້ລະເຣື່ອງນີ້ກັບກິກຂຸກຸລຸປກະວ່າ ທ່ານຂ້ານ້ອຍ ຖ້ານາງຄົນນັ້ນຄລອດບຸຕຣ໌ ຈັກໄດ້ຄອບຫົ່ມ ຊັພຍ໌ສິນທັ້ງມວລ ນິມົນຕ໌ເທີ້ນຂ້ານ້ອຍ ທ່ານຈົ່ງຮູ້ເກສັຊທີ່ເຮັດໃຫ້ຄັຣພ໌ຕົກແກ່ນາງ ກິກຂຸນັ້ນຮັບຄຳວ່າ ດີລະ ນ້ອງນຶງ ແລ້ວໄດ້ໃຫ້ເກສັຊທີ່ເຮັດໃຫ້ຄັຣພ໌ຕົກແກ່ນຶງນັ້ນ ມາຣດາແລະບຸຕຣ໌ບໍ່ຕາຍທັ້ງ ໒ ຄົນ ທ່ານມີ ຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງໃຫ້ຮີດ

ກໍໂດຍສມັຍນັ້ນແລ ນຶງມີຄັຣພ໌ຄົນນຶ່ງ ໄດ້ບອກເຣື່ອງນີ້ກັບກິກຂຸຜູ້ກຸລຸປກະວ່ານິມົນຕ໌ເທີ້ນຂ້ານ້ອຍ ທ່ານຈົ່ງຮູ້ເກສັຊທີ່ເຮັດໃຫ້ຄັຣພ໌ຕົກ ກິກຂຸນັ້ນບອກວ່າ ນ້ອງນຶງ ຖ້າເຊັ່ນນັ້ນທ່ານຈົ່ງຮີດ ນາງຈຶ່ງໄດ້ຮີດໃຫ້

ຄັຣພ໌ຕົກໄປ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນ ແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ຕ້ອງອາບັຕິປາຣາຊິກແລ້ວ

ເຣື່ອງໃຫ້ຮ້ອນ

ກໍໂດຍສມັຍນັ້ນແລ ຜິງມີຄັຣພ໌ຄົນນຶ່ງ ໄດ້ບອກເຣື່ອງນີ້ກັບກິກຂຸຜູ້ກຸລຸປກະວ່າ ນິມົນຕ໌ເທີ້ນ ຂ້ານ້ອຍ ທ່ານຈົ່ງຮູ້ເກສັຊທີ່ເຮັດໃຫ້ຄັຣພ໌ຕົກ ກິກຂຸນັ້ນບອກວ່າ ນ້ອງຜິງ ຖ້າເຊັ່ນນັ້ນທ່ານຈົ່ງເຮັດໃຫ້ຄັຣພ໌ຮ້ອນ ນາງຈຶ່ງເຮັດໃຫ້ຄັຣພ໌ຮ້ອນ ໃຫ້ຄັຣພ໌ຕົກໄປ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແລ້ວບໍ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກ ແລ້ວ

ເຣື່ອງຜິງຫມັນ

ກໍໂດຍສມັຍນັ້ນແລ ຜິງຫມັນຄົນນຶ່ງ ໄດ້ບອກເຣື່ອງນີ້ກັບກິກຂຸຜູ້ກຸລຸປກະວ່ານິມົນຕ໌ເທີ້ນຂ້ານ້ອຍ ທ່ານຈົ່ງຮູ້ເກສັຊທີ່ເຮັດໃຫ້ຂ້ານ້ອຍຄລອດບຸຕຣ໌ ກິກຂຸນັ້ນຮັບຄຳວ່າ ດີລະນ້ອງຜິງ ແລ້ວໄດ້ໃຫ້ເກສັຊແກ່ນາງໆ ເຖິງແກ່ກັມມ໌ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່-ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ

ເຣື່ອງຜິງມີປົກຕິຄລອດ

ກໍໂດຍສມັຍນັ້ນແລ ຜິງມີປົກຕິຄລອດບຸຕຣ໌ຖີ່ຄົນນຶ່ງ ໄດ້ບອກເຣື່ອງນີ້ກັບກິກຂຸຜູ້ກຸລຸປກະວ່າ ນິມົນຕ໌ເທີ້ນຂ້ານ້ອຍ ທ່ານຈົ່ງຮູ້ເກສັຊທີ່ເຮັດບໍ່ໃຫ້ຂ້ານ້ອຍຄລອດບຸຕຣ໌ ກິກຂຸນັ້ນຮັບຄຳວ່າ ດີລະ ນ້ອງຜິງ ແລ້ວໄດ້ໃຫ້ເກສັຊແກ່ນາງໆ ໄດ້ເຖິງແກ່ກັມມ໌ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້-ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸ ທ່ານບໍ່ ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ.

ເຣື່ອງຈີ້

[໔໒໖] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ ຍັງກິກຂຸອົງຄ໌ນຶ່ງຊຶ່ງຢູ່ໃນຈຳພວກພຣະສັຕຕຣສວັຄຄີຍ໌ ໃຫ້ຫົວເຮາະເພາະຈີ້ດ້ວຍນິ້ວມື ກິກຂຸນັ້ນເໜື່ອຍ ຫາຍໃຈອອກບໍ່ທັນ ໄດ້ເຖິງມໍຣຕກາພ ພວກທ່ານ ມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງທັບ

[໔໒໗] ກໍໂດຍສມັຍນັ້ນແລ ພວກກິກຂຸສັຕຕຣສວັຄຄີຍ໌ ຊ່ອຍກັນຂຶ້ນທັບກິກຂຸອົງຄ໌ນຶ່ງຊຶ່ງຢູ່ໃນ ຈຳພວກພຣະຈັພພັຄຄີຍ໌ ດ້ວຍຕັ້ງໃຈວ່າຈະລົງໂທຍໃຫ້ເຖິງມໍຣຕກາພ ແລ້ວພວກທ່ານມີຄວາມຢ້ານບາປວ່າ ພວກ

ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິປາຈິຕຕີຍ໌.

ເຣື່ອງຂ້າຍັກຂ໌

[໔໑໗] ກໍໂດຍສມັຍນັ້ນແລ ພິກຂຸໝໍຜີອົງຄ໌ນຶ່ງ ປົງຊີວິຕຍັກຂ໌ແລ້ວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸທ່ານບໍ່ ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

ເຣື່ອງສົ່ງໄປສູ່ທີ່ມີສັຕວ໌ຮ້າຍແລະຍັກຂ໌ດຸຮ້າຍ ໗ ເຣື່ອງ

[໔໑໘] ໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງສົ່ງພິກຂຸອີກອົງຄ໌ນຶ່ງໄປສູ່ວິຫາຣທີ່ມີຍັກຂ໌ດຸຮ້າຍ ພວກຍັກຂ໌ໄດ້ປົງຊີວິຕພິກຂຸນັ້ນ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ພິກຂຸຜູ້ບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ໄດ້ສົ່ງພິກຂຸອົງຄ໌ນຶ່ງໄປສູ່ ວິຫາຣທີ່ມີຍັກຂ໌ດຸຮ້າຍ ພວກຍັກຂ໌ໄດ້ປົງຊີວິຕພິກຂຸນັ້ນ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ໄດ້ສົ່ງພິກຂຸອົງຄ໌ນຶ່ງໄປສູ່ ວິຫາຣທີ່ມີຍັກຂ໌ດຸຮ້າຍ ແຕ່ພວກຍັກຂ໌ບໍ່ປົງຊີວິຕພິກຂຸນັ້ນ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກ ແລ້ວ ແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

໔. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງສົ່ງພິກຂຸອີກອົງຄ໌ນຶ່ງໄປສູ່ທາງກັນດາຣທີ່ມີສັຕວ໌ຮ້າຍໆ ໄດ້ ປົງຊີວິຕພິກຂຸນັ້ນ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງ ນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ກ. ຂ້າພຣະພຸທຊເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທຊເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ກິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໕. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ໄດ້ສົ່ງກິກຂຸອົງຄ໌ນຶ່ງໄປສູ່ທາງກັນດາຣທີ່ມີສັຕວ໌ຮ້າຍໆ ໄດ້ປົງຊີວິຕກິກຂຸນັ້ນ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸທ່ານຄິດຈັ່ງໃດ?

ກ. ຂ້າພຣະພຸທຊເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທຊເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໖. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ໄດ້ສົ່ງກິກຂຸອົງຄ໌ນຶ່ງໄປສູ່ທາງກັນດາຣທີ່ມີສັຕວ໌ຮ້າຍ ແຕ່ສັຕວ໌ຮ້າຍບໍ່ປົງຊີວິຕກິກຂຸນັ້ນ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸທ່ານຄິດຈັ່ງໃດ?

ກ. ຂ້າພຣະພຸທຊເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທຊເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

໗. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງສົ່ງກິກຂຸອີກອົງຄ໌ນຶ່ງໄປສູ່ທາງກັນດາຣທີ່ມີໂຈຣໆ ໄດ້ປົງຊີວິຕກິກຂຸນັ້ນ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກ. ຂ້າພຣະພຸທຊເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທຊເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ກິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໘. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ໄດ້ສົ່ງກິກຂຸອົງຄ໌ນຶ່ງໄປສູ່ທາງກັນດາຣທີ່ມີໂຈຣໆ ໄດ້ປົງຊີວິຕກິກຂຸນັ້ນ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແລ້ວບໍ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກ. ຂ້າພຣະພຸທຊເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທຊເຈົ້າ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໙. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ໄດ້ສົ່ງກິກຂຸອົງຄ໌ນຶ່ງໄປສູ່ທາງກັນດາຣທີ່ມີໂຈຣ ແຕ່ໂຈຣບໍ່ປົງຊີວິຕກິກຂຸນັ້ນ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸທ່ານຄິດຈັ່ງໃດ?

ກ. ຂ້າພຣະພຸທຊເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທຊເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ ๆ

ເຣື່ອງສຳຄັນແນ່ ໔ ເຣື່ອງ

[໔໘໐] ໑. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງ ສຳຄັນວ່າກິກຂຸຜູ້ມີເວຣແກ່ຕົນແນ່ ຈຶ່ງປົງ ຊີວິຕກິກຂຸນັ້ນ ແລ້ວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນ ແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໒. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງສຳຄັນວ່າກິກຂຸຜູ້ມີເວຣແກ່ຕົນແນ່ ແຕ່ປົງຊີວິຕກິກຂຸອື່ນ ແລ້ວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງສຳຄັນວ່າກິກຂຸອື່ນແນ່ ແຕ່ປົງຊີວິຕກິກຂຸຜູ້ມີເວຣແກ່ຕົນ ແລ້ວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໔. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງສຳຄັນວ່າກິກຂຸອື່ນແນ່ ຈຶ່ງປົງຊີວິຕກິກຂຸອື່ນ ແລ້ວມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ.

ເຣື່ອງປະຫາຣ ໓ ເຣື່ອງ

[໔໘໑] ໑. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຖືກຜີເຂົ້າ ກິກຂຸອີກອົງຄ໌ນຶ່ງໃຫ້ປະຫາຣກິກຂຸ ນັ້ນໆ ເຖິງມໍຣຕກາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ກິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຖືກຜີເຂົ້າ ກິກຂຸອີກອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງໃຫ້ປະຫາຣ໌ກິກຂຸນັ້ນໆ ເຖິງມໍຣຕກາພແລ້ວ ທ່ານມີຄວາມຍ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຖືກຜີເຂົ້າ ກິກຂຸອີກອົງຄ໌ນຶ່ງມີຄວາມປະສົງຄ໌ໃຫ້ຕາຍ ຈຶ່ງໃຫ້ປະຫາຣ໌ກິກຂຸນັ້ນ ແຕ່ກິກຂຸນັ້ນບໍ່ເຖິງມໍຣຕກາພ ທ່ານມີຄວາມຍ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

ເຣື່ອງພັຣຕນາສວັຣຄ໌ ໕ ເຣື່ອງ

[໔໔໔] ໑. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງພັຣຕນາເຣື່ອງສວັຣຄ໌ແກ່ຄົນຜູ້ທຳຄວາມດີ ຄົນນັ້ນດີໃຈຕາຍ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ກິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງພັຣຕນາເຣື່ອງສວັຣຄ໌ແກ່ຄົນຜູ້ທຳຄວາມດີ ຄົນນັ້ນດີໃຈຕາຍ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແລ້ວບໍ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໕. ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງພັຣຕນາເຣື່ອງສວັຣຄ໌ແກ່ຜູ້ທຳຄວາມດີ ຄົນນັ້ນດີໃຈ ແຕ່ບໍ່ຕາຍ ທ່ານຈຶ່ງມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຖາມວ່າ ດູຣາກິກຂຸ ທ່ານຄິດຈັ່ງໃດ?

ກິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ກ. ດູຣາກິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ

ເຣື່ອງພັຣຕນານຣົກ ໓ ເຣື່ອງ

໑. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງພັຣຕນາເຣື່ອງນຣົກແກ່ຜູ້ຄວຣເກີດໃນນຣົກ ຄົນນັ້ນຕົກໃຈ-ຕາຍ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ພິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງພັຣຕນາເຣື່ອງນຣົກແກ່ຄົນຜູ້ຄວຣເກີດໃນນຣົກ ຄົນນັ້ນຕົກໃຈຕາຍ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແລ້ວບໍ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງພັຣຕນາເຣື່ອງນຣົກແກ່ຜູ້ຄວຣເກີດໃນນຣົກ ຄົນນັ້ນຕົກໃຈ ແຕ່ບໍ່ຕາຍ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

ເຣື່ອງຕັດຕົ້ນໄມ້ທີ່ເມືອງອາລະວີ ໓ ເຣື່ອງ

[໒໒໓] ໑. ກໍໂດຍສມັຍນັ້ນແລ ພວກພິກຂຸຊາວເມືອງອາລວີຈະຕັດຕົ້ນໄມ້ທຳນວກັມມ໌ ພິກຂຸອົງຄ໌ນຶ່ງຈຶ່ງເວົ້າກັບພິກຂຸອີກອົງຄ໌ນຶ່ງວ່າ ອາວຸໂສ ທ່ານຈົ່ງຍືນຕັດທີ່ຕົງນີ້ ຕົ້ນໄມ້ໄດ້ລົ້ມທັບພິກຂຸຜູ້ຢືນຕັດຢູ່ ຓ ທີ່ນັ້ນເຖິງມໍຣຕພາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບ-ທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ພິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໒. ກໍໂດຍສມັຍນັ້ນແລ ພວກພິກຂຸຊາວເມືອງອາລວີຈະຕັດຕົ້ນໄມ້ທຳນວກັມມ໌ ພິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງເວົ້າກັບພິກຂຸອີກອົງຄ໌ນຶ່ງວ່າ ອາວຸໂສ ທ່ານຈົ່ງຍືນຕັດທີ່ຕົງນີ້ ຕົ້ນໄມ້ໄດ້ລົ້ມທັບພິກຂຸຜູ້ຢືນຕັດຢູ່ ຓ ທີ່ນັ້ນເຖິງມໍຣຕພາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແລ້ວບໍ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸ ທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ພວກພິກຂຸຊາວເມືອງອາລວີຈະຕັດຕົ້ນໄມ້ທຳນວກັມມ໌ ພິກຂຸອົງຄ໌ນຶ່ງມີຄວາມປະສົງຄ໌ຈະໃຫ້ຕາຍ ຈຶ່ງເວົ້າກັບພິກຂຸອີກອົງຄ໌ນຶ່ງວ່າ ອາວຸໂສ ທ່ານຈົ່ງຢືນຕັດທີ່ຕົງນີ້ ຕົ້ນໄມ້ໄດ້ລົ້ມທັບພິກຂຸຜູ້ຢືນຕັດຢູ່ ຓ ທີ່ນັ້ນ ແຕ່ບໍ່ເຖິງມໍຣຓາພ ທ່ານມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸທ່ານຄິດຈັ່ງໃດ?

ພິ. ຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

ເຣື່ອງເຜົາປ່າ ໓ ເຣື່ອງ

[໔໔໔] ໑. ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ເຜົາປ່າ ຄົນທັ້ງຫລາຍຖືກໄຟໄຫມ້ຕາຍ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

໑. ພວກຂ້າພຣະພຸທສເຈົ້າ ບໍ່ໄດ້ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພິກຂຸບໍ່ມີຄວາມປະສົງຄ໌ຈະໃຫ້ຕາຍ ບໍ່ຕ້ອງອາບັຕິ

໔. ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ມີຄວາມປະສົງຄ໌ຈະໃຫ້ຕາຍຈຶ່ງເຜົາປ່າ ຄົນທັ້ງຫລາຍຖືກໄຟໄຫມ້ຕາຍ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

໑. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກແລ້ວ

໓. ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ມີຄວາມປະສົງຄ໌ຈະໃຫ້ຕາຍຈຶ່ງເຜົາປ່າ ຄົນທັ້ງຫລາຍຖືກໄຟລວກ ແຕ່ບໍ່ຕາຍ ພວກທ່ານມີຄວາມຢ້ານບາປວ່າ ພວກເຮົາຕ້ອງອາບັຕິປາຣາຊິກແລ້ວແລ້ວບໍ່ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຄິດຈັ່ງໃດ?

໑. ພວກຂ້າພຣະພຸທສເຈົ້າ ມີຄວາມປະສົງຄ໌ຈະໃຫ້ຕາຍ ພຣະພຸທສເຈົ້າຂ້ານ້ອຍ

ພ. ດູຣາພິກຂຸທັ້ງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ.

ເຣື່ອງຢ່າໃຫ້ລຳບາກ

[໔໔໕] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງໄປສູ່ຕະແລງແກງ ໄດ້ເວົ້າກັບນາຍເພັຊຊຆາຕວ່າ ອາວຸໂສ ທ່ານຢ່າໃຫ້ນັກໂທສຄົນນີ້ລຳບາກເລີຍ ຈົ່ງປົງຊີວິຕດ້ວຍການຟັນທີດຽວຕາຍເທີ້ນ ເພັຊຊຆາຕ

ຮັບຄຳວ່າ ດີລະ ຂ້ານ້ອຍ ແລ້ວປົງຊີວິຕດ້ວຍການຟັນທີດຽວຕາຍ ພິກຂຸນັ້ນມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

ເຣື່ອງບໍ່ເຮັດຕາມຄຳຂອງທ່ານ

ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງໄປສູ່ຕະແລງແກງ ໄດ້ເວົ້າກັບນາຍເພັຊຊຸຂາຕວ່າ ອາວຸໂສ ທ່ານຢ່າໃຫ້ນັກໂທษຄົນນີ້ລຳບາກເລີຍ ຈົ່ງປົງຊີວິຕດ້ວຍການຟັນທີດຽວຕາຍເທີ້ນ ນາຍເພັຊຊຸຂາຕນັ້ນເວົ້າວ່າ ຂ້ານ້ອຍຈະບໍ່ເຮັດຕາມຄຳຂອງທ່ານ ແລ້ວປົງຊີວິຕນັກໂທษນັ້ນ ພິກຂຸນັ້ນມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ ฯ

ເຣື່ອງໃຫ້ດື່ມປຽງ

[໔໘໖] ກໍໂດຍສມັຍນັ້ນແລ ບຸຣຸษຄົນນຶ່ງມີມືແລະຕີນດ້ວນ ໝູ່ຍາຕິເບິ່ງແຍງໄວ້ໃນເຮືອນຍາຕິ ພິກຂຸອົງຄ໌ນຶ່ງໄດ້ເວົ້າກັບຄົນພວກນັ້ນວ່າ ທ່ານທັ້ງຫລາຍຢາກໃຫ້ບຸຣຸษຜູ້ນີ້ຕາຍຫຼືບໍ່?

ຍ. ຂ້ານ້ອຍ ຂ້ານ້ອຍຢາກໃຫ້ຕາຍ

ພິ. ຖ້າເຊັ່ນນັ້ນ ຈົ່ງໃຫ້ເຂົາດື່ມປຽງ

ຄົນພວກນັ້ນຈຶ່ງໄດ້ໃຫ້ບຸຣຸษນັ້ນດື່ມປຽງ ບຸຣຸษນັ້ນໄດ້ຕາຍແລ້ວ ພິກຂຸນັ້ນມີຄວາມຢ້ານບາປວ່າ ເຮົາຕ້ອງອາບັຕິປາຣາຊິກແລ້ວແທ້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸ ທ່ານຕ້ອງອາບັຕິປາຣາຊິກແລ້ວ

ເຣື່ອງໃຫ້ດື່ມຢາດອງໂລຫະໂສຈິຣກະ

ກໍໂດຍສມັຍນັ້ນແລ ບຸຣຸษຄົນນຶ່ງມີມືແລະຕີນດ້ວນ ໝູ່ຍາຕິເບິ່ງແຍງໄວ້ໃນເຮືອນຍາຕິ ພິກຂຸນີອົງຄ໌ນຶ່ງໄດ້ເວົ້າກັບຄົນພວກນັ້ນວ່າ ທ່ານທັ້ງຫລາຍປັຕຖນາໃຫ້ບຸຣຸษຜູ້ນີ້ຕາຍຫຼືບໍ່?

ຍ. ປັຕຖນາຂ້ານ້ອຍ

ພິ. ຖ້າເຊັ່ນນັ້ນ ຈົ່ງໃຫ້ເຂົາດື່ມຢາດອງຊື່ໂລຫະໂສຈິຣກະ

ຄົນພວກນັ້ນໄດ້ໃຫ້ບຸຣຸษນັ້ນດື່ມຢາດອງໂລຫະໂສຈິຣກະ ບຸຣຸษນັ້ນໄດ້ຕາຍແລ້ວ ພິກຂຸນີນັ້ນມີຄວາມບໍ່ມັກ ຈຶ່ງໄດ້ແຈ້ງເຣື່ອງນັ້ນແກ່ພິກຂຸນີທັ້ງຫລາຍໆ ໄດ້ແຈ້ງເຣື່ອງນັ້ນແກ່ພິກຂຸທັ້ງຫລາຍໆ ໄດ້ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄ ຕຣັສວ່າ ດູຣາພິກຂຸທັ້ງຫລາຍ ພິກຂຸນີນັ້ນ ຕ້ອງອາບັຕິປາຣາຊິກແລ້ວ.

ປາຣາຊິກສິກຂາບົທ ທີ່ ໓ ຈົບ

ຈຕຸຕຖປາຣາຊິກສິກຂາບົທ
ເຣື່ອງກິກຂຸພວກຝັ່ງແມ່ນ້ຳວັຄຄຸມຸທາ

[໘໗] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທຮເຈົ້າປະທັບຢູ່ ໓ ກູຕາຄາຣສາລາປ່າມຫາວັນ ເຂຕພຣະນຄຣເວສາລີ ຄັ້ງນັ້ນ ກິກຂຸຫຼາຍອົງຄ໌ດ້ວຍກັນ ຊຶ່ງເຄີຍເຫັນຮ່ວມຄົບຫາກັນມາ ຈຳພັຣສາຢູ່ໃກ້ ຝັ່ງແມ່ນ້ຳວັຄຄຸມຸທາ ກໍແລສມັຍນັ້ນ ວັຊຊີຊົນບົທ ອັຕຄັດອາຫາຣ ປະຊາຊົນຫາລ້ຽງຊີພຝືດເຄືອງ ມີຂ້າວຕາຍຝອຍ ຕ້ອງມີສລາກຊື້ອາຫາຣ ກິກຂຸສົງຆ໌ຈະຍັງອັຕກາພໃຫ້ເປັນໄປດ້ວຍການຖືບາຕຣ໌ສແວງຫາ ກໍເຮັດບໍ່ໄດ້ງ່າຍ ຈຶ່ງກິກຂຸເຫລົ່ານັ້ນຄິດກັນວ່າ ບັດນີ້ວັຊຊີຊົນບົທອັຕຄັດອາຫາຣ ປະຊາຊົນຫາລ້ຽງຊີພຝືດເຄືອງ ມີຂ້າວຕາຍຝອຍ ຕ້ອງມີສລາກຊື້ອາຫາຣ ກິກຂຸສົງຆ໌ຈະຍັງອັຕກາພໃຫ້ເປັນໄປດ້ວຍການຖືບາຕຣ໌ສແວງຫາ ກໍເຮັດບໍ່ໄດ້ງ່າຍ ພວກເຮົາຈຶ່ງຈະເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນບໍ່ວິວາທກັນ ຢູ່ຈຳພັຣສາເປັນຜາສຸກ ແລະຈະບໍ່ຕ້ອງລຳບາກດ້ວຍບິຓຑບາຕ ດ້ວຍອຸບາຍຈັ່ງໃດນໍ

ກິກຂຸບາງພວກເວົ້າຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ຄິດດັ່ງນັ້ນ ພວກເຮົາຈຶ່ງຊ່ອຍກັນອຳນວຍກິຈການ ອັນເປັນຫນ້າທີ່ຂອງພວກຄຣືຫັສຖ໌ເທີ້ນ ເມື່ອເປັນເຊັ່ນນັ້ນ ພວກເຂົາຈັກມຸ່ງຖວາຍບິຓຑບາຕແກ່ພວກເຮົາ ດ້ວຍອຸບາຍຢ່າງນີ້ ພວກເຮົາຈັກເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ວິວາທກັນ ຢູ່ຈຳພັຣສາເປັນຜາສຸກ ແລະຈະບໍ່ລຳບາກດ້ວຍບິຓຑບາຕ

ກິກຂຸບາງພວກເວົ້າຢ່າງນີ້ວ່າ ບໍ່ຄວຣ ທ່ານທັ້ງຫລາຍ ຈະປະໂຍຊນ໌ອັນໃດດ້ວຍການຊ່ອຍກັນອຳນວຍກິຈການ ອັນເປັນຫນ້າທີ່ຂອງພວກຄຣືຫັສຖ໌ ທ່ານທັ້ງຫລາຍ ຄິດດັ່ງນັ້ນ ພວກເຮົາຈຶ່ງຊ່ອຍກັນນຳຂ່າວສາສ໌ນອັນເປັນຫນ້າທີ່ທູຕຂອງພວກຄຣືຫັສຖ໌ເທີ້ນ ເມື່ອເປັນເຊັ່ນນັ້ນ ພວກເຂົາຈັກມຸ່ງຖວາຍບິຓຑບາຕແກ່ພວກເຮົາ ດ້ວຍອຸບາຍຢ່າງນີ້ ພວກເຮົາຈັກເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ວິວາທກັນ ຢູ່ຈຳພັຣສາເປັນຜາສຸກ ແລະຈະບໍ່ລຳບາກດ້ວຍບິຓຑບາຕ

ກິກຂຸບາງພວກເວົ້າຢ່າງນີ້ວ່າ ຢ່າເລີຍ ທ່ານທັ້ງຫລາຍ ຈະປະໂຍຊນ໌ອັນໃດດ້ວຍການຊ່ອຍກັນອຳນວຍກິຈການ ອັນເປັນຫນ້າທີ່ຂອງພວກຄຣືຫັສຖ໌ ຈະປະໂຍຊນ໌ອັນໃດດ້ວຍການຊ່ອຍກັນທຳຂ່າວສາສ໌ນອັນເປັນຫນ້າທີ່ທູຕຂອງພວກຄຣືຫັສຖ໌ ທ່ານທັ້ງຫລາຍ ຄິດດັ່ງນັ້ນ ພວກເຮົາຈັກກ່າວຊົມ**ອຸຕຕຣິມນຸສສັ໌ມມ໌**[11] ຂອງກັນແລະກັນແກ່ພວກຄຣືຫັສຖ໌ວ່າ ກິກຂຸອົງຄ໌ນັ້ນໄດ້ປຖົມຊານ ອົງຄ໌ນັ້ນໄດ້ທຸຕິຍຊານ ອົງຄ໌ນັ້ນໄດ້

---

[11] **ອຸຕຕຣິມນຸສສັ໌ມມ໌** ສັ໌ມມ໌ຍວດຍິ່ງຂອງມນຸษຍ໌, ສັ໌ມມ໌ຂອງມນຸษຍ໌ຜູ້ຍອດຍິ່ງ, ສັ໌ມມ໌ລ້ຳມນຸษຍ໌ ໄດ້ແກ່ ຊານ ວິໂມກຂ໌ ສມາຘິ ສມາບັຕິ ມັຄຄ໌ຜົລ, ບາງເທື່ອເອີ້ນໃຫ້ງ່າຍວ່າ ສັ໌ມມວິເສษ ແດ່ ຄຸຓວິເສษ ຫຼື ຄຸຓພິເສษ ແດ່ (ອາຈຈະຂຽນ ອຸຕຣິມນຸສັ໌ມມ໌)

[໕໘໑] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຣະພຸທສເຈົ້າ ປະທັບຢູ່ ຓ ວັດໂຄສິຕາຣາມ ເຂຕພຣະນຄຣໂກສັມພີ ຄັ້ງນັ້ນ ຄຣືຫບໍດີອຸປັຕຖາກຂອງທ່ານພຣະຈັນນະ ໄດ້ກ່າວກັບທ່ານວ່າ ຂ້າແຕ່ທ່ານຜູ້ຈເຣີຍ ຂໍພຣະຄຸຓເຈົ້າໂປຼດກວດເບິ່ງສຖານທີ່ສ້າງວິຫາຣ ຂ້ານ້ອຍຈັກໃຫ້ສ້າງວິຫາຣຖວາຍພຣະຄຸຓເຈົ້າ ຈຶ່ງທ່ານພຣະຈັນນະໃຫ້ຖາກຖາງສຖານທີ່ສ້າງວິຫາຣ ໃຫ້ໂຄ່ນຕົ້ນໄມ້ອັນເປັນເຈດີຍ໌ຕົ້ນນຶ່ງ ຊຶ່ງຊາວບ້ານ ຊາວນິຄົມ ຊາວນຄຣ ຊາວຊົນບົທ ຊາວຣັຕຖະ ພາກັນບູຊາ ຄົນທັ້ງຫລາຍພາກັນ ເພັ່ງໂທສ ຕິຕຽນ ໂພນທະນາວ່າ ຈັ່ງໃດ ພຣະສມຓະເຊື້ອສາຍພຣະສາກຍບຸຕຣ໌ ຈຶ່ງໃຫ້ໂຄ່ນຕົ້ນໄມ້ອັນເປັນເຈດີຍ໌ ຊຶ່ງຊາວບ້ານ ຊາວນິຄົມ ຊາວນຄຣ ຊາວຊົນບົທ ຊາວຣັຕຖະ ພາກັນບູຊາລະ ພຣະສມຓະເຊື້ອສາຍພຣະສາກຍບຸຕຣ໌ ບຽດບຽນອິນທຣີຍ໌ຊນິດນຶ່ງຊຶ່ງມີຊີພ ກິກຂຸທັ້ງຫລາຍໄດ້ຍິນພວກເຫລົ່ານັ້ນ ເພັ່ງໂທສ ຕິຕຽນ ໂພນທະນາຢູ່ ບັຣດາຜູ້ທີ່ມີຄວາມມັກນ້ອຍ ສັນໂດສ ມີຄວາມລະອາຍ ມີຄວາມຢ້ານບາປ ຜູ້ມັກຕໍ່ສິກຂາ ຍ່ອມເພັ່ງໂທສ ຕິຕຽນ ໂພນທະນາວ່າ ຈັ່ງໃດ ທ່ານພຣະຈັນນະຈຶ່ງໃຫ້ໂຄ່ນຕົ້ນໄມ້ອັນເປັນເຈດີຍ໌ ຊຶ່ງຊາວບ້ານ ຊາວນິຄົມ ຊາວນຄຣ ຊາວຊົນບົທ ຊາວຣັຕຖະ ພາກັນບູຊາລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ

ປະຊຸມສົງຄ໌ຊົງບັນລັດຕິສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມກິກຂຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມທ່ານພຣະຈັນນະວ່າ ດູຣາຈັນນະ ຂ່າວວ່າ ທ່ານໃຫ້ເຂົາໂຄ່ນຕົ້ນໄມ້ອັນເປັນເຈດີຍ໌ ຊຶ່ງຊາວບ້ານ ຊາວນິຄົມ ຊາວນຄຣ ຊາວຊົນບົທ ຊາວຣັຕຖະ ພາກັນບູຊາ ຈິງຫຼື?

ທ່ານພຣະຈັນນະທູລຣັບວ່າ ຈິງ ພຣະພຸທສເຈົ້າຂ້ານ້ອຍ

ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕິຕຽນວ່າ ດູຣາໂມຄບຸຣຸສ ກາຣກະທຳຂອງທ່ານນັ້ນ ບໍ່ເໝາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຓະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ຈັ່ງໃດທ່ານຈຶ່ງໄດ້ໃຫ້ໂຄ່ນຕົ້ນໄມ້ ອັນເປັນເຈດີຍ໌ ຊຶ່ງຊາວບ້ານ ຊາວນິຄົມ ຊາວນຄຣ ຊາວຊົນບົທ ຊາວຣັຕຖະ ພາກັນບູຊາລະ ເພາະມນຸສຍ໌ມີຄວາມສຳຄັນໃນຕົ້ນໄມ້ວ່າມີຊີພ ດູຣາໂມຄບຸຣຸສ ກາຣກະທຳຂອງທ່ານນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ກາຣກະທຳຂອງທ່ານນັ້ນ ເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເລື່ອມໃສແລ້ວ.

ພໍພຣະຜູ້ມີພຣະກາຄຊົງຕິຕຽນທ່ານພຣະฉັນນະ ໂດຍອເນກປຣິຍາຍດັ່ງນີ້ແລ້ວຕຣັສໂທษແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດษ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຕຣັສຄຸຓແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາການທີ່ໜ້າເລື່ອມໃສ ການບໍ່ສະສົມ ການປຼາຣົກຄວາມພຽຣ ໂດຍອເນກປຣິຍາຍ ຊົງກະທຳສັມມີກາຖາທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເຫມາະສົມແກ່ເຣື່ອງນັ້ນແກ່ກິກษຸທັ້ງຫລາຍ ແລ້ວຣັບສັ່ງກັບກິກษຸທັ້ງຫລາຍວ່າ

ດູຣາກິກษຸທັ້ງຫລາຍ ເພາະເຫຕຸນັ້ນແລ ເຣົາຈັກບັญญັຕິສິກຂາບົທແກ່ກິກษຸທັ້ງຫລາຍ ອາศຍອຳນາຈປະໂຍຊນ໌ ໑໐ ປະການ ຄື ເພື່ອຄວາມຣັບວ່າດີແຫ່ງສົງฆ໌ ໑ ເພື່ອຄວາມສຳຣາญແຫ່ງສົງฆ໌ ໑ ເພື່ອຂົ່ມບຸຄຄົລຜູ້ເກີ້ຍາກ ໑ ເພື່ອຢູ່ສຳຣາญແຫ່ງກິກษຸຜູ້ມີศີລເປັນທີ່ຮັກ ໑ ເພື່ອປ້ອງກັນອາສວະອັນຈະບັງເກີດໃນປັຈຈຸບັນ ໑ ເພື່ອກຳຈັດອາສວະ ອັນຈັກບັງເກີດໃນອນາຄົຕ ໑ ເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ໑ ເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໑ ເພື່ອຄວາມຕັ້ງມັ່ນແຫ່ງພຣະສັທສັມມ໌ ໑ ເພື່ອຖືຕາມພຣະວິນັຍ ໑

ດູຣາກິກษຸທັ້ງຫລາຍ ກໍແລພວກທ່ານຄວຣຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້

ພຣະບັญญັຕິ

໑໑. ກ. ອີກຢ່າງ ກິກษຸຈະໃຫ້ສ້າງວິຫາຣໃຫญ່ ອັນມີເຈົ້າຂອງຈະເພາະຕົນເອງ ຄວຣນຳກິກษຸທັ້ງຫລາຍໄປເພື່ອສະແດງທີ່ ກິກษຸເຫລົ່ານັ້ນຄວຣສະແດງທີ່ອັນບໍ່ມີຜູ້ຈອງໄວ້ ອັນມີຊານຮອບຫາກກິກษຸໃຫ້ສ້າງວິຫາຣໃຫญ່ ໃນທີ່ອັນມີຜູ້ຈອງໄວ້ ອັນຫາຊານຮອບບໍ່ໄດ້ ຫຼືບໍ່ນຳກິກษຸທັ້ງຫລາຍໄປ ເພື່ອສະແດງທີ່ ເປັນສັງฆາທິເສສ.

ເຣື່ອງພຣະฉັນນະ ຈົບ.

ສິກຂາບົທວິກັງຄ໌

[໕໘໘] ວິຫາຣທີ່ຊື່ວ່າ ໃຫญ່ ທ່ານວ່າມີເຈົ້າຂອງ

ທີ່ຊື່ວ່າ ວິຫາຣ ໄດ້ແກ່ທີ່ຢູ່ ຊຶ່ງໂບກລາບປູນໄວ້ຈະເພາະກາຍໃນກໍຕາມ ຊຶ່ງໂບກລາບປູນໄວ້ຈະເພາະກາຍນອກກໍຕາມ ຊຶ່ງໂບກລາບປູນໄວ້ທັ້ງກາຍໃນທັ້ງກາຍນອກກໍຕາມ

ບົທວ່າ ໃຫ້ສ້າງ ຄື ທຳເອງກໍຕາມ ໃຊ້ໃຫ້ເຂົາທຳກໍຕາມ

ບົທວ່າ ອັນມີເຈົ້າຂອງ ຄື ມີໃຜ ໃຜຄົນອື່ນ ທີ່ເປັນສຕຣີກໍຕາມ ບຸຣຸษກໍຕາມ ຄຣືຫັສຖ໌ກໍຕາມ ບັຣພຊິຕກໍຕາມ ເປັນເຈົ້າຂອງ

ບົທວ່າ ຈະເພາະຕົນເອງ ຄື ເພື່ອປະໂຍຊນ໌ສ່ວນຕົວ

[໕໘໓] ຄຳວ່າ ຄວຣນຳភິກษุທັ້ງຫລາຍໄປເພື່ອສະແດງທີ່ ນັ້ນ ຄວາມວ່າភິກษุຈະສ້າງວິຫາຣນັ້ນ ຕ້ອງໃຫ້ຖາກຖາງສຖານທີ່ຈະສ້າງວິຫາຣເສັຽກ່ອນ ແລ້ວເຂົ້າໄປຫາສົງฆ໌ຫົ່ມຜ້າອຸຕຕຣາສົງຄ໌ພາດບ່າ ຂາບ ຕີນភິກษุຜູ້ແກ່ພັຣษາກວ່າ ແລ້ວນັ່ງຫຍ່ອງຫຍັ້ນົມມືກ່າວຢ່າງນີ້ວ່າ ທ່ານຂ້ານ້ອຍ ຂ້າພເຈົ້າມັກຈະສ້າງ ວິຫາຣໃຫຍ່ ອັນມີເຈົ້າຂອງ ຈະເພາະຕົນເອງ ທ່ານຂ້ານ້ອຍ ຂ້າພເຈົ້ານັ້ນ ຂໍສົງฆ໌ໃຫ້ກວດເບິ່ງສຖານທີ່ຈະສ້າງ ວິຫາຣ ດັ່ງນີ້ ຄວຣຂໍແມ້ເທື່ອທີ່ສອງ ຄວຣຂໍແມ້ເທື່ອທີ່ສາມ ຖ້າສົງฆ໌ທັ້ງປວງສາມາຖຈະກວດເບິ່ງສຖານທີ່ຈະ ສ້າງວິຫາຣໄດ້ ສົງฆ໌ທັ້ງຫມົດຄວຣກວດເບິ່ງ ຖ້າສົງฆ໌ທັ້ງປວງບໍ່ສາມາຖຈະກວດເບິ່ງສຖານທີ່ຈະສ້າງວິຫາຣໄດ້ ភິກษุເຫລົ່າໃດໃນສົງฆ໌ຫມູ່ນັ້ນ ເປັນຜູ້ฉລາດ ສາມາຖຈະຮູ້ໄດ້ວ່າເປັນສຖານມີຜູ້ຈອງໄວ້ ຫຼືເປັນສຖານ ບໍ່ມີຜູ້ຈອງໄວ້ ເປັນສຖານມີຊານຣອບ ຫຼືເປັນສຖານບໍ່ມີຊານຣອບ ສົງฆ໌ຄວຣຂໍភິກษุເຫລົ່ານັ້ນແລ້ວ ສົມມຸຕິ

ວິធີສົມມຸຕິ

ກໍແລສົງฆ໌ຄວຣສົມມຸຕິຢ່າງນີ້ ຄືភິກษุອົງຄ໌ນຶ່ງ ຜູ້ฉລາດ ຜູ້ສາມາຖ ຄວຣປະກາឝໃຫ້ສົງฆ໌ຮູ້ ດ້ວຍญັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້

ກັມມ໌ວາຈາສົມມຸຕິភິກษุຜູ້ກວດເບິ່ງສຖານທີ່ຈະສ້າງວິຫາຣ

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ភິກษุມີຊື່ນີ້ຜູ້ນີ້ເປັນຜູ້ມັກຈະສ້າງວິຫາຣໃຫຍ່ ອັນມີ ເຈົ້າຂອງ ຈະເພາະຕົນເອງ ທ່ານຂໍສົງฆ໌ໃຫ້ກວດເບິ່ງສຖານທີ່ຈະສ້າງວິຫາຣ ຖ້າຄວາມພ້ອມພັ່ງຂອງສົງฆ໌ ເຖິງທີ່ແລ້ວ ສົງฆ໌ຄວຣສົມມຸຕິភິກษุທັ້ງຫລາຍມີຊື່ນີ້ ແລະມີຊື່ນີ້ ເພື່ອກວດເບິ່ງສຖານທີ່ຈະສ້າງວິຫາຣຂອງ ភິກษุມີຊື່ນີ້ ນີ້ເປັນญັຕຕິ ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ភິກษุມີຊື່ນີ້ຜູ້ນີ້ເປັນຜູ້ມັກຈະສ້າງວິຫາຣ ໃຫຍ່ ອັນມີເຈົ້າຂອງຈະເພາະຕົນເອງ ທ່ານຂໍສົງฆ໌ໃຫ້ກວດເບິ່ງສຖານທີ່ຈະສ້າງວິຫາຣ ສົງฆ໌ສົມມຸຕິភິກษุ ທັ້ງຫລາຍມີຊື່ນີ້ ແລະມີຊື່ນີ້ ເພື່ອກວດເບິ່ງສຖານທີ່ຈະສ້າງວິຫາຣຂອງភິກษุມີຊື່ນີ້ ກາຣສົມມຸຕິភິກษุ ທັ້ງຫລາຍມີຊື່ນີ້ ແລະມີຊື່ນີ້ ເພື່ອກວດເບິ່ງສຖານທີ່ຈະສ້າງວິຫາຣຂອງភິກษุມີຊື່ນີ້ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຈະໄດ້ເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ ភិກษุທັ້ງຫລາຍມີຊື່ນີ້ ແລະມີຊື່ນີ້ ອັນສົງฆ໌ສົມມຸຕິແລ້ວ ເພື່ອກວດເບິ່ງສຖານທີ່ຈະສ້າງວິຫາຣ ຂອງភິກษุມີຊື່ນີ້ ຊອບແກ່ສົງฆ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າຊົງຄວາມນີ້ໄວ້ດ້ວຍຢ່າງນີ້.

ວິធີຂໍສົງฆ໌ສະແດງສຖານທີ່ສ້າງວິຫາຣ

[໕໘໔] ភិກษุທັ້ງຫລາຍຜູ້ອັນສົງฆ໌ສົມມຸຕິແລ້ວເຫລົ່ານັ້ນ ຄວຣໄປ ໓ ທີ່ນັ້ນ ກວດເບິ່ງສຖານທີ່ ຈະສ້າງວິຫາຣ ຄວຣຮູ້ວ່າເປັນສຖານມີຜູ້ຈອງໄວ້ ຫຼືເປັນສຖານບໍ່ມີຜູ້ຈອງໄວ້ ເປັນສຖານມີຊານຣອບ

ຫຼືເປັນສຖານບໍ່ມີຊານຮອບ ຖ້າເປັນສຖານມີຜູ້ຈອງໄວ້ ທັ້ງເປັນສຖານບໍ່ມີຊານຮອບ ຄວຣບອກວ່າຢ່າ ສ້າງລົງໃນທີ່ນີ້ ຖ້າເປັນສຖານບໍ່ມີຜູ້ຈອງໄວ້ ທັ້ງມີຊານຮອບ ຄວຣແຈ້ງແກ່ສົງຆ໌ວ່າ ເປັນສຖານບໍ່ມີຜູ້ຈອງ ໄວ້ ທັ້ງມີຊານຮອບກິກຂຸຜູ້ຈະສ້າງວິຫາຣນັ້ນ ຄວຣເຂົ້າໄປຫາສົງຆ໌ ຫົ່ມຜ້າອຸຕຕຣາສົງຄ໌ພາດບ່າ ຂາບຕີນ ກິກຂຸທັ້ງຫລາຍຜູ້ແກ່ພັຣຊາ ແລ້ວນັ່ງຫຢ່ອງຫຍໍ້ນົມມື ກ່າວຢ່າງນີ້ວ່າ ທ່ານຂ້ານ້ອຍ ຂ້າພເຈົ້າມັກຈະສ້າງ ວິຫາຣໃຫຌ່ ອັນມີເຈົ້າຂອງ ຈະເພາະຕົນເອງ ທ່ານຂ້ານ້ອຍ ຂ້າພເຈົ້ານັ້ນຂໍສົງຆ໌ໃຫ້ສະແດງສຖານທີ່ຈະສ້າງ ວິຫາຣ ຄວຣຂໍແມ້ເທື່ອທີ່ສອງ ຄວຣຂໍແມ້ເທື່ອທີ່ສາມ ກິກຂຸອົງຄ໌ນຶ່ງຜູ້ຉຫຼາດ ຜູ້ສາມາຖ ຄວຣປະກາສໃຫ້ ສົງຆ໌ຮູ້ດ້ວຍຌັຕຕິທຸຕິຍກັມມ໌ວາຈາວ່າດັ່ງນີ້:-

ກັມມ໌ວາຈາສະແດງສຖານທີ່ຈະສ້າງວິຫາຣ

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ກິກຂຸມີຊື່ນີ້ຜູ້ນີ້ ເປັນຜູ້ມັກຈະສ້າງວິຫາຣໃຫຌ່ ອັນມີ ເຈົ້າຂອງ ຈະເພາະຕົນເອງ ທ່ານຂໍສົງຆ໌ໃຫ້ສະແດງສຖານທີ່ຈະສ້າງວິຫາຣ ຖ້າຄວາມພ້ອມພັ່ງຂອງສົງຆ໌ ເຖິງທີ່ແລ້ວ ສົງຆ໌ຄວຣສະແດງສຖານທີ່ຈະສ້າງວິຫາຣແກ່ກິກຂຸມີຊື່ນີ້ ນີ່ເປັນຌັຕຕິ ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງ ຂ້າພເຈົ້າ ກິກຂຸມີຊື່ນີ້ຜູ້ນີ້ ເປັນຜູ້ມັກຈະສ້າງວິຫາຣໃຫຌ່ ອັນມີເຈົ້າຂອງ ຈະເພາະຕົນເອງ ທ່ານຂໍສົງຆ໌ ໃຫ້ສະແດງສຖານທີ່ຈະສ້າງວິຫາຣ ສົງຆ໌ສະແດງສຖານທີ່ຈະສ້າງວິຫາຣຂອງກິກຂຸມີຊື່ນີ້ ກາຣິສະແດງສຖານທີ່ ຈະສ້າງວິຫາຣຂອງກິກຂຸມີຊື່ນີ້ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຈະໄດ້ເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ ສຖານທີ່ຈະສ້າງວິຫາຣຂອງກິກຂຸມີຊື່ນີ້ ອັນສົງຆ໌ສະແດງແລ້ວ ຊອບແກ່ສົງຆ໌ ເຫຕຸນັ້ນ ຈຶ່ງນິ່ງ ຂ້າພເຈົ້າຊົງຄວາມນີ້ໄວ້ດ້ວຍຢ່າງນີ້.

[໕໘໕] ທີ່ຊື່ວ່າ ອັນມີຜູ້ຈອງໄວ້ ຄືເປັນທີ່ອາສຍຂອງມົດ ເປັນທີ່ອາສຍຂອງປູວກ ເປັນທີ່ ອາສຍຂອງໜູ ເປັນທີ່ອາສຍຂອງງູ ເປັນທີ່ອາສຍຂອງແມງປ່ອງ ເປັນທີ່ອາສຍຂອງຕະຂາບ ເປັນທີ່ອາສຍ ຂອງຊ້າງ ເປັນທີ່ອາສຍຂອງມ້າ ເປັນທີ່ອາສຍຂອງເສືອໂຄ່ງ ເປັນທີ່ອາສຍຂອງເສືອເຫລືອງ ເປັນທີ່ອາສຍ ຂອງໝີ ເປັນທີ່ອາສຍຂອງສຸນັຂປ່າ ເປັນທີ່ອາສຍຂອງສັຕວ໌ດີຣັຈສານບາງເຫລົ່າ ເປັນສຖານໃກ້ທີ່ນາ ເປັນ ສຖານໃກ້ທີ່ໄຮ່ ເປັນສຖານໃກ້ຕະແລງແກງ ເປັນສຖານໃກ້ທີ່ທໍຣະມານນັກໂທສ ເປັນສຖານໃກ້ສຸສານ ເປັນສຖານໃກ້ທີ່ສວນ ເປັນສຖານໃກ້ທີ່ຫລວງ ເປັນສຖານໃກ້ໂຮງຊ້າງ ເປັນສຖານໃກ້ໂຮງມ້າ ເປັນ ສຖານໃກ້ເຮືອນຈໍາ ເປັນສຖານໃກ້ໂຮງສຸຣາ ເປັນສຖານໃກ້ທີ່ສຸນັຂອາສຍ ເປັນສຖານໃກ້ຖນົນ ເປັນ ສຖານໃກ້ທົນທາງສີ່ແຍກ ເປັນສຖານໃກ້ທີ່ຊຸມນຸມຊົນ ຫຼືເປັນສຖານໃກ້ທາງເດີນໄປມາ ນີ່ຊື່ວ່າ ສຖານອັນມີຜູ້ຈອງໄວ້

[໕໘໖] ທີ່ຊື່ວ່າ ອັນທາຊານຮອບບໍ່ໄດ້ ຄື ກຸງນທີ່ເຂົາຫຼຸມງົວແລ້ວຕາມປົກຕິ ບໍ່ສາມາຖຈະວຽນໄປໄດ້ ເກີນຫຼືບັນໄດກໍບໍ່ສາມາຖຈະທອດວຽນໄປໄດ້ໂດຍຮອບ ນີ້ຊື່ວ່າສຖານອັນທາຊານຮອບບໍ່ໄດ້

[໕໘໗] ທີ່ຊື່ວ່າ ອັນບໍ່ມີຜູ້ຈອງໄວ້ ຄື ບໍ່ເປັນທີ່ອາສັຍຂອງມົດ ບໍ່ເປັນທີ່ອາສັຍຂອງປູວກ ບໍ່ເປັນທີ່ອາສັຍຂອງໜູ ບໍ່ເປັນທີ່ອາສັຍຂອງງູ ບໍ່ເປັນທີ່ອາສັຍຂອງແມງປ່ອງ ບໍ່ເປັນທີ່ອາສັຍຂອງຕະຂາບ ບໍ່ເປັນທີ່ອາສັຍຂອງຊ້າງ ບໍ່ເປັນທີ່ອາສັຍຂອງມ້າ ບໍ່ເປັນທີ່ອາສັຍຂອງເສືອໂຄ່ງ ບໍ່ເປັນທີ່ອາສັຍຂອງເສືອເຫລືອງ ບໍ່ເປັນທີ່ອາສັຍຂອງໝີ ບໍ່ເປັນທີ່ອາສັຍຂອງສຸນັຂປ່າ ບໍ່ເປັນທີ່ອາສັຍຂອງສັຕວ໌-ດີຣັຈສານບາງເຫລົ່າ ບໍ່ເປັນສຖານໃກ້ທີ່ນາ ບໍ່ເປັນສຖານໃກ້ທີ່ໄຮ່ ບໍ່ເປັນສຖານໃກ້ຕະແລງແກງ ບໍ່ເປັນສຖານໃກ້ທີ່ທໍຣະມານນັກໂທษ ບໍ່ເປັນສຖານໃກ້ສຸສານ ບໍ່ເປັນສຖານໃກ້ທີ່ສວນ ບໍ່ເປັນສຖານໃກ້ທີ່ຫລວງ ບໍ່ເປັນສຖານໃກ້ໂຮງຊ້າງ ບໍ່ເປັນສຖານໃກ້ໂຮງມ້າ ບໍ່ເປັນສຖານໃກ້ເຮືອນຈຳ ບໍ່ເປັນສຖານໃກ້ໂຮງສຸຮາ ບໍ່ເປັນສຖານໃກ້ທີ່ສຸນັຂອາສັຍ ບໍ່ເປັນສຖານໃກ້ຖນົນ ບໍ່ເປັນສຖານໃກ້ທົນທາງສີ່ແຍກ ບໍ່ເປັນສຖານໃກ້ທີ່ຊຸມນຸມຊົນ ຫຼືບໍ່ເປັນສຖານໃກ້ທາງເດີນໄປມາ ນີ້ຊື່ວ່າສຖານອັນບໍ່ມີຜູ້ຈອງໄວ້

[໕໘໘] ທີ່ຊື່ວ່າ ອັນມີຊານຮອບ ຄື ກຸງນທີ່ເຂົາຫຼຸມງົວແລ້ວຕາມປົກຕິ ສາມາຖຈະວຽນໄປໄດ້ ເກີນຫຼືບັນໄດກໍສາມາຖຈະທອດວຽນໄປໄດ້ໂດຍຮອບ ນີ້ຊື່ວ່າສຖານອັນມີຊານຮອບ

[໕໘໙] ວິຫາຣທີ່ຊື່ວ່າ ໃຫຍ່ ນັ້ນ ທ່ານວ່າມີເຈົ້າຂອງ

ທີ່ຊື່ວ່າ ວິຫາຣ ໄດ້ແກ່ທີ່ຢູ່ ຊຶ່ງໂບກລາບປູນໄວ້ຈະເພາະກາຍໃນກໍຕາມ ຊຶ່ງໂບກລາບປູນໄວ້ຈະເພາະກາຍນອກກໍຕາມ ຫຼືຊຶ່ງໂບກລາບປູນໄວ້ທັ້ງກາຍໃນທັ້ງກາຍນອກກໍຕາມ

ບົທວ່າ ໃຫ້ສ້າງ ຄື ທຳເອງກໍຕາມ ໃຊ້ໃຫ້ເຂົາທຳກໍຕາມ

ພາກຍ໌ວ່າ ຫຼືບໍ່ນຳກິກຸທັ້ງຫລາຍໄປເພື່ອສະແດງທີ່ ນັ້ນ ຄື ບໍ່ໃຫ້ສົງฆ໌ສະແດງສຖານທີ່ຈະສ້າງວິຫາຣ ດ້ວຍຌັຕຕິທຸຕິຍກັມມ໌ວາຈາກ່ອນແລ້ວ ທຳເອງກໍຕາມ ໃຊ້ໃຫ້ເຂົາທຳກໍຕາມ ຕ້ອງອາບັຕິທຸກກົຕໃນປະໂຍຄທີ່ທຳ ຍັງອີກອີກກ້ອນນຶ່ງຈະສຳເຣັຈ ຕ້ອງອາບັຕິຖຸລລັຈຈັຍ ພໍສຳເຣັຈ ຕ້ອງອາບັຕິສັງฆາທິເສສ

ບົທວ່າ ສັງฆາທິເສສ ຄວາມວ່າ ສົງฆ໌ເທົ່ານັ້ນໃຫ້ປຣິວາສເພື່ອອາບັຕິນັ້ນ ຊັກເຂົ້າຫາອາບັຕິເດີມ ໃຫ້ມານັດ ເອີ້ນເຂົ້າໝູ່ ບໍ່ແມ່ນຄຕະຫຼາຍອົງຄ໌ດ້ວຍກັນ ບໍ່ແມ່ນບຸຄຄົລອົງຄ໌ດຽວ ເພາະດັ່ງນັ້ນ ຈຶ່ງຕຣັສເອີ້ນວ່າ ສັງฆາທິເສສ ຄຳວ່າ ສັງฆາທິເສສ ເປັນການຂະໜານນາມ ຄືເປັນຊື່ຂອງອາບັຕິນິກາຍນັ້ນແລ ແມ້ເພາະເຫຕຸນີ້ ຈຶ່ງຕຣັສເອີ້ນວ່າ ສັງฆາທິເສສ.

ບົທກາຊນີຍ໌

ສ້າງວິຫາຣ ມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້

[໕໓໐] ກິກຂຸສ້າງວິຫາຣ ຊຶ່ງມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໔ ຕົວ ກັບອາບັຕິສັງຄາທິເສສ ໑ ຕົວ

ກິກຂຸສ້າງວິຫາຣ ຊຶ່ງມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ ກັບອາບັຕິສັງຄາທິເສສ ໑ ຕົວ

ກິກຂຸສ້າງວິຫາຣ ຊຶ່ງມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ ກັບອາບັຕິສັງຄາທິເສສ ໑ ຕົວ

ກິກຂຸສ້າງວິຫາຣ ຊຶ່ງມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ຕ້ອງອາບັຕິສັງຄາທິເສສ ໑ ຕົວ.

ສ້າງວິຫາຣ ມີພື້ນທີ່ອັນສົງຄ໌ສະແດງໃຫ້

ກິກຂຸສ້າງວິຫາຣ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໔ ຕົວ

ກິກຂຸສ້າງວິຫາຣ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ

ກິກຂຸສ້າງວິຫາຣ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ

ກິກຂຸສ້າງວິຫາຣ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ບໍ່ຕ້ອງອາບັຕິ.

ສັ່ງສ້າງ ມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້

[໕໓໑] ກິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໔ ຕົວ ກັບອາບັຕິສັງຄາທິເສສ ໑ ຕົວ

ກິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ ກັບອາບັຕິສັງຄາທິເສສ ໑ ຕົວ

ກິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ ກັບອາບັຕິສັງຄາທິເສສ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ມີພື້ນທີ່ອັນສົງຆ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ຕ້ອງອາບັຕິສັງຆາທິເສສ ໑ ຕົວ.

ສັ່ງສ້າງ ມີພື້ນທີ່ອັນສົງຆ໌ສະແດງໃຫ້

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໔ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ບໍ່ຕ້ອງອາບັຕິ.

ຫລີກໄປ ບໍ່ໄດ້ສັ່ງ ພື້ນທີ່ອັນສົງຆ໌ສະແດງໃຫ້

[໕໓໔] ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ບໍ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນ ຕ້ອງມີພື້ນທີ່ອັນສົງຆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໔ ຕົວ ກັບອາບັຕິສັງຆາທິເສສ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ບໍ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນ ຕ້ອງມີພື້ນທີ່ອັນສົງຆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ ກັບອາບັຕິສັງຆາທິເສສ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ບໍ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນ ຕ້ອງມີພື້ນທີ່ອັນສົງຆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ ກັບອາບັຕິສັງຆາທິເສສ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ບໍ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນ ຕ້ອງມີພື້ນທີ່ອັນສົງຆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ຕ້ອງອາບັຕິສັງຆາທິເສສ ໑ ຕົວ

ຫລີກໄປ ບໍ່ໄດ້ສັ່ງ ພື້ນທີ່ອັນສົງຄ໌ສະແດງໃຫ້

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ບໍ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນ ຕ້ອງມີພື້ນທີ່ອັນສົງຄ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໘ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ບໍ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນ ຕ້ອງມີພື້ນທີ່ອັນສົງຄ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ບໍ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນ ຕ້ອງມີພື້ນທີ່ອັນສົງຄ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ຕ້ອງອາບັຕິທຸກກົຕ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ບໍ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນ ຕ້ອງມີພື້ນທີ່ອັນສົງຄ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ບໍ່ຕ້ອງອາບັຕິ.

ຫລີກໄປ ສັ່ງ ເຂົາສ້າງ ພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້

[໕໑໑] ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງຄ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ພິກຂຸນັ້ນຮູ້ຂ່າວວ່າ ເຂົາສ້າງວິຫາຣໃຫ້ແກ່ເຮົາ ຊຶ່ງມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ພິກຂຸນັ້ນຄວຣໄປເອງ ຫຼືຄວຣສົ່ງທູຕໄປບອກວ່າ ຕ້ອງມີພື້ນທີ່ອັນສົງຄ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຫາກບໍ່ໄປເອງ ຫຼືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກົຕ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງຄ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ພິກຂຸນັ້ນຮູ້ຂ່າວວ່າ ເຂົາສ້າງວິຫາຣໃຫ້ແກ່ເຮົາ ຊຶ່ງມີພື້ນທີ່ອັນສົງຄ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ພິກຂຸນັ້ນຄວຣໄປເອງ ຫຼືຄວຣສົ່ງທູຕໄປບອກວ່າ ຕ້ອງມີພື້ນທີ່ອັນສົງຄ໌ສະແດງໃຫ້ ແລະຕ້ອງບໍ່ມີຜູ້ຈອງໄວ້ດ້ວຍ ຫາກບໍ່ໄປເອງ ຫຼືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກົຕ

ກິກຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງຜ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຜ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ກິກຸນັ້ນຮູ້ຂ່າວວ່າ ເຂົາສ້າງວິຫາຣໃຫ້ແກ່ເຮົາ ຊຶ່ງມີພື້ນທີ່ອັນສົງຜ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ກິກຸນັ້ນຄວຣໄປເອງ ຫຼືຄວຣສົ່ງທູຕໄປບອກວ່າ ຕ້ອງມີພື້ນທີ່ອັນສົງຜ໌ສະແດງໃຫ້ ແລະມີຊານຮອບດ້ວຍ ຫາກບໍ່ໄປເອງ ຫຼືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກົຕ

ກິກຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງຜ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຜ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ກິກຸນັ້ນຮູ້ຂ່າວວ່າ ເຂົາສ້າງວິຫາຣໃຫ້ແກ່ເຮົາ ຊຶ່ງມີພື້ນທີ່ອັນສົງຜ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ກິກຸນັ້ນຄວຣໄປເອງ ຫຼືຄວຣສົ່ງທູຕໄປບອກວ່າ ຕ້ອງມີພື້ນທີ່ອັນສົງຜ໌ສະແດງໃຫ້ ຫາກທ່ານບໍ່ໄປເອງ ຫຼືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກົຕ.

ຫລີກໄປ ສັ່ງ ເຂົາສ້າງ ພື້ນທີ່ອັນສົງຜ໌ສະແດງໃຫ້

ກິກຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງຜ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຜ໌ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ກິກຸນັ້ນຮູ້ຂ່າວວ່າ ເຂົາສ້າງວິຫາຣໃຫ້ແກ່ເຮົາ ຊຶ່ງມີພື້ນທີ່ອັນສົງຜ໌ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ກິກຸນັ້ນຄວຣໄປເອງ ຫຼືຄວຣສົ່ງທູຕໄປບອກວ່າ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຫາກບໍ່ໄປເອງ ຫຼືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກົຕ

ກິກຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງຜ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຜ໌ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ກິກຸນັ້ນຮູ້ຂ່າວວ່າ ເຂົາສ້າງວິຫາຣໃຫ້ແກ່ເຮົາ ຊຶ່ງມີພື້ນທີ່ອັນສົງຜ໌ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ກິກຸນັ້ນຄວຣໄປເອງ ຫຼືຄວຣສົ່ງທູຕໄປບອກວ່າ ຕ້ອງບໍ່ມີຜູ້ຈອງໄວ້ ຫາກບໍ່ໄປເອງ ຫຼືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກົຕ

ກິກຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງຜ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຜ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ກິກຸນັ້ນຮູ້ຂ່າວວ່າ ເຂົາສ້າງ

ວິຫາຣໃຫ້ແກ່ເຮົາ ຊຶ່ງມີພື້ນທີ່ອັນສົງฆ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ກິກษุນັ້ນຄວຣໄປເອງ ຫຼື ຄວຣສົ່ງທູຕໄປບອກວ່າ ຕ້ອງມີຊານຮອບ ຫາກບໍ່ໄປເອງ ຫຼືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກົຕ

ກິກษุສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣ ນັ້ນຕ້ອງມີພື້ນທີ່ອັນສົງฆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງฆ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ບໍ່ຕ້ອງອາບັຕິ.

ກິກษุຜູ້ສ້າງຕ້ອງອາບັຕິ ພື້ນທີ່ອັນສົງฆ໌ບໍ່ໄດ້ສະແດງໃຫ້

[໕໓໔] ກິກษุສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງ ໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງฆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງ ສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງฆ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ກິກษุຜູ້ສ້າງ ຕ້ອງອາບັຕິທຸກກົຕ ໓ ຕົວ

ກິກษุສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣ ນັ້ນຕ້ອງມີພື້ນທີ່ອັນສົງฆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງฆ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ກິກษุຜູ້ສ້າງ ຕ້ອງອາບັຕິທຸກກົຕ ໒ ຕົວ

ກິກษุສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣ ນັ້ນຕ້ອງມີພື້ນທີ່ອັນສົງฆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງฆ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ກິກษุຜູ້ສ້າງ ຕ້ອງອາບັຕິ ທຸກກົຕ ໒ ຕົວ

ກິກษุສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣ ນັ້ນຕ້ອງມີພື້ນທີ່ອັນສົງฆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງฆ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ກິກษุຜູ້ສ້າງ ຕ້ອງອາບັຕິ ທຸກກົຕ ໑ ຕົວ

ກິກษุຜູ້ສ້າງຕ້ອງອາບັຕິ ພື້ນທີ່ອັນສົງฆ໌ສະແດງໃຫ້

ກິກษุສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນ ຕ້ອງມີພື້ນທີ່ອັນສົງฆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ ທ່ານ ຊຶ່ງມີພື້ນທີ່ອັນສົງฆ໌ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ກິກษุຜູ້ສ້າງ ຕ້ອງອາບັຕິທຸກກົຕ ໒ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງຆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ພິກຂຸຜູ້ສ້າງ ຕ້ອງອາບັຕິທຸກກົຕ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງຆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ພິກຂຸຜູ້ສ້າງ ຕ້ອງອາບັຕິທຸກກົຕ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ແຕ່ໄດ້ສັ່ງໄວ້ວ່າ ວິຫາຣນັ້ນຕ້ອງມີພື້ນທີ່ອັນສົງຆ໌ສະແດງໃຫ້ ຕ້ອງບໍ່ມີຜູ້ຈອງໄວ້ ແລະມີຊານຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ບໍ່ຕ້ອງອາບັຕິ.

ທຳຄ້າງ ພື້ນທີ່ອັນສົງຆ໌ບໍ່ໄດ້ສະແດງໃຫ້

[໕໙໕] ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ຫາກເຂົາສ້າງຄ້າງໄວ້ ທ່ານກັບມາ ຄວຣໃຫ້ວິຫາຣນັ້ນແກ່ພິກຂຸອົງຄ໌ອື່ນ ຫຼືຄວຣຮື້ເສັຽແລ້ວສ້າງໃຫມ່ ຫາກທ່ານບໍ່ໃຫ້ແກ່ພິກຂຸອົງຄ໌ອື່ນ ຫຼືບໍ່ຮື້ເສັຽແລ້ວສ້າງໃຫມ່ ຕ້ອງອາບັຕິທຸກກົຕ ໔ ຕົວ ກັບອາບັຕິສັງຆາທິເສສ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ຫາກເຂົາສ້າງຄ້າງໄວ້ ທ່ານກັບມາ ຄວຣໃຫ້ວິຫາຣນັ້ນແກ່ພິກຂຸອົງຄ໌ອື່ນ ຫຼືຄວຣຮື້ເສັຽແລ້ວສ້າງໃຫມ່ ຫາກທ່ານບໍ່ໃຫ້ແກ່ພິກຂຸອົງຄ໌ອື່ນ ຫຼືບໍ່ຮື້ເສັຽແລ້ວສ້າງໃຫມ່ ຕ້ອງອາບັຕິທຸກກົຕ ໑ ຕົວ ກັບອາບັຕິສັງຆາທິເສສ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ບໍ່ໄດ້ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ຫາກເຂົາສ້າງຄ້າງໄວ້ ທ່ານກັບມາ ຄວຣໃຫ້ວິຫາຣນັ້ນແກ່ພິກຂຸອົງຄ໌ອື່ນ ຫຼືຄວຣຮື້ເສັຽແລ້ວສ້າງໃຫມ່ ຫາກທ່ານບໍ່ໃຫ້ແກ່ພິກຂຸອົງຄ໌ອື່ນ ຫຼືບໍ່ຮື້ເສັຽແລ້ວສ້າງໃຫມ່ ຕ້ອງອາບັຕິທຸກກົຕ ໑ ຕົວ ກັບອາບັຕິສັງຆາທິເສສ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຆ໌ບໍ່ໄດ້ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ຫາກເຂົາສ້າງຄ້າງໄວ້ ທ່ານ

ກັບມາ ຄວຣໃຫ້ວິຫາຣນັ້ນແກ່ພິກຂຸອົງຄ໌ອື່ນ ຫຼືຄວຣຮື້ເສັຽແລ້ວສ້າງໃຫມ່ ຫາກທ່ານບໍ່ໃຫ້ແກ່ພິກຂຸອົງຄ໌ອື່ນ ຫຼືບໍ່ຮື້ເສັຽແລ້ວສ້າງໃຫມ່ ຕ້ອງອາບັຕິສັງຄາທິເສສ.

ທຳຄ້າງ ພື້ນທີ່ອັນສົງຄ໌ສະແດງໃຫ້

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ມີຜູ້ຈອງໄວ້ ບໍ່ມີຊານຮອບ ຫາກເຂົາສ້າງຄ້າງໄວ້ ທ່ານກັບມາ ຄວຣໃຫ້ວິຫາຣນັ້ນແກ່ພິກຂຸອົງຄ໌ອື່ນ ຫຼືຄວຣຮື້ເສັຽແລ້ວສ້າງໃຫມ່ ຫາກບໍ່ໃຫ້ແກ່ພິກຂຸອົງຄ໌ອື່ນ ຫຼືບໍ່ຮື້ເສັຽແລ້ວສ້າງໃຫມ່ ຕ້ອງອາບັຕິທຸກກົຕ ໔ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ມີຜູ້ຈອງໄວ້ ມີຊານຮອບ ຫາກເຂົາສ້າງຄ້າງໄວ້ ທ່ານກັບມາ ຄວຣໃຫ້ວິຫາຣນັ້ນແກ່ພິກຂຸອົງຄ໌ອື່ນ ຫຼືຄວຣຮື້ເສັຽແລ້ວສ້າງໃຫມ່ ຫາກບໍ່ໃຫ້ແກ່ພິກຂຸອົງຄ໌ອື່ນ ຫຼືບໍ່ຮື້ເສັຽແລ້ວສ້າງໃຫມ່ ຕ້ອງອາບັຕິທຸກກົຕ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ບໍ່ມີຊານຮອບ ຫາກເຂົາສ້າງຄ້າງໄວ້ ທ່ານກັບມາ ຄວຣໃຫ້ວິຫາຣນັ້ນແກ່ພິກຂຸອົງຄ໌ອື່ນ ຫຼືຄວຣຮື້ເສັຽແລ້ວສ້າງໃຫມ່ ຫາກບໍ່ໃຫ້ແກ່ພິກຂຸອົງຄ໌ອື່ນ ຫຼືບໍ່ຮື້ເສັຽແລ້ວສ້າງໃຫມ່ ຕ້ອງອາບັຕິທຸກກົຕ ໑ ຕົວ

ພິກຂຸສັ່ງວ່າ ຈົ່ງຊ່ອຍກັນສ້າງວິຫາຣໃຫ້ແກ່ຂ້າພເຈົ້າ ແລ້ວຫລີກໄປເສັຽ ຜູ້ຮັບຄຳສັ່ງສ້າງວິຫາຣໃຫ້ແກ່ທ່ານ ຊຶ່ງມີພື້ນທີ່ອັນສົງຄ໌ສະແດງໃຫ້ ບໍ່ມີຜູ້ຈອງໄວ້ ມີຊານຮອບ ບໍ່ຕ້ອງອາບັຕິ.

ສ້າງຄ້າງ ສ້າງຕໍ່

[໕໒໒] ວິຫາຣທີ່ຕົນສ້າງຄ້າງໄວ້ ພິກຂຸສ້າງຕໍ່ໃຫ້ສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິສັງຄາທິເສສ

ວິຫາຣທີ່ຕົນສ້າງຄ້າງໄວ້ ພິກຂຸໃຫ້ຄົນອື່ນສ້າງຕໍ່ໃຫ້ສຳເຣັຈ ຕ້ອງອາບັຕິສັງຄາທິເສສ.

ວິຫາຣທີ່ຄົນອື່ນສ້າງຄ້າງໄວ້ ພິກຂຸສ້າງຕໍ່ໃຫ້ສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິສັງຄາທິເສສ

ວິຫາຣທີ່ຄົນອື່ນສ້າງຄ້າງໄວ້ ພິກຂຸໃຫ້ແກ່ຄົນອື່ນສ້າງຕໍ່ໃຫ້ສຳເຣັຈ ຕ້ອງອາບັຕິສັງຄາທິເສສ.

ອນາປັຕຕິວາຣ

[໕໒໗] ພິກຂຸສ້າງຖ້ຳ ໑ ພິກຂຸສ້າງຄູຫາ ໑ ພິກຂຸສ້າງກຸຝິຫຍ້າ ໑ ພິກຂຸສ້າງວິຫາຣເພື່ອພິກຂຸອື່ນ ໑ ເວັ້ນອາຄາຣເປັນທີ່ຢູ່ເສັຽ ພິກຂຸສ້າງນອກຈາກນັ້ນ ໑ ບໍ່ຕ້ອງອາບັຕິ ພິກຂຸວິກົລຈຣິຕ ໑ ພິກຂຸອາທິກັມມິກະ ໑ ບໍ່ຕ້ອງອາບັຕິແລ.

ສັງຄາທິເສສ ສິກຂາບົທທີ່ ໗ ຈົບ.

ສັງຆາທິເສສ ສິກຂາບົທທີ່ ๘
ເຣື່ອງພຣະທັພພມັລລບຸຕຣ໌

[໕໓໘] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ຓ ພຣະເວຣຸວັນວິຫາຣ ອັນເປັນສຖານທີ່ພຣະຣາຊທານເຫຍື່ອແກ່ກະແຕ ເຂຕພຣະນຄຣຣາຊຄຣຶຫ໌ ຄັ້ງນັ້ນ ທ່ານພຣະທັພພມັລລບຸຕຣ໌ມີອາຍຸ ໗ ປີ ນັບແຕ່ເກີດ ໄດ້ເຮັດໃຫ້ແຈ້ງຊຶ່ງພຣະອຣຫັຕຄຸຓສົມບັຕິຢ່າງໃດຢ່າງນຶ່ງ ຊຶ່ງສາວົກຈະບັຣລຸ ທ່ານໄດ້ບັຣລຸແລ້ວໂດຍລຳດັບທັ້ງຫມົດ ອີກຢ່າງ ທ່ານບໍ່ມີກຣຓຍກິຈ ອັນໃດທີ່ຍິ່ງຂຶ້ນໄປ ຫຼືກຣຓຍກິຈທີ່ທ່ານທຳສຳເຣັຈແລ້ວກໍບໍ່ຕ້ອງກັບສັ່ງສົມອີກ

[໕໓໙] ຄັ້ງນັ້ນ ທ່ານພຣະທັພພມັລລບຸຕຣ໌ ໄປໃນທີ່ສັງກັດ ຫລີກເຮັ້ນຢູ່ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ເຮົາມີອາຍຸ ໗ ປີ ນັບແຕ່ເກີດ ໄດ້ເຮັດໃຫ້ແຈ້ງຊຶ່ງພຣະອຣຫັຕ ຄຸຓສົມບັຕິຢ່າງໃດຢ່າງນຶ່ງຊຶ່ງສາວົກຈະບັຣລຸ ເຮົາໄດ້ບັຣລຸແລ້ວໂດຍລຳດັບທຸກຢ່າງ ອີກຢ່າງລະ ເຮົາບໍ່ມີກຣຓຸ-ຍກິຈອັນໃດທີ່ຍິ່ງຂຶ້ນໄປ ຫຼືກຣຓຍກິຈທີ່ທຳສຳເຣັຈແລ້ວກໍບໍ່ຕ້ອງກັບສັ່ງສົມອີກ ເຮົາຄວຣເຮັດການຊ່ອຍເຫລືອອັນໃດນໍແກ່ສົງຆ໌ ລຳດັບນັ້ນ ທ່ານພຣະທັພພມັລລບຸຕຣໄດ້ຄິດຕຶກລົງໃຈວ່າ ຄິດດັ່ງນັ້ນ ເຮົາຄວຣແຕ່ງຕັ້ງເສນາສນະແລະແຈກອາຫາຣແກ່ສົງຆ໌ ພໍທ່ານອອກຈາກທີ່ເຮັ້ນໃນເວລາເຢັນແລ້ວ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ພໍຖວາຍບັງຄົມ ນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງແລ້ວໄດ້ຂາບທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ຂ້າພຣະພຸທສເຈົ້າໄປໃນທີ່ສງັດ ຫລີກເຮັ້ນຢູ່ ຓ ຕາແສງນີ້ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ຂ້າພຣະພຸທສເຈົ້າມີອາຍຸ ໗ ປີ ນັບແຕ່ເກີດ ໄດ້ເຮັດໃຫ້ແຈ້ງຊຶ່ງພຣະອຣຫັຕແລ້ວ ຄຸຓສົມບັຕິຢ່າງໃດຢ່າງນຶ່ງຊຶ່ງສາວົກຈະບັຣລຸ ຂ້າພຣະພຸທສເຈົ້າໄດ້ບັຣລຸແລ້ວໂດຍລຳດັບທຸກຢ່າງ ອີກຢ່າງລະ ຂ້າພຣະພຸທສເຈົ້າບໍ່ມີກຣຓຍກິຈອັນໃດທີ່ຍິ່ງຂຶ້ນໄປ ຫຼືກຣຓຸຍກິຈທີ່ຂ້າພຣະພຸທສເຈົ້າທຳສຳເຣັຈແລ້ວກໍບໍ່ຕ້ອງກັບສັ່ງສົມອີກ ຂ້າພຣະພຸທສເຈົ້າຄວຣເຮັດການຊ່ອຍເຫລືອອັນໃດນໍແກ່ສົງຆ໌ ພຣະພຸທສເຈົ້າຂ້ານ້ອຍ ຂ້າພຣະພຸທສເຈົ້າຄິດຕຶກລົງໃຈວ່າບໍ່ດັ່ງນັ້ນ ຂ້າພຣະພຸທສເຈົ້າຄວຣແຕ່ງຕັ້ງເສນາສນະແລະແຈກອາຫາຣແກ່ສົງຆ໌ ຂ້າພຣະພຸທສເຈົ້າປັຕຖນາຈະແຕ່ງຕັ້ງເສນາສນະ ແລະແຈກອາຫາຣແກ່ສົງຆ໌ ພຣະພຸທສເຈົ້າຂ້ານ້ອຍ

ພຣະຜູ້ມີພຣະພາຄຕຣັສວ່າ ດີລະ ດີລະ ທັພພະ ຖ້າເຊັ່ນນັ້ນ ທ່ານຈົງແຕ່ງຕັ້ງເສນາສນະແລະແຈກອາຫາຣແກ່ສົງຆ໌ເທີ້ນ

ທ່ານພຣະທັພພມັລລບຸຕຣ໌ຂາບທູລຮັບສນອງແດ່ພຣະຜູ້ມີພຣະພາຄວ່າ ຢ່າງນັ້ນພຣະພຸທສເຈົ້າຂ້ານ້ອຍ

ສົມມຸຕິກິກຂຸຜູ້ແຕ່ງຕັ້ງເສນາສນະແລະແຈກອາຫາຣ

[໕໔໐] ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງກະທຳສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸທຳອິດເກີດນັ້ນ ແລ້ວຮັບສັ່ງກັບກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຖ້າເຊັ່ນນັ້ນ ສົງຄ໌ຈົງສົມມຸຕິ ທັພພມັລລບຸຕຣ໌ໃຫ້ເປັນຜູ້ແຕ່ງຕັ້ງເສນາສນະແລະແຈກອາຫາຣ

ວິທີສົມມຸຕິ

ດູຣາກິກຂຸທັ້ງຫລາຍ ກໍແລສົງຄ໌ຄວຣສົມມຸຕິຢ່າງນີ້ ເບື້ອງຕົ້ນຄວຣຂໍໃຫ້ທັພພະຮັບ ແລະແລ້ວ ກິກຂຸຜູ້ຈລາດຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ ດ້ວຍລັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົງຟັງຂ້າພເຈົ້າ ຖ້າຄວາມພັ່ງພ້ອມຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣສົມມຸຕິ ທ່ານພຣະທັພພມັລລບຸຕຣ໌ ໃຫ້ເປັນຜູ້ແຕ່ງຕັ້ງເສນາສນະແລະແຈກອາຫາຣ ນີ້ເປັນລັຕຕິ ທ່ານຂ້ານ້ອຍ ຂໍສົງຄ໌ຈົງຟັງຂ້າພເຈົ້າ ສົງຄ໌ສົມມຸຕິທ່ານພຣະທັພພມັລລບຸຕຣ໌ ໃຫ້ເປັນຜູ້ແຕ່ງຕັ້ງເສນາສນະແລະແຈກ ອາຫາຣ ກາຣົສົມມຸຕິທ່ານພຣະທັພພມັລລບຸຕຣ໌ ໃຫ້ເປັນຜູ້ແຕ່ງຕັ້ງເສນາສນະແລະແຈກອາຫາຣ ຊອບແກ່ ທ່ານຜູ້ໃດ ທ່ານຜູ້ນັ້ນຈະໄດ້ເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ ທ່ານພຣະທັພພມັລລບຸຕຣ໌ ອັນສົງຄ໌ສົມມຸຕິໃຫ້ເປັນຜູ້ແຕ່ງຕັ້ງເສນາສນະແລະແຈກອາຫາຣແລ້ວ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າຊົງຄວາມນີ້ໄວ້ດ້ວຍຢ່າງນີ້.

[໕໔໑] ກໍແລ ທ່ານພຣະທັພພມັລລບຸຕຣ໌ ອັນສົງຄ໌ສົມມຸຕິແລ້ວຍ່ອມແຕ່ງຕັ້ງເສນາສນະຣວມໄວ້ ເປັນພວກໆ ສຳຫຼັບໝູ່ກິກຂຸຜູ້ສມ່ຳສເມີກັນ ຄື ກິກຂຸເຫລົ່າໃດເປັນຜູ້ຊົງພຣະສູຕຣ໌ ທ່ານກໍແຕ່ງຕັ້ງ ເສນາສນະຣວມກິກຂຸເຫລົ່ານັ້ນໄວ້ແຫ່ງນຶ່ງ ດ້ວຍປະສົງຄ໌ວ່າພວກທ່ານຈັກຊັກຊ້ອມພຣະສູຕຣ໌ກັນ ກິກຂຸ ເຫລົ່າໃດເປັນຜູ້ຊົງວິນັຍ ທ່ານກໍແຕ່ງຕັ້ງເສນາສນະຣວມກິກຂຸເຫລົ່ານັ້ນໄວ້ແຫ່ງນຶ່ງ ດ້ວຍປະສົງຄ໌ວ່າ ພວກທ່ານຈັກວິນິຈລັຍພຣະວິນັຍກັນ ກິກຂຸເຫລົ່າໃດເປັນຜູ້ຊົງພຣະອກິທັມມ໌ ທ່ານກໍແຕ່ງຕັ້ງເສນາສນະ ຣວມກິກຂຸເຫລົ່ານັ້ນໄວ້ແຫ່ງນຶ່ງ ດ້ວຍປະສົງຄ໌ວ່າ ພວກທ່ານຈັກສົນທນາພຣະອກິທັມມ໌ກັນ ກິກຂຸເຫລົ່າໃດ ເປັນຜູ້ໄດ້ຊານ ທ່ານກໍແຕ່ງຕັ້ງເສນາສນະຣວມກິກຂຸເຫລົ່ານັ້ນໄວ້ແຫ່ງນຶ່ງ ດ້ວຍປະສົງຄ໌ວ່າ ພວກທ່ານຈັກ ບໍ່ຣົບກວນກັນ ກິກຂຸເຫລົ່າໃດຊອບກັບດິຣັຈຈານກຖາ ຍັງມີກາຣບຳຣຸງຮ່າງກາຍຢູ່ຫຼາຍ ທ່ານກໍແຕ່ງຕັ້ງເສນາ-ສນະຣວມກິກຂຸເຫລົ່ານັ້ນໄວ້ແຫ່ງນຶ່ງດ້ວຍ ປະສົງຄ໌ວ່າ ທ່ານເຫລົ່ານີ້ຈັກຢູ່ດ້ວຍຄວາມຍິນດີແມ້ນີ້ ກິກຂຸ ເຫລົ່າໃດມາໃນເວລາຄ່ຳຄືນ ທ່ານກໍເຂົ້າຈຕຸຕຖຊານມີເຕໂຊກສິຒ ເປັນອາຣົມຓ໌ແລ້ວແຕ່ງຕັ້ງເສນາສນະແມ້ ສຳຫຼັບກິກຂຸເຫລົ່ານັ້ນໂດຍແສງສວ່າງນັ້ນນັ່ນແລ ກິກຂຸທັ້ງຫລາຍຍ່ອມແກ້ງມາແມ້ໃນເວລາຄ່ຳຄືນ ດ້ວຍ

ປະສົງຄ໌ວ່າພວກເຮົາຈັກໄດ້ຊົມອິທຣິປາຜິຫາຣິຍ໌ຂອງທ່ານພຣະທັພພມັລລບຸຕຣ໌ດັ່ງນີ້ກໍມີ ກິກຂຸເຫລົ່ານັ້ນເຂົ້າໄປ ຫາທ່ານພຣະທັພພມັລລບຸຕຣ໌ແລ້ວເວົ້າຢ່າງນີ້ວ່າ ພຣະຄຸດເຈົ້າທັພພະ ຂໍທ່ານຈົ່ງແຕ່ງຕັ້ງເສນາສນະໃຫ້ພວກ ຂ້ານ້ອຍ ທ່ານພຣະທັພພມັລລບຸຕຣ໌ຖາມກິກຂຸເຫລົ່ານັ້ນຢ່າງນີ້ວ່າ ທ່ານປັຕຖນາຈະຢູ່ທີ່ໃດ ຂ້ານ້ອຍຈະ ແຕ່ງຕັ້ງໃຫ້ ຓ ທີ່ໃດ ກິກຂຸເຫລົ່ານັ້ນແກ້ງອ້າງທີ່ໄກໆ ວ່າພຣະຄຸດເຈົ້າທັພພະ ຂໍທ່ານຈົ່ງແຕ່ງຕັ້ງ ເສນາສນະໃຫ້ພວກຂ້ານ້ອຍ ທີ່ກູເຂົາຄິຊຊກູຕ ຂໍທ່ານຈົ່ງແຕ່ງຕັ້ງເສນາສນະໃຫ້ພວກຂ້ານ້ອຍທີ່ເຫວສຳຫຼັບ ຖິ້ມໂຈຣ ຂໍທ່ານຈົ່ງແຕ່ງຕັ້ງເສນາສນະໃຫ້ພວກຂ້ານ້ອຍທີ່ກາຄສິລາຂ້າງກູເຂົາອິສິຄິລິ ຂໍທ່ານຈົ່ງແຕ່ງຕັ້ງ ເສນາສນະໃຫ້ພວກຂ້ານ້ອຍທີ່ຖ້ຳສັຕຕບັຣຕຄູຫາຂ້າງກູເຂົາເວກາຣະ ຂໍທ່ານຈົ່ງແຕ່ງຕັ້ງເສນາສນະໃຫ້ພວກ ຂ້ານ້ອຍທີ່ເງື້ອມເຂົາສັປປໂສຕຫິກະໃກ້ສີຕວັນ ຂໍທ່ານຈົ່ງແຕ່ງຕັ້ງເສນາສນະໃຫ້ພວກຂ້ານ້ອຍທີ່ຊອກເຂົາ ໂຄມຕະ ຂໍທ່ານຈົ່ງແຕ່ງຕັ້ງເສນາສນະໃຫ້ພວກຂ້ານ້ອຍທີ່ຊອກເຂົາຕິນທຸກະ ຂໍທ່ານຈົ່ງແຕ່ງຕັ້ງເສນາສນະ ໃຫ້ພວກຂ້ານ້ອຍທີ່ຊອກເຂົາກໂປຕະ ຂໍທ່ານຈົ່ງແຕ່ງຕັ້ງເສນາສນະໃຫ້ພວກຂ້ານ້ອຍທີ່ຕໂປທາຣາມ ຂໍທ່ານ ຈົ່ງແຕ່ງຕັ້ງເສນາສນະໃຫ້ພວກຂ້ານ້ອຍທີ່ຊີວກັມພວັນ ຂໍທ່ານຈົ່ງແຕ່ງຕັ້ງເສນາສນະໃຫ້ພວກຂ້ານ້ອຍທີ່ ມັທທກຸຈຈິມຣິຄທາຍວັນ ທ່ານພຣະທັພພມັລລບຸຕຣ໌ຈຶ່ງເຂົ້າຈຕຸຕຖຊານມີເຕໂຊກສິຕເປັນອາຣົມຓ໌ມີອົງຄຸລີ ສ່ອງແສງສວ່າງເດີນນຳໜ້າກິກຂຸເຫລົ່ານັ້ນໄປ ແມ້ກິກຂຸເຫລົ່ານັ້ນກໍເດີນຕາມຫລັງທ່ານພຣະທັພພມັລລບຸຕຣ໌ ໄປໂດຍແສງສວ່າງນັ້ນແລ ທ່ານພຣະທັພພມັລລບຸຕຣ໌ແຕ່ງຕັ້ງເສນາສນະສຳຫຼັບກິກຂຸເຫລົ່ານັ້ນ ໂດຍຊີ້ແຈງ ຢ່າງນີ້ວ່າ ນີ່ຕຽງ ນີ່ຕັ່ງ ນັ່ນຟູກ ນີ່ໝອນ ນີ່ທີ່ຖ່າຍອຸຈຈາຣະ ນີ່ທີ່ຖ່າຍປັສສາວະ ນີ່ນ້ຳສັນ ນີ່ນ້ຳໃຊ້ ນີ່ໄມ້ເທົ້າ ນີ່ຣະບຽບກຕິກາສົງຄ໌ ຄວຣເຂົ້າເວລານີ້ ຄວຣອອກເວລານີ້ ພໍແຕ່ງຕັ້ງສຳເຣັຈແລ້ວ ກັບມາສູ່ ພຣະເວລຸວັນວິຫາຣຕາມເດີມ.

ເຣື່ອງພຣະເມຕຕິຍະແລະພຣະກຸມມຊກະ

[໕໔໘] ກໍໂດຍສມັຍນັ້ນແລ ພຣະເມຕຕິຍະແລະພຣະກຸມມຊກະ ເປັນພຣະບວຊໃໝ່ ແລະ ມີບຸຜນ້ອຍ ເສນາສນະຂອງສົງຄ໌ຊນິດບໍ່ດີແລະອາຫາຣຢ່າງບໍ່ດີ ຍ່ອມຕົກເຖິງແກ່ທ່ານທັ້ງສອງ ຄັ້ງນັ້ນ ຊາວບ້ານໃນພຣະນຄຣຣາຊຄຣຶຫ໌ຊອບຖວາຍ ເນີຍໃສແດ່ ນ້ຳມັນແດ່ ແກງທີ່ມີຣົສດີໆ ແດ່ ຊຶ່ງຈັດປຸງ ຈະເພາະພຣະເຖຣະທັ້ງຫລາຍ ສ່ວນພຣະເມຕຕິຍະແລະພຣະກຸມມຊກະ ເຂົາຖວາຍອາຫາຣຢ່າງສັມມດາຕາມແຕ່ ຈະຫາໄດ້ ເປັນຊນິດປາຍຂ້າວ ມີນ້ຳສົ້ມເປັນກັບ ເວລາຫລັງອາຫາຣ ທ່ານທັ້ງສອງກັບຈາກບິຕຫບາຕແລ້ວ ທຽວຖາມພວກກິກຂຸຜູ້ເຖຣະວ່າ ໃນໂຮງສັນຂອງພວກທ່ານມີອາຫາຣອັນໃດແດ່ຂ້ານ້ອຍ ໃນໂຮງສັນຂອງພວກ ທ່ານມີອາຫາຣອັນໃດແດ່ຂ້ານ້ອຍ ພຣະເຖຣະບາງພວກບອກຢ່າງນີ້ວ່າ ພວກເຮົາມີເນີຍໃສ ນ້ຳມັນ ແກງທີ່ມີ ຣົສແຊບໆ ຂ້ານ້ອຍ ສ່ວນພຣະເມຕຕິຍະແລະພຣະກຸມມຊກະເວົ້າຢ່າງນີ້ວ່າ ພວກຂ້ານ້ອຍບໍ່ມີອັນໃດເລີຍ ຂ້ານ້ອຍ ມີແຕ່ອາຫາຣຢ່າງສັມມດາຕາມແຕ່ທີ່ຈະຫາໄດ້ ເປັນຊນິດປາຍຂ້າວມີນ້ຳສົ້ມເປັນກັບ.

[໕໔໓] ສມັຍຕ່ອມາ ຄຫບໍດີຜູ້ຊອບຖວາຍອາຫາຣທີ່ດີ ຖວາຍກັຕຕາຫາຣວັນລະ ໔ ທີ່ແກ່ສົງຄ໌ ເປັນນິຈກັຕ ເຂົາພ້ອມດ້ວຍບຸຕຣ໌ກັຣຍາອັງຄາສຢູ່ໃກ້ໆ ໃນໂຮງລັນ ຄົນອື່ນໆ ຍ່ອມຖາມດ້ວຍຂ້າວສຸກ ກັບຂ້າວ ນ້ຳມັນ ແກງທີ່ມີຣົສແຊບ ຄູາວນັ້ນ ກັຕຕຸເທສກ໌ ໄດ້ຖວາຍກັຕຕາຫາຣຂອງຄຫບໍດີຜູ້ຊອບ ຖວາຍອາຫາຣທີ່ດີ ແກ່ພຣະເມຕຕິຍະແລະພຣະກຸມມຊກະ ເພື່ອລັນໃນມື້ອື່ນເຊົ້າ ຂຓະນັ້ນທ່ານຄຫບໍດີໄປສູ່ ອາຣາມດ້ວຍກຣຓິຍະບາງຢ່າງ ແລ້ວເຂົ້າໄປຫາທ່ານພຣະທັພພມັລລບຸຕຣ໌ເຖິງທີ່ສຳນັກ ເມື່ອນມັສການທ່ານ ທັພພມັລລບຸຕຣ໌ແລ້ວນັ່ງ ໓ ທີ່ຄວຣສ່ວນຂ້າງນຶ່ງ ທ່ານພຣະທັພພມັລລບຸຕຣ໌ຍັງທ່ານຄຫບໍດີຜູ້ນັ່ງແລ້ວ ໃຫ້ເຫັນແຈ້ງ ໃຫ້ສມາທານ ໃຫ້ອາຈຫາຓ ໃຫ້ຣ່າເຣີງດ້ວຍສັມມີກຖາ ແລະແລ້ວທ່ານຄຫບໍດີໄດ້ຮຽນຖາມທ່ານວ່າ ກັຕຕາຫາຣເພື່ອຈະລັນໃນມື້ອື່ນເຊົ້າທີ່ເຮືອນຂອງເກົ້າຂ້ານ້ອຍ ພຣະຄຸຓເຈົ້າຈັດຖວາຍແກ່ກິກຂຸອົງຄ໌ໃດ ຂ້ານ້ອຍ

ທ່ານພຣະທັພພມັລລບຸຕຣ໌ຕອບວ່າ ອາຕມາຈັດໃຫ້ແກ່ພຣະເມຕຕິຍະກັບພຣະກຸມມຊກະແລ້ວ ຂ້ານ້ອຍ

ຂຓະນັ້ນ ທ່ານຄຫບໍດີໄດ້ມີຄວາມນ້ອຍໃຈວ່າ ຈັ່ງໃດກິກຂຸຜູ້ລາມົກຈັກລັນກັຕຕາຫາຣໃນເຮືອນເຮົາລະ ແລ້ວໄປເຮືອນສັ່ງຍິງຄົນໃຊ້ໄວ້ວ່າ ແມ່ສາວໃຊ້ ເຈົ້າຈົ່ງຈັດອາສນະໄວ້ທີ່ຊຸ້ມປະຕູ ແລ້ວອັງຄາສກິກຂຸຜູ້ຈະ ມາລັນກັຕຕາຫາຣໃນມື້ອື່ນເຊົ້າ ດ້ວຍປາຍຂ້າວ ມີນ້ຳສົ້ມເປັນກັບ

ຍິງຄົນໃຊ້ຮັບຄຳຂອງທ່ານຄຫບໍດີວ່າ ຢ່າງນັ້ນ ຂ້ານ້ອຍ

ຄັ້ງນັ້ນ ພຣະເມຕຕິຍະແລະພຣະກຸມມຊກະກ່າວແກ່ກັນວ່າ ທ່ານເມື່ອວານນີ້ ທ່ານກັຕຕຸເທສກ໌ ຈັດກັຕຕາຫາຣໃນເຮືອນທ່ານກັລຍາຓກັຕຕິກຄຫບໍດີໃຫ້ພວກເຮົາ ມື້ອື່ນເຊົ້າທ່ານຄຫບໍດີພ້ອມດ້ວຍບຸຕຣ໌ ກັຣຍາຈັກອັງຄາສເຮົາຢູ່ໃກ້ໆ ຄົນອື່ນໆ ຈັກຖາມດ້ວຍຂ້າວສຸກ ກັບຂ້າວ ນ້ຳມັນ ແກງທີ່ມີຣົສແຊບໆ ດ້ວຍ ຄວາມດີໃຈນັ້ນ ແລ ຕົກກາງຄືນທ່ານທັ້ງສອງນັ້ນຈຳວັດຫລັບບໍ່ເຕັມຕື່ນ ພໍເວລາເຊົ້າ ພຣະເມຕຕິຍະແລະ ພຣະກຸມມຊກະ ຫົ່ມອັນຕຣວາສົກແລ້ວ ຖືບາຕຣ໌ແລະຈີວຣເດີນເຂົ້າໄປຍັງນິເວສນ໌ຂອງກັລຍາຓກັຕຕິກຄຫບໍດີ

ຍິງໃຊ້ນັ້ນໄດ້ແລເຫັນພຣະເມຕຕິຍະແລະພຣະກຸມມຊກະ ກຳລັງເດີນມາແຕ່ໄກ ແລະແລ້ວຈຶ່ງປູ ອາສນະຖວາຍທີ່ຊຸ້ມປະຕູ ແລ້ວກ່າວວ່າ ນິມົນຕ໌ນັ່ງ ຂ້ານ້ອຍ

ຈຶ່ງພຣະເມຕຕິຍະແລະພຣະກຸມມຊກະຄຶດວ່າ ກັຕຕາຫາຣຈະຍັງບໍ່ສຳເຣັຈເປັນແນ່ ເຂົາຈຶ່ງໃຫ້ເຮົານັ່ງ ພັກທີ່ຊຸ້ມປະຕູກ່ອນ

ຂຓະນັ້ນຍິງຄົນໃຊ້ນຳອາຫາຣປາຍຂ້າວ ຊຶ່ງມີນ້ຳຜັກດອງເປັນກັບເຂົ້າໄປຖວາຍກ່າວອາຣາຣາສນາ ວ່ານິມົນຕ໌ລັນເທີ້ນ ຂ້ານ້ອຍ

ພ. ນ້ອງຍິງ ພວກລັນເປັນພຣະຮັບລັນນິຈກັຕ ຂ້ານ້ອຍ

ຍ. ຂ້ານ້ອຍຮູ້ແລ້ວຂ້ານ້ອຍວ່າ ພຣະຄຸຕເຈົ້າເປັນພຣະຮັບຈັນນິຈກັຕ ແຕ່ເມື່ອວານນີ້ເອງ ທ່ານຄຫບໍດີໄດ້ສັ່ງຂ້ານ້ອຍໄວ້ວ່າ ແມ່ສາວໃຊ້ ເຈົ້າຈົ່ງຈັດອາສນະໄວ້ທີ່ຊຸ້ມປະຕູ ແລ້ວອັງຄາສກິກຂຸຜູ້ຈະມາຈັນກັຕຕາຫາຣໃນມື້ອື່ນເຊົ້າ ດ້ວຍປາຍຂ້າວ ມີນ້ຳສົ້ມເປັນກັບ ດັ່ງນີ້ ນິມົນຕ໌ຈັນເທີ້ນ ຂ້ານ້ອຍ

ຈຶ່ງພຣະເມຕຕິຍະແລະພຣະກຸມມຊກະປຶກສາກັນວ່າ ອາວຸໂສ ເມື່ອວານນີ້ເອງ ທ່ານຄຫບໍດີໄປສູ່ອາຮາມໃນສຳນັກພຣະທັພພມັລລບຸຕຣ໌ ພວກເຮົາຄົງຖືກພຣະທັພພມັລລບຸຕຣ໌ ຍຸຍົງໃນສຳນັກຄຫບໍດີເປັນແນ່ນອນທີດຽວ ເພາະຄວາມເສັຽໃຈນັ້ນແລ ທ່ານທັ້ງສອງອົງຄ໌ນັ້ນຈັນບໍ່ໄດ້ດັ່ງໃຈຄຶດ ພໍກັບຈາກບິຕຫບາຕເຖິງອາຮາມໃນເວລາຫລັງອາຫາຣ ເກັບບາຕຣ໌ແລະຈີວຣແລ້ວ ນັ່ງຮັດເຂົ່າດ້ວຍຜ້າສັງຄາຜິຢູ່ກາຍນອກຊຸ້ມປະຕູອາຮາມ ນິ່ງອັ້ນ ເກີ້ເຂີນ ຄໍຕົກ ກົ້ມຫນ້າ ຊຶບເຊົາ ບໍ່ເວົ້າຈາ.

ເຣື່ອງກິກຂຸນີເມຕຕິຍາ

[໕໔໔] ຄັ້ງນັ້ນແລ ກິກຂຸນີເມຕຕິຍາເຂົ້າໄປຫາພຣະເມຕຕິຍະແລະພຣະກຸມມຊກະເຖິງສຳນັກແລະແລ້ວໄດ້ກ່າວຄຳນີ້ວ່າ ຂ້ານ້ອຍໄຫວ້ ຂ້ານ້ອຍ

ເມື່ອນາງກ່າວຢ່າງນັ້ນແລ້ວ ພຣະເມຕຕິຍະແລະພຣະກຸມມຊກະກໍບໍ່ໄດ້ທັກທາຍປູາສຮັຍ ນາງຈຶ່ງກ່າວວ່າຂ້ານ້ອຍໄຫວ້ ຂ້ານ້ອຍ ເປັນເທື່ອທີ່ສອງ ແມ້ເທື່ອທີ່ສອງ ພຣະເມຕຕິຍະແລະພຣະກຸມມຊກະກໍບໍ່ໄດ້ທັກທາຍປູາສຮັຍ ນາງຈຶ່ງໄດ້ກ່າວອີກເປັນເທື່ອທີ່ສາມວ່າ ຂ້ານ້ອຍໄຫວ້ຂ້ານ້ອຍ ແມ້ເທື່ອທີ່ສາມ ພຣະເມຕຕິຍະແລະພຣະກຸມມຊກະກໍບໍ່ໄດ້ທັກທາຍປູາສຮັຍ

ກິກຂຸນີເມຕຕິຍາຖາມວ່າ ຂ້ານ້ອຍຜິດຈັ່ງໃດຕໍ່ພຣະຄຸຕເຈົ້າໆ ບໍ່ທັກທາຍປູາສຮັຍກັບຂ້ານ້ອຍ ເພື່ອປະສົງຄ໌ອັນໃດ?

ກິກຂຸທັ້ງສອງຕອບວ່າ ກໍຈິງຢ່າງນັ້ນແຫລະ ນ້ອງຍິງ ພວກເຮົາຖືກພຣະທັພພມັລລບຸຕຣ໌ບຽດບຽນຢູ່ ທ່ານຍັງເພີກສີ່ໄດ້

ເມ. ຂ້ານ້ອຍຈະຊ່ອຍເຫລືອຈັ່ງໃດ ເຈົ້າຄະ

ກິ. ນ້ອງຍິງ ຖ້າທ່ານເຕັມໃຈຊ່ອຍ ວັນນີ້ແຫລະພຣະຜູ້ມີພຣະກາຄຕ້ອງໃຫ້ພຣະທັພພມັລລບຸຕຣ໌ສຶກ

ເມ. ຂ້ານ້ອຍຈະເຮັດຈັ່ງໃດ ຂ້ານ້ອຍສາມາຖຈະຊ່ອຍເຫລືອໄດ້ດ້ວຍວິທີໃດ

ກິ. ມາເທີ້ນ ນ້ອງຍິງ ທ່ານຈົ່ງເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ແລະແລ້ວຈຶ່ງຂາບທູລຢ່າງນີ້ວ່າ ພຣະພຸທສເຈົ້າຂ້ານ້ອຍ ກັມມ໌ນີ້ບໍ່ມິດເມັ້ນ ບໍ່ສົມຄວຣ ທິສທີ່ບໍ່ມີກັຍ ບໍ່ມີຈັນໄຣ ບໍ່ມີອັນຕາຍບັດນີ້ກັບມາມີກັຍ ມີຈັນໄຣ ມີອັນຕາຍ ຓ ສຖານທີ່ບໍ່ມີລົມ ບັດນີ້ກັບມາມີລົມແຮງຂຶ້ນ ຫມ່ອມຈັນຖືກພຣະຄຸຕເຈົ້າທັພພມັລລບຸຕຣ໌ປະທຸບຮ້າຍເໝືອນນ້ຳຖືກໄຟເຜົາ ພຣະພຸທສເຈົ້າຂ້ານ້ອຍ

ກິກຸນີເມຕຕິຍາ ຮັບຄຳຂອງພຣະເມຕຕິຍະແລະພຣະກຸມມຊກະ ວ່າດີກລັງຂ້ານ້ອຍ ແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ພໍຖວາຍບັງຄົມແລ້ວ ໄດ້ຍືນຢູ່ ຓ ທີ່ຄວຣຂ້າງນຶ່ງຂາບທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ກັມມ໌ນີ້ບໍ່ປົກປິດ ບໍ່ສົມຄວຣ ທິສທີ່ບໍ່ມີກັຍ ບໍ່ມີຈັລໄຣ ບໍ່ມີອັນຕາຍ ບັດນີ້ກັບມາມີກັຍ ມີຈັລໄຣ ມີອັນຕາຍ ຓ ສຖານທີ່ບໍ່ມີລົມ ບັດນີ້ກັບມາມີລົມແຮງຂຶ້ນ ຫມ່ອມລັນຖືກພຣະຄຸຓເຈົ້າ ທັພພມັລລບຸຕຣ໌ ປະທຸษຮ້າຍ ເໝືອນນ້ຳຖືກໄຟເຜົາ ພຣະພຸທສເຈົ້າຂ້ານ້ອຍ.

ປະຊຸມສົງໝ໌ຊົງສອບສວນ

[໕໔໕] ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງໝ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມທ່ານພຣະທັພພມັລລບຸຕຣ໌ວ່າ ດູຣາທັພພະ ທ່ານຍັງຣະລຶກໄດ້ຫຼືວ່າ ເປັນຜູ້ທຳກັມມ໌ດັ່ງນາງກິກຸນີນີ້ກ່າວຫາ

ທ່ານພຣະທັພພມັລລບຸຕຣ໌ຂາບທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ພຣະອົງຄ໌ຍ່ອມຊົງຮູ້ວ່າ ຂ້າພຣະພຸທສເຈົ້າເປັນລັນໃດ

ແມ້ເທື່ອທີ່ສອງແລ ພຣະຜູ້ມີພຣະກາຄຊົງສອບຖາມທ່ານພຣະທັພພມັລລບຸຕຣ໌ວ່າ ດູຣາທັພພະ ທ່ານຍັງຣະລຶກໄດ້ຫຼືວ່າ ເປັນຜູ້ທຳກັມມ໌ດັ່ງນາງກິກຸນີນີ້ກ່າວຫາ

ທ່ານພຣະທັພພມັລລບຸຕຣ໌ຂາບທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ພຣະອົງຄ໌ຍ່ອມຊົງຮູ້ວ່າ ຂ້າພຣະພຸທສເຈົ້າເປັນລັນໃດ

ແມ້ເທື່ອທີ່ສາມແລ ພຣະຜູ້ມີພຣະກາຄຊົງສອບຖາມທ່ານພຣະທັພພມັລລບຸຕຣ໌ວ່າ ດູຣາທັພພະ ທ່ານຍັງຣະລຶກໄດ້ຫຼືວ່າ ເປັນຜູ້ທຳກັມມ໌ດັ່ງນາງກິກຸນີນີ້ກ່າວຫາ

ທ່ານພຣະທັພພມັລລບຸຕຣ໌ຂາບທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ພຣະອົງຄ໌ຍ່ອມຊົງຮູ້ວ່າ ຂ້າພຣະພຸທສເຈົ້າເປັນລັນໃດ

ກ. ດູຣາທັພພະ ບັຓທິຕຍ່ອມບໍ່ກ່າວແກ້ຄຳກ່າວຫາເຊັ່ນນີ້ ຖ້າທ່ານທຳກໍຈົ່ງບອກວ່າທຳ ຖ້າທ່ານບໍ່ໄດ້ທຳ ກໍຈົ່ງບອກວ່າບໍ່ໄດ້ທຳ

ທ. ພຣະພຸທສເຈົ້າຂ້ານ້ອຍ ຕັ້ງແຕ່ຂ້າພຣະພຸທສເຈົ້າເກີດມາ ແມ້ໂດຍຄວາມຝັນກໍຍັງບໍ່ຮູ້ຈັກເສພເມຖຸນສັມມ໌ ຈະກ່າວໄຍເຖິງເມື່ອຕອນຕື່ນຢູ່ລະ

ລຳດັບນັ້ນແລ ພຣະຜູ້ມີພຣະກາຄຮັບສັ່ງກັບກິກຸທັ້ງຫລາຍວ່າ ດູຣາກິກຸທັ້ງຫລາຍ ເພາະເຫຕຸນັ້ນແລ ພວກທ່ານຈົ່ງໃຫ້ກິກຸນີເມຕຕິຍາສຶກເສັຽ ແລະຈົ່ງສອບສວນກິກຸເຫລົ່ານີ້ ຮັບສັ່ງດັ່ງນີ້ແລ້ວ ພຣະອົງຄ໌ສເດັຈລຸກຂຶ້ນຈາກທີ່ປະທັບ ເຂົ້າພຣະວິຫາຣ

ຫລັງຈາກນັ້ນ ກິກຂຸທັ້ງຫລາຍໄດ້ໃຫ້ກິກຂຸຕີເມຕຕິຍາສຶກ ຈຶ່ງພຣະເມຕຕິຍະແລະພຣະກຸມມຊກະ ໄດ້ຖແລງເຣື່ອງນີ້ກັບກິກຂຸທັ້ງຫລາຍວ່າ ອາວຸໂສທັ້ງຫລາຍ ຂໍທ່ານທັ້ງຫລາຍ ຢ່າໃຫ້ກິກຂຸຕີເມຕຕິຍາສຶກ ເລີຍ ນາງບໍ່ຜິດອັນໃດ ພວກຂ້ານ້ອຍແຄ້ນເຄືອງ ບໍ່ພໍໃຈ ມີຄວາມປະສົງຄ໌ຈະໃຫ້ທ່ານພຣະທັພພມັລລບຸຕຣ໌ ເຄື່ອນຈາກພຣົຫ໌ມຈັຣຍ໌ ຈຶ່ງໄດ້ໃຫ້ນາງໃສ່ສເນ່ຫ໌

ກິກຂຸທັ້ງຫລາຍກ່າວວ່າ ອາວຸໂສທັ້ງຫລາຍ ກໍນີ້ພວກທ່ານໂຈທທ່ານພຣະທັພພມັລລບຸຕຣ໌ດ້ວຍສັມມ໌ ມີໂທສເຖິງປາຣາຊິກ ອັນຫາມູລບໍ່ໄດ້ຫຼື

ກິກຂຸສອງອົງຄ໌ນັ້ນສາຣະກາພວ່າ ຢ່າງນັ້ນ ຂ້ານ້ອຍ

ບັຣດາກິກຂຸທີ່ເປັນຜູ້ມັກນ້ອຍ ສັນໂດສ ມີຄວາມລະອາຍ ມີຄວາມຢ້ານບາປ ຜູ້ມັກສິກຂາ ຕ່າງພາກັນ ເພັ່ງໂທສ ຕິຕຽນ ໂພນທະນາວ່າ ຈັ່ງໃດພຣະເມຕຕິຍະແລະພຣະກຸມມຊກະ ຈຶ່ງໄດ້ໂຈທທ່ານພຣະທັພພມັລລ ບຸຕຣ໌ດ້ວຍສັມມ໌ມີໂທສເຖິງປາຣາຊິກ ອັນຫາມູລບໍ່ໄດ້ລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ

ປະຊຸມສົງຄ໌ຊົງບັຌລັຕິສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຂຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນ ເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມພຣະເມຕຕິຍະແລະພຣະກຸມມຊກະວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າ ພວກທ່ານໂຈທທັພພມັລລບຸຕຣ໌ ດ້ວຍສັມມ໌ມີໂທສເຖິງປາຣາຊິກ ອັນຫາມູລບໍ່ໄດ້ ຈິງຫຼື

ກິກຂຸສອງອົງຄ໌ນັ້ນທູລຮັບວ່າ ຈິງ ພຣະພຸທສເຈົ້າຂ້ານ້ອຍ

ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕິຕຽນວ່າ ດູຣາໂມຄບຸຣຸສທັ້ງຫລາຍ ຈັ່ງໃດ ພວກທ່ານຈຶ່ງໄດ້ ໂຈທທັພພມັລລບຸຕຣ໌ດ້ວຍສັມມ໌ມີໂທສເຖິງປາຣາຊິກອັນຫາມູລບໍ່ໄດ້ລະ ການກະທຳຂອງພວກທ່ານນັ່ນ ບໍ່ ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສ ແລ້ວ ໂດຍທີ່ແທ້ ການກະທຳຂອງພວກທ່ານນັ່ນເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນ ຂອງຊົນບາງພວກທີ່ເລື່ອມໃສແລ້ວ

ພໍພຣະຜູ້ມີພຣະກາຄຊົງຕິຕຽນພຣະເມຕຕິຍະແລະພຣະກຸມມຊກະ ໂດຍອເນກປຣິຍາຍ ດັ່ງນີ້ ແລ້ວ ຕຣັສໂທສແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມ ເປັນຄົນບໍ່ສັນໂດສ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຕຣັສຄຸຕແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນ ຄົນບຳຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດສ ຄວາມຂັດເກຼົາ ຄວາມກຳຈັດ ອາການທີ່ໜ້າເລື່ອມໃສ ການ ບໍ່ສະສົມ ການປຣາຣົກຄວາມພຽຣ ໂດຍອເນກປຣິຍາຍ ແລ້ວຊົງກະທຳທັມມີກຖາທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເຫມາະສົມແກ່ເຣື່ອງນັ້ນແກ່ກິກຂຸທັ້ງຫລາຍ ແລ້ວຮັບສັ່ງກັບກິກຂຸທັ້ງຫລາຍວ່າ

ດູຣາກິກຂຸທັ້ງຫລາຍ ເພາະເຫຕຸນັ້ນແລ ເຮົາຈັກບັລລັຕິສິກຂາບົທແກ່ກິກຂຸທັ້ງຫລາຍ ອາສັຍອຳນາຈປະໂຍຊນ໌ ໑໐ ປະການ ຄື ເພື່ອຄວາມຮັບວ່າດີແຫ່ງສົງຄ໌ ໑ ເພື່ອຄວາມສຳຣາລແຫ່ງສົງຄ໌ ໑ ເພື່ອຂົ່ມບຸຄຄົລຜູ້ເກີ້ຍາກ ໑ ເພື່ອຢູ່ສຳຣາລແຫ່ງກິກຂຸຜູ້ມີສິລເປັນທີ່ຮັກ ໑ ເພື່ອປ້ອງກັນອາສວະອັນຈະບັງເກີດໃນປັຈຈຸບັນ ໑ ເພື່ອກຳຈັດອາສວະອັນຈັກບັງເກີດໃນອນາຄົຕ ໑ ເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ໑ ເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໑ ເພື່ອຄວາມຕັ້ງມັ່ນແຫ່ງພຣະສັທັມມ໌ ໑ ເພື່ອຖືຕາມພຣະວິນັຍ ໑

ດູຣາກິກຂຸທັ້ງຫລາຍ ກໍແລ ພວກທ່ານຄວຣຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:-

ພຣະບັລລັຕິ

໑໘. ຕຼ. ອີກຢ່າງ ກິກຂຸໃດ ຂັດໃຈ ມີໂທສະ ບໍ່ແຊ່ມຊື່ນ ຕາມກຳຈັດ ຊຶ່ງກິກຂຸດ້ວຍສັມມ໌ມີໂທສເຖິງປາຣາຊິກ ອັນຫາມູລບໍ່ໄດ້ ດ້ວຍໝາຍວ່າ ແມ້ຈັ່ງໃດເຮົາຈະຍັງທ່ານໃຫ້ເຄື່ອນຈາກພຣົຫ໌ມຈັຣຍ໌ນີ້ໄດ້ ພໍສມັຍອື່ນແຕ່ນັ້ນອັນຜູ້ໃດຜູ້ນຶ່ງ ຖືເອົາຕາມກໍຕາມ ບໍ່ຖືເອົາຕາມກໍຕາມ ແຕ່ອະທິກຣນ໌ນັ້ນ ເປັນເຣື່ອງຫາມູລບໍ່ໄດ້ ແລກິກຂຸຍັນອີງໂທສະຢູ່ ເປັນສັງຄາທິເສສ.

ເຣື່ອງພຣະເມຕຕິຍະແລະພຣະກຸມມຊກະ ຈົບ.

ສິກຂາບົທວິກັງຄ໌

[໕໘໖] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄືຜູ້ເຊັ່ນໃດ ມີການງານຢ່າງໃດ ມີຊາຕິຢ່າງໃດ ມີຊື່ຢ່າງໃດ ມີໂຄຕຣ໌ຢ່າງໃດ ມີປົກຕິຢ່າງໃດ ມີສັມມ໌ເຄື່ອງຢູ່ຢ່າງໃດ ມີອາຣົມຕ໌ຢ່າງໃດ ເປັນເຖຣະກໍຕາມ ເປັນມັຊຊິມະກໍຕາມ ເປັນນວກະກໍຕາມ ນີ້ພຣະຜູ້ມີພຣະກາຄຕຣັສວ່າ ອີກຢ່າງ .. ໃດ

ບົທວ່າ ກິກຂຸ ຄວາມວ່າ ທີ່ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນຜູ້ຂໍ ຊື່ວ່າ ກິກຂຸ ເພາະອັຖວ່າ ປະພຶຕກິກຂາຈຣິຍວັຕຣ໌ ຊື່ວ່າ ກິກຂຸ ເພາະອັຖວ່າ ຊົງຜືນຜ້າທີ່ຖືກທຳລາຍແລ້ວ ຊື່ວ່າ ກິກຂຸ ໂດຍສົມລາ ຊື່ວ່າ ກິກຂຸ ໂດຍປະຕິລາ ຊື່ວ່າ ກິກຂຸ ພຣະອັຖວ່າ ເປັນເອຫິກິກຂຸ ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນຜູ້ອຸປສົມບົທແລ້ວດ້ວຍໄຕຣສຣຄົມນ໌ ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນຜູ້ຈເຣີນ ຊື່ວ່າ ກິກຂຸ ເພາະອັຖວ່າ ມີສາຣສັມມ໌ ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນພຣະເສຂະ ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນພຣະອເສຂະ ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນຜູ້ອັນສົງຄ໌

ພ້ອມພຽງກັນອຸປສົມບົທໃຫ້ ດ້ວຍຍັຕຕິຈຕຸຕຖກັມມ໌ ອັນກຳເຣິບ ຄວຣແກ່ຖານະ ບັຣດາກິກຸ່ເຫລົ່ານັ້ນ ກິກຸທີ່ສົງຄ໌ພ້ອມພຽງກັນອຸປສົມບົທໃຫ້ ດ້ວຍຍັຕຕິຈຕຸຕຖກັມມ໌ ອັນບໍ່ກຳເຣິບ ຄວຣແກ່ຖານະນີ້ ຊື່ວ່າ ກິກຸ ທີ່ຊົງປະສົງຄ໌ໃນອັຖນີ້

ບົທວ່າ ຊຶ່ງກິກຸ ໜມາຍກິກຸອື່ນ

ບົທວ່າ ຂັດໃຈ ມີໂທສະ ຄືໂກຣສ ບໍ່ຖືກໃຈ ບໍ່ພໍໃຈ ແຄ້ນໃຈ ເຈັບໃຈ

ບົທວ່າ ບໍ່ແຊ່ມຊື່ນ ຄື ເປັນຄົນມີໃຈບໍ່ແຊ່ມຊື່ນ ເພາະຄວາມໂກຣສນັ້ນ ເພາະໂທສະ ນັ້ນ ເພາະຄວາມບໍ່ຖືກໃຈນັ້ນ ແລະເພາະຄວາມບໍ່ພໍໃຈນັ້ນ

ທີ່ຊື່ວ່າ ອັນຫາມູລບໍ່ໄດ້ ຄື ບໍ່ໄດ້ເຫັນ ບໍ່ໄດ້ຍິນ ບໍ່ໄດ້ບໍ່ພໍໃຈ

ບົທວ່າ ດ້ວຍທັມມ໌ມີໂທສເຖິງປາຣາຊິກ ຄື ດ້ວຍປາຣາຊິກທັມມ໌ ທັ້ງ ໔ ສິກຂາບົທ ສິກຂາບົທ ໃດ ສິກຂາບົທນຶ່ງ

ບົທວ່າ ຕາມກຳຈັດ ໄດ້ແກ່ໂຈທເອງ ຫຼືສັ່ງໃຫ້ໂຈທ

ພາກຍ໌ວ່າ ແມ້ຈັ່ງໃດເຮົາຈະຍັງທ່ານໃຫ້ເຄື່ອນຈາກພຣົຫ໌ມຈັຣຍ໌ນີ້ໄດ້ ຄວາມວ່າ ໃຫ້ເຄື່ອນ ຈາກກິກຸພາພ ໃຫ້ເຄື່ອນຈາກສມົຕທັມມ໌ ໃຫ້ເຄື່ອນຈາກສິລຂັນຄ໌ໃຫ້ເຄື່ອນຈາກຄຸຕຄຶຕບະ

[໕໔໗] ຄຳວ່າ ພໍສມັຍອື່ນແຕ່ນັ້ນ ຄວາມວ່າ ເມື່ອຂຕະຄູາວບຶດນຶ່ງທີ່ກິກຸຜູ້ຖືກຕາມ ກຳຈັດນັ້ນ ຜ່ານໄປແລ້ວ

ບົທວ່າ ອັນຜູ້ໃດຜູ້ນຶ່ງຖືເອົາຕາມກໍຕາມ ຄື ກິກຸເປັນຜູ້ຖືກຕາມກຳຈັດດ້ວຍເຣື່ອງໃດ ມີຄົນ ເຊື່ອໃນເພາະເຣື່ອງນັ້ນກໍຕາມ

ບົທວ່າ ບໍ່ຖືເອົາຕາມກໍຕາມ ຄື ບໍ່ມີໃຜໆ ເວົ້າເຖິງ

[໕໔໘] ທີ່ຊື່ວ່າ ອະທິກຣຕ໌ໄດ້ແກ່ອະທິກຣຕ໌໔ ຢ່າງ ຄືວິວາທາທິກຣຕ໌໑ ອນຸວາທາທິກຣຕ໌໑ ອາປັຕຕາທິກຣຕ໌໑ ກິຈຈາທິກຣຕ໌໑

[໕໔໙] ຄຳວ່າ ແລກິກຸຍັນອີງໂທສະຢູ່ ຄວາມວ່າ ກິກຸກ່າວປຜິຍາຓວ່າ ຂ້າພເຈົ້າເວົ້າ ສົ່ງ ເວົ້າເທັຈ ເວົ້າບໍ່ຈິງ ຂ້າພເຈົ້າບໍ່ຮູ້ ໄດ້ເວົ້າແລ້ວ

ບົທວ່າ ສັງຄາທິເສສ ຄວາມວ່າ ສົງຄ໌ເທົ່ານັ້ນໃຫ້ປຣິວາສເພື່ອອາບັຕິນັ້ນ ຊັກເຂົ້າຫາອາບັຕິເດີມ ໃຫ້ມານັຕ ເອີ້ນເຂົ້າໝູ່ ບໍ່ແມ່ນຄຕະຫຼາຍອົງຄ໌ດ້ວຍກັນ ບໍ່ແມ່ນບຸຄຄົລອົງຄ໌ດຽວ ເພາະດັ່ງນັ້ນຈຶ່ງຕຣັສ ເອີ້ນວ່າ ສັງຄາທິເສສ ຄຳວ່າ ສັງຄາທິເສສ ເປັນການຂະໜານນາມ ຄື ເປັນຊື່ຂອງອາບັຕິນິກາຍ ນັ້ນແລ ແມ້ເພາະເຫຕຸນັ້ນ ຈຶ່ງຕຣັສເອີ້ນວ່າ ສັງຄາທິເສສ.

ບົທກາຊນີຍ໌

ບໍ່ເຫັນ ໂຈທວ່າໄດ້ເຫັນ

[໕໕໐] ກິກຊຸຜູ້ໂຈທກ໌ບໍ່ໄດ້ເຫັນກິກຊຸຜູ້ກຳລັງຕ້ອງປາຣາຊິກັສມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ເຫັນ ທ່ານເປັນຜູ້ຕ້ອງປາຣາຊິກັສມມ໌ ທ່ານບໍ່ເປັນສມຓະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຓາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສທຸກໆ ຄຳເວົ້າ

ບໍ່ໄດ້ຍິນ ໂຈທວ່າໄດ້ຍິນ

ກິກຊຸຜູ້ໂຈທກ໌ບໍ່ໄດ້ຍິນວ່າ ກິກຊຸຕ້ອງປາຣາຊິກັສມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ຍິນ ທ່ານເປັນຜູ້ຕ້ອງປາຣາຊິກັສມມ໌ ທ່ານບໍ່ເປັນສມຓະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຓາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສທຸກໆ ຄຳເວົ້າ

ບໍ່ບໍ່ມັກ ໂຈທວ່າບໍ່ມັກ

ກິກຊຸຜູ້ໂຈທກ໌ບໍ່ໄດ້ບໍ່ມັກວ່າ ກິກຊຸຕ້ອງປາຣາຊິກັສມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າບໍ່ມັກ ທ່ານເປັນຜູ້ຕ້ອງປາຣາຊິກັສມມ໌ ທ່ານບໍ່ເປັນສມຓະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຓາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ

ໂຈທກ໌ບໍ່ເຫັນ

[໕໕໑] ກິກຊຸຜູ້ໂຈທກ໌ບໍ່ໄດ້ເຫັນກິກຊຸຜູ້ກຳລັງຕ້ອງປາຣາຊິກັສມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ເຫັນແລະໄດ້ຍິນ ທ່ານເປັນຜູ້ຕ້ອງປາຣາຊິກັສມມ໌ ທ່ານບໍ່ເປັນສມຓະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຓາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ

ກິກຊຸຜູ້ໂຈທກ໌ບໍ່ໄດ້ເຫັນກິກຊຸຜູ້ກຳລັງຕ້ອງປາຣາຊິກັສມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ເຫັນ ແລະບໍ່ມັກ ທ່ານເປັນຜູ້ຕ້ອງປາຣາຊິກັສມມ໌ ທ່ານບໍ່ເປັນສມຓະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຓາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ

ກິກຊຸຜູ້ໂຈທກ໌ບໍ່ໄດ້ເຫັນກິກຊຸຜູ້ກຳລັງຕ້ອງປາຣາຊິກັສມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ເຫັນ ໄດ້ຍິນ ແລະບໍ່ມັກ ທ່ານເປັນຜູ້ຕ້ອງປາຣາຊິກັສມມ໌ ທ່ານບໍ່ເປັນສມຓະ ທ່ານບໍ່ເປັນເຊື້ອສາຍ

ພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິ ສັງฆາທິເສສ ທຸກໆ ຄຳເວົ້າ.

ໂຈທກ໌ບໍ່ໄດ້ຍິນ

ກິກຂຸຜູ້ໂຈທກ໌ບໍ່ໄດ້ຍິນວ່າ ກິກຂຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ຍິນ ແລະ ບໍ່ມັກ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ

ກິກຂຸຜູ້ໂຈທກ໌ບໍ່ໄດ້ຍິນວ່າ ກິກຂຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ຍິນ ແລະ ໄດ້ເຫັນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ

ກິກຂຸຜູ້ໂຈທກ໌ບໍ່ໄດ້ຍິນວ່າ ກິກຂຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ຍິນ ບໍ່ມັກ ແລະໄດ້ເຫັນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ.

ໂຈທກ໌ບໍ່ບໍ່ມັກ

ກິກຂຸຜູ້ໂຈທກ໌ບໍ່ບໍ່ມັກວ່າ ກິກຂຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າບໍ່ມັກ ແລະ ໄດ້ເຫັນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ

ກິກຂຸຜູ້ໂຈທກ໌ບໍ່ບໍ່ມັກວ່າ ກິກຂຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າບໍ່ມັກ ແລະ ໄດ້ຍິນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ

ກິກຂຸຜູ້ໂຈທກ໌ບໍ່ບໍ່ພໍໃຈວ່າ ກິກຂຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າບໍ່ມັກ ໄດ້ເຫັນ ແລະໄດ້ຍິນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌

ອຸໂບສົຖກໍດີ ປວາຣຕາກໍດີ ສັງຄກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຄາທິເສສ ທຸກໆ ຄໍາເວົ້າ.

ໂຈທກ໌ເຫັນ

[໕໕໔] ກິກຂຸຜູ້ໂຈທກ໌ ໄດ້ເຫັນກິກຂຸຜູ້ກໍາລັງຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ຍິນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຄກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຄາທິເສສ ທຸກໆ ຄໍາເວົ້າ

ກິກຂຸຜູ້ໂຈທກ໌ໄດ້ເຫັນກິກຂຸຜູ້ກໍາລັງຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າບໍ່ພໍໃຈ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຄກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຄາທິເສສ ທຸກໆ ຄໍາເວົ້າ

ກິກຂຸຜູ້ໂຈທກ໌ໄດ້ເຫັນກິກຂຸຜູ້ກໍາລັງຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ຍິນແລະບໍ່ມັກ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຄກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຄາທິເສສ ທຸກໆ ຄໍາເວົ້າ.

ໂຈທກ໌ໄດ້ຍິນ

ກິກຂຸຜູ້ໂຈທກ໌ໄດ້ຍິນວ່າ ກິກຂຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າບໍ່ພໍໃຈ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຄກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຄາທິເສສ ທຸກໆ ຄໍາເວົ້າ

ກິກຂຸຜູ້ໂຈທກ໌ໄດ້ຍິນວ່າ ກິກຂຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ເຫັນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຄກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຄາທິເສສ ທຸກໆ ຄໍາເວົ້າ

ກິກຂຸຜູ້ໂຈທກ໌ໄດ້ຍິນວ່າ ກິກຂຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າບໍ່ພໍໃຈ ແລະໄດ້ເຫັນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຄກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຄາທິເສສ ທຸກໆ ຄໍາເວົ້າ

ໂຈທກ໌ບໍ່ມັກ

ກິກຂຸຜູ້ໂຈທກ໌ບໍ່ມັກວ່າ ກິກຂຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ເຫັນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຄກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຄາທິເສສ ທຸກໆ ຄໍາເວົ້າ

ກິກບຸຜູ້ໂຈທກ໌ບໍ່ມັກວ່າ ກິກບຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ຍິນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຆາທິເສສ ທຸກໆ ຄຳເວົ້າ

ກິກບຸຜູ້ໂຈທກ໌ບໍ່ມັກວ່າ ກິກບຸຕ້ອງປາຣາຊິກັສັມມ໌ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ເຫັນແລະໄດ້ຍິນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຆາທິເສສ ທຸກໆ ຄຳເວົ້າ.

ໂຈທກ໌ເຫັນ ສົງສັຍ

[໕໕໑] ກິກບຸຜູ້ໂຈທກ໌ໄດ້ເຫັນກິກບຸຜູ້ກຳລັງຕ້ອງປາຣາຊິກັສັມມ໌ ມີຄວາມສົງສັຍໃນສິ່ງທີ່ໄດ້ເຫັນ ຄືເຫັນແລ້ວກຳຫນົດບໍ່ໄດ້ ຣະລຶກບໍ່ໄດ້ ລືມເສັຽ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ເຫັນແລະໄດ້ຍິນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຆາທິເສສ ທຸກໆ ຄຳເວົ້າ

ກິກບຸຜູ້ໂຈທກ໌ໄດ້ເຫັນກິກບຸຜູ້ກຳລັງຕ້ອງປາຣາຊິກັສັມມ໌ ມີຄວາມສົງສັຍໃນສິ່ງທີ່ໄດ້ເຫັນ ຄືເຫັນແລ້ວກຳຫນົດບໍ່ໄດ້ ຣະລຶກບໍ່ໄດ້ ລືມເສັຽ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ເຫັນແລະບໍ່ມັກ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຆາທິເສສ ທຸກໆ ຄຳເວົ້າ

ກິກບຸຜູ້ໂຈທກ໌ໄດ້ເຫັນກິກບຸຜູ້ກຳລັງຕ້ອງປາຣາຊິກັສັມມ໌ ມີຄວາມສົງສັຍໃນສິ່ງທີ່ໄດ້ເຫັນ ຄືເຫັນແລ້ວ ກຳຫນົດບໍ່ໄດ້ ຣະລຶກບໍ່ໄດ້ ລືມເສັຽ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ເຫັນ ໄດ້ຍິນ ແລະບໍ່ມັກ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຆາທິເສສ ທຸກໆ ຄຳເວົ້າ.

ໂຈທກ໌ໄດ້ຍິນ ສົງສັຍ

ກິກບຸຜູ້ໂຈທກ໌ໄດ້ຍິນວ່າ ກິກບຸຕ້ອງປາຣາຊິກັສັມມ໌ ມີຄວາມສົງສັຍໃນເຣື່ອງທີ່ໄດ້ຍິນ ຄືໄດ້ຍິນແລ້ວກຳຫນົດບໍ່ໄດ້ ຣະລຶກບໍ່ໄດ້ ລືມເສັຽ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ຍິນ ແລະບໍ່ມັກ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງຆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງຆາທິເສສ ທຸກໆ ຄຳເວົ້າ

ກິກບຸຜູ້ໂຈທກ໌ໄດ້ຍິນວ່າ ກິກບຸຕ້ອງປາຣາຊິກັສັມມ໌ ມີຄວາມສົງສັຍໃນເຣື່ອງທີ່ໄດ້ຍິນ ຄືໄດ້ຍິນແລ້ວກຳຫນົດບໍ່ໄດ້ ຣະລຶກບໍ່ໄດ້ ລືມເສັຽ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ຍິນ ແລະໄດ້ເຫັນ ທ່ານເປັນ

ຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາ ກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ

ກິກษຸຜູ້ໂຈທກ໌ໄດ້ຍິນວ່າ ກິກษຸຕ້ອງປາຣາຊິກັສັມມ໌ ມີຄວາມສົງສັຍໃນເຣື່ອງທີ່ໄດ້ຍິນ ຄືໄດ້ຍິນ ແລ້ວກຳຫນົດບໍ່ໄດ້ ຣະລຶກບໍ່ໄດ້ ລືມເສັຽ ຖ້າໂຈທທ່ານວ່າ ຂ້າພເຈົ້າໄດ້ຍິນ ບໍ່ມັກແລະໄດ້ເຫັນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ.

ໂຈທກ໌ບໍ່ມັກ ສົງສັຍ

ກິກษຸຜູ້ໂຈທກ໌ບໍ່ມັກວ່າ ກິກษຸຕ້ອງປາຣາຊິກັສັມມ໌ ມີຄວາມສົງສັຍໃນເຣື່ອງທີ່ບໍ່ມັກ ຄື ບໍ່ມັກແລ້ວກຳຫນົດບໍ່ໄດ້ ຣະລຶກບໍ່ໄດ້ ລືມເສັຽ ຖ້າໂຈທທ່ານວ່າ ຂ້າພເຈົ້າບໍ່ພໍໃຈແລະໄດ້ເຫັນ ທ່ານເປັນຜູ້ຕ້ອງປາຣາຊິກັສັມມ໌ ທ່ານບໍ່ເປັນສມຕະ ທ່ານບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌ ອຸໂບສົຖກໍດີ ປວາຣຕາກໍດີ ສັງฆກັມມ໌ກໍດີ ບໍ່ມີຮ່ວມກັບທ່ານ ດັ່ງນີ້ ຕ້ອງອາບັຕິສັງฆາທິເສສ ທຸກໆ ຄຳເວົ້າ

[໕໑໗] ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມພິກຂຸສົງຆ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນໃນເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ຂ່າວວ່າ ພິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະເປັນເຈົ້າຖິ່ນໃນຊົນບົທກິຕາຄີຣີ ເປັນພິກຂຸອລັຊຊີ ບໍ່ດີບໍ່ງາມ ປະພຶຕ-ອນາຈາຣເຫັນປານດັ່ງນີ້ ຄື ປູກຕົ້ນໄມ້ດອກເອງແດ່ ໃຊ້ໃຫ້ຜູ້ອື່ນປູກແດ່ ຣົດນ້ຳເອງແດ່ ໃຊ້ໃຫ້ຜູ້ອື່ນຣົດແດ່ ເກັບດອກໄມ້ເອງແດ່ ໃຊ້ໃຫ້ຜູ້ອື່ນເກັບແດ່ ຮ້ອຍກອງດອກໄມ້ເອງແດ່ ໃຊ້ໃຫ້ຜູ້ອື່ນຮ້ອຍກອງແດ່ ທຳມາລັຍຕໍ່ກ້ານເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳມາລັຍຮຽງກ້ານເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳດອກໄມ້ຊໍ່ເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳດອກໄມ້ພຸ່ມເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳດອກໄມ້ມົງກຸຝເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳດອກໄມ້ພວງເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳດອກໄມ້ແຜງສຳຫຼັບປະດັບອກເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ .. ປະພຶຕອນາຈາຣຕ່າງໆ ແດ່ ເມື່ອກ່ອນຊາວບ້ານຍັງມີສຣັທສາເລື່ອມໃສ ແຕ່ດຽວນີ້ເຂົາບໍ່ສຣັທສາບໍ່ເລື່ອມໃສແລ້ວ ແມ້ທານປະຈຳຂອງສົງຆ໌ກ່ອນໆ ບັດນີ້ທາຍົກທາຍິກາໄດ້ຕັດຂາດແລ້ວ ພິກຂຸມີສິລເປັນທີ່ຮັກຍ່ອມຫລີກລ່ຽງໄປ ພິກຂຸບໍ່ດີບໍ່ງາມຢູ່ທີ່ນັ້ນ ດັ່ງນີ້ ຈິງຫຼື?

ພິກຂຸທັ້ງຫລາຍທູລຮັບວ່າ ຈິງ ພຣະພຸທສເຈົ້າຂ້ານ້ອຍ.

ພຣະພຸທສເຈົ້າຊົງຕິຕຽນ

ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕິຕຽນວ່າ ດູຣາພິກຂຸທັ້ງຫລາຍ ການກະທຳຂອງພິກຂຸໂມຆບຸຣຸຩເຫລົ່ານັ້ນນັ່ນ ບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຓະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ.

ດູຣາພິກຂຸທັ້ງຫລາຍ ຈັ່ງໃດພິກຂຸໂມຆບຸຣຸຩເຫລົ່ານັ້ນ ຈຶ່ງໄດ້ປະພຶຕອນາຈາຣເຫັນປານດັ່ງນີ້ ຄື ປູກຕົ້ນໄມ້ດອກເອງແດ່ ໃຊ້ໃຫ້ຜູ້ອື່ນປູກແດ່ ຣົດນ້ຳເອງແດ່ ໃຊ້ໃຫ້ຜູ້ອື່ນຣົດແດ່ ເກັບດອກໄມ້ເອງແດ່ ໃຊ້ໃຫ້ຜູ້ອື່ນເກັບແດ່ ຮ້ອຍກອງດອກໄມ້ເອງແດ່ ໃຊ້ໃຫ້ຜູ້ອື່ນຮ້ອຍກອງແດ່ ທຳມາລັຍຕໍ່ກ້ານເອງແດ່

ໃຊ້ໃຫ້ຜູ້ອື່ນທຳແດ່ ທຳມາລັຍຮຽງກ້ານເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳດອກໄມ້ຊໍ່ເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳດອກໄມ້ພຸ່ມເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳດອກໄມ້ມົງກຸຏເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳດອກໄມ້ພວງເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ທຳດອກໄມ້ແຜງສຳຫຼັບປະດັບອກເອງແດ່ ໃຊ້ໃຫ້ຜູ້ອື່ນທຳແດ່ ພວກທ່ານນຳໄປເອງແດ່ ໃຊ້ໃຫ້ຜູ້ອື່ນນຳໄປແດ່ ຊຶ່ງມາລັຍຕໍ່ກ້ານ ນຳໄປເອງແດ່ ໃຊ້ໃຫ້ຜູ້ອື່ນນຳໄປແດ່ ຊຶ່ງມາລັຍຮຽງກ້ານ ນຳໄປເອງແດ່ ໃຊ້ໃຫ້ຜູ້ອື່ນນຳໄປແດ່ ຊຶ່ງດອກໄມ້ຊໍ່ ນຳໄປເອງແດ່ ໃຊ້ໃຫ້ຜູ້ອື່ນນຳໄປແດ່ ຊຶ່ງດອກໄມ້ພຸ່ມ ນຳໄປເອງແດ່ ໃຊ້ໃຫ້ຜູ້ອື່ນນຳໄປແດ່ ຊຶ່ງດອກໄມ້ມົງກຸຏ ນຳໄປເອງແດ່ ໃຊ້ໃຫ້ຜູ້ອື່ນນຳໄປແດ່ ຊຶ່ງດອກໄມ້ພວງ ນຳໄປເອງແດ່ ໃຊ້ໃຫ້ຜູ້ອື່ນນຳໄປແດ່ ຊຶ່ງດອກໄມ້ແຜງ ສຳຫຼັບປະດັບອກ ເພື່ອກຸລສຕຣີ ເພື່ອກຸລຘິດາ ເພື່ອກຸລກຸມາຣີ ເພື່ອສະໃພ້ແຫ່ງຕະກຸລ ເພື່ອກຸລທາສີ ພວກທ່ານ ຈັນອາຫາຣໃນພາຊນະອັນດຽວກັນແດ່ ດື່ມນ້ຳໃນຂັນໃບດຽວກັນແດ່ ນັ່ງເທິງອາສນະອັນດຽວກັນແດ່ ນອນເທິງຕຽງອັນດຽວກັນແດ່ ນອນຮ່ວມເຄື່ອງປົກອັນດຽວກັນແດ່ ນອນຄຸມຜ້າຫົ່ມຜືນດຽວກັນແດ່ ນອນຮ່ວມເຄື່ອງປົກ ແລະຄຸມຜ້າຫົ່ມຮ່ວມກັນແດ່ ກັບກຸລສຕຣີ ກຸລຘິດາ ກຸລກຸມາຣີ ສະໃພ້ແຫ່ງຕະກຸລ ກຸລທາສີ ຈັນອາຫາຣໃນເວລາວິການແດ່ ດື່ມນ້ຳເມົາແດ່ ທັດຊົງດອກໄມ້ຂອງຫອມແລະເຄື່ອງລູບໄລ້ແດ່ ຟ້ອນຣຳແດ່ ຂັບຮ້ອງແດ່ ປະໂຄມແດ່ ເຕັ້ນຣຳແດ່ ຟ້ອນຣຳກັບຜົງຟ້ອນຣຳແດ່ ຂັບຮ້ອງກັບຜົງຟ້ອນຣຳແດ່ ປະໂຄມກັບຜົງຟ້ອນຣຳແດ່ ເຕັ້ນຣຳກັບຜົງຟ້ອນຣຳແດ່ ຟ້ອນຣຳກັບຜົງຂັບຮ້ອງແດ່ ຂັບຮ້ອງກັບຜົງຂັບຮ້ອງແດ່ ປະໂຄມກັບຜົງຂັບຮ້ອງແດ່ ເຕັ້ນຣຳກັບຜົງຂັບຮ້ອງແດ່ ຟ້ອນຣຳກັບຜົງປະໂຄມແດ່ ຂັບຮ້ອງກັບຜົງປະໂຄມແດ່ ປະໂຄມກັບຜົງປະໂຄມແດ່ ເຕັ້ນຣຳກັບຜົງປະໂຄມແດ່ ຟ້ອນຣຳກັບຜົງເຕັ້ນຣຳແດ່ ຂັບຮ້ອງກັບຜົງເຕັ້ນຣຳແດ່ ປະໂຄມກັບຜົງເຕັ້ນຣຳແດ່ ເຕັ້ນຣຳກັບຜົງເຕັ້ນຣຳແດ່ ຫຼິ້ນຫມາກຣຸກແຖວລະແປດຕາແດ່ ຫຼິ້ນຫມາກຣຸກແຖວລະສິບຕາແດ່ ຫຼິ້ນຫມາກເກັບແດ່ ຫຼິ້ນຊົງນາງແດ່ ຫຼິ້ນຫມາກໄຫວແດ່ ຫຼິ້ນໂຍນຫ່ວງແດ່ ຫຼິ້ນໄມ້ຫຶ່ງແດ່ ຫຼິ້ນຟາດ-ໃຫ້ເປັນຮູປຕ່າງໆ ແດ່ ຫຼິ້ນສະກາແດ່ ຫຼິ້ນເປົ່າໃບໄມ້ແດ່ ຫຼິ້ນໄຖນ້ອຍໆ ແດ່ ຫຼິ້ນຕີລັງກາແດ່ ຫຼິ້ນໄມ້ກັງຫັນແດ່ ຫຼິ້ນຕວງຊາຍດ້ວຍໃບໄມ້ແດ່ ຫຼິ້ນຣົຖນ້ອຍໆ ແດ່ ຫຼິ້ນສນູນ້ອຍໆ ແດ່ ຫຼິ້ນຂຽນທາຍແດ່ ຫຼິ້ນທາຍໃຈແດ່ ຫຼິ້ນລຽນຄົນພິການແດ່ ຫັດຂີ່ຊ້າງແດ່ ຫັດຂີ່ມ້າແດ່ ຫັດຂີ່ຣົຖແດ່ ຫັດຍິງສນູແດ່ ຫັດເພລງອາວຸຘແດ່ ວິ່ງປ່ຽນຊ້າງແດ່ ວິ່ງປ່ຽນມ້າແດ່ ວິ່ງປ່ຽນຣົຖແດ່ ວິ່ງຂັບກັນແດ່ ວິ່ງກັບໄປກັບມາກັນແດ່ ຜິວປາກແດ່ ຕົບມືແດ່ ປລ້ຳກັນແດ່ ຕີມວຍກັນແດ່ ປູລາດຜ້າສັງຆາຏິ ໓ ກາງສຖານເຕັ້ນຣຳ ແລ້ວເວົ້າກັບຜົງຟ້ອນຣຳ ຢ່າງນີ້ວ່າ ນ້ອງຜົງທ່ານຈົງຟ້ອນຣຳ ໓ ທີ່ນີ້ດັ່ງນີ້ແດ່ ໃຫ້ການຄຳນັບແດ່ ປະພຶຕອນາຈາຣມີຢ່າງຕ່າງໆ ແດ່ລະ.

ດູຣາພິກຂຸທັ້ງຫລາຍ ການກະທຳຂອງພິກຂຸໂມຄບຸຣຸສເຫລົ່ານັ້ນນັ່ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ການກະທຳຂອງໂມຄບຸຣຸສເຫລົ່ານັ້ນນັ່ນ ເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເລື່ອມໃສແລ້ວ.

ຮັບສັ່ງໃຫ້ປັພພາຊນີຍກັມມ໌

[໖໑໗] ພໍພຣະຜູ້ມີພຣະພາຄຊົງຕິຕຽນພິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະ ໂດຍອເນກປຣິຍາຍດັ່ງນີ້ແລ້ວ ຊົງກະທຳສັມມີກຖາຮັບສັ່ງກັບພຣະສາຣີບຸຕຣ໌ແລະພຣະໂມຄຄັລລານະວ່າ ໄປເທີ້ນສາຣີບຸຕຣ໌ແລະໂມຄຄັລລານະ ພວກທ່ານໄປເຖິງຊົນບົທກິຕາຄີຣີແລ້ວຈົ່ງທຳປັພພາຊນີຍກັມມ໌ແກ່ພິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະຈາກຊົນບົທກິຕາຄີຣີ ເພາະພິກຂຸພວກນັ້ນເປັນສັທຮີວິຫາຣິກຂອງທ່ານ.

ພຣະສາຣີບຸຕຣ໌ແລະພຣະໂມຄຄັລລານະຂາບທູລຖາມວ່າ ພຣະພຸທສເຈົ້າຂ້ານ້ອຍ ພວກຂ້ານ້ອຍຈະທຳປັພພາຊນີຍກັມມ໌ແກ່ພິກຂຸພວກ ພຣະອັສສຊິແລະພຣະປຸນັພພສຸກະ ຈາກຊົນບົທກິຕາຄີຣີໄດ້ດ້ວຍ ວິທີໃດເພາະພິກຂຸພວກນັ້ນ ດຸຮ້າຍ ຫຍາບຄາຍ

ພຣະຜູ້ມີພຣະພາຄຕຣັສວ່າ ດູຣາສາຣີບຸຕຣ໌ແລະໂມຄຄັລລານະ ຖ້າເຊັ່ນນັ້ນ ພວກທ່ານຈົ່ງໄປພ້ອມດ້ວຍພິກຂຸຫລາຍໆ ອົງຄ໌.

ພຣະສາຣີບຸຕຣ໌ແລະພຣະໂມຄຄັລລານະ ທູລຮັບສນອງພຣະຜູ້ມີພຣະພາຄວ່າ ຢ່າງນັ້ນ ພຣະພຸທສ-ເຈົ້າຂ້າ.

ວິທີທຳປັພພາຊນີຍກັມມ໌

[໖໑໘] ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸທັ້ງຫລາຍ ກໍແລວິທີປັພພາຊນີຍກັມມ໌ຈະທຳຢ່າງນີ້ຄວຣໂຈທພິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະກ່ອນ ແລະແລ້ວຄວຣໃຫ້ພວກທ່ານໃຫ້ການ ແລະແລ້ວຄວຣຍົກອາບັຕິຂຶ້ນ ແລະແລ້ວພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິຈຕຸຕຖກັມມ໌ວາຈາວ່າດັ່ງນີ້:-

ກັມມ໌ວາຈາທຳປັພພາຊນີຍກັມມ໌

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າພິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະເຫລົ່ານີ້ ເປັນຜູ້ປະທຸສຮ້າຍຕະກຸລ ມີຄວາມປະພຶຕບໍ່ດີບໍ່ງາມ ຄວາມປະພຶຕບໍ່ດີບໍ່ງາມຂອງພິກຂຸເຫລົ່ານີ້ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ແລະຕະກຸລທັ້ງຫລາຍອັນພິກຂຸເຫລົ່ານີ້ປະທຸສຮ້າຍແລ້ວ ເຂົາໄດ້ເຫັນຢູ່ດ້ວຍເຂົາໄດ້ຍິນຢູ່ດ້ວຍ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຈະທຳປັພພາຊນີຍກັມມ໌ແກ່ພິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະຈາກຊົນບົທກິຕາຄີຣີວ່າ ພິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະບໍ່ຄວຣຢູ່ໃນຊົນບົທກິຕາຄີຣີ ນີ້ເປັນຍັຕຕິ

ທ່ານຂ້ານ້ອຍ ຂໍສົງฆ໌ຈົງຟັງຂ້າພເຈົ້າ ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະເຫລົ່ານີ້ເປັນຜູ້ປະທຸษຮ້າຍຕະກຸລ ມີຄວາມປະພຶຕບໍ່ດີບໍ່ງາມ ຄວາມປະພຶຕບໍ່ດີບໍ່ງາມຂອງກິກษຸເຫລົ່ານີ້ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ແລະຕະກຸລທັ້ງຫລາຍອັນກິກษຸເຫລົ່ານີ້ປະທຸษຮ້າຍແລ້ວ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ສົງฆ໌ທຳປັພພາຊນີຍກັມມ໌ແກ່ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະຈາກຊົນບົທກິຕາຄີຣີວ່າ ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະບໍ່ຄວຣຢູ່ໃນຊົນບົທກິຕາຄີຣີ ກາຣທຳປັພພາຊນີຍກັມມ໌ແກ່ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະຈາກຊົນບົທກິຕາຄີຣີວ່າ ກິກษຸພວກພຣະອັສສຊິແລະພຣະ-ປຸນັພພສຸກະ ບໍ່ຄວຣຢູ່ໃນຊົນບົທກິຕາຄີຣີ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຈະໄດ້ເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ຂ້າພເຈົ້າກ່າວຄວາມນີ້ແມ້ເທື່ອທີ່ສອງ ທ່ານຂ້ານ້ອຍ ຂໍສົງฆ໌ຈົງຟັງຂ້າພເຈົ້າ ກິກษຸພວກພຣະ-ອັສສຊິແລະພຣະປຸນັພພສຸກະເຫລົ່ານີ້ ເປັນຜູ້ປະທຸษຮ້າຍຕະກຸລ ມີຄວາມປະພຶຕບໍ່ດີບໍ່ງາມ ຄວາມປະພຶຕບໍ່ດີບໍ່ງາມຂອງກິກษຸເຫລົ່ານີ້ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ແລະຕະກຸລທັ້ງຫລາຍອັນກິກษຸເຫລົ່ານີ້ປະທຸษຮ້າຍແລ້ວ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ສົງฆ໌ທຳປັພພາຊນີຍກັມມ໌ແກ່ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະ ຈາກຊົນບົທກິຕາຄີຣີວ່າ ກິກษຸພວກພຣະອັສສຊິແລະພຣະ-ປຸນັພພສຸກະບໍ່ຄວຣຢູ່ໃນຊົນບົທກິຕາຄີຣີ ກາຣທຳປັພພາຊນີຍກັມມ໌ແກ່ກິກษຸພວກພຣະອັສສຊິແລະພຣະ-ປຸນັພພສຸກະຈາກຊົນບົທກິຕາຄີຣີວ່າ ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະບໍ່ຄວຣຢູ່ໃນຊົນບົທກິຕາຄີຣີ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຈະໄດ້ເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ຂ້າພເຈົ້າກ່າວຄວາມນີ້ແມ້ເທື່ອທີ່ສາມ ທ່ານຂ້ານ້ອຍ ຂໍສົງฆ໌ຈົງຟັງຂ້າພເຈົ້າ ກິກษຸພວກພຣະ-ອັສສຊິແລະພຣະປຸນັພພສຸກະເຫລົ່ານີ້ ເປັນຜູ້ປະທຸษຮ້າຍຕະກຸລ ມີຄວາມປະພຶຕບໍ່ດີບໍ່ງາມ ຄວາມປະພຶຕບໍ່ດີບໍ່ງາມຂອງກິກษຸເຫລົ່ານີ້ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ແລະຕະກຸລທັ້ງຫລາຍອັນກິກษຸເຫລົ່ານີ້ປະທຸษຮ້າຍແລ້ວ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ສົງฆ໌ທຳປັພພາຊນີຍກັມມ໌ແກ່ກິກษຸພວກພຣະ-ອັສສຊິແລະພຣະປຸນັພພສຸກະ ຈາກຊົນບົທກິຕາຄີຣີວ່າ ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະບໍ່ຄວຣຢູ່ໃນຊົນບົທກິຕາຄີຣີ ກາຣທຳປັພພາຊນີຍກັມມ໌ແກ່ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະຈາກຊົນບົທກິຕາຄີຣີວ່າ ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະບໍ່ຄວຣຢູ່ໃນຊົນບົທກິຕາຄີຣີຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຈະໄດ້ເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ປັພພາຊນີຍກັມມ໌ ສົງฆ໌ທຳແລ້ວແກ່ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະຈາກຊົນບົທກິຕາຄີຣີວ່າ ກິກษຸພວກພຣະອັສສຊິແລະພຣະປຸນັພພສຸກະບໍ່ຄວຣຢູ່ໃນຊົນບົທກິຕາຄີຣີ ຊອບແກ່ສົງฆ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າຊົງຄວາມນີ້ໄວ້ດ້ວຍຢ່າງນີ້.

[໖໔໐] ລຳດັບນັ້ນ ກິກຂຸສົງຄ໌ມີພຣະສາຣີບຸຕຣ໌ແລະພຣະໂມຄຄັລລານະເປັນປະມຸຂໄດ້ໄປສູ່ຊົນບົທກິຕາຄີຣີແລ້ວ ທຳປັພພາຊນີຍກັມມ໌ແກ່ກິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະຈາກຊົນບົທກິຕາຄີຣີວ່າ ກິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະ ບໍ່ຄວຣຢູ່ໃນຊົນບົທກິຕາຄີຣີ

ກິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະເຫລົ່ານັ້ນ ຖືກສົງຄ໌ທຳປັພພາຊນີຍກັມມ໌ແລ້ວ ບໍ່ປະພຶຕໂດຍຊອບ ບໍ່ຫາຍເຍີ້ຫຍິ່ງ ບໍ່ປະພຶຕແກ້ຕົວ ບໍ່ຂໍຂມາກິກຂຸທັ້ງຫລາຍ ຍັງດ່າ ຍັງບໍຣິກາຈກາຣົກສົງຄ໌ ຍັງໃສ່ຄວາມວ່າ ລຳອຽງດ້ວຍຄວາມພໍໃຈ ລຳເອັນດ້ວຍຄວາມຂັດເຄືອງ ລຳອຽງດ້ວຍຄວາມຫລົງ ລຳອຽງດ້ວຍຄວາມຍ້ານ ຫລີກໄປເສັຽກໍມີ ສຶກເສັຽກໍມີ

ບັຣດາກິກຂຸທີ່ເປັນຜູ້ມັກນ້ອຍ ສັນໂດຈ ມີຄວາມລະອາຍ ມີຄວາມຍ້ານບາປ ຜູ້ມັກຕໍ່ສິກຂາຕ່າງພາກັນເພັ່ງໂທຈ ຕິຕຽນ ໂພນທະນາວ່າ ຈັ່ງໃດ ກິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະຖືກສົງຄ໌ທຳປັພພາຊນີຍກັມມ໌ແລ້ວ ຈຶ່ງບໍ່ປະພຶຕໂດຍຊອບ ບໍ່ຫາຍເຍີ້ຫຍິ່ງ ບໍ່ປະພຶຕແກ້ຕົວ ບໍ່ຂໍຂມາກິກຂຸທັ້ງຫລາຍ ຍັງດ່າ ຍັງບໍຣິກາຈກາຣົກສົງຄ໌ ຍັງໃສ່ຄວາມວ່າ ລຳອຽງດ້ວຍຄວາມພໍໃຈ ລຳອຽງດ້ວຍຄວາມຂັດເຄືອງ ລຳອຽງດ້ວຍຄວາມຫລົງ ລຳອຽງດ້ວຍຄວາມຍ້ານ ຫລີກໄປເສັຽກໍມີ ສຶກເສັຽກໍມີ ລະແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ປະຊຸມສົງຄ໌ຊົງບັຌຌັຕິສິກຂາບົທ

[໖໔໑] ລຳດັບນັ້ນ ພຣະຜູ້ມີພຣະກາຄ ຮັບສັ່ງໃຫ້ປະຊຸມກິກຂຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າກິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະຖືກສົງຄ໌ທຳປັພພາຊນີຍກັມມ໌ແລ້ວ ບໍ່ປະພຶຕໂດຍຊອບ ບໍ່ຫາຍເຍີ້ຫຍິ່ງ ບໍ່ປະພຶຕແກ້ຕົວ ບໍ່ຂໍຂມາກິກຂຸທັ້ງຫລາຍ ຍັງດ່າ ຍັງບໍຣິກາຈກາຣົກສົງຄ໌ ຍັງໃສ່ຄວາມວ່າ ລຳອຽງດ້ວຍຄວາມພໍໃຈ ລຳອຽງດ້ວຍຄວາມຂັດເຄືອງ ລຳອຽງດ້ວຍຄວາມຫລົງ ລຳອຽງດ້ວຍຄວາມຍ້ານ ຫລີກໄປເສັຽກໍມີ ສຶກເສັຽກໍມີ ຈິງຫຼື?

ກິກຂຸເຫລົ່ານັ້ນທູລຮັບວ່າ ຈິງ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕິຕຽນວ່າ ດູຣາກິກຂຸທັ້ງຫລາຍ ກາຣົກະທຳຂອງກິກຂຸໂມຄບຸຣຸຈເຫລົ່ານັ້ນນັ່ນ ບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຌະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ຈັ່ງໃດ ພວກກິກຂຸໂມຄບຸຣຸຈເຫລົ່ານັ້ນ ຖືກສົງຄ໌ທຳປັພພາຊນີຍກັມມ໌ແລ້ວ ຈຶ່ງບໍ່ປະພຶຕໂດຍຊອບ ບໍ່ຫາຍເຍີ້ຍິ່ງ ບໍ່ປະພຶຕແກ້ຕົວ ບໍ່ຂໍຂມາກິກຂຸທັ້ງຫລາຍ ຍັງດ່າ ຍັງບໍຣິກາຈກາຣົກສົງຄ໌ ຍັງໃສ່ຄວາມວ່າ ລຳອຽງດ້ວຍຄວາມພໍໃຈ ລຳອຽງດ້ວຍຄວາມຂັດເຄືອງ ລຳອຽງດ້ວຍຄວາມຫລົງ ລຳອຽງດ້ວຍຄວາມຍ້ານ ຫລີກໄປເສັຽກໍມີ ສຶກເສັຽກໍມີລະ.

ດູຣາພິກษຸທັ້ງຫລາຍ ກາຣກະທຳຂອງພິກษຸໂມฆບຸຣุษເຫລົ່ານັ້ນນັ່ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ກາຣກະທຳຂອງໂມฆບຸຣุษເຫລົ່ານັ້ນນັ່ນ ເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເລື່ອມໃສແລ້ວ.

ພໍພຣະຜູ້ມີພຣະພາຄຊົງຕິຕຽນພິກษຸພວກພຣະອັສສຊິແລະພຣະປຸນັພພສຸກະ ໂດຍອເນກປຣິຍາຍດັ່ງນີ້ແລ້ວ ຕຣັສໂທษແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດษ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຕຣັສຄຸຓແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາກາຣທີ່ໜ້າເລື່ອມໃສ ກາຣບໍ່ສະສົມ ກາຣປຼາຣົກຄວາມພຽຣ ໂດຍອເນກປຣິຍາຍແລ້ວ ຊົງກະທຳທັມມີກຖາທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເຫມາະສົມແກ່ເຣື່ອງນັ້ນ ແກ່ພິກษຸທັ້ງຫລາຍ ແລ້ວຮັບສັ່ງກັບພິກษຸທັ້ງຫລາຍວ່າ

ດູຣາພິກษຸທັ້ງຫລາຍ ເພາະເຫຕຸນັ້ນແລ ເຮົາຈັກບັญญັຕິສິກຂາບົທແກ່ພິກษຸທັ້ງຫລາຍ ອາສັຍອຳນາຈປະໂຍຊນ໌ ໑໐ ປະກາຣ ຄື ເພື່ອຄວາມຮັບວ່າດີແຫ່ງສົງฆ໌ ໑ ເພື່ອຄວາມສຳຣາญແຫ່ງສົງฆ໌ ໑ ເພື່ອຂົ່ມບຸຄຄົລຜູ້ເກີ້ຍາກ ໑ ເພື່ອຢູ່ສຳຣາญແຫ່ງພິກษຸຜູ້ມີສີລເປັນທີ່ຮັກ ໑ ເພື່ອປ້ອງກັນອາສວະອັນຈະບັງເກີດໃນປັຈຈຸບັນ ໑ ເພື່ອກຳຈັດອາສວະອັນຈັກບັງເກີດໃນອນາຄົຕ ໑ ເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ໑ ເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໑ ເພື່ອຄວາມຕັ້ງມັ່ນແຫ່ງພຣະສັທທັມມ໌ ໑ ເພື່ອຖືຕາມພຣະວິນັຍ ໑

ດູຣາພິກษຸທັ້ງຫລາຍ ກໍແລພວກທ່ານຄວຣຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:-

ພຣະບັญญັຕິ

໑໗. ໑໓. ອີກຢ່າງ ພິກษຸເຂົ້າໄປອາສັຍບ້ານກໍດີ ນິຄົມກໍດີ ແຫ່ງໃດແຫ່ງນຶ່ງຢູ່ ເປັນຜູ້ປະທຸษຮ້າຍຕະກຸລ ມີຄວາມປະພຶຕບໍ່ດີບໍ່ງາມ ຄວາມປະພຶຕບໍ່ດີບໍ່ງາມຂອງທ່ານ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ແລະຕະກຸລທັ້ງຫລາຍອັນທ່ານປະທຸษຮ້າຍແລ້ວ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ພິກษຸນັ້ນອັນພິກษຸທັ້ງຫລາຍ ຄວຣວ່າກ່າວຢ່າງນີ້ວ່າ ທ່ານເປັນຜູ້ປະທຸษຮ້າຍຕະກຸລ ມີຄວາມປະພຶຕບໍ່ດີບໍ່ງາມ ຄວາມປະພຶຕບໍ່ດີບໍ່ງາມຂອງທ່ານເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ແລະຕະກຸລທັ້ງຫລາຍອັນທ່ານປະທຸษຮ້າຍແລ້ວ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ທ່ານຈົ່ງຫລີກໄປເສັຽຈາກອາວາສນີ້ ທ່ານຢ່າຢູ່ໃນທີ່ນີ້ ແລະພິກษຸນັ້ນອັນພິກษຸທັ້ງຫລາຍວ່າກ່າວຢູ່ຢ່າງນີ້ ຄວຣວ່າກ່າວພິກษຸເຫລົ່ານັ້ນຢ່າງນີ້ວ່າ

ພວກກິກຂຸເຖິງຄວາມພໍໃຈດ້ວຍ ເຖິງຄວາມຂັດເຄືອງດ້ວຍ ເຖິງຄວາມຫລົງດ້ວຍ ເຖິງຄວາມຢ້ານດ້ວຍ ຍ່ອມຂັບກິກຂຸບາງອົງຄ໌ ຍ່ອມບໍ່ຂັບກິກຂຸບາງອົງຄ໌ ເພາະອາບັຕິ ເຊັ່ນດຽວກັນ ກິກຂຸນັ້ນອັນກິກຂຸທັ້ງຫລາຍຄວຣວ່າກ່າວຢ່າງນີ້ວ່າ ທ່ານຢ່າໄດ້ກ່າວຢ່າງນັ້ນ ກິກຂຸທັ້ງຫລາຍ ຫາໄດ້ເຖິງຄວາມພໍໃຈບໍ່ ຫາໄດ້ເຖິງຄວາມຂັດເຄືອງບໍ່ ຫາໄດ້ເຖິງຄວາມຫລົງບໍ່ ຫາໄດ້ເຖິງຄວາມຢ້ານບໍ່ ທ່ານເອງແລ ເປັນຜູ້ປະທຸສຮ້າຍຕະກຸລ ມີຄວາມປະພຶຕບໍ່ດີບໍ່ງາມ ຄວາມປະພຶຕບໍ່ດີບໍ່ງາມຂອງທ່ານ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ແລະຕະກຸລທັ້ງຫລາຍອັນທ່ານປະທຸສຮ້າຍແລ້ວ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ທ່ານຈົ່ງຫລີກໄປເສັຽຈາກອາວາສນີ້ ທ່ານຢ່າຢູ່ໃນທີ່ນີ້ ແລະກິກຂຸນັ້ນອັນກິກຂຸທັ້ງຫລາຍວ່າກ່າວຢູ່ຢ່າງນີ້ ຍັງຍົກຍ່ອງຢູ່ຢ່າງທັນລະ ກິກຂຸນັ້ນອັນກິກຂຸທັ້ງຫລາຍ ຄວຣສູຕສມນຸກາສກວ່າຈະຄົບສາມຈົບ ເພື່ອໃຫ້ສລະກັມມ໌ນັ້ນເສັຽ ຫາກທ່ານຖືກສູຕສມນຸກາສາກວ່າຈະຄົບສາມຈົບຢູ່ ສລະກັມມ໌ນັ້ນເສັຽ ສລະໄດ້ຢ່າງນີ້ ນັ່ນເປັນການດີ ຫາກທ່ານບໍ່ສລະເສັຽ ເປັນສັງฆາທິເສສ.

ເຣື່ອງກິກຂຸພວກພຣະອັສສຊິແລະພຣະປຸນັພພສຸກະ ຈົບ.

ສິກຂາບົທວິກັງຄ໌

[໖໔໔] ຄຳວ່າ ອີກຢ່າງກິກຂຸ .. ບ້ານກໍດີ ນິຄົມກໍດີ ແຫ່ງໃດແຫ່ງນຶ່ງ ຄວາມວ່າ ບ້ານກໍດີ ນິຄົມກໍດີ ນຄຣກໍດີ ຊື່ວ່າ ບ້ານແລະນິຄົມ.

ບົທວ່າ ເຂົ້າໄປອາສັຍ .. ຢູ່ ຄືຈີວຣ ບິຕທບາຕ ເສນາສນະ ແລະເກສັຊບໍຣິຂາຣເປັນປັຈຈັຍຂອງກິກຂຸໄຂ້ ເປັນປັຈຈັຍກ່ຽວເນື່ອງຢູ່ໃນທີ່ນັ້ນ.

ທີ່ຊື່ວ່າ ຕະກຸລ ຫມາຍຕະກຸລ ໔ ຄື ຕະກຸລກັສຕຣິຍ໌ ຕະກຸລພຣາຫ໌ມຕ໌ຕະກຸລແພສຍ໌ ຕະກຸລສູທຣ໌

ບົທວ່າ ເປັນຜູ້ປະທຸສຮ້າຍຕະກຸລ ຄື ປະຈົບຕະກຸລດ້ວຍດອກໄມ້ກໍດີ ໝາກໄມ້ກໍດີ ແປ້ງກໍດີ ດິນກໍດີ ໄມ້ສີຟັນກໍດີ ໄມ້ໄຜ່ກໍດີ ການແພທຍ໌ກໍດີ ການສື່ສາຣກໍດີ

ບົທວ່າ ມີຄວາມປະພຶຕບໍ່ດີບໍ່ງາມ ຄື ປູກໄມ້ດອກເອງແດ່ ໃຊ້ໃຫ້ຜູ້ອື່ນປູກແດ່ ຮົດນ້ຳເອງແດ່ ໃຊ້ໃຫ້ຜູ້ອື່ນຮົດແດ່ ເກັບດອກໄມ້ເອງແດ່ ໃຊ້ໃຫ້ຜູ້ອື່ນເກັບແດ່ ຮ້ອຍກອງດອກໄມ້ເອງແດ່ ໃຊ້ໃຫ້ຜູ້ອື່ນຮ້ອຍກອງແດ່.

[໖໔໕] ບົທວ່າ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ຄື ຊົນເຫລົ່າໃດຢູ່ຈະເພາະຫນ້າ ຊົນເຫລົ່ານັ້ນ ຊື່ວ່າໄດ້ເຫັນຢູ່ ຊົນເຫລົ່າໃດຢູ່ລັບຫລັງ ຊົນເຫລົ່ານັ້ນຊື່ວ່າໄດ້ຍິນຢູ່.

ບົທວ່າ ແລະຕະກຸລທັ້ງຫລາຍ ອັນທ່ານປະທຸษຮ້າຍແລ້ວ ຄື ຊົນທັ້ງຫລາຍເມື່ອກ່ອນມີສຮັທຮາ ອາສັຍພິກษຸນັ້ນກັບເປັນຄົນບໍ່ມີສຮັທຮາ ເມື່ອກ່ອນເປັນຄົນເລື່ອມໃສອາສັຍພິກษຸນັ້ນກັບເປັນຄົນບໍ່ເລື່ອມໃສ

ບົທວ່າ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ຄື ຊົນເຫລົ່າໃດຢູ່ຈະເພາະໜ້າ ຊົນເຫລົ່ານັ້ນ ຊື່ວ່າໄດ້ເຫັນຢູ່ ຊົນເຫລົ່າໃດຢູ່ລັບຫລັງ ຊົນເຫລົ່ານັ້ນ ຊື່ວ່າໄດ້ຍິນຢູ່

[໖໘໔] ບົທວ່າ ພິກษຸນັ້ນ ໄດ້ແກ່ ພິກษຸຜູ້ປະທຸษຮ້າຍຕະກຸລອົງຄ໌ນັ້ນ

ບົທວ່າ ອັນພິກษຸທັ້ງຫລາຍ ໄດ້ແກ່ ພິກษຸເຫລົ່າອື່ນ ອຣິບາຍວ່າ ພິກษຸພວກທີ່ໄດ້ເຫັນໄດ້ຍິນເຫລົ່ານັ້ນ ຄວຣວ່າກ່າວພິກษຸຜູ້ປະທຸษຮ້າຍຕະກຸລອົງຄ໌ນັ້ນວ່າ ທ່ານແລ ເປັນຜູ້ປະທຸษຮ້າຍຕະກຸລ ມີຄວາມປະພຶຕບໍ່ດີບໍ່ງາມ ຄວາມປະພຶຕບໍ່ດີບໍ່ງາມຂອງທ່ານແລ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ແລະຕະກຸລທັ້ງຫລາຍ ອັນທ່ານປະທຸษຮ້າຍແລ້ວ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ທ່ານຈົ່ງຫລີກໄປເສັຽຈາກອາວາສນີ້ ທ່ານຢ່າຢູ່ໃນທີ່ນີ້ ແລະພິກษຸນັ້ນ ອັນພິກษຸທັ້ງຫລາຍວ່າກ່າວຢູ່ຢ່າງນີ້ ຄວຣວ່າພິກษຸເຫລົ່ານັ້ນຢ່າງນີ້ວ່າ ພິກษຸທັ້ງຫລາຍ ເຖິງຄວາມພໍໃຈດ້ວຍ ເຖິງຄວາມຂັດເຄືອງດ້ວຍ ເຖິງຄວາມຫລົງດ້ວຍ ເຖິງຄວາມຢ້ານດ້ວຍ ຍ່ອມຂັບພິກษຸບາງອົງຄ໌ ຍ່ອມບໍ່ຂັບພິກษຸບາງອົງຄ໌ ເພາະອາບັຕິເຊັ່ນດຽວກັນ

[໖໘໕] ບົທວ່າ ພິກษຸນັ້ນ ໄດ້ແກ່ພິກษຸຜູ້ທຳກັມມ໌ອົງຄ໌ນັ້ນ

ບົທວ່າ ອັນພິກษຸທັ້ງຫລາຍ ໄດ້ແກ່ພິກษຸເຫລົ່າອື່ນ ອຣິບາຍວ່າ ພິກษຸເຫລົ່າໃດໄດ້ເຫັນ ພິກษຸເຫລົ່າໃດໄດ້ຍິນ ພິກษຸເຫລົ່ານັ້ນ ຄວຣວ່າກ່າວພິກษຸຜູ້ທຳກັມມ໌ອົງຄ໌ນັ້ນວ່າ ທ່ານຢ່າໄດ້ກ່າວຢ່າງນັ້ນ ພິກษຸທັ້ງຫລາຍຫາໄດ້ເຖິງຄວາມພໍໃຈບໍ່ ຫາໄດ້ເຖິງຄວາມຂັດເຄືອງບໍ່ ຫາໄດ້ເຖິງຄວາມຫລົງບໍ່ ແລະຫາໄດ້ເຖິງຄວາມຢ້ານບໍ່ ທ່ານແລ ເປັນຜູ້ປະທຸษຮ້າຍຕະກຸລ ມີຄວາມປະພຶຕບໍ່ດີບໍ່ງາມ ຄວາມປະພຶຕບໍ່ດີບໍ່ງາມຂອງທ່ານແລ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ແລະຕະກຸລທັ້ງຫລາຍ ອັນທ່ານປະທຸษຮ້າຍແລ້ວ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ທ່ານຈົ່ງຫລີກໄປເສັຽຈາກອາວາສນີ້ ທ່ານຢ່າຢູ່ໃນທີ່ນີ້ ຄວຣວ່າກ່າວ ແມ້ເທື່ອທີ່ສອງ ຄວຣວ່າກ່າວແມ້ເທື່ອທີ່ສາມ ຫາກທ່ານສລະເສັຽ ສລະໄດ້ຢ່າງນີ້ ນັ່ນເປັນການດີ ຫາກທ່ານບໍ່ສລະເສັຽ ຕ້ອງອາບັຕິທຸກກົຕ ພິກษຸທັ້ງຫລາຍໄດ້ຍິນແລ້ວບໍ່ວ່າກ່າວ ຕ້ອງອາບັຕິທຸກກົຕ ພິກษຸນັ້ນ ອັນພິກษຸທັ້ງຫລາຍຄວຣຄຸມຕົວມາແມ້ສູ່ທ່າມກາງສົງฆ໌ແລ້ວຄວຣວ່າກ່າວວ່າ ທ່ານຢ່າໄດ້ກ່າວຢ່າງນັ້ນ ພິກษຸທັ້ງຫລາຍ ຫາໄດ້ເຖິງຄວາມພໍໃຈບໍ່ ຫາໄດ້ເຖິງຄວາມຂັດເຄືອງບໍ່ ຫາໄດ້ເຖິງຄວາມຫລົງບໍ່ ຫາໄດ້ເຖິງຄວາມຢ້ານບໍ່ ທ່ານແລເປັນຜູ້ປະທຸษຮ້າຍຕະກຸລ ມີຄວາມປະພຶຕບໍ່ດີບໍ່ງາມ ຄວາມປະພຶຕ

ບໍ່ດີບໍ່ງາມຂອງທ່ານແລ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ແລະຕະກຸລທັ້ງຫລາຍອັນທ່ານປະທຸษຮ້າຍແລ້ວ ເຂົາໄດ້ເຫັນຢູ່ດ້ວຍ ເຂົາໄດ້ຍິນຢູ່ດ້ວຍ ທ່ານຈົ່ງຫລີກໄປເສັຽຈາກອາວາສນີ້ ທ່ານຢ່າຢູ່ໃນທີ່ນີ້ ຄວຣວ່າກ່າວແມ້ເທື່ອທີ່ສອງ ຄວຣວ່າກ່າວແມ້ເທື່ອທີ່ສາມ ຫາກທ່ານສລະເສັຽ ສລະໄດ້ຢ່າງນີ້ ນັ່ນເປັນການດີ ຫາກທ່ານບໍ່ສລະເສັຽ ຕ້ອງອາບັຕິທຸກກົຕ.

ວິធີສູຕສມນຸກາສ

[໙໔໙] ພິກຂຸນັ້ນອັນສົງฆ໌ຄວຣສູຕສມນຸກາສ ດູຣາພິກຂຸທັ້ງຫລາຍ ກໍແລສົງฆ໌ຄວຣສູຕສມນຸກາສຢ່າງນີ້ ພິກຂຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງฆ໌ຮູ້ດ້ວຍ ญັຕຕິຈຕຸຕຖກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສູຕສມນຸກາສ

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ພິກຂຸມີຊື່ນີ້ຜູ້ນີ້ ຖືກສົງฆ໌ທຳປັພພາຊນີຍກັມມ໌ແລ້ວ ໃສ່ຄວາມພິກຂຸທັ້ງຫລາຍວ່າ ລຳອຽງດ້ວຍຄວາມພໍໃຈ ລຳອຽງດ້ວຍຄວາມຂັດເຄືອງ ລຳອຽງດ້ວຍຄວາມຫລົງ ລຳອຽງດ້ວຍຄວາມຢ້ານ ທ່ານຍັງບໍ່ສລະເຣື່ອງນັ້ນ ຖ້າຄວາມພ້ອມພັ່ງຂອງສົງฆ໌ເຖິງທີ່ແລ້ວ ສົງฆ໌ຄວຣສູຕສມນຸກາສ ພິກຂຸຜູ້ມີຊື່ນີ້ ເພື່ອໃຫ້ສລະເຣື່ອງນັ້ນເສັຽ ນີ່ເປັນญັຕຕິ

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ພິກຂຸມີຊື່ນີ້ຜູ້ນີ້ ຖືກສົງฆ໌ທຳປັພພາຊນີຍກັມມ໌ແລ້ວ ໃສ່ຄວາມພິກຂຸທັ້ງຫລາຍວ່າ ລຳອຽງດ້ວຍຄວາມຂັດເຄືອງ ລຳອຽງດ້ວຍຄວາມຫລົງ ລຳອຽງດ້ວຍຄວາມຢ້ານ ທ່ານຍັງບໍ່ສລະເຣື່ອງນັ້ນ ສົງฆ໌ສູຕມມນຸກາສພິກຂຸຜູ້ມີຊື່ນີ້ ເພື່ອໃຫ້ສລະເຣື່ອງນັ້ນເສັຽ ການສູຕສມນຸກາສພິກຂຸຜູ້ມີຊື່ນີ້ ເພື່ອໃຫ້ສລະເຣື່ອງນັ້ນເສັຽ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຈະໄດ້ເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ຂ້າພເຈົ້າກ່າວຄວາມນີ້ແມ້ເທື່ອທີ່ສອງ ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ພິກຂຸມີຊື່ນີ້ຜູ້ນີ້ ຖືກສົງฆ໌ທຳປັພພາຊນີຍກັມມ໌ແລ້ວ ໃສ່ຄວາມພິກຂຸທັ້ງຫລາຍວ່າ ລຳອຽງດ້ວຍຄວາມພໍໃຈ ລຳອຽງດ້ວຍຄວາມຂັດເຄືອງ ລຳອຽງດ້ວຍຄວາມຫລົງ ລຳອຽງດ້ວຍຄວາມຢ້ານ ທ່ານຍັງບໍ່ສລະເຣື່ອງນັ້ນ ສົງฆ໌ສູຕສມນຸກາສພິກຂຸຜູ້ມີຊື່ນີ້ ເພື່ອໃຫ້ສລະເຣື່ອງນັ້ນ ການສູຕສມນຸກາສພິກຂຸຜູ້ມີຊື່ນີ້ ເພື່ອໃຫ້ສລະເຣື່ອງນັ້ນເສັຽ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຈະໄດ້ເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ຂ້າພເຈົ້າກ່າວຄວາມນີ້ແມ້ເທື່ອທີ່ສາມ ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ພິກຂຸມີຊື່ນີ້ຜູ້ນີ້ ຖືກສົງฆ໌ທຳປັພພາຊນີຍກັມມ໌ແລ້ວ ໃສ່ຄວາມພິກຂຸທັ້ງຫລາຍວ່າ ລຳອຽງດ້ວຍຄວາມພໍໃຈ ລຳອຽງດ້ວຍຄວາມຂັດເຄືອງ ລຳອຽງດ້ວຍຄວາມຫລົງ ລຳອຽງດ້ວຍຄວາມຢ້ານ ທ່ານຍັງບໍ່ສລະເຣື່ອງນັ້ນ ສົງฆ໌ສູຕ

ສມນຸກາສກິກຂຸຜູ້ມີຊື່ນີ້ ເພື່ອໃຫ້ສລະເຣື່ອງນັ້ນເສັຽ ກາຣສູຕສມນຸກາສກິກຂຸຜູ້ມີຊື່ນີ້ ເພື່ອໃຫ້ສລະເຣື່ອງນັ້ນເສັຽ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຈະໄດ້ເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ກິກຂຸຜູ້ມີຊື່ນີ້ ອັນສົງຆ໌ສູຕສມນຸກາສແລ້ວ ເພື່ອໃຫ້ສລະເຣື່ອງນັ້ນເສັຽ ຊອບແກ່ສົງຆ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າຊົງຄວາມນີ້ໄວ້ດ້ວຍຢ່າງນີ້.

[໖໔໗] ຈົບຌັຕຕິ ຕ້ອງອາບັຕິທຸກກົຕ

ຈົບກັມມ໌ວາຈາສອງເທື່ອ ຕ້ອງອາບັຕິຖຸລລັຈຈັຍ

ຈົບກັມມ໌ວາຈາເທື່ອສຸດ ຕ້ອງອາບັຕິສັງຆາທິເສສ

ເມື່ອຕ້ອງອາບັຕິສັງຆາທິເສສ ອາບັຕິທຸກກົຕເພາະຌັຕຕິ ອາບັຕິຖຸລລັຈຈັຍເພາະກັມມ໌ວາຈາສອງເທື່ອ ຍ່ອມຣະງັບ

ບົທວ່າ ສັງຆາທິເສສ ຄວາມວ່າ ສົງຆ໌ເທົ່ານັ້ນໃຫ້ປຣິວາສເພື່ອອາບັຕິນັ້ນ ຊັກເຂົ້າຫາອາບັຕິເດີມ ໃຫ້ມານັຕ ເອີ້ນເຂົ້າໝູ່ ບໍ່ແມ່ນຄຒະຫຼາຍອົງຄ໌ດ້ວຍກັນ ບໍ່ແມ່ນບຸຄຄົລອົງຄ໌ດຽວ ເພາະດັ່ງນັ້ນ ຈຶ່ງຕຣັສເອີ້ນວ່າ ສັງຆາທິເສສ ຄຳວ່າ ສັງຆາທິເສສ ເປັນກາຣຂະໜານນາມ ຄືເປັນຊື່ຂອງອາບັຕິນິກາຍນັ້ນແລ ແມ້ເພາະເຫຕຸນັ້ນ ຈຶ່ງຕຣັສເອີ້ນວ່າ ສັງຆາທິເສສ.

ບົທກາຊນີຍ໌

[໖໔໘] ກັມມ໌ເປັນທັມມ໌ ກິກຂຸສຳຄັລວ່າ ກັມມ໌ເປັນທັມມ໌ ບໍ່ສລະ ຕ້ອງອາບັຕິສັງຆາທິເສສ

ກັມມ໌ເປັນທັມມ໌ ກິກຂຸສົງສັຍ ບໍ່ສລະ ຕ້ອງອາບັຕິສັງຆາທິເສສ

ກັມມ໌ເປັນທັມມ໌ ກິກຂຸສຳຄັລວ່າ ກັມມ໌ບໍ່ເປັນທັມມ໌ ບໍ່ສລະ ຕ້ອງອາບັຕິສັງຆາທິເສສ

ກັມມ໌ບໍ່ເປັນທັມມ໌ ກິກຂຸສຳຄັລວ່າ ກັມມ໌ເປັນທັມມ໌ ຕ້ອງອາບັຕິທຸກກົຕ

ກັມມ໌ບໍ່ເປັນທັມມ໌ ກິກຂຸສົງສັຍ ຕ້ອງອາບັຕິທຸກກົຕ

ກັມມ໌ບໍ່ເປັນທັມມ໌ ກິກຂຸສຳຄັລວ່າ ກັມມ໌ບໍ່ເປັນທັມມ໌ ຕ້ອງອາບັຕິທຸກກົຕ.

ອນາປັຕຕິວາຣ

[໖໔໙] ກິກຂຸຜູ້ຍັງບໍ່ຖືກສູຕສມນຸກາສ ໑ ກິກຂຸຜູ້ສລະເສັຽໄດ້ ໑ ກິກຂຸວິກົລຈຣິຕ ໑ ກິກຂຸມີຈິຕຟຸ້ງຊ່ານ ໑ ກິກຂຸຜູ້ກະສັບກະສ່າຍເພາະເວທນາ ໑ ກິກຂຸອາທິກັມມິກະ ໑ ບໍ່ຕ້ອງອາບັຕິແລ.

ສັງຆາທິເສສ ສິກຂາບົທທີ່ ໑໐ ຈົບ.

ບົທສຣຸປ

[໖໓໐] ທ່ານຜູ້ມີອາຍຸທັ້ງຫລາຍ ຂັມມ໌ ຄືສັງຄາທິເສສ ໑໓ ສິກຂາບົທຂ້າພເຈົ້າຍົກຂຶ້ນສະແດງແລ້ວ ເກົ້າສິກຂາບົທໃຫ້ຕ້ອງອາບັຕິເມື່ອທຳອິດທຳ ສີ່ສິກຂາບົທໃຫ້ຕ້ອງອາບັຕິເມື່ອສູຕສມນຸກາສຄົບສາມຈົບ ກິກຂຸຕ້ອງອາບັຕິສັງຄາທິເສສສິກຂາບົທໃດສິກຂາບົທໜຶ່ງແລ້ວ ຣູ້ຢູ່ ແຕ່ປົກປິດໄວ້ສິ້ນວັນເທົ່າໃດ ກິກຂຸນັ້ນຕ້ອງຢູ່ປຣິວາສດ້ວຍຄວາມບໍ່ປັຕຖນາ ສິ້ນວັນເທົ່ານັ້ນ ກິກຂຸຢູ່ປຣິວາສແລ້ວ ຕ້ອງປະພຶຕວັຕຣ໌ເພື່ອມານັຕສຳຫຼັບກິກຂຸເພີ່ມຂຶ້ນອີກ ໖ ຣາຕຣີ ກິກຂຸປະພຶຕມານັຕແລ້ວ ກິກຂຸສົງຄ໌ ໒໐ ອົງຄ໌ຢູ່ໃນສີມາໃດຄວຣເອີ້ນກິກຂຸນັ້ນເຂົ້າໜູ່ໃນສີມານັ້ນ ຖ້າກິກຂຸສົງຄ໌ ໒໐ ອົງຄ໌ ຫຍ່ອນແມ້ອົງຄ໌ນຶ່ງ ຄວຣເອີ້ນກິກຂຸນັ້ນເຂົ້າໜູ່ ກິກຂຸນັ້ນກໍບໍ່ເປັນອັນສົງຄ໌ເອີ້ນເຂົ້າໜູ່ແລ້ວ ແລະກິກຂຸເຫລົ່ານັ້ນຄວຣຖືກຕຳໜິ ນີ້ເປັນສາມີຈີໃນກັມມ໌ນັ້ນ

ຂ້າພເຈົ້າຂໍຖາມທ່ານທັ້ງຫລາຍໃນອາບັຕິສັງຄາທິເສສເຫລົ່ານັ້ນວ່າ ທ່ານທັ້ງຫລາຍເປັນຜູ້ບໍຣິສຸທຣ໌ແລ້ວຫຼື ຂ້າພເຈົ້າຂໍຖາມ ແມ້ເທື່ອທີ່ສອງວ່າ ທ່ານທັ້ງຫລາຍເປັນຜູ້ບໍຣິສຸທຣ໌ແລ້ວຫຼື ຂ້າພເຈົ້າຂໍຖາມ ແມ້ເທື່ອທີ່ສາມວ່າ ທ່ານທັ້ງຫລາຍເປັນຜູ້ບໍຣິສຸທຣ໌ແລ້ວຫຼື ທ່ານທັ້ງຫລາຍເປັນຜູ້ບໍຣິສຸທຣ໌ແລ້ວໃນອາບັຕິສັງຄາທິເສສເຫລົ່ານີ້ ເຫຕຸນັ້ນ ຈຶ່ງນິ່ງ ຂ້າພເຈົ້າຊົງຄວາມນີ້ໄວ້ດ້ວຍຢ່າງນີ້.

ເຕຣສກັຓ໌ ຈົບ.

ຫົວຂໍ້ປະຈຳເຣື່ອງ

ສັງຄາທິເສສ ໑໓ ສິກຂາບົທ ຄື ປ່ອຍສຸກກະ ໑ ເຟືອຟັ້ນກາຍ ໑ ວາຈາຊົ່ວຫຍາບ ໑ ບຳເຣີກາມຂອງຕົນ ໑ ຊັກສື່ ໑ ທຳກຸຏິ ໑ ທຳວິຫາຣ ໑ ໂຈທດ້ວຍອາບັຕິປາຣາຊິກບໍ່ມີມູລ ໑ ໂຈທອ້າງເລສ໌ບາງຢ່າງ ໑ ທຳລາຍສົງຄ໌ ໑ ປະພຶຕຕາມກິກຂຸຜູ້ທຳລາຍສົງຄ໌ນັ້ນແຫລະ ໑ ວ່າຍາກ ໑ ປະທຸສຮ້າຍຕະກຸລ ໑ ດັ່ງນີ້ແລ.

ອນິຍຕກັຕຫ໌

ທ່ານທັ້ງຫລາຍ ອີກຢ່າງ ສັມມ໌ຄືອນິຍຕ ໔ ສິກຂາບົທເຫລົ່ານີ້ແລ ມາສູ່ອຸເທສ.

ອນິຍຕ ສິກຂາບົທທີ່ ໑

ເຣື່ອງພຣະອຸທາຍີກັບນາງວິສາຂາ ມິຄາຣມາຕາ

[ຜ໓໑] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ໗ ພຣະເຊຕວັນ ອາຣາມຂອງອນາຖບິຕຫິກຄຫບໍດີ ເຂຕພຣະນຄຣສາວັຕຖີ ຄັ້ງນັ້ນທ່ານພຣະອຸທາຍີເປັນພຣະປະຈຳຕະກຸລໃນພຣະນຄຣສາວັຕຖີ ເຂົ້າໄປຫາຕະກຸລຫຼວງຫຼາຍ ສມັຍນັ້ນ ສາວນ້ອຍແຫ່ງຕະກຸລອຸປັຕຖາກຂອງທ່ານພຣະອຸທາຍີ ເປັນສຕຣີທີ່ມາຣດາບິດາຍົກໃຫ້ແກ່ຫນຸ່ມນ້ອຍຂອງຕະກຸລນຶ່ງ

ພໍເວລາເຊົ້າ ທ່ານພຣະອຸທາຍີຫົ່ມອັນຕຣວາສົກແລ້ວ ຖືບາຕຣ໌ແລະຈີວຣເຂົ້າໄປຫາຕະກຸລນັ້ນ ແລະແລ້ວຈຶ່ງໄຕ່ຖາມພວກຊາວບ້ານວ່າ ສາວນ້ອຍຜູ້ມີຊື່ນີ້ຢູ່ໃສ

ພວກຊາວບ້ານຕອບຢ່າງນີ້ວ່າ ພວກຂ້າພເຈົ້າໄດ້ຍົກໃຫ້ແກ່ຫນຸ່ມນ້ອຍຂອງຕະກຸລນັ້ນແລ້ວ ຂ້ານ້ອຍ

ແມ້ຕະກຸລນັ້ນແລ ກໍເປັນອຸປັຕຖາກຂອງທ່ານພຣະອຸທາຍີ ຈຶ່ງທ່ານພຣະອຸທາຍີເຂົ້າໄປຫາຕະກຸລນັ້ນ ແລະແລ້ວຈຶ່ງຖາມພວກຊາວບ້ານວ່າ ສຕຣີຜູ້ມີຊື່ນີ້ ຢູ່ໃສ?

ພວກຊາວບ້ານຕອບວ່າ ນາງນັ່ງຢູ່ໃນຫ້ອງ ຂ້ານ້ອຍ

ຈຶ່ງທ່ານພຣະອຸທາຍີເຂົ້າໄປຫາສາວນ້ອຍນັ້ນ ແລະແລ້ວສຳເຣັຈການນັ່ງໃນທີ່ລັບຄືໃນອາສນະກຳບັງ ຊຶ່ງພໍຈະທຳການໄດ້ກັບສາວນ້ອຍນັ້ນ ນຶ່ງຕໍ່ນຶ່ງ ເຈຣຈາກ່າວສັມມ໌ຢູ່ ຄວຣແກ່ເວລາ.

[ຜ໓໔] ກໍໂດຍສມັຍນັ້ນແລ ນາງວິສາຂາ ມິຄາຣມາຕາ ເປັນສຕຣີມີບຸຕຣ໌ຫຼາຍ ມີນັດດາມາກ ມີບຸຕຣ໌ບໍ່ມີໂຣຄ ມີນັດດາບໍ່ມີໂຣຄ ຊຶ່ງໂລກສົມມຸຕິວ່າເປັນມິ່ງມຸງຄົລ ພວກຊາວບ້ານເຊີຍນາງໄປໃຫ້ຮັບປະທານອາຫາຣກ່ອນໃນງານບຳເພັຍກຸສົລ ງານມຸງຄົລ ງານມຫໍຣສົພ ຄັ້ງນັ້ນ ນາງວິສາຂາ ມິຄາຣມາຕາ ໄດ້ຖືກເຊີຍໄປສູ່ຕະກຸລນັ້ນ ນາງໄດ້ເຫັນພຣະອຸທາຍີ ນັ່ງໃນທີ່ລັບຄືໃນອາສນະກຳບັງ ຊຶ່ງພໍຈະທຳການໄດ້ກັບຜົງສາວນັ້ນ ນຶ່ງຕໍ່ນຶ່ງ ແລະແລ້ວໄດ້ກ່າວຄຳນີ້ກັບທ່ານພຣະອຸທາຍີວ່າ ຂ້າແຕ່ພຣະຄຸຕເຈົ້າ ການທີ່ພຣະຄຸຕເຈົ້າສຳເຣັຈການນັ່ງໃນທີ່ລັບ ຄືໃນອາສນະກຳບັງ ຊຶ່ງພໍຈະທຳການໄດ້ກັບມາຕຸຄາມ ນຶ່ງຕໍ່ນຶ່ງເຊັ່ນນີ້ ບໍ່ເຫມາະ ບໍ່ຄວຣ ແມ້ພຣະຄຸຕເຈົ້າຈະບໍ່ຕ້ອງການດ້ວຍສັມມ໌ນັ້ນກໍຈິງ ເຖິງຢ່າງນັ້ນ ພວກຊາວບ້ານຜູ້ທີ່ບໍ່ເລື່ອມໃສ ຈະບອກໃຫ້ເຊື່ອໄດ້ໂດຍຍາກ

ທ່ານພຣະອຸທາຍີ ແມ້ຖືກນາງວິສາຂາ ມິຄາຣມາຕາ ວ່າກ່າວຢູ່ຢ່າງນີ້ ກໍບໍ່ໄດ້ເຊື່ອຟັງ

ເມື່ອນາງວິສາຂາ ມິຄາຣມາຕາ ກັບໄປແລ້ວ ໄດ້ແຈ້ງເຣື່ອງນັ້ນແກ່ກິກຊຸທັ້ງຫລາຍ

ບັຣດາກິກຊຸທີ່ເປັນຜູ້ມັກນ້ອຍ ສັນໂດຊ ມີຄວາມລະອາຍ ມີຄວາມຢ້ານບາປ ຜູ້ມັກຕໍ່ສິກຂາ ຕ່າງພາກັນເພັ່ງໂທຊ ຕິຕຽນ ໂພນທະນາວ່າ ຈັ່ງໃດທ່ານພຣະອຸທາຍີຈຶ່ງໄດ້ສຳເຣັຈການນັ່ງໃນທີ່ລັບ ຄື ໃນອາສນະກຳບັງ ຊຶ່ງພໍຈະທຳການໄດ້ກັບມາຕຸຄາມ ນຶ່ງຕໍ່ນຶ່ງລະ ແລ້ວຂາບທູລເຣື່ອງນັ້ນ ແດ່ພຣະຜູ້ມີພຣະກາຄ

ປະຊຸມສົງຄ໌ຊົງບັນລັຕິສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມກິກຊຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນ ເພາະເຫຕຸທຳອິດເກີດນັ້ນ ແລ້ວຊົງສອບຖາມທ່ານພຣະອຸທາຍີວ່າ ດູຣາອຸທາຍີ ຂ່າວວ່າ ທ່ານສຳເຣັຈການນັ່ງ ໃນທີ່ລັບ ຄືໃນອາສນະກຳບັງ ຊຶ່ງພໍຈະທຳການໄດ້ກັບມາຕຸຄາມ ນຶ່ງຕໍ່ນຶ່ງ ຈິງຫຼື?

ທ່ານພຣະອຸທາຍີທູລຣັບວ່າ ຈິງ ພຣະພຸທຊເຈົ້າຂ້ານ້ອຍ

ພຣະຜູ້ມີພຣະກາຄພຸທຊເຈົ້າຊົງຕິຕຽນວ່າ ດູຣາໂມຄບຸຣຸຊ ກາຣິຍະທຳຂອງທ່ານນັ້ນ ບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຕະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ດູຣາໂມຄບຸຣຸຊ ຈັ່ງໃດ ທ່ານຈຶ່ງໄດ້ ສຳເຣັຈການນັ່ງໃນທີ່ລັບ ຄືໃນອາສນະກຳບັງ ຊຶ່ງພໍຈະທຳການໄດ້ກັບມາຕຸຄາມ ນຶ່ງຕໍ່ນຶ່ງລະ ກາຣິຍະທຳຂອງທ່ານນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມ ເລື່ອມໃສຍິ່ງ ຂອງຊຸມຊົນທີ່ເລື່ອມໃສແລ້ວ ໂດຍທີ່ແທ້ກາຣິຍະທຳຂອງທ່ານນັ້ນ ເປັນໄປເພື່ອຄວາມບໍ່ເລື່ອມໃສ ຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເລື່ອມໃສແລ້ວ

ພໍພຣະຜູ້ມີພຣະກາຄຊົງຕິຕຽນທ່ານພຣະອຸທາຍີໂດຍອເນກປຣິຍາຍ ດັ່ງນີ້ແລ້ວ ຕຣັສໂທຊແຫ່ງ ຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດຊ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຕຣັສຄຸຕແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດຊ ຄວາມຂັດເກຼົາ ຄວາມກຳຈັດ ອາການທີ່ໜ້າເລື່ອມໃສ ການບໍ່ສະສົມ ການປາຣົກຄວາມພຽຣ ໂດຍອເນກປຣິຍາຍແລ້ວຊົງກະທຳທັມມີກະຖາ ທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເຫມາະສົມ ແກ່ເຣື່ອງນັ້ນແກ່ກິກຊຸທັ້ງຫລາຍ ແລ້ວຣັບສັ່ງກັບກິກຊຸທັ້ງຫລາຍວ່າ

ດູຣາກິກຊຸທັ້ງຫລາຍ ເພາະເຫຕຸນັ້ນແລ ເຮົາຈັກບັນລັຕິສິກຂາບົທແກ່ກິກຊຸທັ້ງຫລາຍ ອາສັຍອຳນາຈ ປະໂຍຊນ໌ ໑໐ ປະການ ຄື ເພື່ອຄວາມຣັບວ່າດີແຫ່ງສົງຄ໌ ໑ ເພື່ອຄວາມສຳຣາລແຫ່ງສົງຄ໌ ໑ ເພື່ອ ຂົ່ມບຸຄຄົລຜູ້ເກີ້ຍາກ ໑ ເພື່ອຢູ່ສຳຣາລແຫ່ງກິກຊຸຜູ້ມີສີລເປັນທີ່ຮັກ ໑ ເພື່ອປ້ອງກັນອາສວະອັນຈະບັງເກີດ

ໃນປັຈຈຸບັນ ໑ ເພື່ອກຳຈັດອາສວະອັນຈັກບັງເກີດໃນອນາຄົຕ ໑ ເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ໑ ເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ຍັງບໍ່ເລື່ອມໃສແລ້ວ ໑ ເພື່ອຄວາມຕັ້ງມັ່ນແຫ່ງພຣະສັທັມມ໌ ໑ ເພື່ອຖືຕາມພຣະວິນັຍ ໑

ດູຣາກິກຂຸທັ້ງຫລາຍ ກໍແລພວກທ່ານຄວຣຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:-

ພຣະບັລລັຕິ

໑໗. ໑. ອີກຢ່າງ ກິກຂຸໃດອົງຄ໌ດຽວ ສຳເຣັຈການນັ່ງໃນທີ່ລັບ ຄືໃນອາສນະກຳບັງພໍຈະທຳການໄດ້ກັບມາຕຸຄາມຜູ້ດຽວ ອຸບາສິກາມີວາຈາທີ່ເຊື່ອໄດ້ ເຫັນກິກຂຸກັບມາຕຸຄາມນັ້ນນັ່ນແລ້ວ ເວົ້າຂຶ້ນດ້ວຍສັມມ໌ ໓ ປະການ ຢ່າງໃດຢ່າງນຶ່ງ ຄືດ້ວຍປາຣາຊິກກໍດີ ດ້ວຍສັງຄາທິເສສກໍດີ ດ້ວຍປາຈິຕຕີຍ໌ກໍດີ ກິກຂຸປຜິລາຄຊຶ່ງການນັ່ງ ຄວຣຖືກປັບດ້ວຍສັມມ໌ ໓ ປະການ ຢ່າງໃດຢ່າງນຶ່ງ ຄື ດ້ວຍປາຣາຊິກແດ່ ດ້ວຍສັງຄາທິເສສແດ່ ດ້ວຍປາຈິຕຕີຍ໌ແດ່ ອີກຢ່າງນຶ່ງ ອຸບາສິກາມີວາຈາທີ່ເຊື່ອໄດ້ນັ້ນ ກ່າວດ້ວຍສັມມ໌ໃດ ກິກຂຸນັ້ນຄວຣຖືກປັບດ້ວຍສັມມ໌ນັ້ນ ສັມມ໌ນີ້ຊື່ ອນິຍຕ.

ເຣື່ອງພຣະອຸທາຍີກັບນາງວິສາຂາ ຈົບ.

ສິກຂາບົທວິກັງຄ໌

[໖໓໓] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ມີການງານຢ່າງໃດ ມີຊາຕິຢ່າງໃດ ມີຊື່ຢ່າງໃດ ມີໂຄຕຣ໌ຢ່າງໃດ ມີປົກຕິຢ່າງໃດ ມີສັມມ໌ເຄື່ອງຢູ່ຢ່າງໃດ ມີອາຣົມມ໌ຢ່າງໃດເປັນເຖຣະກໍຕາມ ເປັນນວກະກໍຕາມ ເປັນມັຊຊິມະກໍຕາມ ນີ້ພຣະຜູ້ມີພຣະກາຄຕຣັສວ່າ ອີກຢ່າງ .. ໃດ

ບົທວ່າ ກິກຂຸ ຄວາມວ່າ ທີ່ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນຜູ້ຂໍ ຊື່ວ່າ ກິກຂຸ ເພາະອັຖວ່າປະພຶຕກິກຂາຈຣິຍວັຕຣ໌ ຊື່ວ່າ ກິກຂຸ ເພາະອັຖວ່າ ຊົງຜືນຜ້າທີ່ຖືກທຳລາຍແລ້ວ ຊື່ວ່າ ກິກຂຸ ໂດຍສົມລາ ຊື່ວ່າ ກິກຂຸ ໂດຍປຜິລລາ ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນເອຫິກິກຂຸ ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນຜູ້ອຸປສົມບົທແລ້ວດ້ວຍໄຕຣສຣຕຄົມນ໌ ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນຜູ້ຈເຣີລ ຊື່ວ່າ ກິກຂຸ ເພາະອັຖວ່າ ມີສາຣສັມມ໌ ຊື່ວ່າ ກິກຂຸ ເພາະອັຖວ່າເປັນພຣະເສຂະ ຊື່ວ່າ ກິກຂຸ ເພາະອັຖວ່າ ເປັນພຣະອເສຂະ ຊື່ວ່າ ກິກຂຸ ເພາະອັຖວ່າເປັນຜູ້ອັນສົງຄ໌ພ້ອມພຽງກັນອຸປສົມບົທໃຫ້ ດ້ວຍລັຕຕິຈຕຸຕຖກັມມ໌ ອັນບໍ່ກຳເຣີບ ຄວຣແກ່ຖານະ ບັຣດາກິກຂຸເຫລົ່ານັ້ນ ກິກຂຸທີ່ສົງຄ໌

ພ້ອມພຽງກັນອຸປສົມບົທໃຫ້ດ້ວຍຍັດຕິຈຕຸຕຖກັມມ໌ອັນບໍ່ກຳເຣີບ ຄວຣແກ່ຖານະ ນີ້ຊື່ວ່າ ພິກຂຸ ທີ່ຊົງປະສົງຄ໌ໃນອັຖນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ລິງມນຸສຍ໌ ບໍ່ແມ່ນລິງຍັກສ໌ ບໍ່ແມ່ນລິງເປຕ ບໍ່ແມ່ນສັຕວ໌ດິຣັຈສານຕົວເມັຽ ໂດຍທີ່ສຸດ ແມ້ເດັກລິງທີ່ເກີດໃນວັນນັ້ນ ບໍ່ຕ້ອງເວົ້າເຖິງສຕຣີຜູ້ໃຫຍ່

ບົທວ່າ ກັບ ຄື ຮ່ວມກັນ

ຄຳວ່າ ອົງຄ໌ດຽວ .. ຜູ້ດຽວ ໄດ້ແກ່ພິກຂຸ ໑ ມາຕຸຄາມ ໑

ທີ່ຊື່ວ່າ ໃນທີ່ລັບ ໄດ້ແກ່ ທີ່ລັບຕາ ໑ ທີ່ລັບຫູ ໑

ທີ່ລັບຕາ ໄດ້ແກ່ທີ່ຊຶ່ງເມື່ອພິກຂຸຫຼືມາຕຸຄາມພິບຕາ ຍົກຄິ້ວ ຫຼືຊູຫົວ ບໍ່ມີໃຜສາມາຖຈະແລເຫັນໄດ້

ທີ່ລັບຫູ ໄດ້ແກ່ ທີ່ຊຶ່ງບໍ່ມີໃຜສາມາຖຈະໄດ້ຍິນຄຳເວົ້າທີ່ເວົ້າຕາມປົກຕິໄດ້

ອາສນະທີ່ຊື່ວ່າ ກຳບັງ ຄືເປັນອາສນະທີ່ເຂົາກຳບັງດ້ວຍຝາ ບານປະຕູ ເສື່ອລຳແພນມ່ານບັງ ຕົ້ນໄມ້ ເສົາ ຫຼືລາງ ຢ່າງໃດຢ່າງນຶ່ງ

ບົທວ່າ ພໍຈະທຳການໄດ້ ຄື ອາຈເພື່ອຈະເສພເມຖຸນທັມມ໌ໄດ້

ຄຳວ່າ ສຳເຣັຈການນັ່ງ ຫມາຍຄວາມວ່າ ເມື່ອມາຕຸຄາມນັ່ງແລ້ວ ພິກຂຸນັ່ງໃກ້ຫຼືນອນໃກ້ກໍດີ ເມື່ອພິກຂຸນັ່ງແລ້ວ ມາຕຸຄາມນັ່ງໃກ້ ຫຼືນອນໃກ້ກໍດີ ນັ່ງທັ້ງສອງຄົນ ຫຼືນອນທັ້ງສອງຄົນກໍດີ

[໖໓໔] ອຸບາສິກາທີ່ຊື່ວ່າ ມີວາຈາທີ່ເຊື່ອໄດ້ ຄື ເປັນສຕຣີຜູ້ບັຣລຸຜົລ ຜູ້ຕຣັສຮູ້ທັມມ໌ຜູ້ເຂົ້າໃຈສາສນາດີ

ທີ່ຊື່ວ່າ ອຸບາສິກາ ໄດ້ແກ່ ສຕຣີຜູ້ເຖິງພຣະພຸທຘເຈົ້າເປັນສຣຓະ ຜູ້ເຖິງພຣະທັມມ໌ເປັນສຣຓະຜູ້ເຖິງພຣະສົງຄ໌ເປັນສຣຓະ

ບົທວ່າ ເຫັນ ຄື ພົບ

[໖໓໕] ອຸບາສິກາມີວາຈາທີ່ເຊື່ອໄດ້ເຊັ່ນນັ້ນ ຄວຣເວົ້າຂຶ້ນດ້ວຍທັມມ໌ ໓ ປະການ ຢ່າງໃດຢ່າງນຶ່ງ ຄືດ້ວຍປາຣາຊິກກໍດີ ດ້ວຍສັງຄາທິເສສກໍດີ ດ້ວຍປາຈິຕຕີຍ໌ກໍດີ ພິກຂຸປະຕິຍາຓຊຶ່ງການນັ່ງ ຄວຣຖືກປັບດ້ວຍທັມມ໌ ໓ ປະການ ຢ່າງໃດຢ່າງນຶ່ງ ຄືດ້ວຍປາຣາຊິກແດ່ດ້ວຍສັງຄາທິເສສແດ່ ດ້ວຍປາຈິຕຕີຍ໌ແດ່ ອີກປະການນຶ່ງ ອຸບາສິກາມີວາຈາທີ່ເຊື່ອໄດ້ນັ້ນກ່າວດ້ວຍທັມມ໌ໃດ ພິກຂຸນັ້ນຄວຣຖືກປັບດ້ວຍທັມມ໌ນັ້ນ.

ປຏິລາຕກາຣຕະ

ເຫັນນັ່ງກຳລັງເສພເມຖຸນສັມມ໌

[໖໓໖] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານັ່ງກຳລັງເສພເມຖຸນສັມມ໌ໃນມາຕຸຄາມ ຖ້າພິກຂຸນັ້ນປຏິລາຕກາຣນັ່ງນັ້ນ ຄວຣປັບຕາມອາບັຕິ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານັ່ງກຳລັງເສພເມຖຸນສັມມ໌ໃນມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າຂ້າພເຈົ້ານັ່ງຈິງ ແຕ່ບໍ່ໄດ້ເສພເມຖຸນສັມມ໌ເລີຍ ດັ່ງນີ້ ຄວຣປັບເພາະກາຣນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານັ່ງກຳລັງເສພເມຖຸນສັມມ໌ໃນມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້ານອນຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະກາຣນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານັ່ງກຳລັງເສພເມຖຸນສັມມ໌ໃນມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້າຢືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

ເຫັນນອນກຳລັງເສພເມຖຸນສັມມ໌

[໖໓໗] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານອນກຳລັງເສພເມຖຸນສັມມ໌ໃນມາຕຸຄາມ ຖ້າພິກຂຸນັ້ນປຏິລາຕກາຣນອນນັ້ນ ຄວຣປັບຕາມອາບັຕິ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານອນກຳລັງເສພເມຖຸນສັມມ໌ໃນມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້ານອນຈິງ ແຕ່ບໍ່ໄດ້ເສພເມຖຸນສັມມ໌ເລີຍ ດັ່ງນີ້ ຄວຣປັບເພາະກາຣນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານອນກຳລັງເສພເມຖຸນສັມມ໌ໃນມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້ານັ່ງຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະກາຣນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານອນກຳລັງເສພເມຖຸນສັມມ໌ໃນມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້າຢືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

ເຫັນນັ່ງກຳລັງເຄົ້າຄວາມເຝືອຟັ້ນດ້ວຍກາຍ

[໖໓໘] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານັ່ງກຳລັງເຄົ້າຄວາມເຝືອຟັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນປຏິລາຕກາຣນັ່ງນັ້ນ ຄວຣປັບຕາມອາບັຕິ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຕເຈົ້ານັ່ງກຳລັງເຖິງຄວາມເພືອພັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້ານັ່ງຈິງ ແຕ່ບໍ່ໄດ້ເຖິງຄວາມເພືອພັ້ນດ້ວຍກາຍ
ດັ່ງນີ້ ຄວຣປັບເພາະການນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຕເຈົ້ານັ່ງກຳລັງເຖິງຄວາມເພືອພັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້ານອນຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະການນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຕເຈົ້ານັ່ງກຳລັງເຖິງຄວາມເພືອພັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້າຢືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

ເຫັນນອນກຳລັງເຖິງຄວາມເພືອພັ້ນດ້ວຍກາຍ

[໖໓໙] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຕເຈົ້ານອນກຳລັງເຖິງຄວາມເພືອພັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນປະຕິຍານການນອນນັ້ນ ຄວຣປັບຕາມອາບັຕິ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຕເຈົ້ານອນກຳລັງເຖິງຄວາມເພືອພັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້ານອນຈິງ ແຕ່ບໍ່ໄດ້ເຖິງຄວາມເພືອພັ້ນດ້ວຍກາຍ
ດັ່ງນີ້ ຄວຣປັບເພາະການນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຕເຈົ້ານອນກຳລັງເຖິງຄວາມເພືອພັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້ານັ່ງຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະການນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຕເຈົ້ານອນກຳລັງເຖິງຄວາມເພືອພັ້ນດ້ວຍກາຍກັບມາຕຸຄາມ ພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້າຢືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

ເຫັນນັ່ງໃນທີ່ລັບ

[໖໔໐] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຕເຈົ້າອົງຄ໌ດຽວນັ່ງໃນທີ່ລັບ ຄືໃນອາສນະກຳບັງ ພໍຈະທຳການໄດ້ກັບມາຕຸຄາມຜູ້ດຽວ ຖ້າພິກຂຸນັ້ນປະຕິຍານການນັ່ງນັ້ນ ຄວຣປັບເພາະການນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນ ພຣະຄຸຕເຈົ້າອົງຄ໌ດຽວນັ່ງໃນທີ່ລັບ ຄືນັ່ງໃນອາສນະກຳບັງ ພໍຈະທຳການໄດ້ກັບມາຕຸຄາມຜູ້ດຽວ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້ານອນຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະການນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນ ພຣະຄຸຓເຈົ້າອົງຄ໌ດຽວນັ່ງໃນທີ່ລັບ ຄືໃນອາສນະ ກຳບັງ ພໍຈະທຳການໄດ້ກັບມາຕຸຄາມຜູ້ດຽວ ຖ້າກິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້າຍືນຢູ່ ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

ເຫັນນອນໃນທີ່ລັບ

[໖໔໑] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້າອົງຄ໌ດຽວນອນໃນທີ່ລັບ ຄື ໃນອາສນະກຳບັງ ພໍຈະທຳການໄດ້ກັບມາຕຸຄາມຜູ້ດຽວ ຖ້າກິກຂຸນັ້ນປຏິຍາຓການນອນນັ້ນ ຄວຣປັບ ເພາະການນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້າອົງຄ໌ດຽວນອນໃນທີ່ລັບ ຄືໃນ ອາສນະກຳບັງ ພໍຈະກະທຳໄດ້ກັບມາຕຸຄາມຜູ້ດຽວ ຖ້າກິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້ານັ່ງຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະການນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້າອົງຄ໌ດຽວນອນໃນທີ່ລັບ ຄືໃນອາສນະ ກຳບັງ ພໍຈະທຳການໄດ້ກັບມາຕຸຄາມຜູ້ດຽວ ຖ້າກິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້າ ຍືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

[໖໔໒] ບົທວ່າ ອນິຍຕ ແປວ່າ ບໍ່ແນ່ນອນ ຄື ເປັນປາຣາຊິກກໍໄດ້ ເປັນສັງຄາທິເສສ ກໍໄດ້ ເປັນປາຈິຕຕີຍ໌ກໍໄດ້.

ບົທກາຊນີຍ໌

[໖໔໓] ກິກຂຸປຏິຍາຓການໄປ ປຏິຍາຓການນັ່ງ ປຏິຍາຓອາບັຕິ ຄວຣປັບຕາມອາບັຕິ

ກິກຂຸປຏິຍາຓການໄປ ບໍ່ປຏິຍາຓການນັ່ງ ປຏິຍາຓອາບັຕິ ຄວຣປັບຕາມອາບັຕິ

ກິກຂຸປຏິຍາຓການໄປ ປຏິຍາຓການນັ່ງ ບໍ່ປຏິຍາຓອາບັຕິ ຄວຣປັບເພາະການນັ່ງ

ກິກຂຸປຏິຍາຓການໄປ ບໍ່ປຏິຍາຓການນັ່ງ ບໍ່ປຏິຍາຓອາບັຕິ ບໍ່ຄວຣປັບ

ກິກຂຸບໍ່ປຏິຍາຓການໄປ ປຏິຍາຓການນັ່ງ ປຏິຍາຓອາບັຕິ ຄວຣປັບຕາມອາບັຕິ

ກິກຂຸບໍ່ປຏິຍາຓການໄປ ບໍ່ປຏິຍາຓການນັ່ງ ປຏິຍາຓອາບັຕິ ຄວຣປັບຕາມອາບັຕິ

ກິກຂຸບໍ່ປຏິຍາຓການໄປ ປຏິຍາຓການນັ່ງ ບໍ່ປຏິຍາຓອາບັຕິ ຄວຣປັບເພາະການນັ່ງ

ກິກຂຸບໍ່ປຏິຍາຓການໄປ ບໍ່ປຏິຍາຓການນັ່ງ ບໍ່ປຏິຍາຓອາບັຕິ ບໍ່ຄວຣປັບ.

ອນິຍຕ ສິກຂາບົທທີ່ ໑ ຈົບ.

ອນິຍຕ ສິກຂາບົທທີ່ ໘

ເຣື່ອງພຣະອຸທາຍີ ກັບນາງວິສາຂາ ມິຄາຣມາຕາ

[໖໘໔] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຣະພຸທສເຈົ້າປະທັບຢູ່ ໓ ພຣະເຊຕວັນ ອາຮາມຂອງອານາຖບິຕຫິກຄຫບໍດີ ເຂຕພຣະນຄຣສາວັຕຖີ ຄັ້ງນັ້ນ ທ່ານພຣະອຸທາຍີດໍາຣິວ່າ ພຣະຜູ້ມີພຣະກາຄຊົງຫ້າມການສໍາເຣັຈການນັ່ງໃນທີ່ລັບ ຄືໃນອາສນະກໍາບັງ ພໍຈະການທໍາໄດ້ກັບມາຕຸຄາມ ນຶ່ງຕໍ່ນຶ່ງຈຶ່ງສໍາເຣັຈການນັ່ງໃນທີ່ລັບ ກັບສາວນ້ອຍຄົນນັ້ນແລ ນຶ່ງຕໍ່ນຶ່ງ ເຈຣຈາກ່າວສັມມ໌ຢູ່ ຄວຣແກ່ເວລາ

ແມ້ເທື່ອທີ່ສອງແລ ນາງວິສາຂາ ມິຄາຣມາຕາ ກໍໄດ້ຖືກເຊີນໄປສູ່ຕະກຸລນັ້ນ ນາງໄດ້ເຫັນທ່ານພຣະອຸທາຍີນັ່ງໃນທີ່ລັບ ກັບສາວນ້ອຍນັ້ນແລ ນຶ່ງຕໍ່ນຶ່ງ ແລະແລ້ວໄດ້ກ່າວຄໍານີ້ກັບທ່ານພຣະອຸທາຍີວ່າ ຂ້າແຕ່ພຣະຄຸຕເຈົ້າ ການທີ່ພຣະຄຸຕເຈົ້ານັ່ງໃນທີ່ລັບ ກັບມາຕຸຄາມ ນຶ່ງຕໍ່ນຶ່ງເຊັ່ນນີ້ ບໍ່ເໝາະບໍ່ຄວຣ ພຣະຄຸຕເຈົ້າແມ້ບໍ່ຕ້ອງການ ດ້ວຍສັມມ໌ນັ້ນກໍຈິງ ເຖິງຢ່າງນັ້ນ ພວກຊາວບ້ານຜູ້ທີ່ບໍ່ເລື່ອມໃສຈະບອກໃຫ້ເຊື່ອໄດ້ໂດຍຍາກ

ທ່ານພຣະອຸທາຍີ ແມ້ຖືກນາງວິສາຂາ ມິຄາຣມາຕາ ວ່າກ່າວຢູ່ຢ່າງນີ້ ກໍບໍ່ໄດ້ເຊື່ອຟັງ

ເມື່ອນາງວິສາຂາ ມິຄາຣມາຕາກັບໄປແລ້ວ ໄດ້ແຈ້ງນັ້ນແກ່ກິກຸທັ້ງຫລາຍ

ບັຣດາກິກຸທີ່ເປັນຜູ້ມັກນ້ອຍ ສັນໂດຸ ມີຄວາມລະອາຍ ມີຄວາມຢ້ານບາປ ຜູ້ມັກຕໍ່ສິກຂາຕ່າງກໍພາກັນເພັ່ງໂທຸ ຕິຕຽນ ໂພນທະນາວ່າ ຈັ່ງໃດທ່ານພຣະອຸທາຍີ ຈຶ່ງໄດ້ສໍາເຣັຈການນັ່ງໃນທີ່ລັບກັບມາຕຸຄາມ ນຶ່ງຕໍ່ນຶ່ງລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ

ປະຊຸມສົງໝ໌ຊົງບັດລັຕິສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຸສົງໝ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸທໍາອິດເກີດນັ້ນ ແລ້ວຊົງສອບຖາມທ່ານພຣະອຸທາຍີວ່າ ດູຣາອຸທາຍີ ຂ່າວວ່າ ທ່ານສໍາເຣັຈການນັ່ງໃນທີ່ລັບກັບມາຕຸຄາມ ນຶ່ງຕໍ່ນຶ່ງ ຈິງຫຼື?

ທ່ານພຣະອຸທາຍີທູລຮັບວ່າ ຈິງ ພຣະພຸທສເຈົ້າຂ້ານ້ອຍ

ພຣະຜູ້ມີພຣະກາຄພຣະພຸທສເຈົ້າຊົງຕິຕຽນວ່າ ດູຣາໂມຄບຸຣຸຸ ກາຣິຍະທໍາຂອງທ່ານນັ້ນ ບໍ່ເໝາະບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຕະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ດູຣາໂມຄບຸຣຸຸ ຈັ່ງໃດ ທ່ານຈຶ່ງໄດ້ສໍາເຣັຈການນັ່ງໃນທີ່ລັບກັບມາຕຸຄາມນຶ່ງຕໍ່ນຶ່ງລະ ກາຣິຍະທໍາຂອງທ່ານນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສ

ຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ການ ກະທຳຂອງທ່ານນັ່ນ ເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນ ຢ່າງອື່ນຂອງຊົນບາງພວກທີ່ເລື່ອມໃສແລ້ວ

ພໍພຣະຜູ້ມີພຣະພາຄຊົງຕິຕຽນທ່ານພຣະອຸທາຍີໂດຍອເນກປຣິຍາຍ ດັ່ງນີ້ແລ້ວ ຕຣັສໂທษແຫ່ງ ຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດษ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຕຣັສຄຸຓແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມ ມັກນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາການທີ່ໜ້າເລື່ອມໃສ ການບໍ່ສະສົມ ການປຼາຣົກ ຄວາມພຽຣ ໂດຍອເນກປຣິຍາຍ ແລ້ວຊົງກະທຳສັມມີກຖາ ທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເຫມາະແກ່ເຣື່ອງນັ້ນ ແກ່ກິກษຸທັ້ງຫລາຍ ແລ້ວຮັບສັ່ງກັບກິກษຸທັ້ງຫລາຍວ່າ

ດູຣາກິກษຸທັ້ງຫລາຍ ເພາະເຫຕຸນັ້ນແລ ເຣົາຈັກບັญญັຕິສິກຂາບົທ ແກ່ກິກษຸທັ້ງຫລາຍ ອາສັຍ ອຳນາຈປະໂຍຊນ໌ ໑໐ ປະການ ຄື ເພື່ອຄວາມຮັບວ່າດີແຫ່ງສົງฆ໌ ໑ ເພື່ອຄວາມສຳຣາญແຫ່ງສົງฆ໌ ໑ ເພື່ອຂົ່ມບຸຄຄົລຜູ້ເກີ້ຍາກ ໑ ເພື່ອຢູ່ສຳຣາญແຫ່ງກິກษຸຜູ້ມີສີລເປັນທີ່ຮັກ ໑ ເພື່ອປ້ອງກັນອາສວະອັນຈະບັງເກີດ ໃນປັຈຈຸບັນ ໑ ເພື່ອກຳຈັດອວັຍວະອັນຈັກບັງເກີດໃນອນາຄົຕ ໑ ເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ ເລື່ອມໃສ ໑ ເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໑ ເພື່ອຄວາມຕັ້ງມັ່ນແຫ່ງສັທธັມມ໌ ໑ ເພື່ອຖືຕາມພຣະວິນັຍ ໑

ດູຣາກິກษຸທັ້ງຫລາຍ ກໍແລພວກທ່ານຄວຣຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:-

ພຣະບັญญັຕິ

໑໗. ໘. ອີກຢ່າງ ສຖານທາເປັນອາສນະກຳບັງບໍ່ເລີຍທີດຽວ ທາເປັນທີ່ພໍຈະທຳການ ໄດ້ບໍ່ ແຕ່ເປັນທີ່ພໍຈະເວົ້າກ້ຽວມາຕຸຄາມດ້ວຍວາຈາຊົ່ວຫຍາບໄດ້ຢູ່ ແລກິກษຸໃດອົງຄ໌ດຽວ ສຳເຣັຈການນັ່ງໃນທີ່ລັບກັບດ້ວຍມາຕຸຄາມຜູ້ດຽວ ໃນອາສນະມີຮູປຢ່າງນັ້ນ ອຸບາສິກາມີວາຈາ ທີ່ເຊື່ອໄດ້ເຫັນກິກษຸກັບມາຕຸຄາມນັ້ນນັ່ນແລ້ວ ເວົ້າຂຶ້ນດ້ວຍສັມມ໌ ໒ ປະການ ຢ່າງໃດຢ່າງ ນຶ່ງ ຄືດ້ວຍສັງฆາທິເສສກໍດີ ດ້ວຍປາຈິຕຕີຍ໌ກໍດີ ກິກษຸປຜິญາຓຊຶ່ງການນັ່ງ ຄວຣຖືກປັບດ້ວຍ ສັມມ໌ ໒ ປະການ ຢ່າງໃດຢ່າງນຶ່ງ ຄືດ້ວຍສັງฆາທິເສສແດ່ ດ້ວຍປາຈິຕຕີຍ໌ແດ່ ອີກ ຢ່າງນຶ່ງ ອຸບາສິກາມີວາຈາທີ່ເຊື່ອໄດ້ນັ້ນກ່າວດ້ວຍສັມມ໌ໃດ ກິກษຸນັ້ນຄວຣຖືກປັບດ້ວຍສັມມ໌ ນັ້ນ ແມ້ສັມມ໌ນີ້ກໍຊື່ ອນິຍຕ.

ເຣື່ອງພຣະອຸທາຍີ ກັບນາງວິສາຂາ ຈົບ.

ສິກຂາບົທວິພັງຄ໌

[໗໔໕] ຄຳວ່າ ອີກຢ່າງສຖານທາເປັນອາສນະກຳບັງບໍ່ເລີຍທີດຽວ ອະທິບາຍວ່າ ອາສນະເປັນທີ່ເປີດເຜີຍ ຄື ເປັນສຖານທີ່ບໍ່ໄດ້ກຳບັງດ້ວຍຝາ ບານປະຕູ ເສື່ອລຳແພນ ມ່ານບັງ ຕົ້ນໄມ້ ເສົາ ຫຼືລາງ ຢ່າງໃດຢ່າງນຶ່ງ

ບົທວ່າ ທາເປັນທີ່ພໍຈະທຳການໄດ້ບໍ່ ຄື ບໍ່ອາຈເສພເມຖຸນທັມມ໌ໄດ້

ຄຳວ່າ ແຕ່ເປັນທີ່ພໍຈະເວົ້າກັບມາຕຸຄາມ ດ້ວຍວາຈາຊົ່ວທຍາບໄດ້ຢູ່ ຄື ອາຈຈະເວົ້າເຄາະມາຕຸຄາມດ້ວຍວາຈາຊົ່ວທຍາບໄດ້

[໗໔໖] ບົທວ່າ ແລ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ມີການງານຢ່າງໃດ ມີຊາຕິຢ່າງໃດ ມີຊື່ຢ່າງໃດ ມີໂຄຕຣ໌ຢ່າງໃດ ມີປົກຕິຢ່າງໃດ ມີທັມມ໌ເຄື່ອງຢູ່ຢ່າງໃດ ມີອາຣົມມ໌ຢ່າງໃດ ເປັນເຖຣະກໍຕາມ ເປັນນວກະກໍຕາມ ເປັນມັຊຊິມະກໍຕາມນີ້ ພຣະຜູ້ມີພຣະພາຄຕຣັສວ່າ ແລ .. ໃດ

ບົທວ່າ ພິກຂຸ ຄວາມວ່າ ທີ່ຊື່ວ່າ ພິກຂຸ ເພາະອັຖວ່າ ເປັນຜູ້ຂໍ ຊື່ວ່າ ພິກຂຸ ເພາະອັຖວ່າ ປະພຶຕພິກຂາຈຣິຍວັຕຣ໌ ຊື່ວ່າ ພິກຂຸ ເພາະອັຖວ່າ ຊົງຜືນຜ້າທີ່ຖືກທຳລາຍແລ້ວ ຊື່ວ່າ ພິກຂຸ ໂດຍສົມຍາ ຊື່ວ່າ ພິກຂຸ ໂດຍປະຕິຍາ ຊື່ວ່າ ພິກຂຸ ເພາະອັຖວ່າ ເປັນເອຫິພິກຂຸ ຊື່ວ່າ ພິກຂຸ ເພາະອັຖວ່າ ເປັນຜູ້ອຸປສົມບົທແລ້ວດ້ວຍໄຕຣສຣຕຄົມນ໌ ຊື່ວ່າ ພິກຂຸ ເພາະອັຖວ່າ ເປັນຜູ້ຈເຣີນ ຊື່ວ່າ ພິກຂຸ ເພາະອັຖວ່າມີສາຣັມມ໌ ຊື່ວ່າ ພິກຂຸ ເພາະອັຖວ່າເປັນພຣະເສຂະ ຊື່ວ່າ ພິກຂຸ ເພາະອັຖວ່າ ເປັນພຣະອເສຂະ ຊື່ວ່າ ພິກຂຸ ເພາະອັຖວ່າ ເປັນຜູ້ອັນສົງຄ໌ພ້ອມພຽງກັນອຸປສົມບົທໃຫ້ດ້ວຍຍັຕຕິຈຕຸຕຖກັມມ໌ ອັນບໍ່ກຳເຣີບ ຄວຣແກ່ຖານະ ບັຣດາພິກຂຸເຫລົ່ານັ້ນ ພິກຂຸທີ່ສົງຄ໌ພ້ອມພຽງກັນອຸປສົມບົທໃຫ້ດ້ວຍຍັຕຕິຈຕຸຕຖກັມມ໌ ອັນບໍ່ກຳເຣີບ ຄວຣແກ່ຖານະນີ້ ຊື່ວ່າ ພິກຂຸ ທີ່ຊົງປະສົງຄ໌ໃນອັຖນີ້

ບົທວ່າ ໃນອາສນະມີຮູປຢ່າງນັ້ນ ຄື ໃນອາສນະເຫັນປານນັ້ນ

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ລົງມນຸສຍ໌ ບໍ່ແມ່ນລົງຍັກສ໌ ບໍ່ແມ່ນລົງເປຕ ບໍ່ແມ່ນສັຕວ໌ດິຣັຈສານຕົວເມັຽ ເປັນສຕຣີຜູ້ຮູ້ດຽງສາ ສາມາຖຊາບຊຶ້ງເຖິງຄຳເວົ້າ ເປັນສຸພາສິຕ ທຸພາສິຕ ວາຈາຊົ່ວທຍາບ ແລະສຸພາພ

ບົທວ່າ ກັບ ຄື ຮ່ວມກັນ

ຄຳວ່າ ອົງຄ໌ດຽວ .. ຜູ້ດຽວ ໄດ້ແກ່ ພິກຂຸ ໑ ມາຕຸຄາມ ໑

ທີ່ຊື່ວ່າ ໃນທີ່ລັບ ໄດ້ແກ່ ທີ່ລັບຕາ ໑ ທີ່ລັບທູ ໑ ທີ່ລັບຕາ ໄດ້ແກ່ສຖານທີ່ຊຶ່ງເມື່ອພິກຂຸ ຫຼືມາຕຸຄາມ ພິບຕາ ຍົກຄິ້ວ ຫຼືຊູຫົວບໍ່ມີໃຜສາມາຖຈະແລເຫັນໄດ້

ທີ່ລັບຫູ ໄດ້ແກ່ ສຖານທີ່ຊຶ່ງບໍ່ມີໃຜສາມາຖໄດ້ຍິນຄຳເວົ້າທີ່ເວົ້າຕາມປົກຕິໄດ້

ຄຳວ່າ ສຳເຣັຈການນັ່ງ ໜມາຍຄວາມວ່າ ເມື່ອມາຕຸຄາມນັ່ງແລ້ວ ພິກຂຸນັ່ງໃກ້ ຫຼືນອນໃກ້ກໍດີ ເມື່ອພິກຂຸນັ່ງແລ້ວ ມາຕຸຄາມນັ່ງໃກ້ ຫຼືນອນໃກ້ກໍດີ ນັ່ງທັ້ງສອງຄົນ ຫຼືນອນທັ້ງສອງຄົນກໍດີ

[໖໔໗] ອຸບາສິກາທີ່ຊື່ວ່າ ມີວາຈາທີ່ເຊື່ອໄດ້ ຄື ເປັນສຕຣີຜູ້ບັຣລຸຜົລ ຜູ້ຕຣັສຮູ້ສັມມ໌ ຜູ້ເຂົ້າໃຈສາສນາດີ

ທີ່ຊື່ວ່າ ອຸບາສິກາ ໄດ້ແກ່ ສຕຣີຜູ້ເຖິງພຣະພຸທທເຈົ້າເປັນສຣຓະ ຜູ້ເຖິງພຣະສັມມ໌ເປັນສຣຓະ ຜູ້ເຖິງພຣະສົງຄ໌ເປັນສຣຓະ

ບົທວ່າ ເຫັນ ຄືພົບ

[໖໔໘] ອຸບາສິກາມີວາຈາທີ່ເຊື່ອໄດ້ເຊັ່ນນັ້ນ ຄວຣເວົ້າຂຶ້ນດ້ວຍສັມມ໌ ໔ ປະການ ຢ່າງໃດຢ່າງນຶ່ງ ຄືດ້ວຍສັງຄາທິເສສກໍດີ ດ້ວຍປາຈິຕຕິຍ໌ກໍດີ ພິກຂຸປະຕິຍາຓຊຶ່ງການນັ່ງ ຄວຣຖືກປັບດ້ວຍສັມມ໌ ໔ ປະການ ຢ່າງໃດຢ່າງນຶ່ງ ຄື ດ້ວຍສັງຄາທິເສສແດ່ ດ້ວຍປາຈິຕຕິຍ໌ແດ່ ອີກປະການນຶ່ງອຸບາສິກາມີວາຈາທີ່ເຊື່ອໄດ້ນັ້ນ ກ່າວດ້ວຍສັມມ໌ໃດ ພິກຂຸນັ້ນຄວຣຖືກປັບດ້ວຍສັມມ໌ນັ້ນ.

ປະຕິຍາຕກຣຓະ

ເຫັນນັ່ງກຳລັງເຟືອຟັ້ນ

[໖໔໙] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນ ພຣະຄຸຓເຈົ້ານັ່ງກຳລັງເຖິງຄວາມເຟືອຟັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນປະຕິຍາຓການນັ່ງນັ້ນ ຄວຣປັບຕາມອາບັຕິ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານັ່ງກຳລັງເຖິງຄວາມເຟືອຟັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້ານັ່ງຈິງ ແຕ່ບໍ່ໄດ້ເຖິງຄວາມເຟືອຟັ້ນດ້ວຍກາຍ ດັ່ງນີ້ ຄວຣປັບເພາະການນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານັ່ງກຳລັງເຖິງຄວາມເຟືອຟັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້ານອນຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະການນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານັ່ງກຳລັງເຖິງຄວາມເຟືອຟັ້ນດ້ວຍກາຍກັບມາຕຸຄາມ ຖ້າພິກຂຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້າຢືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ

ເຫັນນອນກຳລັງເພືອຟັ້ນ

[໗໕໐] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານອນກຳລັງເຖິງຄວາມເພືອຟັ້ນດ້ວຍກາຍກັບມາຕຸຄາມ ຖ້າກິກສຸນັ້ນປຜິຍາຓການນອນນັ້ນ ຄວຣປັບຕາມອາບັຕິ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານອນກຳລັງເຖິງຄວາມເພືອຟັ້ນດ້ວຍກາຍກັບມາຕຸຄາມ ຖ້າກິກສຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້ານອນຈິງ ແຕ່ບໍ່ໄດ້ເຖິງຄວາມເພືອຟັ້ນດ້ວຍກາຍ ດັ່ງນີ້ ຄວຣປັບເພາະການນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານອນກຳລັງເຖິງຄວາມເພືອຟັ້ນດ້ວຍກາຍກັບມາຕຸຄາມ ຖ້າກິກສຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້ານັ່ງຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະການນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້ານອນກຳລັງເຖິງຄວາມເພືອຟັ້ນດ້ວຍກາຍກັບມາຕຸຄາມ ຖ້າກິກສຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້າຍືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

ໄດ້ຍິນນັ່ງກຳລັງເວົ້າກ້ຽວ

[໗໕໑] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍໄດ້ຍິນພຣະຄຸຓເຈົ້ານັ່ງກຳລັງເວົ້າກ້ຽວມາຕຸຄາມດ້ວຍວາຈາຊົ່ວຫຍາບ ຖ້າກິກສຸນັ້ນປຜິຍາຓການນັ່ງນັ້ນ ຄວຣປັບຕາມອາບັຕິ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍໄດ້ຍິນພຣະຄຸຓເຈົ້ານັ່ງກຳລັງເວົ້າກ້ຽວມາຕຸຄາມດ້ວຍວາຈາຊົ່ວຫຍາບ ຖ້າກິກສຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້ານັ່ງຈິງ ແຕ່ບໍ່ໄດ້ເວົ້າກ້ຽວມາຕຸຄາມດ້ວຍວາຈາຊົ່ວຫຍາບ ດັ່ງນີ້ ຄວຣປັບເພາະການນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍໄດ້ຍິນພຣະຄຸຓເຈົ້ານັ່ງກຳລັງເວົ້າກ້ຽວມາຕຸຄາມດ້ວຍວາຈາຊົ່ວຫຍາບ ຖ້າກິກສຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້ານອນຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະການນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍໄດ້ຍິນພຣະຄຸຓເຈົ້ານັ່ງກຳລັງເວົ້າກ້ຽວມາຕຸຄາມດ້ວຍວາຈາຊົ່ວຫຍາບ ຖ້າກິກສຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້າຍືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

ໄດ້ຍິນນອນກຳລັງເວົ້າກ້ຽວ

[໗໕໒] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍໄດ້ຍິນພຣະຄຸຓເຈົ້ານອນກຳລັງເວົ້າກ້ຽວມາຕຸຄາມ ດ້ວຍວາຈາຊົ່ວຫຍາບ ຖ້າກິກສຸນັ້ນປຜິຍາຓການນອນນັ້ນ ຄວຣປັບຕາມອາບັຕິ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍໄດ້ຍິນພຣະຄຸຓເຈົ້ານອນກຳລັງເວົ້າກັ້ງວມາຕຸຄາມດ້ວຍອາຈາຊົ່ວຫຍາບ ຖ້າກິກຊຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້ານອນຈິງ ແຕ່ບໍ່ໄດ້ເວົ້າກັ້ງວມາຕຸຄາມດ້ວຍອາຈາຊົ່ວຫຍາບ ດັ່ງນີ້ ຄວຣປັບເພາະການນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍໄດ້ຍິນພຣະຄຸຓເຈົ້ານອນກຳລັງເວົ້າກັ້ງວມາຕຸຄາມດ້ວຍອາຈາຊົ່ວຫຍາບ ຖ້າກິກຊຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້ານັ່ງຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະການນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍໄດ້ຍິນພຣະຄຸຓເຈົ້ານອນກຳລັງເວົ້າກັ້ງວມາຕຸຄາມດ້ວຍອາຈາຊົ່ວຫຍາບ ຖ້າກິກຊຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນຂ້າພເຈົ້າຢືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

ເຫັນນັ່ງໃນທີ່ລັບ

[໖໕໓] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້າອົງຄ໌ດຽວນັ່ງໃນທີ່ລັບກັບມາຕຸຄາມຜູ້ດຽວ ຖ້າກິກຊຸນັ້ນປຜິນາຓການນັ່ງນັ້ນ ຄວຣປັບເພາະການນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້າອົງຄ໌ດຽວນັ່ງໃນທີ່ລັບກັບມາຕຸຄາມຜູ້ດຽວ ຖ້າກິກຊຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້ານອນຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະການນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້າອົງຄ໌ດຽວນັ່ງໃນທີ່ລັບກັບມາຕຸຄາມຜູ້ດຽວ ຖ້າກິກຊຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນັ່ງ ຂ້າພເຈົ້າຢືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

ເຫັນນອນໃນທີ່ລັບ

[໖໕໔] ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້າອົງຄ໌ດຽວນອນໃນທີ່ລັບກັບມາຕຸຄາມຜູ້ດຽວ ຖ້າກິກຊຸນັ້ນປຜິນາຓການນອນນັ້ນ ຄວຣປັບເພາະການນອນ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້າອົງຄ໌ດຽວນອນໃນທີ່ລັບກັບມາຕຸຄາມຜູ້ດຽວ ຖ້າກິກຊຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້ານັ່ງຢູ່ຕ່າງຫາກ ດັ່ງນີ້ ຄວຣປັບເພາະການນັ່ງ

ຫາກອຸບາສິການັ້ນເວົ້າຂຶ້ນຢ່າງນີ້ວ່າ ຂ້ານ້ອຍເຫັນພຣະຄຸຓເຈົ້າອົງຄ໌ດຽວນອນໃນທີ່ລັບກັບມາຕຸຄາມຜູ້ດຽວ ຖ້າກິກຊຸນັ້ນກ່າວຢ່າງນີ້ວ່າ ຂ້າພເຈົ້າບໍ່ໄດ້ນອນ ຂ້າພເຈົ້າຢືນຢູ່ຕ່າງຫາກ ດັ່ງນີ້ ບໍ່ຄວຣປັບ.

[໖໕໕] ບົທວ່າ ແມ້ນີ້ ພຣະຜູ້ມີພຣະກາຄຕຣັສຫ້າວເຖິງສິກຂາບົທກ່ອນ

ບົທວ່າ ອນິຍຕ ແປວ່າ ບໍ່ແນ່ນອນ ຄື ເປັນສັງຄາທິເສສກໍໄດ້ ເປັນປາຈິຕຕີຍ໌ກໍໄດ້.

ບົທກາຊນີຍ໌

[໖໕໖] ກິກຂຸປຕິຍານຕກາຣໄປ ປຕິຍານຕກາຣນັ່ງ ປຕິຍານຕອາບັຕິ ຄວຣປັບຕາມອາບັຕິ
ກິກຂຸປຕິຍານຕກາຣໄປ ບໍ່ປຕິຍານຕກາຣນັ່ງ ປຕິຍານຕອາບັຕິ ຄວຣປັບຕາມອາບັຕິ
ກິກຂຸປຕິຍານຕກາຣໄປ ປຕິຍານຕກາຣນັ່ງ ບໍ່ປຕິຍານຕອາບັຕິ ຄວຣປັບເພາະກາຣນັ່ງ
ກິກຂຸປຕິຍານຕກາຣໄປ ບໍ່ປຕິຍານຕກາຣນັ່ງ ບໍ່ປຕິຍານຕອາບັຕິ ບໍ່ຄວຣປັບ
ກິກຂຸບໍ່ປຕິຍານຕກາຣໄປ ປຕິຍານຕກາຣນັ່ງ ປຕິຍານຕອາບັຕິ ຄວຣປັບຕາມອາບັຕິ
ກິກຂຸບໍ່ປຕິຍານຕກາຣໄປ ບໍ່ປຕິຍານຕກາຣນັ່ງ ປຕິຍານຕອາບັຕິ ຄວຣປັບຕາມອາບັຕິ
ກິກຂຸບໍ່ປຕິຍານຕກາຣໄປ ປຕິຍານຕກາຣນັ່ງ ບໍ່ປຕິຍານຕອາບັຕິ ຄວຣປັບເພາະກາຣນັ່ງ
ກິກຂຸບໍ່ປຕິຍານຕກາຣໄປ ບໍ່ປຕິຍານຕກາຣນັ່ງ ບໍ່ປຕິຍານຕອາບັຕິ ບໍ່ຄວຣປັບ.

ອນິຍຕ ສິກຂາບົທທີ່ ໒ ຈົບ.

ບົທສຣຸປ

[໖໕໗] ທ່ານຜູ້ມີອາຍຸທັ້ງຫລາຍ ສັມມ໌ຄືອນິຍຕ ໒ ສິກຂາບົທ ຂ້າພເຈົ້າຍົກຂຶ້ນສະແດງແລ້ວແລ ຂ້າພເຈົ້າຂໍຖາມທ່ານທັ້ງຫລາຍໃນສັມມ໌ ຄື ອນິຍຕ ໒ ສິກຂາບົທເຫລົ່ານັ້ນວ່າ ທ່ານທັ້ງຫລາຍເປັນຜູ້ບໍຣິສຸທສິ໌ແລ້ວຫຼື ຂ້າພເຈົ້າຂໍຖາມແມ້ເທື່ອທີ່ສອງວ່າ ທ່ານທັ້ງຫລາຍເປັນຜູ້ບໍຣິສຸທສິ໌ແລ້ວຫຼື ຂ້າພເຈົ້າຂໍຖາມແມ້ເທື່ອທີ່ສາມວ່າ ທ່ານທັ້ງຫລາຍເປັນຜູ້ບໍຣິສຸທສິ໌ແລ້ວຫຼື ທ່ານທັ້ງຫລາຍເປັນຜູ້ບໍຣິສຸທສິ໌ແລ້ວໃນສັມມ໌ ຄືອນິຍຕ ໒ ສິກຂາບົທເຫລົ່ານີ້ ເຫຕຸນັ້ນ ຈຶ່ງນິ່ງ ຂ້າພເຈົ້າຊົງຄວາມນີ້ໄວ້ດ້ວຍຢ່າງນີ້.

ອນິຍຕກັຕຫ໌ ຈົບ.

ຫົວຂໍ້ປະຈໍາເຣື່ອງ

ອນິຍຕ ໒ ສິກຂາບົທ ຄື ນັ່ງໃນທີ່ລັບພໍຈະທໍາກາຣໄດ້ ໑ ແລນັ່ງໃນທີ່ເຊັ່ນນັ້ນ ແຕ່ຫາເປັນທີ່ພໍຈະທໍາກາຣໄດ້ບໍ່ ໑ ພຣະພຸທສເຈົ້າຜູ້ປະເສີຖ ຜູ້ຄົງທີ່ ຊົງບັນຍັຕິໄວ້ດີແລ້ວ ດັ່ງນີ້ແລ.